## <u>ກຸ່ມຜູ້ຈັດທຳ ການສຶກສາພຣະຄັມພີພາສາລາວ</u>

Copyright © 2002 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, 2000

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Administrator, Curriculum Development Office: Bernard M. Spooner
Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Unit 1
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Unit 1
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Unit 2
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Unit 2
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Unit 3 & Bonus Lesson
Sidney Kahn, Saginaw Community Church, Fort Worth, Texas
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Unit 3
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# <u>ບົດຮຽນທີ 1</u>
# <u>ການປະກາດຂອງພຣະເຢຊູ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 1:9-15, 29-39
<u>ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:</u> ມາຣະໂກ 1:1-45
<u>ຈຸດສຳຄັນຂອງບົດຮຽນນີ້:</u> ບອກໃຫ້ເຮົາຮູ້ວ່າພຣະເຢຊູໄດ້ສະແດງຊີວິດການຢູ່ກິນເພື່ອພິສູດໃນການປະກາດເຣື່ອງແຜ່ນດິນສວັນມາໃກ້ແລ້ວນັ້ນມີຄວາມຈິງ.
<u>ຄຳຖາມເພື່ອການສຳຣວດ</u> ການສະເດັດມາຂອງພຣະເຢຊູຄຣິດມີຄວາມຫມາຍຢ່າງໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າພຣະເຢຊູແມ່ນໃຜແລະພຣະອົງມີຄວາມສຳຄັນຫລາຍປານໃດ.

<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຊ່ອຍເຫລືອເບິ່ງແຍງທຸກຄົນໃນພຣະນາມແຫ່ງພຣະເຢຊູຄຣິດ ທີ່ຕົກຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.
- ເສີມສ້າງຄອບຄົວຄຣິສຕຽນໃຫ້ເຂັ້ມແຂງ ແລະສ້າງຕັ້ງໂບດເລື້ອຍໄປ.

ການບັບຕິສມາຂອງພຣະເຢຊູເປັນການປາກົດຕົວຄັ້ງແຮກຂອງພຣະເຢຊູ ຫລັງຈາກການປາກົດຕົວຂອງພຣະອົງໃນເວລາພຣະອົງມີອາຍຸສິບສອງປີ. ຈາກນັ້ນເຮົາກໍບໍ່ໄດ້ຍິນຂ່າວໃດໆຂອງພຣະອົງເລີຍ. ບັດນີ້ກຳຫນົດເວລາທີ່ຕັ້ງໄວ້ມາເຖິງແລ້ວດັ່ງນັ້ນພຣະອົງຈຶ່ງປາກົດຕົວເພື່ອປະກາດເຣື່ອງແຜ່ນດິນສວັນຂອງພຣະເຈົ້າໃກ້ມາເຖິງແລ້ວ.

<u>ພຣະເຢຊູຕຽມຕົວປະກາດ</u> (1:9-13)

ເມື່ອເຖິງກຳຫນົດເວລາພຣະເຢຊູສະເດັດມານາຊາເຣັດແຂວງຄາລີເລ ເພື່ອຮັບບັບຕິສມານຳໂຢຮັນທີ່ແມ່ນ້ຳຢໍດາເນ. ໃນຂນະທີ່ຊາວຢິວພາກັນອອກໄປຟັງການປະກາດຂອງໂຢຮັນຢ່າງຫລວງຫລາຍ ພຣະເຢຊູໄດ້ປາກົດຕົວໃນເວລານັ້ນເພື່ອຮັບສົມບັບຕິສະມາຈາກໂຢຮັນ.

ຄຳຖາມມີຢູ່ວ່າເປັນຫຍັງພຣະເຢຊູຈຶ່ງຮັບບັບຕິສະມາເພາະພຣະອົງບໍ່ມີບາບ?

- ພຣະເຢຊູຊົງກ່າວຕໍ່ໂຢຮັນວ່າ "ເພາະສົມຄວນທີ່ເຮົາຈະເຮັດຢ່າງນັ້ນໃຫ້ຖືກກັບຄວາມຊອບທັມທຸກປະການ" (ມັດທາຍ 3:15). ນີ້ເປັນຄຳເວົ້າຂອງພຣະອົງເອງ.
- ມີພວກສາສນາສາດບອກວ່າພຣະເຢຊູຮັບບັບຕິສະມາເປັນຕົວຢ່າງແກ່ເຮົາທັງຫລາຍ, ຊຶ່ງໃນຄຳສັ່ງໃຫຍ່ຂອງພຣະອົງໃນ ມັດທາຍ 28:19-20 ໄດ້ສັ່ງວ່າ "ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາ" ດັ່ງນັ້ນຄຣິສຕະຈັກຈຶ່ງຂໍໃຫ້ທຸກຄົນທີ່ເຊື່ອໄດ້ບັບຕິສະມາເພາະພຣະເຢຊູຊົງຮັບບັບຕິສມາ.

- ບາງຄົນໄດ້ບອກວ່າເປັນຮູບພາບຂອງການຕາຍເພື່ອໄຖ່ຄວາມຜິດບາບແລະຄືນມາມີຊີວິດໃຫມ່. ເພາະທຸກຄົນທີ່ບັບຕິສະມາແມ່ນໄດ້ຕາຍຈາກຊີວິດເກົ່າແລະຄືນມາມີຊີວິດໃນພຣະເຢຊູຄຣິດ.
- ສາສນາຈານບາງກຸ່ມໃຫ້ການສັນນິຖານວ່າ ເປັນຄໍາສັ່ງຂອງພຣະເຈົ້າອີງຕາມພຣະສຸຣະສຽງຂອງພຣະເຈົ້າອອກມາຈາກທ້ອງຟ້າວ່າ " ທ່ານເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈໃນທ່ານຫລາຍ" (ມັດທາຍ 3:22).

ພຣະເຈົ້າປະກາດວ່າ "ທ່ານເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈໃນທ່ານ" (ມາຣະໂກ 1:11). ເປັນການເລົ້າໂລມໃຈຈາກພຣະເຈົ້າທີ່ເຫັນພຣະບຸດຂອງພຣະອົງຊົງຖ່ອມຕົວເຮັດຕາມນໍ້າພຣະທັຍຂອງພຣະບິດາ, ໃນການຍອມເຮັດຕາມນໍ້າພຣະທັຍຂອງພຣະບິດາເຮັດໃຫ້ພຣະບິດາໄດ້ສະແດງເຖິງຄວາມໂຄຣົບຢໍາເກງ ເມື່ອມີຄວາມເຄົາຣົບຢໍາເກງ ພຣະບິດາກໍພໍພຣະທັຍຈຶ່ງຊົງກ່າວວ່າ " ເຮົາຊອບໃຈໃນທ່ານ" ຊຶ່ງແປວ່າ ເຮົາພໍໃຈໃນທ່ານ.

ເຮົາທັງຫລາຍມີພຣະເຢຊູເປັນພຣະອາຈານຂອງພວກເຮົາ ສິ່ງໃດທີ່ພຣະເຢຊູເຮັດເຮົາກໍພະຍາຍາມເຮັດ, ສິ່ງໃດທີ່ພຣະເຢຊູເວົ້າເຮົາກໍພະຍາຍາມເວົ້າ ດ້ວຍເຫດນີ້ເມື່ອພຣະອົງຊົງຍອມຖ່ອມຕົວເຊື່ອຟັງພຣະບິດາສັນໃດ ເຮົາກໍຄວນຍອມເຊື່ອຟັງພຣະເຢຊູສັນນັ້ນ. ພຣະບິດາຊົ່ງກ່າວກັບພຣະເຢຊູສັນໃດ ພຣະບິດາກໍຈະກ່າວແກ່ເຮົາສັນນັ້ນ ເມື່ອຍອມຖ່ອມຕົວເຫມືອນພຣະເຢຊູພຣະອາຈານຂອງພວກເຮົາ. ຈົ່ງລະນຶກເຖິງພຣະເຈົ້າຊົງກ່າວວ່າ " ທ່ານເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈໃນທ່ານ" ຈົ່ງເຮັດໃຫ້ພຣະເຈົ້າພໍໃຈໃນຊີວິດຂອງເຮົາເຫມືອນດັ່ງພຣະອົງພໍໃຈໃນພຣະອາຈານຂອງພວກເຮົາ.

ຫລັງພຣະເຢຊູສະເດັດຂຶ້ນຈາກນໍ້າພຣະວິນຍານຂອງພຣະເຈົ້າຊົງນໍາພຣະເຢຊູເຂົ້າໄປໃນປ່າ. ໃນມາຣະໂກໄດ້ແປຄໍາວ່າ Ekballo "ບັງຄັບ" ໃນພາສາເດີມແປດັ່ງນີ້: Ekballo ແປວ່າ ອອກໄປ, ຈາກໄປ, ປ່ອຍໄປ, ນໍາໄປ, ບັງຄັບໄປ, ສົ່ງໄປ, ເອົາໄປ ດັ່ງນີ້ເປັນຕົ້ນ. ດັ່ງນັ້ນຂ້າພະເຈົ້າຢາກແປ Ekballo ວ່າ "ນໍາໄປ" ຂ້າພະເຈົ້າຈຶ່ງແປທັງຫມົດວ່າ ພຣະວິນໄດ້ຊົງນໍາພຣະອົງໃຫ້ສະເດັດເຂົ້າໄປໃນປ່າກັນດານ. ໃນມັດທາຍ ແປວ່າ "ຊົງພາ" ແລະລູກາແປວ່າ "ເຕັມໄປດ້ວຍພຣະວິນຍານບໍຣິສຸດ" ດັ່ງນັ້ນຂ້າພະເຈົ້າມີຄວາມເຫັນວ່າ ຄໍາວ່າບັງຄັບແມ່ນບໍ່ຢາກເຮັດ, ຫລືຢາກ ໄປ, ແຕ່ການຊົງນໍາແມ່ນໄປດ້ວຍກັນ. ເຫດທີ່ພຣະວິນຍານຊົງນໍາໄປກໍເພື່ອທົດລອງເບິ່ງຄວາມດີຂອງພຣະບຸດພຣະເຈົ້າເປັນເວລາສີ່ສິບວັນ ແລະໃນທີ່ສຸດພຣະເຢຊູກໍຊະນະການທົດລອງຂອງຊາຕານທຸກປະການ.

<u>ການປະກາດຂອງພຣະເຢຊູ</u> (1:14-15)

ພຣະເຢຊູຊົງເລີ້ມຕົ້ນປະກາດເຣື່ອງແຜ່ນດິນສວັນຂອງພຣະເຈົ້າທີ່ຄົນທົ່ວໂລກໄດ້ຊອກຄົ້ນຫາບັດນີ້ໄດ້ມາໃກ້ແລ້ວ ຂ່າວນີ້ຈຶ່ງເປັນຂ່າວປະເສີດທີ່ສຸດເພາະເປັນຂ່າວທີ່ໃຫ້ຄວາມຫວັງແກ່ມະນຸດ (ໂກໂລຊາຍ 1:23) ຂ່າວເຣື່ອງສັນຕິສຸກ (ເອເຟໂຊ 6:15). ແລະຍັງເປັນຂ່າວເຣື່ອງຂອງຊີວິດນິຣັນດອນໃນຟ້າສວັນອີກ (ໂຢຮັນ 3:1). ພຣະອົງເລີ້ມຕົ້ນປະກາດຂ່າວນີ້ທີ່ແຂວງຄາລີເລຫລັງຈາກໂຢຮັນຖືກຈັບ. ພຣະເຢຊູໄດ້ສັ່ງໃຫ້ປະຊາຊົນ "ຈົ່ງຖິ້ມໃຈເກົ່າເອົາໃຈໃຫມ່ແລະເຊື່ອໃນຂ່າວປະເສີດ" ພຣະອົງໄດ້ກ່າວເປັນສອງປະເດັນໃຫຍ່ຄື:

1. <u>**ຖິ້ມໃຈເກົ່າ**</u> ແປວ່າປ່ຽນຄວາມຄິດແລະປ່ຽນວິທີທາງຫລືການດໍາຣົງຊີວິດຂອງຕົນໃຫມ່.

   - ຄວາມຄິດອອກມາຈາກໃຈດັ່ງນັ້ນຄວາມຄິດຈຶ່ງເປັນເຣື່ອງໃນໃຈ ພຣະອົງສອນໃຫ້ປະລະຖິ້ມແລ້ວເອົາຄວາມຄິດຈິດໃຈໃຫມ່ເພາະຄວາມຄິດຈິດໃຈເປັນເຄື່ອງບັງຄັບຮ່າງກາຍໃຫ້ປະຕິບັດຕາມໃຈຄິດ.

- ວິທີທາງຊີວິດແມ່ນຜົນປາກົດເລື່ອງໃນໃຈຊຶ່ງເຫັນໄດ້ໃນການດຳຣົງຊີວິດປະຈຳວັນ.

2. **<u>ເຊື່ອໃນຂ່າວປະເສີດ</u>** ໃນພາສາເດີມ ວ່າ euaggelion ແປວ່າເລື່ອງຂອງພຣະເຈົ້າ. ຄືພຣະອົງສົ່ງພຣະບຸດຂອງພຣະອົງລົງມາເກີດ, ແລ້ວຕາຍເພື່ອໄຖ່ຄົນຈຳນວນຫລາຍໃຫ້ພົ້ນຈາກບຶງໄຟ ເມື່ອພຣະອົງຕາຍແລ້ວບໍ່ຈົບລົງພຽງເທົ່ານັ້ນ ພຣະອົງຍັງຄືນມາອີກເພື່ອພິສູດໃຫ້ເຫັນວ່າພຣະອົງຊົງເປັນພຣະເຈົ້າ ແລະຜູ້ທີ່ເຊື່ອທຸກຄົນກໍຈະຕາຍໃນພຣະອົງແລະໃນວັນສຸດທ້າຍກໍຈະຄືນມາເຫມືອນພຣະອົງ. ທັງຫມົດນີ້ເຮົາຮ້ອງວ່າຂ່າວປະເສີດ ເພາະບໍ່ມີຂ່າວໃດທີ່ປະເສີດຫລາຍໄປກວ່າຂ່າວນີ້.

ເຮົາສັງເກດເຫັນວ່າການປະກາດຄັ້ງແຮກຂອງພຣະເຢຊູລ້ວນແລ້ວແຕ່ເປັນການເລົ້າໂລມໃຈຜູ້ຟັງທີ່ຄິດວ່າຕົນເອງຫມົດຫວັງທີ່ຈະພົບກັບຊີວິດນິຣັນດອນ. ດັ່ງນັ້ນຈຶ່ງມີຜູ້ຄົນຈຳນວນຫລວງຫລາຍມາຟັງຄຳເທສນາສັ່ງສອນຄັ້ງນີ້ ແລະເມື່ອຟັງແລ້ວປະຊາຊົນຈຳນວນຫລວງຫລາຍກໍຖິ້ມໃຈເກົ່າເອົາໃຈໃຫມ່ເຊື່ອໃນຂ່າວປະເສີດຕາມທີ່ພຣະອົງໄດ້ປະກາດ.

<u>ຣິດອຳນາດພຣະເຢຊູ</u> (1:29-34)

ພຣະເຢຊູບໍ່ໄດ້ປະກາດເຣື່ອງແຜ່ນດິນສວັນເທົ່ານັ້ນພຣະອົງຍັງໃຊ້ອຳນາດໃນການໂຜດຫລາຍຄົນໃຫ້ດີພະຍາດ. ໃນເວລາແລງພໍສົມຄວນທີ່ພຣະອົງຈະຕ້ອງພັກຜ່ອນແຕ່ປະຊາຊົນກໍພາບັນດາຄົນເຈັບປ່ວຍແລະຄົນທີ່ມີຜີຮ້າຍສິງຢູ່ມາຫາພຣະອົງ ແລະຄົນທັງເມືອງກໍພາກັນມາອັ່ງອໍຢູ່ຕໍ່ຫນ້າປະຕູ ເພື່ອລໍຖ້າໂອກາດຈະເຂົ້າຫາພຣະເຢຊູປົວພະຍາດເຖິງຢ່າງໃດກໍດີການປິ່ນປົວພະຍາດບໍ່ແມ່ນຈຸດປະສົງອັນແຮກຂອງພຣະອົງ ທີ່ພຣະອົງໄດ້ປິ່ນປົວແລະຂັບໄລ່ຜີນັ້ນ ກໍເພື່ອ ສະແດງໃຫ້ເຮົາທັງຫລາຍເຫັນວ່າພຣະອົງຊົງມີຣິດອຳນາດບໍ່ຈຳກັດ ເພາະພຣະອົງຊົງເປັນພຣະເຈົ້າ.

ໃນແລງວັນນັ້ນເປັນວັນສິນບໍຣິສຸດ (ມາຣະໂກ 1:21) ກົດຫມາຍຂອງຊາວຢິວວັນນັ້ນຕ້ອງເປັນວັນພັກຜ່ອນການປົວພະຍາດກໍຈະບໍ່ມີໃນວັນນັ້ນ ດັ່ງນັ້ນປະຊາຊົນຈຶ່ງມາອັ່ງອໍທີ່ປະຕູເພື່ອລໍຖ້າໃຫ້ວັນສິນບໍຣິສຸດຜ່ານໄປໃນຮຸ່ງເຊົ້າ. ພໍເຖິງວັນຮຸ່ງເຊົ້າພຣະອົງກໍຊົງປິ່ນປົວປະຊາຊົນແລະຂັບໄລ່ຜີຮ້າຍທີ່ສິງຢູ່ໃນປະຊາຊົນອອກ. ແລະພຣະອົງຊົງສັ່ງຜີຮ້າຍບໍ່ໃຫ້ປາກ ທັງນີ້ກໍເພື່ອສະແດງຣິດອຳນາດຂອງພຣະອົງໃຫ້ປະຊາຊົນເຫັນວ່າພຣະອົງມີອຳນາດເຫນືອຜີຕົວນັ້ນເມື່ອມັນຍັງສິງຄົນຢູ່ນັ້ນມັນເຄີຍປາກເວົ້າຢູ່ບໍ່ເຊົາແລະບໍ່ມີໃຜເຮັດໃຫ້ມັດຢຸດປາກໄດ້.

<u>ຈຸດປະສົງຂອງການປະກາດ</u> (1: 35-39)

ໃນເວລາຍັງເຊົ້າມືດຫລັງຈາກປິ່ນປົວປະຊາຊົນແລ້ວພຣະອົງກໍສະເດັດອອກໄປບ່ອນງຽບສງັດເພື່ອນະມັສການໄຫວ້ວອນຂອບພຣະຄຸນພຣະເຈົ້າ ເປັນຮູບພາບທີ່ສຳຄັນອັນນຶ່ງທີ່ຄຣິສຕຽນທັງຫລາຍຄວນຈະເຮັດດັ່ງນີ້ທຸກຄັ້ງຫລັງ ຈາກເທສນາສັ່ງສອນ, ຫລືຫລັງຈາກເຮັດງານຂອງພຣະເຈົ້າທຸກກໍຣະນີ. ໃນຂະນະທີ່ພຣະອົງກຳລັງອ້ອນວອນຢູ່ນັ້ນຊີໂມນກໍເຂົ້າມາຣົບກວນພຣະອົງຊົງກ່າວວ່າ "ຄົນທັງຫລາຍກໍຊອກຫາທ່ານຢູ່ (ມາຣະໂກ 1: 37). ພຣະອົງຊົງກ່າວກັບສາວົກວ່າ "ໃຫ້ເຮົາທັງຫລາຍເຂົ້າໄປໃນເຂດບ້ານເມືອງໃກ້ຄຽງ ເພື່ອເຮົາຈະປະກາດທີ່ນັ້ນດ້ວຍ" (ມາຣະໂກ 1: 38).

ມີນັກສາສນາສາດອະທິບາຍວ່າ ພຣະເຢຊູມີຈຸດປະສົງປະກາດເຣື່ອງແຜ່ນດິນສວັນຫລາຍກວ່າການປິ່ນປົວພະຍາດທັງນີ້ເນື່ອງຈາກວ່າ ການປິ່ນປົວພະຍາດແລະຂັບໄລ່ຜີອອກແລ້ວບໍ່ ຫມາຍຄວາມວ່າຄົນທີ່ເປັນພະຍາດແລະ

ຄົນທີ່ມີພິສິງນັ້ນຈະຫາຍດີເປັນພະຍາດຕລອດໄປ ດັ່ງນັ້ນພຣະອົງຈຶ່ງຕັ້ງໜ້າປະກາດເຣື່ອງແຜນດິນສວັນຫລາຍກວ່າ ເຣື່ອງປົວພະຍາດເພາະເມື່ອຄົນທັງຫລາຍກັບໃຈເຊື່ອໃນຂ່າວປະເສີດທີ່ພຣະອົງປະກາດແລ້ວເຂົາກໍຈະໄດ້ຊີວິດນິຣັນ ສ່ວນຄົນທີ່ດີພະຍາດນັ້ນວັນນຶ່ງເຂົາກໍຈະເກີດພະຍາດແນວອື່ນອີກ.

<u>ຄຳຖາມ:</u>

1. ເປັນຫຍັງພຣະເຢຊູຈຶ່ງຮັບບັບຕິສມານຳໂຢຮັນທີ່ແມ່ນ້ຳຢໍດາເນ?

2. ພຣະເຢຊູໄດ້ເລີ້ມຕົ້ນປະກາດແນວໃດ? ມີສິ່ງໃດແດ່ທີ່ເຮົາສົມຄວນຮຽນແບບພຣະອົງ?

3. ເປັນຫຍັງປະຊາຊົນຈຶ່ງມາອັ່ງອໍທີ່ປະຕູໃນແລງວັນສິນບໍຣິສຸດ?

4. ຫຍັງຈາກປະກາດເຣື່ອງແຜ່ນດິນສວັນແລະປິ່ນປົວພະຍາດແລ້ວພຣະເຢຊູເຮັດຫຍັງ?

5. ການປະກາດເຣື່ອງແຜ່ນດິນສວັນກັບການປິ່ນປົວພະຍາດ ພຣະເຢຊູເອົາໃຈໃສ່ອັນໃດຫລາຍກວ່າ? ເປັນຫຍັງ?

# <u>ບົດຮຽນທີ 2</u>
# <u>ຜູ້ນໍາສາສນາຊາດຢິວປອງຮ້າຍພຣະເຢຊູ</u>

---

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> ມາຣະໂກ 2:1-17; 3:1-6
<u>ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້:</u> ມາຣະໂກ 2:1--3:6
<u>ຈຸດສໍາຄັນຂອງບົດຮຽນນີ້:</u> ພຣະເຢຊູຊົງເຕືອນຜູ້ນໍາສາສນາຊາດຢິວຢ່າຄິດຊົ່ວໃນໃຈ.
<u>ຄໍາຖາມເພື່ອການສໍາຣວດ</u> ພຣະເຢຊູຊົງແກ້ໄຂບັນຫາແນວໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າພຣະເຢຊູມີບັນຫາກ່ອນພວກເຮົາແລ້ວຢ່າສູ້ຢ້ານ.

<u>ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນ</u>

- ນໍາຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຊ່ອຍເຫລືອເບິ່ງແຍງທຸກຄົນໃນພຣະນາມແຫ່ງພຣະເຢຊູຄຣິດ ທີ່ຕົກຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.

ເມື່ອພຣະເຢຊູຊົງອະພັຍຄວາມຜິດບາບແລະປິ່ນປົວຄົນເປັ້ຽລ່ອຍ ແລະຊົງເອີ້ນເອົາຄົນເກັບພາສີໃຫ້ເປັນຜູ້ຕິດຕາມພຣະອົງໃນວັນສິນບໍຣິສຸດແລະປົວຄົນມີລິບເປື້ອງນຶ່ງເປັນຕົ້ນເຫດໃຫ້ບັນດາພວກຫົວຫນ້າສາສນາທ້ອງຖິ່ນບໍ່ພໍໃຈທີ່ພຣະອົງເຮັດການອັສຈັນໃນວັນຊະບາໂຕ ດັ່ງນັ້ນພວກເຂົາຈຶ່ງຊອກຫາເຣື່ອງພຣະອົງຢູ່ບໍ່ເຊົາ.

<u>ຊົງໂຜດຄົນເປັ້ຽໃຫ້ຄືນດີເປັນປົກກະຕິ</u> (2:1-12).

ຫລັງຈາກການເທສນາສັ່ງສອນທີ່ຄາລີເລແລ້ວພຣະອົງກໍສະເດັດກັບຄືນເມືອງກາເປນາອູມ, ມີສາສນາສາດໃຫ້ຄໍາເຫັນວ່າເມືອງກາເປນາອູມເປັນບ້ານຂອງເປໂຕສາວົກຂອງພຣະເຢຊູ ແລະເນື່ອງຈາກວ່າເປັນບ້ານຂອງເປໂຕຜູ້ເປັນສາວົກທີ່ໃກ້ຊິດກັບພຣະເຢຊູ ບ້ານນັ້ນຈຶ່ງກາຍເປັນສູນກາງການປະເຣື່ອງແຜ່ນດິນສວັນຂອງອົງພຣະຜູ້ເປັນເຈົ້າ.

ຊື່ສຽງຄວາມດີຂອງພຣະເຢຊູໄດ້ຊ່າລືໄປທົ່ວເມືອງກາເປນາອູມດັ່ງນັ້ນຄົນທັງຫລາຍຈຶ່ງພາກັນຫລັ່ງມາຫາພຣະອົງເພື່ອຟັງຄໍາສັ່ງສອນເຣື່ອງແຜ່ນດິນສວັນຂອງພຣະເຈົ້າ. ໃນເວລານັ້ນມີຄົນເປັ້ຽຜູ້ນຶ່ງມີຄວາມເຊື່ອໃນໃຈຂອງລາວຢ່າງເຕັມອົກເຕັມໃຈລາວຈຶ່ງວານຍາດພີ່ນ້ອງໃຫ້ຫາມລາວເຂົ້າໄປຫາພຣະເຢຊູເພື່ອຈະຂໍໃຫ້ພຣະອົງປິ່ນປົວລາວແຕ່ພໍເມື່ອຍາດພີ່ນ້ອງຫາມລາວມາເຖິງເຮືອນທີ່ພຣະເຢຊູຊົງປະທັບຢູ່ ກໍບໍ່ສາມາດເຂົ້າໄປຫາພຣະເຢຊູໄດ້ເພາະຄົນຫນາແຫນ້ນໄປຫມົດ. ດັ່ງນັ້ນເຂົາເຈົ້າຈຶ່ງຫາມລາວຂຶ້ນໄປເທິງຫລັງຄາເຮືອນ,ຊຶ່ງເປັນເຮືອນແບບຊາວຢິວທີ່ມີຫລັງຄາພຽງແລະແຂງ ຄົນລາວເຮົາຮ້ອງວ່າດາດຟ້າ. "ເມື່ອເຂົາເຂົ້າໄປເຖິງພຣະອົງບໍ່ໄດ້ເພາະຄົນຫລາຍເຂົາຈຶ່ງຮື້ຫລັງຄາຊື່ບ່ອນພຣະອົງປະທັບນັ້ນ ເມື່ອຮື້ເປັນປ່ອງແລ້ວເຂົາກໍຢ່ອນບ່ອນນອນທີ່ຄົນເປັ້ຽນອນຢູ່ນັ້ນລົງມາ" (ມາຣະໂກ 1: 4)

ທີ່ບ້ານໃກ້ຄຽງຂອງຂ້າພະເຈົ້າທີ່ເມືອງລາວໃນສມັຍກ່ອນມີຄົນເປັ້ຽຜູ້ນຶ່ງເປັນເປັ້ຽແຕ່ອາຍຸເຈັດປີເນື່ອງ ຈາກການສັກຢາຜິດ. ປັດຈຸບັນນີ້ຄົນເປັ້ຽຜູ້ນັ້ນກາຍເປັນຄົນແກ່ແລ້ວແລະລາວກໍຍັງເປັນເປັ້ຽຢູ່. ຂ້າພະເຈົ້າໄດ້ພົວພັນກັບຄົນເປັ້ຽຜູ້ນີ້ຢ່າງສົມຄວນ ຫລັກສະນະຮ່າງກາຍຂອງລາວຄືຂາທັງສອງຂ້າງຂອງລາວນ້ອຍກວ່າຂໍ່ແຂນຂອງເຮົາແລະກົກແຂນທັງສອງຂ້າງກໍນ້ອຍ, ແຕ່ແຂນທັງສອງຂ້າງເລີ້ມແຕ່ແຂນສອກມາເຖິງມືກໍ ໃຫຍ່ເປັນປົກກະຕິ ຫົວແລະໜ້າຕາຂອງລາວກໍໃຫຍ່ປົກກະຕິ ຂ້າພະເຈົ້າຮັກແລະສົງສານລາວຈຶ່ງອາສາສມັກຮັບໃຊ້ລາວຫລາຍອັນຕໍ່ອາທິດໂດຍພາລາວໄປແລະມາຕາມທີ່ລາວຢາກໄປດ້ວຍການອູ້ມ. ໃນຂະນະທີ່ອູ້ມລາວຂ້າພະເຈົ້າຈຳຕ້ອງຣະວັງເພາະທາງຫົວລາວໜັກກວ່າທາງລຸ່ມຂອງຮ່າງກາຍຫລາຍເພາະພາກສ່ວນຂອງຮ່າງກາຍບໍ່ມີນ້ຳໜັກເໝືອນຄົນທັມມະດາ, ຫາກບໍ່ຣະວັງຫົວຂອງລາວກໍຈະອ່ຽງລົ້ມໄປຂ້າງໜ້າ.

ໃນພຣະຄັມທີ່ເຮົາກຳລັງສຶກສາກັນຢູ່ນີ້ເຂົານຳຄົນເປັ້ຽມາຫາພຣະເຢຊູ ເຂົາຕ້ອງໃຊ້ຄົນຫາມຈາກສອງເຖິງສີ່ຄົນເພາະເຂົາຫາມມາທັງບ່ອນນອນຂອງຄົນເປັ້ຽ. ຂ້າພະເຈົ້າອາດພາບເຫັນຄົນເປັ້ຽທີ່ຍ່າງໄດ້ຄັ້ງແຮກໃນຊີວິດຄືຈະບໍ່ຍ່າງຄືພວກເຮົາ ເພາະບໍ່ເຄີຍຍ່າງຈັກເທື່ອ ແລະຂາຂອງລາວອາຈບໍ່ໃຫຍ່ເປັນຂາທັມດາ ຫລືຂານັ້ນອາຈຍັງຈ່ອຍຢູ່. ດ້ວຍຣິດອຳນາດຂອງພຣະເຢຊູເຖິງແມ່ນລາວບໍ່ເຄີຍຍ່າງຫລືຂາຍັງຈ່ອຍຢູ່ກໍບໍ່ສຳຄັນ ແຕ່ລາວໄດ້ຍ່າງແລະແບກບ່ອນນອນຂອງຕົນໄປດ້ວຍການສັຣເສີນພຣະເຈົ້າດ້ວຍຄວາມຊົມຊື່ນຍິນດີ.

ດ້ວຍຄວາມເຊື່ອຂອງຄົນເປັ້ຽຜູ້ນັ້ນພຣະເຢຊູຊົງກ່າວວ່າ "ລູກເອີຍ, ຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ" ແຕ່ມີພວກນັກທັມບາງຄົນ (ບໍ່ແມ່ນທຸກຄົນ) ຄຶດໃນໃຈວ່າ ເປັນຫຍັງຄົນນີ້ (ພຣະເຢຊູ)ຈຶ່ງເວົ້າແນວນັ້ນເປັນການໝິ່ນປມາດພຣະເຈົ້າແທ້ ໃຜຈະຍົກຄວາມຜິດບາບໄດ້ ເວັ້ນແຕ່ພຣະເຈົ້າເທົ່ານັ້ນ (ມາຣະໂກ 2:5). ພວກນັກທັມເວົ້າຖືກແລ້ວບໍ່ມີໃຜຍົກຄວາມຜິດບາບໄດ້ນອກຈາກພຣະເຈົ້າ ແຕ່ພວກເຂົາບໍ່ຮູ້ວ່າພຣະເຢຊູຊົງເປັນພຣະເຈົ້າ. ໃນໃຈຂອງເຂົາຄຶດອິດສາກໍເພາະວ່ານັບແຕ່ນີ້ເຂົາເປັນນັກທັມມາເຂົາບໍ່ມີຄວາມສາມາດເຮັດການນີ້ຈັກເທື່ອ, ເມື່ອເຂົາເຫັນພຣະເຢຊູກະທຳການອັສຈັນນີ້ເຂົາຈຶ່ງຄຶດອິດສາ ເພາະເຂົາຄຶດວ່າພຣະເຢຊູແມ່ນຄົນທັມມະດາຄືເຂົາ ຈາກນັ້ນເຂົາກໍສົງຊອມເອົາເຣື່ອງພຣະເຢຊູເພີ້ມເຕີມ. ດັ່ງນັ້ນເຮົາ ທັງຫລາຍຢ່າເອົາໃຈໃສ່ໃນຄົນທີ່ຄຶດອິດສາເຮົາໃນການເຮັດດີແຕ່ໃຫ້ເອົາໃຈໃສ່ຫລີກເວັ້ນຈາກການຊົ່ວ.

<u>ຊົງເອີ້ນເລວີ</u> (2:13-17)

ຕໍ່ຈາກນັ້ນມາພຣະອົງກໍສະເດັດໄປຕາມແຄມທະເລສາບເພື່ອສັ່ງສອນປະຊາຊົນ "ເມື່ອພຣະອົງກຳລັງສະເດັດໄປນັ້ນກໍຊົງເຫັນເລວີລູກອາລາຟາຍນັ່ງຢູ່ດ່ານພາສີ ພຣະອົງຈຶ່ງຊົງກ່າວວ່າ, "ຈົ່ງຕາມເຮົາມາ" ເພິ່ນກໍລຸກຕາມພຣະອົງໄປ ເມື່ອພຣະອົງປະທັບສເວີຍອາຫານຢູ່ໃນເຮືອນຂອງເລວີ ມີຄົນເກັບພາສີແລະຄົນນອກສິນທັມຫລາຍຄົນ ນັ່ງຮ່ວມໂຕະກັບພຣະເຢຊູແລະພວກສິດຂອງພຣະອົງເພາະມີຄົນຕິດຕາມພຣະອົງໄປຫລາຍ ແລະມີພວກນັກທັມຝ່າຍຟາຣີຊາຍເມື່ອເຫັນພຣະອົງສເວີຍອາຫານກັບຄົນນອກສິນທັມແລະຄົນເກັບພາສີ ໄດ້ທ້ວງຖາມສິດຂອງພຣະອົງວ່າ "ເປັນຫຍັງໜໍ ເພິ່ນຈຶ່ງຍອມຮັບປະທານອາຫານຮ່ວມກັບຄົນນອກສິນທັມແລະຄົນເກັບພາສີ" (ມາຣະໂກ 2:14-16).

ຄົນເກັບພາສີຜູ້ນີ້ໃນພຣະທັມ <u>ມັດທາຍ 9:9</u> ໄດ້ບອກເຮົາວ່າແມ່ນສາວົກມັດທາຍນັ້ນເອງ. ຄົນເລວີຜູ້ນີ້ໄດ້ເຮັດການເປັນຄົນເກັບພາສີໃຫ້ໂຣມັນ ຈຶ່ງເປັນຕົ້ນເຫດໃຫ້ປະຊາຊົນກຽດຊັງຈົນບໍ່ຢາກເບິ່ງໜ້າ, ເໝືອນກັບຄົນທັງຫລາຍມັກຈະເວົ້າໃຫ້ຄົນລາວຄຣິສຕຽນວ່າເປັນຄົນຂາຍຊາດ, ຂາຍສາສນາ ຈົນບາງຄົນເກືອບບໍ່ຢາກເວົ້ານຳຄຣິສຕຽນ.

ໃນຂນະທີ່ພຣະອົງກຳລັງສເວີຍອາຫານຮ່ວມ ກັບຄົນເກັບພາສີແລະພັກພວກຂອງຄົນເກັບພາສີຢູ່ ມີພວກທີ່ຮ້ອງຕົນເອງວ່ານັກທັມ ກໍເຂົ້າມາຖາມເຣື່ອງນັ້ນນຳສາວົກ ພຣະອົງໂດຍກ່າວວ່າ " ເປັນຫຍັງຫນໍເພິ່ນຈຶ່ງຍອມຮັບປະທານອາຫານຮ່ວມກັບຄົນນອກສິນທັມແລະຄົນເກັບພາສີ" ດ້ວຍໃຈອິດສາຂອງຟາຣີຊາຍເຂົາຈຶ່ງເຫັນແຕ່ຄວາມຜິດທຸກຢ່າງທີ່ພຣະເຢຊູກະທຳ ເພາະຄວາມອິດສານັ້ນໄດ້ບັງຕາໄວ້ບໍ່ໃຫ້ເຫັນພຣະອົງເຮັດການດີ.

"ຄັນພຣະເຢຊູຊົງໄດ້ຍິນດັ່ງນັ້ນ ກໍຊົງກ່າວແກ່ເຂົາວ່າ "ຄົນສະບາຍບໍ່ຕ້ອງການຫມໍຢາ ແຕ່ຄົນເຈັບຕ້ອງການຫມໍ ເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິນທັມ ແຕ່ມາເອີ້ນເອົາຄົນນອກສິນທັມ" (ມາຣະໂກ 2:17). ພວກນັກທັມຟາຣີຊາຍເຂົ້າໃຈວ່າຕົນເອງເປັນຄົນສິລທັມຈຶ່ງບໍ່ຍອມຮ່ວມໂຕະນຳຄົນບາບ ແຕ່ພຣະເຢຊູຊົງພໍພຣະທັຍທີ່ຈະພົວພັນນຳຄົນບາບ. ພຣະອົງຊົງຮັກຄົນບາບ ເພາະພຣະອົງຊົງຮູ້ວ່າຄົນບາບເຫລົ່ານັ້ນຕ້ອງການຟັງຄຳສັ່ງສອນຂອງພຣະອົງ ດັ່ງນັ້ນເຂົາຈຶ່ງຊັກຊວນພັກພວກມາຮ່ວມໂຕະກັບພຣະອົງ. ແຕ່ສຳລັບຄົນທີ່ຮ້ອງຕົນເອງວ່າເປັນຄົນສິນທັມບໍ່ຢາກຟັງຄຳສັ່ງສອນພຣະອົງເພາະຖືວ່າຕົນເອງເປັນຄົນສິລທັມ. ຄຳຕອບຂອງພຣະເຢຊູພໍຈະສລຸບໄດ້ວ່າ ໃຜກໍຕາມທີ່ຮ້ອງວ່າຕົນເອງເປັນຄົນມີສິລທັມ ແລະຄົນທີ່ບໍ່ຍອມຖ່ອມຕົວ ພຣະອົງບໍ່ມີປະສົງຈະຮ້ອງເອົາຄົນນັ້ນ ແຕ່ພຣະອົງສະເດັດມາຮ້ອງເອົາທຸກຄົນທີ່ຍອມຮັບວ່າຕົນເອງເປັນຄົນບາບ ບໍ່ວ່າຈະເປັນຄົນຍາກຈົນຫລືຮັ່ງມີເປັນເສດຖີຫລືຂໍທານເປັນຄົນພິການຫລືຄົນມີກຳລັງ ພຣະອົງບໍ່ໄດ້ເລືອກຫນ້າ ຂໍແຕ່ຍອມຖ່ອມຕົວຟັງພຣະທັມພຣະອົງເທົ່ານັ້ນຄົນນັ້ນຈະກາຍເປັນຄົນສິນທັມໃນສາຍພຣະເນດຂອງພຣະເຈົ້າ. ດັ່ງນັ້ນເຮົາທັງຫລາຍຢ່າອິດສາເຫມືອນຟາຣີຊາຍທີ່ເຫັນຜູ້ອື່ນມີຊື່ສຽງດີກວ່າພວກເຮົາ.

<u>ຊົງໂຜດຊາຍມືລີບເບື້ອງນຶ່ງ</u> (3:1-6)

ພວກຟາຣີຊາຍຕິດຕາມພຣະເຢຊູ ບໍ່ເຫມືອນສາວົກຕິດຕາມ, ສາວົກຕິດຕາມພຣະອົງຢ່າງໃກ້ຊິດເພື່ອຮຽນຮູ້ແລະຮັບໃຊ້ພຣະອົງ ສຳລັບພວກຟາຣີຊາຍຕິດຕາມພຣະອົງຢູ່ຫ່າງໄກເພື່ອຈັບຄວາມຜິດພຣະອົງ. ໃນທີ່ສຸດພວກຟາຣີຊາຍກໍເຫັນພຣະອົງເຂົ້າໄປໃນໂຮງທັມມະເທສນາອີກ " ແລ້ວພຣະອົງໄດ້ສະເດັດເຂົ້າໂຮງທັມມະເທສນາອີກ ແລະທີ່ນັ້ນມີຄົນນຶ່ງມືເບື້ອງນຶ່ງລີບ ເຂົາຊອມເບິ່ງວ່າພຣະອົງຈະຊົງໂຜດໃຫ້ຄົນນັ້ນດີໃນວັນຊະບາໂຕຫລື ເພື່ອເຂົາຈະຟ້ອງພຣະອົງໄດ້" (ມາຣະໂກ 3: 1-2). ສ່ວນພຣະເຢຊູກໍຮູ້ຕົວດີວ່າພວກຟາຣີຊາຍຕິດຕາມຢູ່ຫ່າງໄກເພື່ອເອົາເຣື່ອງພຣະອົງດັ່ງນັ້ນເມື່ອເຫັນຊາຍມືລີບແລ້ວ "ພຣະອົງຊົງກ່າວແກ່ຄົນມືລີບວ່າ ຈົ່ງລຸກຂຶ້ນມາຢືນຂ້າງຫນ້າສາ" (ມາຣະໂກ 3:3).

ຄວາມຈິງແລ້ວຊາຍຄົນນີ້ບໍ່ແມ່ນຄົນຕາຍ ລາວພຽງແຕ່ມືລີບຂ້າງນຶ່ງ ຄຳຖາມມີຢູ່ວ່າເປັນຫຍັງພຣະອົງຈຶ່ງບໍ່ຖ້າເວັ້ນຈາກວັນຊະບາໂຕເສັຽກ່ອນຈຶ່ງປົວລາວ ເພາະການກະທຳຂອງພຣະອົງເວລານີ້ເຫັນໄດ້ປະຈັກຕາວ່າພຣະອົງບໍ່ຢ້ານແລະເກງໃຈພວກຟາຣີຊາຍ ຫລືຢ້ານຕໍ່ກົດຣະບຽບຂອງຢິວໂດຍຊົງກ່າວວ່າ "ໃນວັນຊະບາໂຕຄວນຈະເຮັດການດີຫລືຄວນຈະເຮັດການຮ້າຍ ຈະເອົາຊີວິດໄວ້ຫລືຈະຕັດຊີວິດເສັຽ" ແຕ່ເຂົາກໍມິດຢູ່ ເມື່ອທອດພະເນດເບິ່ງອ້ອມເຂົາດ້ວຍຄວາມເຄືອງພຣະທັຍ ພຣະອົງກໍຊົງເປັນທຸກພຣະທັຍເພາະເຂົາແຂງກະດ້າງປົກຕັນ ແລ້ວພຣະອົງຊົງກ່າວແກ່ຄົນມືລີບວ່າ "ຈົ່ງຢຽດມືອອກ" ຄົນນັ້ນກໍຢຽດມືອອກແລະມືຂອງຄົນນັ້ນກໍດີເປັນປົກກະຕິ (ມາຣະໂກ 3: 4).

ເຫດທີ່ພຣະເຢຊູບໍ່ໄດ້ລໍຖ້າຈົນກາຍວັນຊະບາໂຕແລ້ວຈຶ່ງປົວຄົນມືລີບຜູ້ນັ້ນເພາະວ່າພຣະອົງຢາກສະແດງໃຫ້ເຂົາເຫັນ ວ່າພຣະອົງເປັນເຈົ້າຂອງວັນຊະບາໂຕ. "ເຫດສັນນັ້ນຢ່າໃຫ້ຜູ້ໃດກ່າວໂທດເຈົ້າທັງຫລາຍໃນເຣື່ອງການກິນການດື່ມໃນເຣື່ອງເທສການ, ເຣື່ອງວັນຕົ້ນເດືອນ, ຫລືວັນຊະບາໂຕ ສິ່ງເຫລົ່ານີ້ເປັນພຽງແຕ່ເງົາຂອງເຫດການທີ່ຈະມາພາຍຫລັງ ແຕ່ຕົວຈິງນັ້ນຄືອົງພຣະຄຣິດ" (ໂກໂລຊາຍ 2: 16-17).

ພຣະອົງເຫັນພວກເຂົາມິດຢູ່ບໍ່ຕອບ, ພຣະອົງຈຶ່ງເຄືອງພຣະທັຍ (ໃຈຮ້າຍ) ເພາະພຣະອົງພະຍາຍາມສະແດງຣິດອຳນາດໃຫ້ເຂົາເຫັນວ່າພຣະອົງຊົງເປັນພຣະເຈົ້າ ແຕ່ພວກເຂົາກໍບໍ່ຍອມເຂົ້າໃຈ ເພາະເຂົາຢ້ານຈະເສັຽຕຳແໜ່ງ, ຊື່ສຽງ ແລະໜ້າຕາຂອງພວກເຂົາ. ພຣະອົງເປັນທຸກໃຈເພາະເຂົາແຂງກະດ້າງບໍ່ຍອມຮັບເຊື່ອຄວາມຈິງ. ເຖິງແມ່ນວ່າຈະເຫັນກັບຕາເຂົາກໍຮັບບໍ່ໄດ້ ດ້ວຍເຫດນີ້ເຂົາຈຶ່ງວາງແຜນຈະຂ້າພຣະອົງເພື່ອກຽດແລະສັກສີຂອງເຂົາຈະຍັງຄົງຢູ່ເຫມືອນເດີມ.

<u>ຄຳຖາມ:</u>

1. ດ້ວຍເຫດໃດຄົນເປັ້ຽຈຶ່ງໄປຫາພຣະເຢຊູ? ເມື່ອເຂົ້າໄປບໍ່ໄດ້ເຂົາເຮັດແນວໃດຈຶ່ງເຂົ້າໄປໄດ້?

2. ວາດພາບຄົນເປັ້ຽຍ່າງໄດ້ຄັ້ງແຮກໃນຊີວິດຈະເປັນແນວໃດ?

3. ຄົນສະບາຍບໍ່ຕ້ອງການໝໍຢາ ແຕ່ຄົນເຈັບຕ້ອງການໝໍ ເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິນທັມ ແຕ່ມາເອີ້ນເອົາຄົນນອກສິນທັມ ທີ່ພຣະເຢຊູກ່າວໝາຍຄວາມວ່າແນວໃດ?

4. ມີສອງພວກຕິດຕາມພຣະເຢຊູນັ້ນ ມີພວກໃດແດ່? ແຕ່ລະພວກຕິດຕາມແຕກຕ່າງກັນຢ່າງໃດ?

5. ເປັນຫຍັງພຣະເຢຊູຈຶ່ງບໍ່ລໍຖ້າຈົນພົ້ນວັນຊະບາໂຕແລ້ວຈຶ່ງເຮັດການອັສຈັນເຫລົ່ານີ້?

6. ເປັນຫຍັງພວກຟາຣີຊາຍຈຶ່ງບໍ່ພໍໃຈແລະປອງຂ້າພຣະອົງເສັຽ?

7. ມີສອງພວກທີ່ຕິດຕາມພຣະເຢຊູນັ້ນທ່ານແມ່ນພວກໃດ?

8. ເຮົາທັງຫລາຍຈະນຳເຣື່ອງນີ້ໄປບອກກັບຍາດພີ່ນ້ອງເຮົານີ້ໃດ?

# ບົດຮຽນທີ 3
# ກຸ່ມຕິດຕາມພຣະເຢຊູ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມາຣະໂກ 3: 7-35
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ມາຣະໂກ 3: 7-35
ຈຸດສຳຄັນຂອງບົດຮຽນນີ້: ພຣະເຢຊູຊົງແຕ່ງຕັ້ງທ່ານໃຫ້ເຮັດພາຣະກິດຂອງພຣະບິດາ
ຄຳຖາມເພື່ອການສຳຣວດ ເຮົາຈະຕອບສນອງໃນການແຕ່ງຕັ້ງພຣະອົງແນວໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າທຸກຄົນທີ່ເຮັດພາຣະກິດຂອງພຣະເຈົ້າແມ່ນຄອບຄົວພຣະເຢຊູ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ**

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຊ່ອຍເຫລືອເບິ່ງແຍງທຸກຄົນໃນພຣະນາມແຫ່ງພຣະເຢຊູຄຣິດ ທີ່ຕົກຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.
- ປັບປຸງຄອບຄົວຄຣິສຕຽນໃຫ້ເຂັ້ມແຂງ.

ຫລັງຈາກພຣະອົງຊົງປົວຄົນມືລີບແລ້ວປະຊາຊົນຈາກຫລາຍແຫ່ງໄດ້ຕິດຕາມພຣະອົງຮວມທັງຜູ້ທີ່ຖືກປົວໃຫ້ດີພະຍາດ ແລະຄົນຍັງເປັນພະຍາດຢູ່ກໍຕາມຫາພຣະອົງເພື່ອຈະເຂົ້າໃກ້ພຣະອົງ, ສ່ວນພວກຟາຣີຊາຍກໍຕິດຕາມສອດແນມຢູ່ເໝືອນກັນ ເພື່ອເຂົາຈະຈັບເອົາຫລັກຖານຟ້ອງພຣະອົງຕໍ່ສານສູງສຸດ. ທຸກວັນນີ້ກໍມີບຸກຄົນສີ່ປະເພດຕິດຕາມພຣະອົງ ເໝືອນສມັຍກ່ອນບໍ່ຜິດເລີຍ, ຄົນສີ່ຈຳພວກນີ້ຄື:

1. ສາວົກຂອງພຣະອົງ ຕິດຕາມພຣະອົງຢ່າງໃກ້ຊິດເພື່ອຮຽນຮູ້ແລະຄອຍຮັບໃຊ້ພຣະອົງ.
2. ຜູ້ທີ່ພຣະອົງປົວພະຍາດໃຫ້ຫາຍດີແລ້ວກໍຕິດຕາມເພາະຮູ້ຈັກພຣະຄຸນພຣະອົງ.
3. ຜູ້ຍັງເປັນພະຍາດກໍຕິດຕາມເພື່ອຫາໂອກາດເຂົ້າຫາພຣະອົງເພື່ອປົວພະຍາດ.
4. ຟາຣີຊາຍຕິດຕາມເພື່ອຊອກຫາພະຍານຫລັກຖານເພື່ອຟ້ອງພຣະອົງ.

ຄຳຖາມມີຢູ່ວ່າ ໃນຈຳນວນຄົນສີ່ປະເພດນີ້ທ່ານແມ່ນຜູ້ຕິດຕາມແນວໃດ? ທ່ານແນ່ໃຈວ່າທ່ານເປັນແນວນັ້ນແທ້ບໍ່?

## ປະຊາຊົນຜູ້ຕິດຕາມ (ມາຣະໂກ 3: 7-12)

- ກຸ່ມຕິດຕາມພຣະເຢຊູກຸ່ມທີ 1

ຫລັງຈາກພຣະອົງຊົງປົວຄົນມືລີບແລ້ວ ພວກຟາຣີຊາຍຈຶ່ງໄປປຶກສາກັບພັກພວກຂອງເຮໂຣດວາງແຜນການຈະຂ້າພຣະເຢຊູເສັຽ ເມື່ອພຣະອົງຮູ້ຂ່າວນັ້ນພຣະອົງຈຶ່ງຟ້າວອອກໄປຍັງບ່ອນເປີດແປນຄືສະເດັດໄປຍັງແຄມທະເລສາບພ້ອມກັບສາວົກພຣະອົງດ້ວຍຄວາມຣະມັດຣະວັງ. ສາວົກຂອງພຣະອົງນອກຈາກການຕິດຕາມຢ່າງ

ໃກ້ຊິດເພື່ອຮຽນຈາກພຣະອົງແລ້ວພວກເຂົາເຈົ້າຍັງຮັບໃຊ້ພຣະອົງດ້ວຍໃຈໂມທະນາພຣະຄຸນແລະຍັງປ້ອງກັນພັຍອັນຕະລາຍ ໃຫ້ພຣະອົງອີກ ຕົວຢ່າງ: "ຊີໂມນເປໂຕ ມີດາບຈຶ່ງຖອດອອກຟັນຂ້ອຍໃຊ້ຄົນນຶ່ງຂອງມະຫາປະໂລຫິດຖືກຫູເບື້ອງຂວາຂາດ ຂ້າໃຊ້ຜູ້ນັ້ນຊື່ວ່າມາລະໂຂ (ໂຢຮັນ 18:10). ຂ້າພະເຈົ້າຄິດວ່າເປໂຕຄົງບໍ່ຫມາຍໃຈຈະຕັດຫູຂອງຂ້າໃຊ້ ປະໂລຫິດດອກແຕ່ຄິດວ່າລາວຫມາຍໃຈຈະຜ່າຫົວລົງມາເລີຽແຕ່ກໍພາດໄປເພາະຄົນນັ້ນອາຈຫລີກຫລີເປໂຕເອງບໍ່ແມ່ນນັກຟັນດາບຈຶ່ງຟັນບໍ່ຖືກເປົ້າຫມາຍ.

- ກຸ່ມຕິດຕາມພຣະເຢຊູກຸ່ມທີ 2

ກຸ່ມຕິດຕາມພຣະເຢຊູກຸ່ມທີ 2 ຕິດຕາມພຣະອົງດ້ວຍໃຈສັດຊື່ເພາະພວກເຂົາເຈົ້າຮູ້ວ່າເມື່ອເຂົາໄດ້ຟັງຄຳ ເທສນາສັ່ງສອນຂອງພຣະເຢຊູແລ້ວເຮັດໃຫ້ເຂົາປັ້ມປີຕິຍິນດີເພາະຕົນເອງໄດ້ຮັບຄວາມລອດພົ້ນຝ່າຍຈິດວິນຍານ ສ່ວນຝ່າຍຮ່າງກາຍກໍຫາຍດີພະຍາດເນື່ອງຈາກພຣະອົງຊົງປິ່ນປົວເຂົາ,ດ້ວຍເຫດນີ້ຄົນຈຳພວກນີ້ຈຶ່ງສມັກໃຈຕິດຕາມພຣະອົງດ້ວຍຄວາມຍິນດີແລະໃຈໂມທະນະພຣະຄຸນ.

- ກຸ່ມຕິດຕາມພຣະເຢຊູກຸ່ມທີ 3

ກຸ່ມຕິດຕາມພຣະເຢຊູກຸ່ມທີ 3 ໄດ້ແກ່ຜູ້ທີ່ເຫັນຊີວິດຂອງກຸ່ມທີ 2 ແລ້ວຢາກໃຫ້ຊີວິດຂອງຕົນເອງເປັນຄືເຂົາເຈົ້າຄືໄດ້ຮັບຄວາມລອດພົ້ນຝ່າຍຈິດວິນຍານ ແລະຈະຂໍໃຫ້ພຣະເຢຊູປົວພະຍາດທາງຮ່າງກາຍຂອງພວກເຂົາເຫມືອນດັ່ງພຣະອົງໄດ້ປົວຄົນໃນກຸ່ມທີ 2 ນັ້ນ.

ຄົນຫລວງຫລາຍໄດ້ມາຫາພຣະອົງເພາະເຂົາໄດ້ຍິນເຖິງເຣື່ອງທີ່ພຣະອົງຊົງກະທຳຢູ່ "ພຣະອົງຈຶ່ງສັ່ງພວກລູກສິດໃຫ້ເອົາເຮືອນ້ອຍມາຄອຍຮັບພຣະອົງ ເພື່ອບໍ່ໃຫ້ປະຊາຊົນບຽດພຣະອົງ ເພາະວ່າພຣະອົງໄດ້ຊົງໂຜດຫລາຍຄົນໃຫ້ດີພະຍາດ ແລະຜີຖ່ອຍຮ້າຍທີ່ສິງຢູ່ໃນຫລາຍຄົນ ເມື່ອໄດ້ເຫັນພຣະອົງກໍໄດ້ຫມູບລົງຂາບພຣະອົງແລ້ວຮ້ອງຂຶ້ນວ່າ "ທ່ານເປັນບຸດຂອງພຣະເຈົ້າ." ( ມາຣະໂກ 3: 10-11).

- ກຸ່ມຕິດຕາມພຣະເຢຊູກຸ່ມທີ 4

ສ່ວນກຸ່ມທີ 4 ເປັນກຸ່ມຟາຣີຊາຍທີ່ຄອຍຕິດຕາມຫ່າງໄກເພື່ອສອດແນມຊອກຫາເອົາຄວາມຜິດທຸກປະການທີ່ພຣະອົງຊົງເຮັດ ເຂົາເຮັດ ດັ່ງນີ້ເພື່ອເຂົາຈະປ້າຍຄວາມຜິດໃຫ້ແກ່ພຣະເຢຊູ ແລະນຳເຣື່ອງທັງຫມົດໄປຟ້ອງຕໍ່ສານເພື່ອໃຫ້ສານຕັດສິນຂ້າພຣະອົງເສັຽ ແລະເມື່ອພຣະອົງຖືກຂ້າແລ້ວອຳນາດແລະຊື່ສຽງທັງຫມົດກໍຈະກັບມາສູ່ພວກເຂົາເຫມືອນເດີມ. ຄົນຈຳພວກນີ້ຍັງມີເຊື້ອສາຍມາຈົນເຖິງທຸກວັນນີ້ດ້ວຍ ຄືຄົນຄອຍຖ້າເບິ່ງຄວາມຜິດຜູ້ອື່ນໃນໂບດ, ຄົນທີ່ຄອຍຈັບຄວາມຜິດຄຣູສອນ ແລະໃນທີ່ສຸດກໍຈັບຄວາມຜິດຂອງຜູ້ເທສນາອີກຊ້ຳ.

<u>ຊົງແຕ່ງຕັ້ງສາວົກ</u> (ມາຣະໂກ 3:13-19).

ເມື່ອປະຊາຊົນມາຫາພຣະອົງຢ່າງຫລວງຫລາຍພຣະອົງກໍຊົງແຕ່ງຕັ້ງສາວົກສິບສອງຄົນ ເພື່ອພຣະອົງຈະມອບສິດແລະອຳນາດໃຫ້ເຂົາ. ມີຄົນເຄີຍຖາມຂ້າພະເຈົ້າວ່າ "ການທີ່ພຣະເຢຊູມອບວຽກນີ້ໃຫ້ກັບພວກສາວົກສິບສອງຄົນນັ້ນເພາະພຣະອົງເຮັດຜູ້ດຽວບໍ່ໄດ້ແມ່ນບໍ່?" ຂ້າພະເຈົ້າຕອບເພິ່ນວ່າຖ້າຈະເບິ່ງຕາມສາຍຕາຂອງມະນຸດກໍອາຈເປັນດັ່ງນັ້ນແທ້, ແຕ່ຂ້າພະເຈົ້າເຂົ້າໃຈວ່າພຣະອົງຊົງເປັນພຣະເຈົ້າມີຣິດອຳນາດທີ່ຈະເຮັດທຸກຢ່າງໄດ້ໂດຍບໍ່ມີຂອບເຂດຈຳກັດ. ຄວາມຈິງແລ້ວພຣະອົງບໍ່ຕ້ອງການຄວາມຊ່ວຍເຫລືອຈາກສາວົກສິບສອງຄົນເລີຍ ແລະພຣະອົງກໍບໍ່ຕ້ອງການຄວາມຊ່ວຍເຫລືອຈາກພວກເຮົາເຊັ່ນດຽວກັນ ເພາະພຣະອົງມີອຳນາດທີ່ຈະເຮັດໄດ້ດັ່ງທີ່ເຮົາເຫັນພຣະອົງຊົງເລືອກ

ເອົາສາວົກຕາມພຣະທັຍຂອງພຣະອົງ ເຫດທີ່ພຣະອົງຊົງແຕ່ງຕັ້ງສາວົກກໍເພາະວ່າ ທັງສິບສອງຄົນນີ້ຕຽມພ້ອມແລ້ວທີ່ຈະມອບກາຍຖວາຍຕົວຮັບໃຊ້ພຣະອົງ ແລະກິຈການຂອງພຣະອົງ. ອີກປະການນຶ່ງທີ່ພຣະອົງສະເດັດມາໃນໂລກບໍ່ແມ່ນມາຊອກຫາກຽດຕິຍົດແລະຊື່ສຽງຂອງພຣະອົງ ແຕ່ມາເພື່ອໂຜດຄົນທັງຫລາຍໃຫ້ໄດ້ພົ້ນ ດັ່ງນັ້ນພຣະອົງຈຶ່ງແຕ່ງຕັ້ງສາວົກແລະຜູ້ຮັບໃຊ້ຈາກວັນນັ້ນຈົນເຖິງວັນນີ້ ເພາະຜູ້ທີ່ພຣະອົງຊົງແຕ່ງຕັ້ງແຕ່ລະຄົນລ້ວນແລ້ວແຕ່ຜູ້ຖວາຍຕົວຮັບໃຊ້ພຣະອົງທັງຫມົດ.

ພຣະເຢຊູເລືອກສາວົກທັງສິບສອງຄົນອອກມາຈາກຄົນຈຳນວນຫລວງຫລາຍທີ່ຕິດຕາມພຣະອົງ. ການທີ່ພຣະຊົງແຕ່ງຕັ້ງສາວົກທັງສິບສອງຄົນນີ້ບໍ່ແມ່ນຍ້ອນວ່າເຂົາເຈົ້າເປັນຄົນດີມີສິລທັມ, ບໍ່ແມ່ນຍ້ອນພວກເຂົາເຈົ້າມີຄວາມຮູ້ສລາດຫລັກແຫລມ, ບໍ່ແມ່ນຍ້ອນພວກເຂົາເຈົ້າມີຊື່ສຽງດີ, ບໍ່ແມ່ນຍ້ອນພວກເຂົາເຈົ້າມີວິຊາຫາກິນຢ່າງດີ ແຕ່ແມ່ນຍ້ອນຄົນທັງສິບສອງຄົນນີ້ພ້ອມທີ່ຈະເຊື່ອຟັງແລະປະຕິບັດຕາມຄຳສັ່ງຂອງພຣະອົງທຸກຢ່າງ ດັ່ງນັ້ນພຣະອົງຈຶ່ງຊົງແຕ່ງຕັ້ງໄວ້ໂດຍພຣະປະສົງຂອງພຣະອົງ. "ພຣະອົງຊົງຕັ້ງສິດສິບສອງຄົນໄວ້ ຈຶ່ງເອີ້ນເຂົາວ່າສາວົກໃຫ້ຢູ່ກັບພຣະອົງເພື່ອຊົງໃຊ້ໄປປະກາດ, ແລະຊົງໃຫ້ມີອຳນາດຂັບໄລ່ຜີອອກໄດ້ (ມາຣະໂກ 3: 14-15).

ເຮົາເຫັນວ່າພຣະເຢຊູໄດ້ເລືອກເອົາຄົນທຸກປະເພດເພື່ອນຳຂ່າວປະເສີດໄປທົ່ວໂລກ. ອີກປະການນຶ່ງເຮົາເຫັນວ່າພຣະເຢຊູບໍ່ຕ້ອງການຄວາມຊ່ວຍເຫລືອຈາກສາວົກ ເນື່ອງຈາກການຮູ້ພຣະຄຸນ ສາວົກຈຶ່ງຍອມມອບກາຍຖວາຍຕົວຮັບໃຊ້ພຣະອົງ.

ມີຄຳຖາມເຄີຍຖາມກັນມາວ່າ ເປັນຫຍັງພຣະອົງຈຶ່ງເລືອກສາວົກສິບສອງຄົນ, ເປັນຫຍັງຈຶ່ງບໍ່ເລືອກສິບເອັດຫລືສິບສາມຫລືເລືອກຫລາຍກວ່ານັ້ນເພາະຫລາຍຄົນທີ່ຕິດຕາມພຣະເຢຊູໃນເວລານັ້ນກໍມີຈິດໃຈຄືສາວົກທັງສິບສອງຄົນນີ້?. ເພື່ອຕອບຄຳຖາມນີ້ກະຣຸນາອ່ານ ຂໍ້ 13 " ແລ້ວພຣະອົງໄດ້ສະເດັດຂຶ້ນພູເຂົາ ແລະພໍພຣະທັຍຈະເອີ້ນຜູ້ໃດມາພຣະອົງເອີ້ນຜູ້ນັ້ນ ແລ້ວເຂົາກໍມາຫາພຣະອົງ" ໃນພຣະຄັມພີຕອນນີ້ບອກເຮົາວ່າການເອີ້ນຜູ້ໃດ, ຈຳນວນເທົ່າໃດນັ້ນເປັນນ້ຳພຣະທັຍຂອງພຣະອົງ. ນັກສາສນາສາດຜູ້ນຶ່ງໄດ້ຊີ້ແຈງໂດຍອ້າງເຖິງ ມັດທາຍ 19:28 ວ່າພຣະເຢຊູແຕ່ງຕັ້ງສາວົກທັງສິບສອງຄົນເພື່ອໃຫ້ຖືກຕ້ອງກັບນ້ຳເປີສິບສອງຕະກຸນຂອງອິສເອນທີ່ແຕກກະຈາຍກັນໃນທົ່ວໂລກ. ດັ່ງນັ້ນສາວົກທັງສິບສອງຈຶ່ງໄດ້ຮັບການຝຶກຫັດໂດຍໃຊ້ຊີວິດຕິດຕາມພຣະເຢຊູທຸກມື້ທຸກວັນເປັນເວລາສາມປີກວ່າ.

**<u>ແມ່ແລະນ້ອງຂອງພຣະເຢຊູ</u> ( 3:-31-35)**

ນາງມາຣີອາມານດາຂອງພຣະອົງພ້ອມດ້ວຍພວກນ້ອງຊາຍຂອງພຣະອົງມີຊື່ວ່າ "ຢາໂກໂບ, ໂຢເຊ, ຢູດາແລະຊີໂມນ" (ມາຣະໂກ 6:3). ໄດ້ມາຫາພຣະອົງ. ເມື່ອເຂົ້າໄປຫາພຣະອົງບໍ່ໄດ້ເນື່ອງຈາກວ່າຄົນຫນາແຫນ້ນມາຟັງຄຳສັ່ງສອນຂອງພຣະອົງ ມາຣີອາຈຶ່ງໃຊ້ຄົນໄປທູນພຣະອົງວ່າ "ເບິ່ງແມ, ມານດາແລະພວກນ້ອງຊາຍຂອງທ່ານມາຫາທ່ານຄອຍຢູ່ຂ້າງນອກ ພຣະອົງຊົງຕອບເຂົາວ່າ ໃຜເປັນມານດາແລະເປັນນ້ອງຊາຍຂອງເຮົາ" (ມາຣະໂກ 3: 32). ພຣະເຢຊູຊົງຮັກແລະໃຫ້ກຽດນາງມາຣີອາຜູ້ເປັນແມ່ຂອງພຣະອົງ ແຕ່ພຣະອົງໃຫ້ກຽດຜູ້ທີ່ຮັກແລະເຊື່ອໃນພຣະອົງເຊັ່ນກັນ. ຜູ້ທີ່ມາກ່າວຕໍ່ພຣະອົງກໍກ່າວທາງເນື້ອຫນັງ ແຕ່ພຣະອົງຊົງຕອບດ້ວຍເຣື່ອງຂອງຈິດວິນຍານດ້ວຍເຫດນີ້ພຣະອົງຈຶ່ງຊົງກ່າວວ່າ "ດ້ວຍວ່າຜູ້ໃດຈະເຮັດຕາມນ້ຳພຣະທັຍພຣະເຈົ້າ ຜູ້ນັ້ນແຫລະ, ເປັນນ້ອງຊາຍ, ນ້ອງສາວ, ແລະເປັນມານດາຂອງເຮົາ" (ມາຣະໂກ 3:35).

ຄຳເວົ້າຂອງພຣະເຢຊູຕອນນີ້ເປັນຫນ້າຊົມຊື່ນຍິນດີສຳລັບຄຣິສຕຽນແທ້ໆ ເພາະເປັນຄຳເວົ້າເລົ້າໂລມໃຈຄຣິສຕຽນຜູ້ທີ່ເຮັດຕາມນ້ຳພຣະທັຍພຣະເຈົ້າທຸກຄົນຄືທຸກຄົນໄດ້ກາຍເປັນຄອບຄົວຂອງອົງພຣະຜູ້ເປັນເຈົ້າ, ແລະຄຳ

ເວົ້າຄຳດຽວກັນນີ້ ຫາກເຮົາຟັງບໍ່ດີເຮົາກໍຈະເຂົ້າໃຈຜິດວ່າພຣະເຢຊູບໍ່ໃຫ້ກຽດມານດາຂອງພຣະອົງ ທັງນີ້ກໍເພາະວ່າ ເຮົາທັງເປັນຄົນທັມດາສາມັນມີຄວາມຄິດແລະສະຕິປັນຍາແບບເນື້ອໜັງ ສ່ວນພຣະເຢຊູເປັນພຣະບຸດຂອງພຣະເຈົ້າແລະກຳລັງເຮັດພຣະຣາຊະກິດຂອງພຣະບິດາ ພຣະອົງກໍກ່າວເຣື່ອງຂອງຝ່າຍຈິດວິນຍານ.

<u>ຄຳຖາມ:</u>

1. ຄົນສີ່ປະເພດທີ່ຕິດຕາມພຣະເຢຊູມີປະເພດໃດແດ່?

2. ຄົນແຕ່ລະປະເພດມີຄວາມແຕກຕ່າງກັນຢ່າງໃດ?

3. ຄົນສີ່ປະເພດນີ້ທ່ານຄິດວ່າທ່ານເປັນຄົນປະເພດໃດ? ເປັນຫຍັງຈຶ່ງວ່າແນວນັ້ນ?

4. ດ້ວຍເຫດໃດພຣະອົງຈຶ່ງເລືອກສາວົກສິບສອງຄົນ?

5. ພຣະອົງຊົງເລືອກສິບສອງຄົນມາເຮັດຫຍັງ?

6. ດ້ວຍເຫດໃດພຣະເຢຊູຈຶ່ງກ່າວວ່າ " ດ້ວຍວ່າຜູ້ໃດຈະເຮັດຕາມນໍ້າພຣະທັຍພຣະເຈົ້າ ຜູ້ນັ້ນແຫລະ, ເປັນນ້ອງຊາຍ, ນ້ອງສາວ, ແລະເປັນມານດາຂອງເຮົາ "

7. ເຮົາຈະເຮັດແນວໃດຈຶ່ງຈະເຮັດຕາມນໍ້າພຣະທັຍພຣະເຈົ້າໄດ້ ນັບແຕ່ວັນນີ້ເປັນຕົ້ນໄປ?

# ບົດຮຽນທີ 4
# ຊົງສອນເປັນຄຳອຸປມາ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມາຣະໂກ 4:1-20
ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: ມາຣະໂກ 4:1-34
ຈຸດສຳຄັນຂອງບົດຮຽນນີ້: ພຣະເຢຊູຊົງສອນເປັນຄຳອຸປະມາເຣື່ອງຊີວິດນິຣັນ.
ຄຳຖາມເພື່ອການສຳຣວດ ເຮົາຮູ້ໄດ້ແນວໃດວ່າພຣະເຢຊູມາຈາກພຣະເຈົ້າ.
ຈຸດປະສົງຂອງບົດຮຽນນີ້: ບອກໃຫ້ຮູ້ວ່າພຣະເຈົ້າມີພຣະປະສົງໃຫ້ທຸກຄົນມີຊີວິດໃນແຜ່ນດິນຂອງພຣະອົງ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ**

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.
- ປັບປຸງຄອບຄົວຄຣິສຕຽນໃຫ້ເຂັ້ມແຂງ.

ຜູ້ຮັບໃຊ້ພຣະເຈົ້າແຕ່ລະຄົນມີຫນ້າທີ່ປ່າວປະກາດເຣື່ອງຂອງພຣະເຈົ້າເທົ່ານັ້ນ, ຜູ້ທີ່ຈະເຊື່ອຫລືບໍ່ເຊື່ອບໍ່ແມ່ນຫນ້າທີ່ຂອງຜູ້ປະກາດແຕ່ລະຄົນ ເຖິງແມ້ວ່າຜູ້ທີ່ເຊື່ອແລ້ວຈະເຊື່ອນ້ອຍຫລືເຊື່ອຫລາຍກໍບໍ່ແມ່ນຫນ້າທີ່ຂອງຜູ້ຮັບໃຊ້ອີກ ແຕ່ເປັນຫນ້າທີ່ຂອງພຣະວິນຍານບໍຣິສຸດກັບຜູ້ທີ່ເຊື່ອເອງ ຫາກຜູ້ເຊື່ອຍອມມອບກາຍຖວາຍຕົວຕໍ່ພຣະເຈົ້າແລ້ວພຣະອົງຈະເປັນຜູ້ອວຍພຣະພອນແກ່ຜູ້ນັ້ນເອງ. ດັ່ງນັ້ນຜູ້ຮັບໃຊ້ພຣະເຈົ້າຢ່ານ້ອຍໃຈເມື່ອບໍ່ສາມາດນຳຄົນມາໂບດ ຫລືຄົນທີ່ມາໂບດແລ້ວບໍ່ຢູ່ ຫລືສອນທຸກໆວັນອາທິດແຕ່ຮູ້ສຶກວ່າບໍ່ໃຫຽ ຈົ່ງເຂົ້າໃຈເສັຽວ່າຫນ້າທີ່ຂອງທ່ານຄືຕັ້ງໃຈຕຽມການສອນໃຫ້ດີທີ່ສຸດໂດຍການຊົງນຳຂອງພຣະວິນຍານບໍຣິສຸດເທົ່ານັ້ນກໍຫມົດຫນ້າທີ່ຂອງທ່ານ. ການໃຊ້ຄຳອຸປະມາຂອງພຣະເຢຊູນັ້ນກໍເພື່ອອະທິບາຍໃຫ້ຜູ້ຟັງໄດ້ຄຶດແລະພິຈາຣະນາໃຫ້ເຫັນຮູບພາບຕົວຈິງຄືເຣື່ອງແຜ່ນດິນສວັນ ດັ່ງນັ້ນເຮົາທັງຫລາຍຄວນຣະມັດຣະວັງຢ່າພະຍາຍາມແປໄປຢ່າງອື່ນທີ່ເກີນກວ່າພຣະເຢຊູໄດ້ສອນ.

## ພຣະເຢຊູເລົ່າເຣື່ອງ (4:1-9)

ເມື່ອປະຊົນຫລວງຫລາຍມາຫາພຣະອົງເພື່ອຟັງຄຳສັ່ງສອນ ພຣະອົງຈຶ່ງຫາທາງທີ່ຈະໃຫ້ປະຊາຊົນໄດ້ຍິນແລະໄດ້ເຫັນທົ່ວເຖິງກັນ ພຣະອົງຈຶ່ງສະເດັດເຂົ້າໃນເຮືອແລ້ວອອກໄປນ້ອຍນຶ່ງ ດ້ວຍວິທີນີ້ປະຊົນໄດ້ຍິນແລະໄດ້ເຫັນພຣະອົງຢ່າງຊັດເຈນ. ພຣະອົງຕັ້ງຕົ້ນກ່າວກັບປະຊາຊົນເປັນຄຳອຸປະມາເຣື່ອງແຜ່ນດິນສວັນເປັນດັ່ງນີ້:
"ມີຄົນນຶ່ງອອກໄປຫວ່ານ ພືດ, ແລະເມື່ອກຳລັງຫວ່ານຢູ່ນັ້ນ ລາງເມັດກໍຕົກໃສ່ແຄມທາງແລ້ວນົກກໍມາກິນເສັຽ. ລາງເມັດກໍຕົກໃສ່ບ່ອນຫີນ ຫລາຍດິນຫນ້ອຍຈຶ່ງງອກຂຶ້ນໂລດເພາະດິນບໍ່ເລິກ. ເມື່ອຕາເວັນອອກມາກໍແຫ້ມຈຶ່ງຫ່ຽວແຫ້ງໄປເພາະບໍ່ມີຮາກ ລາງເມັດກໍຕົກກາງພຸ່ມຫນາມ ຫນາມຈຶ່ງປົ່ງຂຶ້ນຫຸ້ມຮັດເສັຽ ຈຶ່ງບໍ່ເກີດຜົນ ລາງເມັດກໍຕົກໃສ່

ດິນ ດີ  ແລ້ວງອກງາມຈະ ເຣີ່ມຂຶ້ນ ເກີດຜົນສາມສິບຕໍ່, ຫົກສິບຕໍ່, ແລະຮ້ອຍຕໍ່ ແລ້ວພຣະອົງກ່າວແກ່ເຂົາວ່າ ຜູ້ໃດມີຫູຢາກຟັງ ຈົ່ງຟັງເອົາ (ມາຣະໂກ 4:3-9). ເຣື່ອງນີ້ຈຶ່ງເປັນເຣື່ອງທີ່ເຂົ້າໃຈຍາກສຳລັບຜູ້ບໍ່ເຊື່ອໃນພຣະອົງ. ນັກສາສນາສາດແປມາຈາກນັດທາຍດັ່ງນີ້:

- ຜູ້ຫວ່ານ ໄດ້ແກ່ພຣະເຢຊູເອງ (ດຽວນີ້ແມ່ນຜູ້ຮັບໃຊ້ພຣະເຈົ້າ).
- ເມັດພືດ ໄດ້ແກ່ພຣະຄຳ.
- ນົກມາກິນ ໄດ້ແກ່ມານຊາຕານຍາດເອົາໄປ (ຫລືມານປິດຫູປິດຕາບໍ່ໃຫ້ຮູ້ໃຫ້ເຫັນ).
- ດິນ ໄດ້ແກ່ຈິດໃຈມະນຸດທັມດາ.
- ແດດ ໄດ້ແກ່ຄວາມທຸກ ຫລືອຸປສັກຕ່າງໆ.
- ພຸ່ມໜາມ ໄດ້ແກ່ສັຕຣູແຂງແຮງກວ່າຄວາມເຊື່ອ.
- ດິນດີໄດ້ແກ່ ຈິດໃຈຍອມຮັບເອົາພຣະທັມຄຳສອນ.
- ຜູ້ໃດມີຫູຢາກຟັງຈົ່ງຟັງເອົາ. ແປວ່າຟັງດ້ວຍຫູ ພິຈາຣະນາດ້ວຍຄວາມຄິດ, ແລະຕຶກຕອງດ້ວຍໃຈສຳນຶກ, ເຮັດດັ່ງນີ້ຈຶ່ງຈະເຂົ້າໃຈຄວາມໝາຍຂອງພຣະເຢຊູ ແລະພຣະທັມຈະເຂົ້າໄປໃນໃຈຂອງຜູ້ຢາກຟັງເທົ່ານັ້ນ.

ພຣະອົງໃຫ້ຄຳອຸປມາວ່າໃຈເຮົາເປັນດິນເພື່ອພຣະເຈົ້າຈະໄດ້ຫວ່ານພຣະທັມຂອງພຣະອົງໃສ່ສ່ວນເມັດພຣະທັມນັ້ນ ຈະຂຶ້ນຫລືບໍ່ນັ້ນຂຶ້ນກັບເຮົາໄດ້ຕຽມດິນແນວໃດ.    ຂ້າພະເຈົ້າບໍ່ແມ່ນຄົນເຮັດສວນໃດໆແຕ່ພໍຈະເຂົ້າໃຈຈາກການສັງເກດເຫັນພີ່ນ້ອງໃນໂບດເຮັດສວນຜັກຫລັງບ້ານ. ຄືກ່ອນອື່ນລາວຕ້ອງເສັຽຫຍ້າ ຫລືຕັດຕົ້ນໄມ້ທີ່ປົກຄຸມອອກກ່ອນ, ຕໍ່ມາລາວກໍຂຸດດິນປີ້ນຈາກດິນດ້ານລຸ່ມຂຶ້ນມາເທິງ, ຕໍ່ມາລາວກໍທຸບຕີດິນນັ້ນໃຫ້ມຸ່ນລະອຽດພ້ອມທັງເກັບທຸກສິ່ງທີ່ ບໍ່ຕ້ອງການອອກໃຫ້ໝົດ ແລະໃນທີ່ສຸດດິນນັ້ນກໍພ້ອມທີ່ຈະຮັບເອົາເມັດພືດ ຫລືແນວຜັກທີ່ກ້າແລ້ວທຸກເວລາ.

ຄຣິສຕຽນເຮົາມັກຈະເວົ້າວ່າ ຈິດໃຈຂອງຂ້ອຍປຽບເໝືອນດິນດີ ແຕ່ດິນດີທຸກຕອນກໍຈຳຕ້ອງຂຸດກົ່ນເໝືອນຄົນເຮັດສວນຜູ້ນີ້ເສັຽກ່ອນບໍ່ດັ່ງນັ້ນດິນຫລືຈິດໃຈດີກໍຈະບໍ່ພ້ອມທີ່ຈະຮັບເມັດພືດໄດ້ ເຖິງແມ່ນຮັບໄດ້ກໍຈະຢັ່ງຮາກບໍ່ເລິກ, ເມື່ອແດດຮ້ອນເຜົາກໍຈະແຫ້ງແຫ່ວຕາຍເພາະດິນນັ້ນຮັບນ້ຳບໍ່ໄດ້ຫລາຍຈຶ່ງລ້ຽງເມັດພືດບໍ່ໄດ້.  ດັ່ງນັ້ນທຸກຄັ້ງທີ່ເຮົາມານັ່ງໃນໂບດຈົ່ງຕຽມໃຈໃຫ້ພ້ອມແລ້ວເມັດພຣະທັມຂອງພຣະເຈົ້າຈະເຂົ້າມາໃນໃຈເຮົາແລ້ວຈເຣີນງອກງາມຂຶ້ນຈົນເບິ່ງເຫັນໃນຊີວິດປະຈຳວັນຂອງເຮົາ.

**ຈຸດປະສົງຄຳອຸປມາ** ((4:10-12)

ຫລັງຈາກພຣະເຢຊູຊົງຈົບການສິດສອນວັນນັ້ນດ້ວຍຄຳອຸປມາແລ້ວຜູ້ຄົນທັງຫລາຍກໍພາກັນກັບບ້ານ  ສ່ວນສາວົກແລະຄົນທີ່ຍັງຄ້າງຢູ່ໄດ້ພາກັນມາຖາມພຣະອົງໃນຄຳອຸປະມາຂອງພຣະອົງ.  "ເມື່ອຫວ້າງຄົນແລ້ວພວກທີ່ຕິດຕາມພຣະອົງພ້ອມດ້ວຍສາວົກສິບສອງຄົນໄດ້ທູນຖາມພຣະອົງເຣື່ອງຄຳອຸປະມາ ພຣະອົງຈຶ່ງຊົງກ່າວແກ່ເຂົາວ່າ ຂໍ້ຄວາມລັບເລິກເຣື່ອງຣາຊອານາຈັກຂອງພຣະເຈົ້າ   ຊົງປະທານໃຫ້ທ່ານທັງຫລາຍໄດ້ຮູ້ ແຕ່ຝ່າຍຄົນນອກນັ້ນບັນດາຂໍ້ຄວາມເລົ່ານີ້ຈະແຈ້ງໃຫ້ຮູ້ດ້ວຍຄຳອຸປະມາທັງໝົດເພື່ອ ເຂົາເບິ່ງແລ້ວເບິ່ງອີກ ແຕ່ບໍ່ເຫັນ ແລະຟັງແລ້ວຟັງອີກ ແຕ່ບໍ່ເຂົ້າໃຈ ຢ້ານວ່າເຂົາຈະຫັນກັບມາຫາພຣະເຈົ້າແລະຈະຮັບການຊົງອາພັຍ" (ມາຣະໂກ 4:10-12).

ເຮົາທັງຫລາຍເປັນຜູ້ຮັບໃຊ້ແລະເປັນສາວົກຂອງພຣະອົງແທ້ ແຕ່ມີຫລາຍຢ່າງເຮົາຍັງບໍ່ທັນເຂົ້າໃຈ  ສະນັ້ນ

ຈົ່ງຣຽນຮູ້ແບບສາວົກລຸ້ນແຣກຄືພວກເຂົາເຈົ້າລໍຖ້າຈົນຄົນອື່ນອອກໄປສາກ່ອນພວກສາວົກຈຶ່ງຖາມພຣະອົງ. ພຣະເຢຊູໄດ້ບອກສາວົກຂອງພຣະອົງວ່າ "ຂໍ້ຄວາມລັບເລິກເຣື່ອງຣາຊອານາຈັກຂອງພຣະເຈົ້າ ຊົງໂຜດປະທານໃຫ້ທ່ານທັງຫລາຍໄດ້ຮູ້" ຊຶ່ງພຣະອົງໝາຍຄວາມວ່າຜູ້ທີ່ເຊື່ອໃນພຣະອົງຈະເຂົ້າໃຈເພາະພຣະອົງຊົງສອນດ້ວຍຄວາມເປີດເຜີຍສໍາລັບຜູ້ບໍ່ເຊື່ອພຣະອົງຊົງສອນເປັນຄໍາອຸປະມາ.

ເຮົາທັງຫລາຍບໍ່ສາມາດເຮັດໃຫ້ຄົນທັງຫລາຍເຂົ້າໃຈໄດ້ ເພາະຄວາມເຂົ້າໃຈນັ້ນຜູ້ຟັງບໍ່ຍອມເຂົ້າໃຈ. ຄົນທີ່ຟັງແລ້ວເຂົ້າໃຈນັ້ນຄົນນັ້ນແມ່ນຄົນພ້ອມທີ່ຈະເຂົ້າໃຈ. <u>ຕົວຢ່າງ:</u> ເວລາເຮົາຍັງເປັນເດັກນ້ອຍເຄີຍໄດ້ຍິນ ຜູ້ເຖົ້າຜູ້ແກ່ເວົ້າວ່າເຈັບຫລັງ, ເຈັບແອວເຮົາບໍ່ຄ່ອຍ ເຂົ້າໃຈ.ເມື່ອເຮົາກາຍເປັນຄົນແກ່ແລ້ວຄືທຸກວັນນີ້ເຮົາຈຶ່ງເຂົ້າໃຈວ່າເຈັບຫລັງເຈັບແອວເປັນແນວໃດ. ເຫດສະນັ້ນການທີ່ຈະເຂົ້າໃຈໃນສິ່ງໃດສິ່ງນຶ່ງນັ້ນຜູ້ຟັງຈໍາຕ້ອງພ້ອມທີ່ຈະເຂົ້າໃຈ ແລະເປັນຜູ້ຍອມຮັບສະພາບຂອງຄວາມເປັນຈິງເສັຽກ່ອນແລະຫາກຍັງບໍ່ເຂົ້າໃຈຈໍາເປັນຕ້ອງໃຊ້ເວລາເປັນເດືອນເປັນປີຈຶ່ງຈະເຂົ້າ ໃຈໄດ້. ດັ່ງນັ້ນຢ່ານ້ອຍໃຈເມື່ອທ່ານເບິ່ງຍັງບໍ່ເຫັນ, ຟັງແລ້ວຍັງບໍ່ເຂົ້າໃຈ ຫາກທ່ານຈິງໃຈຢາກເຂົ້າໃຈ ເຣື່ອງຂອງພຣະອົງເຈົ້າຢ່າງແທ້ຈິງມີທາງດຽວຄືຍອມຈໍານົນໂດຍການມອບກາຍຖວາຍຕົວຕໍ່ພຣະອົງແລ້ວທ່ານຈະເຂົ້າໃຈດັ່ງພຣະອົງຊົງສັນຍາວ່າ " ຂໍ້ຄວາມ ລັບເລິກເຣື່ອງຣາຊອານາຈັກຂອງພຣະເຈົ້າ ຊົງໂຜດປະທານໃຫ້ທ່ານທັງຫລາຍໄດ້ຮູ້".

ຂ້າພະເຈົ້າມີເພື່ອນນັກຮຽນຜູ້ນຶ່ງສມັຍຮຽນຢູ່ໂຮງຮຽນລີເຊດ້ວຍກັນເພື່ອນຜູ້ນີ້ຮຽນເກ່ງແລະສລາດກວ່າຂ້າພະເຈົ້າຫລາຍ, ເພື່ອນຄົນນີ້ຮຽນຈົບສ່ວນຂ້າພະເຈົ້າຮຽນບໍ່ເກ່ງໂຮງຮຽນຈຶ່ງໃຫ້ຮຽນຕໍ່ໄປ. ຈາກນັ້ນມາຂ້າພະເຈົ້າແລະເພື່ອນຜູ້ນີ້ກໍຂາດການຕິດຕໍ່ພົວພັນກັນ, ແຕ່ພໍຮູ້ຂ່າວວ່າເພື່ອນຜູ້ນີ້ກາຍເປັນຄຣູສອນແລະມີຖານະດີອີກດ້ວຍ. ສາມສິບປີກວ່າຜ່ານໄປສິ່ງທີ່ບໍ່ຄາດຝັນກໍມີມາ. ໃນຂະນະທີ່ຂ້າພະເຈົ້າກໍາລັງສອນພຣະຄັມພີໃນບ້ານຫລັງນຶ່ງກໍເຫັນເພື່ອນເກົ່າຜູ້ນີ້ຍ່າງເຂົ້າມາໃນບ້ານພໍທັງສອງເຫັນໜ້າກັນກໍຈໍາກັນໄດ້. ເມື່ອສິ້ນສຸດການສອນແລ້ວຂ້າພະເຈົ້າແລະເພື່ອນຈຶ່ງ ມາຖາມຂ່າວຄາວກັນດ້ວຍຄວາມຍິນດີທີ່ໄດ້ເຫັນກັນອີກໃນຕ່າງປະເທດ. ຂ້າພະເຈົ້າບໍ່ເຄີຍລືມຄໍາຖາມຂອງລາວທີ່ ຖາມຂ້າພະເຈົ້າວ່າ " ເຈົ້າສອນເຣື່ອງຫຍັງ ຂ້ອຍຄືຟັງບໍ່ເຂົ້າໃຈ". ຂ້າພະເຈົ້າກໍບອກເພິ່ນຕາມຄວາມຈິງວ່າເປັນພຣະທັມຂອງພຣະເຈົ້າ. ຕົວຢ່າງທີ່ຂ້າພະເຈົ້າກໍາລັງເລົ່ານີ້ແມ່ນຄ້າຍຄືສິ່ງພຣະເຢຊູກໍາລັງເວົ້າວ່າ " ເຂົາເບິ່ງແລ້ວເບິ່ງອີກ ແຕ່ບໍ່ເຫັນ ແລະຟັງແລ້ວຟັງອີກ ແຕ່ບໍ່ເຂົ້າໃຈ" ເພາະວ່າຄວາມຮູ້,ຄວາມສລາດຂອງມະນຸດນັ້ນຈະທຽບ ກັບພຣະທັມຂອງພຣະເຈົ້າບໍ່ໄດ້ເປັນເດັດຂາດ.ຂ້າພະເຈົ້າຮຽນໜັງສືບໍ່ເກ່ງຄືລາວແຕ່ພຣະເຈົ້າໃຫ້ຂ້າພະເຈົ້າເຂົ້າໃຈເຣື່ອງຂອງພຣະອົງ.

**<u>ຊົງອະທິບາຍໃຫ້ສາວົກຟັງ</u>** (4:13-20)

ພຣະເຢຊູຊົງອະທິບາຍໃຫ້ສາວົກໄດ້ເຂົ້າໃຈໃນພຣະຄັມພີ ແລະຂ້າພະເຈົ້າຢາກຂຍາຍຄໍາເວົ້າຂອງພຣະເຢຊູໃຫ້ທ່ານເຂົ້າໃຈເພີ້ມດັ່ງນີ້:

- ຜູ້ຫວ່ານ ໄດ້ແກ່ພຣະເຢຊູ (ໃນສມັຍນັ້ນ ສ່ວນສມັຍນີ້ແມ່ນທ່ານແລະຂ້າພະເຈົ້າ).
- ພຣະທັມ ໄດ້ແກ່ຄໍາເທສນາສັ່ງສອນຂອງພຣະເຈົ້າ.
- ຊາຕານຍາດ ໄດ້ແກ່ຜູ້ທີ່ນັ່ງຟັງແຕ່ບໍ່ໄດ້ປະຕິບັດຕາມ. ຫລືໃຈເລື່ອນລອຍຂນະທີ່ຟັງ ໝາຍຄວາມວ່າ ຈິດໃຈທີ່ບໍ່ຍອມຮັບ.
- ບ່ອນຫີນຫລາຍ ໄດ້ແກ່ຜູ້ຟັງທີ່ຂາດຄວາມອົດທົນຕໍ່ເຫດການຕ່າງໆທີ່ເກີດຂຶ້ນ.

- ກາງພຸ່ມຫນາມ ໄດ້ແກ່ຜູ້ຟັງແຕ່ບໍ່ຍອມປະລະວັດຖຸສິ່ງຂອງແລະຊັບສົມບັດຝ່າຍໂລກ.
- ດິນດີ ໄດ້ແກ່ຜູ້ຕຽມພ້ອມຖ່ອມໃຈຮັບຟັງແລະເອົາໄປໃຊ້ໃນຊີວິດຂອງຕົນ.

## <u>ສິ່ງທີ່ເຮົາຄວນຮຽນຮູ້ວັນນີ້</u>

ເຣື່ອງຄໍາອຸປະມາຂອງພຣະເຢຊູຊົງສອນເຮົາເຖິງການປະກາດຂ່າວປະເສີດຂອງພຣະອົງ, ບາງຄົນໃນພວກເຮົາໄດ້ຮັບຂອງພຣະຣາຊທານໃນການປ່າວປະກາດ ຫລືເປັນອາຈານ, ຫລືຄຣູສອນຕາມທີ່ພຣະອົງຊົງພຣະຣາຊທານໃຫ້ (ເອເຟໂຊ 4:11)ຂອງພຣະຣາຊທານທີ່ພວກເຮົາມີອາດແຕກຕ່າງກັນແຕ່ມີຈຸດປະສົງດຽວຄືປະກາດເຣື່ອງຣາຊອານາຈັກຂອງພຣະເຈົ້າໃຫ້ຜູ້ຟັງໄດ້ເຊື່ອແລະກັບໃຈຫັນຫນີຈາກທາງຊົ່ວແລະເດີນຕາມທາງແຫ່ງພຣະເຢຊູຄຣິດ. ແຕ່ຄໍາຖາມມີຢູ່ວ່າ "ຄົນຈະເຊື່ອໃນພຣະອົງໄດ້ຢ່າງໃດ ແລະເມື່ອບໍ່ມີຜູ້ໃດປະກາດ " (ໂຣມ 10:14). ເຫດສັນນັ້ນເຮົາທັງຫລາຍຜູ້ເປັນຂ້ອຍໃຊ້ທີ່ເຊື່ອຟັງຈົ່ງປະກາດໄປເລື້ອຍໆ ເຣື່ອງຄົນຈະເຊື່ອຫລືບໍ່ເຊື່ອນັ້ນບໍ່ແມ່ນຫນ້າທີ່ຂອງເຮົາ ແຕ່ເປັນຫນ້າທີ່ຂອງພຣະວິນຍານບໍຣິສຸດພຸ້ນ. ເຮົາທັງຫລາຍມີຫນ້າທີ່ປະກາດຈົ່ງປະກາດ.

<u>ຄໍາຖາມ:</u>

1. ເປັນຫຍັງພຣະເຢຊູຈຶ່ງສອນເປັນຄໍາອຸປະມາ?

2. ໃນຖານະທີ່ເຮົາເປັນຜູ້ປະກາດພຣະທັມ, ຄໍາອຸປະມາໄດ້ສອນເຮົາຫຍັງແດ່?

3. ເຮົາຈະປະກາດພຣະທັມພຣະເຈົ້າໄດ້ຢ່າງໃດໃນເມື່ອສະພາບການແລະຈິດໃຈຂອງມະນຸດເປັນຄືທຸກວັນນີ້?.

4. ຍາມໃດເຮົາຈະເລີ້ມປະກາດເຣື່ອງຂອງພຣະອົງ?

5. ຫາກເຮົາບໍ່ປະກາດໃຜຈະປະກາດ.

# ບົດຮຽນທີ 5

## ພະລັງອຳນາດຂອງພຣະເຢຊູ

---

**ຂໍ້ພຣະຄຳພີສຳລັບບົດຮຽນ:** ມາຣະໂກ 4:35-41; 5:21-43

**ຂໍ້ພຣະຄຳພີສຳລັບເບື້ອງຫລັງ:** ມາຣະໂກ 4:35-5:43

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູມີພະລັງອຳນາດເໜືອກວ່າພາຍຸ, ພຍາດໂຣຄາ ແລະຄວາມຕາຍ ຈຶ່ງຢັ້ງຢືນໃຫ້ພວກເຮົາຮູ້ວ່າພຣະອົງສາມາດຊ່ອຍພວກເຮົາໄດ້ໃນຄາວລຳບາກ.

**ຄຳຖາມເພື່ອການສຳຫລວດ:** ພຣະເຢຊູສາມາດຊ່ອຍພວກເຮົາຫຍັງໄດ້ແດ່ໃນຄາວລຳບາກ?

**ຈຸດປະສົງຂອງບົດຮຽນນີ້:** ຈະຊ່ອຍໃຫ້ຂ້າພະເຈົ້າມີປະສົບການກັບຄວາມຮັກແລະເຫັນວ່າພຣະເຢຊູເປັນຫ່ວງຂ້າພະເຈົ້າໃນຄາວລຳບາກ.

## ບົດຮຽນ

### ຄຳນຳ

ພຣະເຢຊູຊົງຫ່ວງໃຍມະນຸດແທ້ບໍ່? ພະລັງອຳນາດຂອງພຣະເຢຊູເໜືອກວ່າພັຍທັມມະຊາດ, ພຍາດໂຣຄາ, ແລະຄວາມຕາຍ ຈຶ່ງໄດ້ນຳຄວາມໝັ້ນໃຈມາສູ່ພວກເຮົາວ່າ ພຣະອົງສາມາດຊ່ອຍພວກເຮົາໄດ້ໃນຄາວລຳບາກ. ພຣະເຢຊູສາມາດເຮັດຫຍັງໄດ້ແດ່ໃນເຫດການດັ່ງກ່າວນີ້? ຜູ້ຍິງຄຣິສຕຽນທີ່ມີຄວາມໄວ້ວາງໃຈເຊື່ອໃນພຣະເຈົ້າຜູ້ນຶ່ງເຫັນຜົວຂອງລາວຕາຍຕໍ່ໜ້າຕໍ່ຕາຂອງລາວໃນທີ່ເກີດອຸບັດຕິເຫດ ແລະຕົວລາວເອງກໍໄດ້ຮັບບາດເຈັບ. ລາວໄດ້ຖາມວ່າ, "ເປັນຫຍັງພຣະເຈົ້າຈຶ່ງເອົາຜົວຂ້ານ້ອຍໄປ ທັງໆທີ່ລາວສາມາດເຮັດຫລາຍສິ່ງຫລາຍຢ່າງເພື່ອພຣະເຈົ້າ ແລະຄົນອື່ນໆໄດ້?"

ສຸຂພາບທີ່ເສື່ອມໂຊມ, ປະສາດທີ່ກະວົນກະວາຍ, ແລະຈິດວິນຍານທີ່ອ່ອນເພັຽສິ່ງເຫລົ່ານີ້ເກີດຂຶ້ນກັບຊີວິດແທ້ຂອງທຸກໆຄົນ. ແຕ່ໃນຂນະດຽວກັນ ຊີວິດນັ້ນສາມາດສຳຜັດກັບພະລັງອຳນາດອັນແທ້ຈິງໃນຂນະທີ່ຂາດກຳລັງ. ກຳລັງໄດ້ມາດ້ວຍຄວາມໄວ້ວາງໃຈເຊື່ອໃນພະລັງອຳນາດຂອງອົງພຣະຜູ້ເປັນເຈົ້າ. ດ້ວຍຄວາມໄວ້ວາງໃຈເຊື່ອໃນພຣະຄຣິດ, ສິ່ງທີ່ສູນເສັຽໄປນັ້ນກໍຈະໄດ້ຄືນມາເປັນກຳໄລ.

### ພະລັງອຳນາດເໜືອພັຍທັມມະຊາດ (4:35-41)

ຫລັງຈາກພຣະເຢຊູໄດ້ສັ່ງສອນເປັນເວລາດົນນານ, ພຣະອົງໄດ້ເອີ້ນໃຫ້ພວກສາວົກນຳພຣະອົງຂ້າມຟາກແມ່ນໍ້າໄປ. ພວກເຂົາມີຄວາມຊຳນິຊຳນານກັບທະເລທັງນັ້ນ. ໃນຂນະນັ້ນ ເປັນເວລາຕອນແລງໃກ້ຈະຄໍ່າພຣະອົງກໍເມື່ອຍຈາກການສັ່ງສອນຈຶ່ງໄດ້ວາງຫົວລົງນອນຢູ່ທ້າຍເຮືອ ເປັນໂອກາດທີ່ພຣະອົງຈະໄດ້ພັກຜ່ອນ. ມາຣະໂກໄດ້ບັນທຶກໄວ້ວ່າມີເຮືອຫລາຍລຳໄປພ້ອມ (4:37).

"ແລ້ວລົມພາຍຸໃຫຍ່ຮຸນແຮງກໍເກີດຂຶ້ນ ແລະຟອງນໍ້າໄດ້ຊັດເຂົ້າຈົນເຮືອຈວນຈະເຕັມ" (4:37). ປົກກະຕິແລ້ວພາຍຸເກີດຂຶ້ນຢູ່ສເມີໃນຂົງເຂດນີ້. ເມື່ອພື້ນທີ່ຂອງທະເລນີ້ມີຣະດັບພື້ນທີ່ຕໍ່າ 682 ຟີດ (204.6 ແມດ) ກວ່າຣະດັບຂອງທະເລ ( 682 feet below sea level) ແລະມີພູຢູ່ອ້ອມແອ້ມຈຶ່ງເປັນສ່ອງທາງທີ່ແຄບໃຫ້ລົມພັດໄປມາໃນບໍຣິເວັນນັ້ນ. ອາກາດຮ້ອນທີ່ຂຶ້ນຈາກໜ້ານໍ້າໄດ້ດຶງດູດເອົາຄວາມເຢັນຈາກເບື້ອງເທິງແລ້ວກໍໃຫ້ເກີດມໍຣະສຸມໃນສ່ອງທາງທີ່ແຄບຈຶ່ງເກີດມີພາຍຸຂຶ້ນ. ແຕ່ວ່າພາຍຸທີ່ເກີດຂຶ້ນໃນເຫດການນີ້ເປັນພາຍຸທີ່ແຮງຫລາຍຈົນວ່າພວກສາວົກນັ້ນຕົກໃຈແລະບໍ່ສາມາດຈະຄວບຄຸມສະຖານະການໄດ້. ມາຣະໂກຢາກໃຫ້ພວກເຮົາຮູ້ວ່າເຫດການນັ້ນຮ້າຍແຮງຫລາຍຈຶ່ງໄດ້ບັນລະຍາຍເຖິງເຫດການວ່າ, "ຟອງນໍ້າໄດ້ຊັດເຂົ້າຈົນເຮືອຈວນຈະເຕັມ" (4:37). ນໍ້າຟອງຊັດເຂົ້າເຮືອຢູ່ບໍ່ເຊົາ.

ໃຫ້ພວກເຮົາມາອາດມະໂນພາບເບິ່ງວ່າໃນຂນະນັ້ນພວກສາວົກຂອງພຣະອົງກຳລັງພາຍເຮືອຕ້ານກັບພາຍຸຝົນ ບາງຄົນຟ້າວຕັກນ້ຳອອກຈາກເຮືອ ຜູ້ຖືງທ້າຍເຮືອກໍເຮັດສຸດຄວາມສາມາດຂອງຕົນ. ຄວາມຢ້ານ ທັງຕົກໃຈ ແລະຄວາມເຈັບປວດທັງມືແລະກ້າມເນື້ອຂອງພວກເຂົາເຈົ້າ. ເຫດການນັ້ນຮ້າຍແຮງຂື້ນກວ່າເກົ່າ ແຕ່ກຳລັງຂອງພວກເຂົາຈະເອົາຊະນະກັບພາຍຸນັ້ນບໍ່ໄດ້.

ໃນຂນະນັ້ນ "ພຣະອົງຊົງບັນທົມຫມູນຫມອນຫລັບຢູ່ທ້າຍເຮືອ" (4:38). ພຣະເຢຊູນອນຫລັບຢູ່ໃນຂນະທີ່ພາຍຸລົມ ຝົນ ແລະນ້ຳຟອງຊັດເຮືອໄປມາ. ສຽງຮ້ອງຂອງພວກສາວົກຮ້ອງໂຮໃສ່ກັນດ້ວຍຄວາມຢ້ານແລະຕົກໃຈ. ທ້າຍເຮືອນັ້ນເປັນບ່ອນທີ່ຫນາແຫນ້ນກວ່າທຸກໆບ່ອນຂອງພາກສ່ວນໃນຕົວເຮືອ ແລະເປັນບ່ອນຂອງນາຍທ້າຍທີ່ບັງຄັບທິດທາງການເດີນຂອງເຮືອ. ໃຫ້ພວກເຮົາມາອາດມະໂນພາບອີກວ່າພຣະອົງຄົງຈະເມື່ອຍຫລາຍຈົນນອນຫລັບໄປໃນທ້າມກາງຄວາມສັບສົນວຸ່ນວາຍອັນນີ້ ແລະຈຶ່ງເປັນຂໍ້ສນັບສນູນວ່າພຣະອົງນັ້ນຊົງເປັນມະນຸດແລະຊົງເປັນພຣະບຸດຂອງພຣະເຈົ້າ. ພວກສາວົກບໍ່ສາມາດຈະເອົາຊະນະຄວາມແຮງຂອງພາຍຸໄດ້ ໃນທີ່ສຸດພວກເຂົາຈຶ່ງໄດ້ມາປຸກພຣະອົງ (4:38). "ອາຈານເອີຍ, ທ່ານບໍ່ເປັນຫ່ວງດອກຫລື ພວກຂ້ານ້ອຍກຳລັງຈະຈົບຫາຍຢູ່ແລ້ວ?" ເປັນຄຳຖາມຢ່າງແຈ່ມແຈ້ງ. ແຕ່ເປັນຄຳຖາມທີ່ຫນ້າເອົາມາຄິດແລະຕຶກຕອງ. ໃຫ້ພວກເຮົາລອງມາຕີຄວາມຫມາຍຂອງຄຳຖາມນີ້ເບິ່ງດູກັບຄົນໃນສມັຍຂອງພວກເຮົານີ້. ພວກເຂົາປຸກພຣະອົງເພາະວ່າພວກເຂົາເຫັນອົກເຫັນໃຈພຣະອົງວ່າພຣະອົງນັ້ນເມື່ອຍຫລາຍ. ພວກເຂົາເລີຍປຸກພຣະອົງກ່ອນພວກເຂົາຈະຖິ້ມເຮືອຂອງພວກເຂົາໄປບໍ່? ພວກເຂົາປຸກພຣະອົງເພື່ອຈະເວົ້າໃສ່ພຣະອົງວ່າພຣະອົງນັ້ນບໍ່ເປັນຫ່ວງພວກເຂົາບໍ່? ຫລືວ່າພວກເຂົາປຸກພຣະອົງເພື່ອພວກເຂົາຈະໄດ້ພົ້ນພັຍວິບັດທີ່ຈະເກີດຂື້ນດ້ວຍອຳນາດຂອງພຣະອົງບໍ່?

"ພຣະອົງຈຶ່ງຕື່ນຂື້ນຫ້າມລົມ ແລະຊົງກ່າວແກ່ທະເລວ່າ, "ມິດສງົບແມ" (4:39). ລົມກໍເຊົາ ແລະນ້ຳຟອງກໍງຽບສງົບໄປ. ພາຍຸຈາກທັມມະຊາດໄດ້ງຽບສງົບລົງໄປແລ້ວ, ພຣະອົງມີພາຣະຫນັກອີກຄືວ່າຈະທຳຢ່າງໃດຈຶ່ງໃຫ້ພວກສາວົກຂອງພຣະອົງມີຄວາມໄວ້ວາງໃຈເຊື່ອ. ພວກສາວົກຂອງພຣະອົງໄດ້ຕັດສິນໃຈຕິດຕາມພຣະອົງ ແລະພວກເຂົາໄດ້ເຫັນວ່າພຣະອາຈານຂອງພວກເຂົາສາມາດຮັກສາປິ່ນປົວຄົນເຈັບໃຫ້ດີຈາກພຍາດແລະສາມາດໄລ່ຜີມານອອກຈາກຜູ້ເຈັບເປັນ ແຕ່ວ່າພວກເຂົາຍັງບໍ່ຮູ້ວ່າພຣະອົງນັ້ນເປັນພຣະບຸດຂອງພຣະເຈົ້າ. ຄວາມເຂົ້າໃຈຂອງພວກເຂົາກ່ຽວກັບພຣະຄຣິດນັ້ນຍັງໄກຫລາຍ. ພຣະອົງຈຶ່ງຖາມພວກເຂົາວ່າ, "ພວກທ່ານຍັງບໍ່ມີຄວາມເຊື່ອຫລື?" (4:40). ຄຳຖາມຂອງພຣະອົງຈຶ່ງບົ່ງບອກໃຫ້ພວກເຮົາເຫັນວ່າພວກເຂົາບໍ່ມີຄວາມໄວ້ວາງໃຈເຊື່ອໃນພຣະອົງເລີຍ. ພຣະອົງບອກໃຫ້ພາຍຸງຽບສງົບລົງຍັງງ່າຍກວ່າຈະຫມູນໃຈພວກເຂົາໃຫ້ມີຄວາມໄວ້ວາງໃຈເຊື່ອໃນພຣະອົງໃນຂນະທີ່ປະເຊີນກັບພາຍຸ.

ຄວາມຢ້ານ (fear) ນັ້ນມີອຳນາດ ແລະເປັນຄວາມຮູ້ສຶກທີ່ເກີດຈາກຕົວຂອງເຮົາເອງ. ພາສາກຣີກມີສອງຄຳທີ່ໃຊ້ກັບຄຳວ່າ ຢ້ານ (fear). ຄຳວ່າຢ້ານ ຄຳທີ່ນຶ່ງມີຄວາມຫມາຍວ່າ ຢ້ານ “afraid” (4:40). ຄຳທີສອງມີຄວາມຫມາຍວ່າຕົກໃຈຈົນວ່າໃຫ້ກຽດແລະຢຳເກງ “terrify” (4:41). ພວກສາວົກມີຄວາມຮູ້ສຶກຢ້ານໃນຂນະທີ່ປະເຊີນກັບອັນຕະລາຍແຕ່ຈາກຄວາມຢ້ານກັບກາຍມາເປັນຄວາມຢຳເກງ. ບໍ່ວ່າພວກເຂົາມີຄວາມຢ້ານຫລາຍປານໃດກໍຕາມຈາກພາຍຸນັ້ນ. ແຕ່ພວກເຂົາມີຄວາມຢຳເກງພຣະຜູ້ຊົງໂຜດພວກເຂົາໃຫ້ພົ້ນຈາກພາຍຸ. ພວກເຂົາໄດ້ເຫັນວ່າພຣະອົງມີພະລັງອຳນາດເຫນືອກວ່າພາຍຸ ຫລືວ່າພັຍທັມມະຊາດ, ພວກເຂົາຈຶ່ງຫັນຫນີຈາກຄວາມຢ້ານພາຍຸກັບມາຢ້ານ ຫລືວ່າຢຳເກງພຣະຜູ້ເປັນເຈົ້າຜູ້ຊົງມີພະລັງອຳນາດ ເຫນືອກວ່າພາຍຸ.

ພວກເຮົາກໍເຊັ່ນດຽວກັນຄວນຈະຢ້ານພຣະຜູ້ເປັນເຈົ້າຄືພຣະຜູ້ຊົງສ້າງຈັກກະວານແທນທີ່ຈະໄປຢ້ານບັນຫາທີ່ເກີດຂື້ນ

ຈາກພັຍທັມມະຊາດ ຫລືວ່າເກີດຂຶ້ນໃນຈັກກະວານນີ້. ພວກເຮົາເຫັນໃນສິ່ງທີ່ພວກສາວົກເຫັນຈຶ່ງພວກເຂົາກ່າວວ່າ "ທ່ານຜູ້ນີ້ແມ່ນໃຜຫນໍ? ຈົນວ່າລົມແລະທະເລກໍຍອມຟັງເພິ່ນ" (4:41).

**<u>ພະລັງອຳນາດເຫນືອພຍາດໂຣຄາແລະຄວາມຕາຍ</u>** (5:21-34)

ເມື່ອຂ້າມທະເລກັບມາຍັງແຂວງຄາລີເລ ພຣະເຢຊູໄດ້ພົບກັບຝູງຊົນແລະເຫດການສຸກເສີນທີ່ເກີດຂຶ້ນກັບພວກເຂົາ. ຢາອີໂອ ນາຍໂຮງທັມມະເທສນາໄດ້ມາຂາບລົງທີ່ພຣະບາດຂອງພຣະອົງ. ລາວເປັນຜູ້ບໍຣິຫານ ແລະຈັດແຈງພິທີການນະມັສການຂອງຊາວຢິວ. ລາວມີໃຈກ້າພໍທີ່ຈະມາຫາພຣະອົງ ເພາະການມາຂອງລາວຈະເຮັດໃຫ້ລາວເສັຽຕຳແຫນ່ງໃນໂຮງທັມມະເທສນາກໍໄດ້ ແລະຊາວຢິວເບິ່ງລາວໄປໃນຮູບໃດກໍບໍ່ຮູ້. ພຣະອົງໄດ້ປະກາດ, ສັ່ງສອນ, ປິ່ນປົວຄົນເຈັບໃຫ້ດີໃນໂຮງທັມມະເທສນາຢູ່ເລື້ອຍໆ, ມີພວກຄຣູສອນໃນທີ່ນັ້ນເກີດຄວາມຄຽດແຄ້ນແລະບໍ່ມັກພຣະອົງກໍບໍ່ຫນ້ອຍ. ຢາອີໂອອາດຈະເຄີຍໄດ້ຟັງຄຳສັ່ງສອນຂອງພຣະອົງ ແລະໄດ້ເຫັນພຣະອົງປິ່ນປົວຫລາຍຄົນໃຫ້ດີຈາກພຍາດຂອງເຂົາ. ຈະເອົາການເປັນນາຍໂຮງທັມມະເທສນາມາຖ່ວງຫນ່ຽວການໄປຮ້ອງທຸກກັບພຣະເຢຊູນັ້ນກໍບໍ່ໄດ້ ເພາະຄວາມທຸກໃຈຜູ້ເປັນພໍ່ທີ່ເຫັນລູກສາວຂອງຕົນເຈັບຈວນຈະຕາຍຢູ່ແລ້ວ. ລາວໄດ້ຕັດສິນໃຈຜ່ານຜ່າອຸປສັກທຸກຢ່າງເຂົ້າເຝົ້າພຣະເຢຊູຂໍໃຫ້ແດ່ລູກສາວອາຍຸສິບສອງປີຂອງລາວໄດ້ຫາຍດີຈາກພຍາດ ນີ້ເປັນສິ່ງທີ່ລາວຕ້ອງການຫລາຍທີ່ສຸດ. ພຣະອົງຊົງສະເດັດໄປກັບລາວທັນທີ ທັງໆທີ່ຝູງຊົນຫລວງຫລາຍຕາມໄປແລະບຽດພຣະອົງ.

ໃນຝູງຊົນນັ້ນມີຜູ້ຍິງຄົນນຶ່ງ ເປັນພຍາດເລືອດຕົກໄດ້ສິບສອງປີມາແລ້ວ. ຍ້ອນພຍາດຂອງລາວ ລາວຈຶ່ງໄດ້ຖືກຈັດໄວ້ວ່າເປັນຄົນຈຳພວກທີ່ເປັນມົນທິນ (ບໍ່ສະອາດ) ແລະຝູງຊົນຈະຈຳແນກລາວໄວ້ເຫມືອນກັບຄົນທີ່ເປັນຂີ້ທູດ. ແຕ່ລາວມີຄວາມໄວ້ວາງໃຈເຊື່ອໃນພຣະອົງຢ່າງແຂງແຮງ. ລາວຈຶ່ງເຂົ້າໄປບາຍເຄື່ອງທົງຂອງພຣະອົງ. ລາວເວົ້າວ່າ, "ຖ້າເຮົາໄດ້ບາຍເສື້ອຂອງເພິ່ນເທົ່ານັ້ນ ເຮົາກໍຈະດີພຍາດ" (5:28). ໃນທັນໃດນັ້ນເລືອດທີ່ຕົກນັ້ນກໍຢຸດແຫ້ງໄປ (5:29). ຜູ້ຍິງຄົນນັ້ນຮູ້ສຶກທັນທີວ່າພຍາດຂອງລາວໄດ້ຫາຍດີ. ໃນເວລານັ້ນພຣະອົງຮູ້ສຶກວ່າຣິດໄດ້ອອກຈາກພຣະອົງໄປແລ້ວ. ເມື່ອພຣະເຢຊູຫລຽວຫາລາວ, ລາວກໍຢ້ານຈົນຕົວສັ່ນເພາະຮູ້ເຣື່ອງທີ່ເກີດຂຶ້ນແກ່ລາວເອງ ຈຶ່ງມາຂາບລົງທູນຕໍ່ພຣະອົງຕາມຄວາມຈິງທີ່ເປັນມາ. ພຣະອົງຊົງກ່າວຕໍ່ລາວວ່າ, "... ຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າດີແລ້ວ ຈົ່ງໄປເປັນສຸກແລະດີພຍາດເທີ້ນ" (5:34). ລາວຕ້ອງການໃຫ້ພຍາດຂອງລາວຫາຍດີເທົ່ານັ້ນ ແຕ່ລາວໄດ້ພົບພຣະຜູ້ຊົງໂຜດໃຫ້ຟື້ນຝ່າຍຈິດວິນຍານອີກດ້ວຍ. ເມື່ອພວກເຮົາໄດ້ມາພົບພຣະຄຣິດເຈົ້າ ຈະມີການປ່ຽນແປງໃນຊີວິດຂອງພວກເຮົາ ກໍເພາະວ່າພວກເຮົາມີຄວາມປະສົງຢາກຈະສຳຜັດກັບພຣະອົງ, ເຂົ້າຫາພຣະອົງດ້ວຍການຖວາຍຕົວ, ແລະຮັບຮູ້ຄວາມຈິງດ້ວຍໃຈບໍຣິສຸດ. ຫລັງຈາກພຣະອົງປິ່ນປົວຍິງຄົນນັ້ນແລ້ວ ພຣະອົງກໍມຸ້ງຫນ້າໄປຫາລູກສາວຂອງຢາອີໂອ.

**<u>ຄວາມໂສກເສົ້າເສັຽໃຈ</u>** (5:35-41)

ມີບາງຄົນມາຈາກເຮືອນຂອງຢາອີໂອບອກວ່າລູກສາວຂອງລາວຕາຍເສັຽແລ້ວ ຍັງຈະໄປລົບກວນພຣະອົງເຮັດຫຍັງ. ໃນຂນະນັ້ນເປັນເວລາທີ່ຕຶງຄຽດຫລາຍ. ຄວາມຕາຍກໍຄືການສິ້ນສຸດ, ເປັນເວລາອັນຫນ້າວິຕົກ, ແລະຢ້ານສັ່ນສາຍ. ຄວາມຫວັງແລະຄວາມຕັ້ງໃຈຂອງຢາອີໂອໄດ້ຫມົດສິ້ນໄປ. ຝ່າຍພຣະອົງບໍ່ໄດ້ຫົວຊາກັບຄວາມເຂົາເວົ້ານັ້ນ. ຄຳຕອບຂອງພຣະອົງເປັນທີ່ປລາດໃຈ, "ຢ່າວິຕົກເທາະ ຈົ່ງເຊື່ອເທົ່ານັ້ນ" (5:36). ຄວາມເຊື່ອນັ້ນກົງກັນຂ້າມກັບຄວາມຢ້ານ. ຢາອີໂອຈະກ່າວຕໍ່ພຣະອົງວ່າ, "ຢ່າເທາະຄົນກໍຕາຍແລ້ວ" ຫລືວ່າ ລາວຈະໄວ້ວາງໃຈເຊື່ອໃນພຣະອົງ? ຄຳຕອບກໍຄືວ່າ ເຖິງແມ່ນວ່າລູກສາວຂອງລາວບໍ່ໄດ້ຖືກນຳຄືນມາມີຊີວິດໃຫມ່ກໍຕາມ. "ຈົ່ງເຊື່ອເທົ່ານັ້ນ" ນີ້ແລ້ວເປັນສິ່ງທີ່ສຳຄັນທີ່ສຸດໃນຂນະນັ້ນ.

ເປໂຕ, ຢາໂກໂບ, ແລະໂຢຮັນກໍໄປນຳພຣະອົງເພື່ອເປັນພະຍານໃນເຫດການອັສຈັນຄັ້ງນີ້. ເມື່ອພຣະອົງກັບຄົນເຫລົ່ານັ້ນໄປຮອດເຮືອນຂອງຢາອີໂອກໍຊົງເຫັນການຫວຸ້ນວາຍທັງຄົນແຜດສຽງຮ້ອງໄຫ້ຮ່ຳໄຮຫລາຍຢູ່. ພຣະອົງຈຶ່ງຖາມ

ພວກເຂົາດ້ວຍຄຳຖາມທີ່ບໍ່ໜ້າເຊື່ອວ່າ, "ພວກເຈົ້າພາກັນວຸ້ນວາຍຮ້ອງໄຫ້ເຮັດຫຍັງ ເດັກນ້ອຍບໍ່ໄດ້ຕາຍດອກ ແຕ່ຫລັບຢູ່ເທົ່ານັ້ນ" (5:39).
ມາຣະໂກໃຊ້ຄຳວ່າ ຫລັບຢູ່ ເຊິ່ງເປັນຄຳດຽວກັນທີ່ລາວໃຊ້ກ່າວວ່າພຣະເຢຊູຫລັບຢູ່ທ້າຍເຮືອ. ສຳລັບພວກເຮົານັ້ນແນ່ນອນວ່າໃຊ້ຄຳວ່າ "ຕາຍ" ແຕ່ສຳລັບພຣະອົງແລ້ວ ພຣະອົງສາມາດໃຊ້ຄຳວ່າ "ຫລັບຢູ່". ເພາະວ່າພຣະອົງມີພະລັງອຳນາດເໜືອກວ່າຄວາມຕາຍ. ເຖິງແມ່ນວ່າຄົນທີ່ຕາຍແລ້ວພຣະອົງກໍຍັງສາມາດປຸກໃຫ້ຟື້ນຄືນມາໄດ້.

## <u>ມະນຸດຫົວຂວັນພຣະເຈົ້າ</u>

"ເຂົາກໍພາກັນຫົວຂວັນພຣະອົງ" (5:40). ພວກຄົນທີ່ຫົວຂວັນພຣະອົງນັ້ນເຂົາຮູ້ວ່າເດັກນ້ອຍຕາຍແທ້. ພວກເຂົາຫົວຂວັນເຍາະເຍີ້ຍພຣະອົງ. ເຖິງແມ່ນວ່າໃນທ່າມກາງຄວາມໂສກເສົ້າພວກເຂົາຍັງກ້າອອກສຽງຫົວຂວັນເຍາະເຍີ້ຍພຣະອົງໄດ້. ທັງໆທີ່ພວກເຂົາເອງກໍໃຫ້ຄວາມຫວັງແກ່ຄອບຄົວນັ້ນບໍ່ໄດ້. ສຳລັບຜູ້ຄົນທີ່ບໍ່ເຊື່ອ ສຽງຫົວຂວັນຂອງເຂົານັ້ນຈະກັບມາຫາພວກເຂົາເອງໃນຄາວຂອງພວກເຂົາ. ພວກເຂົາອາດຈະເຊື່ອວ່າຖ້າເດັກນ້ອຍເຈັບປ່ວຍ ເດັກນ້ອຍນັ້ນອາດຈະຖືກປິ່ນປົວໃຫ້ຫາຍດີຈາກພຍາດໄດ້. ແຕ່ຖ້າເດັກນ້ອຍນັ້ນຕາຍແລ້ວ ບໍ່ມີທາງເດັກນັ້ນຈະຟື້ນຄືນມາໄດ້. ຄົນໃນສມັຍນີ້ ພວກເຂົາພາກັນຫົວຂວັນຜູ້ທີ່ເຊື່ອໃນເຣື່ອງການຟື້ນຄືນມາຈາກຕາຍ. ພະລັງອຳນາດຂອງພຣະເຢຊູຈະຊົງປາກົດໃຫ້ເຂົາເຫັນໃນນາທີສຸດທ້າຍຂອງຊີວິດພວກເຂົາ ແລະພວກເຂົາຈະຮັບຮູ້ຈິງຕລອດໄປເປັນນິດ.

## <u>ສິ່ງອັສຈັນໄດ້ເກີດຂຶ້ນ</u>

ພຣະອົງຊົງໄລ່ຄົນພວກນັ້ນອອກແລ້ວຈຶ່ງພາພໍ່ແມ່ກັບສາວົກທັງສາມເຂົ້າໄປໃນບ່ອນເດັກນ້ອຍນອນຢູ່. ເມື່ອພຣະອົງເຂົ້າໄປໃກ້ເດັກນັ້ນພຣະອົງຊົງຈັບມືເດັກນ້ອຍນັ້ນ ແລ້ວຊົງກ່າວວ່າ, "ຍິງນ້ອຍເອີຍ ເຮົາບອກເຈົ້າຈົ່ງລຸກຂຶ້ນແມ" (5:41). ພຣະອົງມີອຳນາດສາມາດສັ່ງໃຫ້ຄົນຕາຍເປັນຄືນມາໄດ້. "ໃນທັນໃດນັ້ນ" ເດັກຍິງຜູ້ນັ້ນກໍລຸກຂຶ້ນຍ່າງໄປມາ. ໃນທັນໃດນັ້ນ ຄົນທັງປວງທີ່ເຄີຍຫົວຂວັນພຣະອົງ "ກໍງຶດປລາດໃຈຫລາຍ" (5:43). ສິ່ງທີ່ງຶດປລາດໃຈຫລາຍທີ່ສຸດກໍຄືໃນຄວາມຕາຍນັ້ນພຣະອົງສາມາດສັ່ງໃຫ້ຊີວິດເປັນຄືນມາໄດ້.

ການຟື້ນຄືນມາຈາກຕາຍຂອງເດັກນ້ອຍຄົນນັ້ນໄດ້ເປັນພາບພົດໃຫ້ເຫັນການຄືນພຣະຊົນຂອງພຣະອົງ. ພຣະເຢຊູຜູ້ຊົງເປັນພຣະບຸດຂອງພຣະຜູ້ເປັນເຈົ້າມີຣິດອຳນາດສັ່ງໃຫ້ຄົນຕາຍຟື້ນຄືນມາຈາກຕາຍອີກໄດ້. ທຸກສິ່ງທຸກຢ່າງທີ່ພຣະອົງຊົງກະທຳນັ້ນກໍເພື່ອຈະນຳໃຫ້ມະນຸດມາເຖິງຄວາມເຊື່ອ ແລະມີປະສົບການກັບການຄືນພຣະຊົນຂອງພຣະອົງເອງ. ອັຄສາວົກໂປໂລໄດ້ກ່າວໄວ້ວ່າ, "ຖ້າພຣະຄຣິດບໍ່ໄດ້ຊົງຄືນພຣະຊົນແລ້ວ ການປະກາດຂອງພວກເຮົາກໍບໍ່ມີປໂຍດແລະຄວາມເຊື່ອຂອງພວກເຈົ້າກໍບໍ່ມີປໂຍດເໝືອນກັນ" (1 ໂກຣິນໂທ 15:14). ອັຄສາວົກໂຢຮັນກໍໄດ້ບັນທຶກຄຳເວົ້າຂອງພຣະເຢຊູເອງວ່າ, "ຝ່າຍເຮົາເປັນຜູ້ຕົ້ນແລະເປັນຜູ້ປາຍ ແລະເປັນຜູ້ມີຊີວິດຢູ່ ເຮົາໄດ້ຕາຍແລ້ວ ແຕ່ເບິ່ງແມ, ເຮົາກໍມີຊີວິດຕລອດໄປເປັນນິດ ແລະເຮົາຖືຂໍກະແຈແຫ່ງຄວາມຕາຍແລະແຫ່ງແດນມໍຣະນາ" (ພຣະນິມິດ 1:18).

<u>ຄຳຖາມ</u>

1. ໃນກໍຣະນີໃດແດ່ ເມື່ອທ່ານອ່ອນເພັຽໃນຊີວິດຂອງທ່ານ ແຕ່ໃນຂນະດຽວກັນນັ້ນທ່ານໄດ້ຮັບພະລັງກຳລັງໃຈຝ່າຍຈິດວິນຍານ?

2. ເປັນຄວາມຈິງໄດ້ຢ່າງໃດ ພຣະຄຳຂອງພຣະເຈົ້າສາມາດຊ່ອຍເຮົາໄດ້ໃນຂນະທີ່ພວກເຮົາກຳລັງຖືກພາຍຸຊັດໄປຊັດມາໃນຊີວິດຂອງພວກເຮົາ? ເຫດໃດພຣະເຢຊູຈຶ່ງນອນຫລັບຢູ່ໃນຂນະທີ່ພາຍຸກຳລັງລົບກວນ?

3. ພຣະເຢຊູໄດ້ສອນພວກເຮົາຫຍັງແດ່ໃນເຣື່ອງກ່ຽວກັບພະລັງອໍານາດເໜືອທັມມະຊາດໃນທຸກສິ່ງທີ່ຖືກຊົງສ້າງຂື້ນໃນຈັກກະວານນີ້?
   ພວກເຮົາຈະສາມາດບັນລະຍາຍປະສົບການເຣື່ອງກ່ຽວກັບພະລັງອໍານາດເໜືອທັມມະຊາດໄດ້ຢ່າງໃດ?

4. ທ່ານມີຄວາມເຫັນຢ່າງໃດໃນຕົວພຣະເຢຊູ ເມື່ອພຣະອົງມີພະລັງອໍານາດເໜືອກວ່າສັພທຸກສິ່ງທີ່ໄດ້ຊົງສ້າງຂື້ນ?

5. ມີການອັສຈັນອັນໃດແດ່ທີ່ເກີດຂື້ນກັບຊີວິດຂອງທ່ານ?

6. ປະສົບການຂອງຢາຣີໂອຊ່ອຍພວກເຮົາໄດ້ຢ່າງໃດກ່ຽວກັບເຣື່ອງການຟື້ນຄືນມາຈາກຕາຍ?

## ບົດຮຽນທີ 6
## ຄວາມສົງສານຂອງພຣະເຢຊູ

---

**ຂໍ້ພຣະຄັມພີສໍາລັບບົດຮຽນ:** ມາຣະໂກ 6:30-52
**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ມາຣະໂກ 6:1-52
**ຈຸດສໍາຄັນຂອງບົດຮຽນນີ້:** ພຣະເຢຊູຊົງສະແດງຄວາມສົງສານຕໍ່ຜູ້ມີຄວາມຂັດສົນ.
**ຄໍາຖາມເພື່ອການສໍາຫລວດ:** ພວກເຮົາຈະປະຕິບັດຕໍ່ຜູ້ມີຄວາມຂັດສົນຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ຈະຊ່ອຍໃຫ້ຂ້າພະເຈົ້າປະຕິບັດຕໍ່ຜູ້ທີ່ມີຄວາມຂັດສົນຕາມແບບຢ່າງຂອງພຣະເຢຊູ.

## ບົດຮຽນ

### ຄໍານໍາ

ຄຣິສຕຽນຄວນຈະເອົາແບບຢ່າງພຣະເຢຊູ ໃຫ້ມີຄວາມສົງສານຕໍ່ຜູ້ຂັດສົນ ແລະຕຽມພ້ອມສເມີທີ່ຈະຊ່ອຍເຫລືອເຂົາ. ຄໍາວ່າ "ສົງສານ" ມີຄວາມຮູ້ສຶກຈາກສ່ວນເລິກຂອງຈິດໃຈເຖິງຄວາມທຸກທໍຣະມານຂອງຄົນອື່ນ. ຜູ້ທີ່ມີຄວາມສົງສານຕໍ່ຄົນອື່ນດ້ວຍໃຈບໍຣິສຸດນັ້ນຈະສັງເກດຮູ້ເຖິງຄວາມຕ້ອງການຂອງຄົນອື່ນ, ມີຄວາມຮູ້ສຶກເຫັນອົກເຫັນໃຈຜູ້ຕ້ອງການ, ແລະສະແດງອອກດ້ວຍການຊ່ອຍເຫລືອວິທີໃດວິທີນຶ່ງດ້ວຍຄວາມຮັກ.

ມະນຸດທຸກຄົນຕ້ອງການໃຫ້ຄົນອື່ນມີຄວາມສົງສານຕໍ່ເຂົາ. ມີຄວາມສົງສານຕໍ່ຜູ້ອື່ນເປັນຫົວໃຈຫລັກຄວາມເຊື່ອຂອງຄຣິສຕຽນ. ພຣະເຢຊູຈະເປັນພຣະຄຣິດບໍ່ໄດ້ຖ້າຫາກວ່າພຣະອົງບໍ່ມີຄວາມສົງສານຕໍ່ມະນຸດ. ຜູ້ທີ່ບໍ່ຮູ້ຈັກກັບຄວາມຮັກຂອງພຣະເຈົ້າ ພວກເຂົາຕ້ອງການຄວາມສົງສານຈາກຄຣິສຕຽນທີ່ຢູ່ໃນຄຣິສຕະຈັກ.

### ການພັກຜ່ອນຈາກການຮັບໃຊ້ (6:30-34)

ຫລັງຈາກກັບມາຈາກການປະກາດຂ່າວປະເສີດ, ປິ່ນປົວຄົນເຈັບໃຫ້ຫາຍດີຈາກພຍາດ, ພວກສາວົກຂອງພຣະເຢຊູມີຄວາມອິດເມື່ອຍເຕັມທີ. ແຕ່ໃຫ້ພວກເຮົາມາວາດມະໂນພາບເບິ່ງໃນຂນະທີ່ພວກເຂົາກັບມາ ແລະທູນລາຍງານທັງຫມົດທີ່ພວກເຂົາໄດ້ເຮັດແລະໄດ້ສັ່ງສອນໃຫ້ພຣະອົງຊົງຊາບ. ພວກເຂົາມີຄວາມຕື່ນເຕັ້ນຫລາຍໃນປະສົບການທີ່ໄດ້ຮັບ. ພວກເຂົາເຫັນພຣະອົງເປັນແບບຢ່າງ ແລະພວກເຂົາກໍປະຕິບັດຕາມ.

ພຣະເຢຊູມີຄວາມສົງສານຕໍ່ພວກສາວົກຂອງພຣະອົງ ເພາະວ່າພວກເຂົາມີຄວາມອິດເມື່ອຍຫລາຍຈາກການຮັບໃຊ້, ຄວາມຕຶງຄຽດຈາກການຕອບສນອງຄວາມຮຽກຮ້ອງຂອງຝູງຊົນ, ຈາກຄວາມກົດດັນຂອງເຮໂຣດ, ຈາກຜູ້ນໍາຂອງຊາວຢິວ. ພຣະອົງຈຶ່ງໄດ້ນໍາພວກເຂົາຫນີຈາກຝູງຊົນ ແລະພາພວກເຂົາຂຶ້ນເຮືອໄປທິດເຫນືອຂອງທະເລຄາລີເລ ໂດຍກ່າວວ່າ, "ພວກເຮົາຈົ່ງພາກັນໄປໃນບ່ອນສງັດ ໃຫ້ພວກທ່ານພັກເຊົາເມື່ອຍຈັກຫນ້ອຍນຶ່ງ" (6:31). ພຣະອົງຊົງຮູ້ວ່າຖ້າພວກສາວົກຈະເປັນຜູ້ສາມາດຊ່ອຍຄົນອື່ນ, ພວກເຂົາຈະຕ້ອງໄດ້ຮັບຄວາມສາມາດ; ຖ້າພວກເຂົາຈະຮັກສາຄົນອື່ນພວກເຂົາຈະຕ້ອງຮູ້ຈັກຮັກສາຕົວເຂົາເອງກ່ອນ; ຖ້າພວກເຂົາຈະນໍາພາຄົນອື່ນຝ່າຍຈິດວິນຍານ, ພວກເຂົາຈະຕ້ອງມີອາຫານຝ່າຍຈິດວິນຍານ; ຖ້າພວກເຂົາຈະໃຫ້ຄົນອື່ນ, ພວກເຂົາຈະຕ້ອງໄດ້ຮັບຈາກພຣະຜູ້ເປັນເຈົ້າເສັຽກ່ອນ.

ໃນຫມໍ່ໆມານີ້ ຂ້າພະເຈົ້າໄດ້ຖາມຫາຫມູ່ຜູ້ຮັບໃຊ້ຄົນນຶ່ງ ຊຶ່ງລາວໄດ້ລາອອກຈາກການຮັບໃຊ້. ສະມາຊິກໃນຄຣິສຕະຈັກໄດ້ບອກຂ້າພະເຈົ້າວ່າ ສາຍເຫດທີ່ລາວລາອອກນັ້ນກໍເພາະວ່າລາວໄດ້ຮັບຄວາມຕຶງຄຽດຫລາຍ. ລາວພະຍາຍາມ

ຈະເຮັດທຸກສິ່ງທຸກຢ່າງຕາມຄວາມຮຽກຮ້ອງຂອງຄຣິສຕະຈັກ ແຕ່ລາວເຮັດບໍ່ໄດ້ຕາມຄວາມຕັ້ງໃຈຂອງລາວ. ລາວບໍ່ມີເວລາພັກຜ່ອນ. ລາວບໍ່ໄດ້ຄຳນຶງເຖິງຄວາມຕ້ອງການຂອງຮ່າງກາຍຂອງລາວ. ລາວອ່ອນເພັຽທາງດ້ານຮ່າງກາຍແລະຈິດວິນຍານ. ໃນທີ່ສຸດລາວເສັຽໃຈຫລາຍ ລາວຈິ່ງລາອອກ. ການຕອບສນອງເຖິງຄວາມຮຽກຮ້ອງຈາກຄວາມຕ້ອງການຂອງຝູງຊົນນັ້ນເປັນພາຣະຫນັກທີ່ຈະແບກໄດ້. ເປັນພາຣະທີ່ຕ້ອງຖອກເຫື່ອເທແຮງບໍ່ຫນ້ອຍ. ຖ້າພວກເຮົາບໍ່ຮູ້ຈັກກຳນົດຄວາມສາມາດຂອງພວກເຮົາແລ້ວ. ພວກເຮົາຈະອິດເມື່ອຍທາງດ້ານຝ່າຍຮ່າງກາຍ ແລະຈິດວິນຍານຂອງພວກເຮົາດ້ວຍ. ເພາະບໍ່ໄດ້ສງວນເວລາໄວ້ພັກຜ່ອນ ແລະເວລາໄວ້ເຂົ້າເຝົ້າພຣະຜູ້ເປັນເຈົ້າຜູ້ຊົງປະທານເຮື່ອແຮງແລະສະຕິປັນຍາໃຫ້ພວກເຮົາ.

ເວລາພັກຜ່ອນເກືອບຈະຫາບໍ່ໄດ້ເມື່ອຖືກຮຽກຮ້ອງໃຫ້ຊ່ອຍເຫລືອ. ເມື່ອຍືນຢູ່ທິດຕາເວັນຕົກສ່ຽງເຫນືອຂອງຟາກທະເລຄາລີເລ ຈະສັງເກດເຫັນວ່າປະຊາຊົນຫມູ່ໃຫຍ່ໄດ້ມາຍືນຖ້າຕາມຝັ່ງທະເລ ລໍຖ້າພຣະອົງຈະສະເດັດມາ. ເຖິງມີຄວາມອິດເມື່ອຍປານໃດກໍຕາມເມື່ອພຣະອົງຫລຽວເຫັນພວກເຂົາແລ້ວ ພຣະອົງ "ຊົງສົງສານເຂົາ ເພາະວ່າ ເຂົາເປັນເຫມືອນຝູງແກະທີ່ບໍ່ມີຜູ້ລ້ຽງ" (6:34).

**ຂຸມຊັບຂອງການຮັບໃຊ້** (6:35-44)

ເປັນເວລາປະມານສາມໂມງແລງ, ປະຊາຊົນກໍອິດເມື່ອຍ, ຫິວເຂົ້າ, ແລະບໍ່ໄດ້ພັກຜ່ອນ. ພວກເຂົາບໍ່ໄດ້ກິນເຂົ້າຕັ້ງແຕ່ເຊົ້າ. ຄວາມຕື່ນເຕັ້ນຈາກການຕິດຕາມພຣະອົງຈິ່ງບໍ່ໄດ້ຈັດຕຽມຫາງຫາອາຫານ. ເມື່ອໃກ້ຄ່ຳມາແລ້ວ ພວກສາວົກມາທູນພຣະອົງຂໍໃຫ້ພຣະອົງເລີກສອນ ເພື່ອປະຊາຊົນ "ຈະໄດ້ໄປຫາຊື້ອາຫານຮັບປະທານຕາມບ້ານໄຮ່ບ້ານນາແຖບນັ້ນ" (6:36). ປະຊາຊົນຝູງໃຫຍ່ນັ້ນ ນັບແຕ່ຜູ້ຊາຍມີຫ້າພັນຄົນຍັງບໍ່ທັນໄດ້ນັບຜູ້ຍິງແລະເດັກນ້ອຍ (6:44).

ພວກສາວົກຂອງພຣະອົງບໍ່ຮູ້ຈະແກ້ບັນຫາໄດ້ຢ່າງໃດ ມີທາງດຽວເທົ່ານັ້ນ ຄືສົ່ງໃຫ້ຝູງຊົນໄປຫາຊື້ອາຫານກິນເອງ. ເປັນບັນຫາໃຫຍ່ແທ້ສຳລັບຜູ້ມີຄວາມຄິດຕື້ນ. ແຕ່ພຣະອົງຕອບພວກສາວົກວ່າ, "ພວກທ່ານຈົ່ງລ້ຽງເຂົາສາ" (6:37). ຄຳຕອບຂອງພຣະອົງໄດ້ຊີ້ແນະໃຫ້ພວກສາວົກເຫັນວ່າພວກເຂົານັ້ນບໍ່ມີຊັບ. ໃຫ້ມາສຶກສາຄຳເວົ້າສອງຄຳດັ່ງຕໍ່ໄປນີ້: "ຈົ່ງໃຫ້ເຂົາເລີກໄປເສັຽ" (6:36) ແລະຄຳວ່າ "ຈົ່ງລ້ຽງເຂົາສາ" (6:37) ຄຳເວົ້າສອງຄຳນີ້ມີການປະຕິບັດຕ່າງກັນ ແຕ່ການປະຕິບັດທັງສອງນີ້ມີເປົ້າຫມາຍດຽວກັນ ຄືເພື່ອຕອບສນອງເຖິງຄວາມຕ້ອງການຂອງປະຊາຊົນຝູງໃຫຍ່ດັ່ງກ່າວນັ້ນ. ຄຳວ່າ "ຈົ່ງໃຫ້ເຂົາເລີກໄປເສັຽ" ຫມາຍເຖິງ ພວກສາວົກຮັບຮູ້ວ່າຝູງຊົນກຳລັງຫິວເຂົ້າ ແລະຕ້ອງການອາຫານການກິນ ແຕ່ໃນສຖານທີ່ດັ່ງກ່າວບໍ່ມີອາຫານພຽງພໍສຳລັບປະຊາຊົນຝູງໃຫຍ່ ຫລືບໍ່ມີເງິນພຽງພໍທີ່ຈະຊື້ອາຫານລ້ຽງຄົນຈຳນວນຫລາຍປານນີ້. ຄຳວ່າ "ຈົ່ງລ້ຽງເຂົາສາ" ຫມາຍເຖິງ ພຣະອົງຮັບຮູ້ວ່າຝູງຊົນກຳລັງຫິວເຂົ້າ ແລະຕ້ອງການອາຫານການກິນແລະພຣະບິດາມີບໍ່ຊັບພຽງພໍທີ່ຈະລ້ຽງຄົນຈຳນວນຫລາຍເທົ່າທີ່ຕ້ອງການ.

ພວກສາວົກຂອງພຣະອົງທູນວ່າ, "ຈະໃຫ້ພວກຂ້ານ້ອຍໄປຊື້ອາຫານເຖິງສອງຮ້ອຍຫລຽນເດນາຣິອົນ ໃຫ້ເຂົາກິນຫລື?" ຄຳຖາມພວກສາວົກກໍຄືວ່າ ຖ້າໃຊ້ເງິນຈຳນວນນີ້ໄປຊື້ອາຫານ ຈະໃຊ້ເງິນປະຊາຊົນ ຫລືເງິນຂອງພວກສາວົກໄປຊື້? ຖ້າຈະໃຊ້ເງິນຈຳນວນນີ້ໄປຊື້ອາຫານ ເງິນຈຳນວນນີ້ເທົ່າກັບຄ່າແຮງງານແປດເດືອນຂອງຄົນງານ. ເມື່ອມີຄວາມຕ້ອງການຍາມໃດກໍຕາມ ກໍຕ້ອງຖິ້ມໃຫ້ຜູ້ໃດຜູ້ນຶ່ງຮັບຜິດຊອບໄປຫາມາ ເພື່ອໄດ້ມາຕອບສນອງຄວາມຕ້ອງການນັ້ນ. ພຣະອົງຊົງປະທານຂຸມຊັບໃຫ້ຜູ້ທີ່ຊ່ອຍເຫລືອຄົນອື່ນ ແລະຜູ້ທີ່ຕ້ອງການຄວາມຊ່ອຍເຫລືອ.

ການອັສຈັນຂອງການຮັບໃຊ້. ພຣະອົງໄດ້ໃຊ້ເຂົ້າຈີ່ຫ້າກ້ອນແລະປາສອງໂຕແກ້ບັນຫາໂດຍຊົງເງີຍພຣະພັກເບິ່ງຟ້າສວັນຂໍພຣະພອນ. ພຣະອົງຊົງຫັກເຂົ້າຈີ່ແລ້ວຍື່ນໃຫ້ພວກສາວົກໄປແຈກໃຫ້ຄົນທັງປວງ ແລະປາສອງໂຕນັ້ນກໍຊົງແບ່ງໃຫ້ທົ່ວເຖິງກັນເຫມືອນກັນ (6:41). ຫລັງຈາກກິນອີ່ມແລ້ວ ສ່ວນຕ່ອນຫັກແລະປາທີ່ເຫລືອນັ້ນເກັບໄດ້ເຕັມສິບ

ສອງບຸງ (6:43).
ການຄິດໄລ່ຂອງພວກສາວົກມີຂອບເຂດຈຳກັດເບິ່ງແລ້ວເປັນໄປບໍ່ໄດ້ ແຕ່ວ່າການຄິດໄລ່ຂອງພຣະຄຣິດນັ້ນ ບໍ່ມີຂອບເຂດຈະຈຳກັດພຣະອົງໄດ້ ທຸກສິ່ງທຸກຢ່າງເປັນໄປໄດ້ສຳລັບພຣະອົງ. ພຣະຄຣິດໄດ້ສອນພວກເຮົາວ່າ ບໍ່ວ່າຈະຢູ່ໃນກໍລະນີໃດກໍຕາມ ພຣະຜູ້ເປັນເຈົ້າມີຂຸມຊັບອັນມະຫາສານຈັດຕຽມໄວ້ຢູ່ສເມີໃນເມື່ອມີຄວາມຕ້ອງການ. ສລຸບແລ້ວ ການອັສຈັນຄັ້ງນີ້ແມ່ນຫຍັງ? "ເຂົາໄດ້ກິນອີ່ມທຸກຄົນ" (6:42).

ບໍ່ມີອັນໃດທີ່ຈະຍາກເກີນໄປສຳລັບພຣະຜູ້ເປັນເຈົ້າ. ຈົ່ງມອບຄວາມຈຳກັດຂອງພວກເຮົາໄວ້ກັບພຣະອົງ. ຈົ່ງໃຫ້ນິມິດຂອງພວກເຮົາເປີດກວ້າງອອກໄປ. ສຳລັບພຣະເຢຊູແລ້ວ ສິ່ງນ້ອຍຈະກັບກາຍເປັນສິ່ງມະຫາສານ.

ເປັນການຍາກຫລາຍທີ່ຈະໃຫ້ຄົນສມັຍນີ້ຮັບຮູ້ວ່າພຣະຄຣິດຊົງເປັນພຣະບຸດຂອງອົງພຣະຜູ້ເປັນເຈົ້າໂດຍປາສຈາກການອັສຈັນທີ່ພຣະອົງໄດ້ຊົງກະທຳ. ພຣະທັມ ມາຣະໂກຈຶ່ງໄດ້ກ່າວເຖິງການອັສຈັນທີ່ພຣະເຢຊູໄດ້ກະທຳເພື່ອຈະພິສູດໃຫ້ໂລກຮັບຮູ້ວ່າພຣະອົງຊົງເປັນພຣະຜູ້ຊົງໂຜດໃຫ້ພົ້ນ. ເພື່ອໃຫ້ຄົນເປັນພັນໆເປັນພະຍານຮັບຮູ້ວ່າພຣະອົງໄດ້ກະທຳການອັສຈັນ.

ແທ້ຈິງແລ້ວພວກເຮົາມີພຣະທັມຄັມພີໄດ້ບັນທຶກເປັນພະຍານກ່ຽວກັບພຣະອົງ, ພວກເຮົາບໍ່ຕ້ອງການຈະມີການອັສຈັນກໍໄດ້. ແຕ່ວ່າ ຄຳວ່າການອັສຈັນໃນສມັຍນີ້ເປັນພຽງແຕ່ປຸກໃຫ້ຄົນມີຄວາມຕື່ນເຕັ້ນໃນທາງທີ່ຜິດແລະສວຍໂອກາດແຜ່ເງິນກັບຜູ້ຕິດຕາມ. ມະນຸດເຮົານີ້ສົນໃຈທາງຝ່າຍຮ່າງກາຍວັດຖຸຫລາຍກວ່າຝ່າຍຈິດວິນຍານ. ຝ່າຍພຣະຄຣິດຈະຫລີກລ້ຽງການສະແດງໃຫ້ຜູ້ຊົມຕື່ນເຕັ້ນຫລາຍກວ່າ( 5:43). ພຣະປະສົງຂອງການອັສຈັນຄືການອັສຈັນໃຫ້ຈິດວິນຍານໄດ້ຮັບຄວາມລອດພົ້ນ. "ດ້ວຍວ່າບຸດມະນຸດໄດ້ມາເພື່ອຈະຊອກຫາແລະໂຜດເອົາຜູ້ຫລົງເສັຽໄປແລ້ວນັ້ນໃຫ້ລອດພົ້ນ" (ລູກາ 19:10).

**ຕຽມພ້ອມໃນການຮັບໃຊ້** (6:45-52)
ຫລັງຈາກພຣະອົງໄດ້ສະແດງການອັສຈັນຄັ້ງນີ້, ພຣະອົງຊົງສັ່ງໃຫ້ພວກສາວົກລົງເຮືອຂ້າມຟາກໄປຍັງເມືອງເບທຊາອີດາກ່ອນໜ້າພຣະອົງ. ພຣະອົງຊົງລາຈາກຝູງຊົນແລ້ວກໍສະເດັດຂຶ້ນເມືອພູເພື່ອການໄຫວ້ວອນ. ພວກເຮົາບໍ່ຮູ້ວ່າເປັນຫຍັງພຣະອົງຈຶ່ງໃຫ້ພວກສາວົກໄປກ່ອນໜ້າພຣະອົງ. ແຕ່ພວກເຮົາຮູ້ວ່າພຣະອົງຕ້ອງການໄຫວ້ວອນ. ຫລັງຈາກການຮັບໃຊ້ພຣະອົງຈະເຂົ້າເຝົ້າພຣະຜູ້ເປັນເຈົ້າ.

ໃນຂນະທີ່ພວກສາວົກພາຍເຮືອໄປທີ່ຈຸດໝາຍປາຍທາງຂອງເຂົາ ລົມໄດ້ພັດຕ້ານເຮືອຂອງພວກເຂົາ. ພຣະອົງຊົງຢືນເທິງບົກແຕ່ຜູ້ດຽວ ແລະ "ທອດພຣະເນດເຫັນພວກສາວົກກຳລັງແຈວເຮືອດ້ວຍຄວາມລຳບາກຫລາຍ ເພາະເຮືອຕ້ານທວນລົມຢູ່" (6:48). "ຄັນປະມານຍາມສີ່ກາງຄືນ" (6:48), ປະມານສາມຫາຫົກໂມງຂ້ອນແຈ້ງ, ພຣະອົງຈຶ່ງຊົງຍ່າງເທິງນ້ຳໄປຫາພວກສາວົກ. ພວກສາວົກຢູ່ໃນເຮືອເມື່ອຫລຽວເຫັນພຣະອົງຄິດວ່າແມ່ນຜີ. ພວກເຂົາຕົກໃຈຈຶ່ງພາກັນຮ້ອງຂຶ້ນ. ໃນທັນໃດນັ້ນພຣະອົງຈຶ່ງຊົງກ່າວແກ່ເຂົາວ່າ, "ຢ່ານ້ອຍໃຈເທາະ ແມ່ນເຮົາເອງ ຢ່າຊູ່ຢ້ານ" (6:50). ເມື່ອພຣະອົງຂຶ້ນໄປເທິງເຮືອລົມກໍສງົບລົງ.

ໃນມາຣະໂກ 4:35-41, ພວກສາວົກໄດ້ເຫັນພຣະເຢຊູຫ້າມລົມພະຍຸ. ພວກເຂົາກໍປລາດອັສຈັນໃຈ ແລະ ເທື່ອນີ້ກໍເຊັ່ນດຽວກັນ. ມາຣະໂກໄດ້ບັນທຶກໄວ້ວ່າ, "ເຣື່ອງເຂົ້າຈີ່ນັ້ນເຂົາຍັງບໍ່ໄດ້ເຂົ້າໃຈ ແຕ່ໃຈຂອງເຂົາຍັງແຂງກະດ້າງປຶກຕັນຢູ່" (6:52). ການຮັບຮູ້ຂອງພວກສາວົກຊ້າ. ປະສົບການທີ່ພວກເຂົາເຫັນນັ້ນເປັນທີ່ອັສຈັນໃຈແລະຕົກໃຈດ້ວຍ. ພວກເຂົາ

ຍັງບໍ່ທັນສາມາດຮັບຮູ້ຄວາມຈິງອັນໃຫມ່ໄດ້ເທື່ອເພາະເປັນສິ່ງທີ່ເຫນືອຄວາມເຂົ້າໃຈໄດ້.

ຖ້າຫາກພວກສາວົກຂອງພຣະອົງຍັງມີອຸປສັກທີ່ຈະຮັບຮູ້ພຣະອົງແລ້ວ ແຫ່ງເປັນການຍາກສຳລັບປະຊາຊົນຝູງໃຫຍ່ທີ່ຕິດຕາມພຣະອົງໄປ. ພວກເຂົາສາມາດຮັບຮູ້ໃນສິ່ງທີ່ພວກເຂົາເຫັນບໍ່? ຊາຍທີ່ມາຈາກນາຊາເຣັດນີ້ແມ່ນໃຜຄືມີສະຕິປັນຍາຄວາມຮູ້ເຫນືອທັມມະດາ ແລະມີພະລັງອຳນາດເຫນືອທັມມະຊາດ?

ພວກສາວົກຂອງພຣະອົງກໍເຫມືອນກັນກັບພວກເຮົາ, ພວກເຮົາຄຸ້ນເຄີຍກັບສິ່ງທີ່ຢູ່ຝ່າຍໂລກ. ເມື່ອໃຫ້ພວກເຮົາເບິ່ງດ້ວຍໃຈແລ້ວ ກໍເຫມືອນເບິ່ງຜ່ານຜ້າກັ້ງຈຶ່ງເຮັດໃຫ້ສິ່ງທີ່ເຫັນນັ້ນບໍ່ແຈ່ມແຈ້ງ. ເຖິງແມ່ນວ່າພວກເຂົາອາດຈະຜິດພາດໄປ, ແຕ່ຄວາມສົງສານຈາກພຣະອົງຈະຢູ່ກັບພວກເຂົາສເມີ. ດ້ວຍອຳນາດຂອງພຣະອົງ ພຣະອົງຈະເອົາຄວາມກັງວົນຂອງພວກເຂົາໄວ້ໃຕ້ພຣະບາດຂອງພຣະອົງ.

ບໍ່ວ່າໃຜກໍຕາມ ເມື່ອເຂົາມາຮູ້ຈັກພຣະເຢຊູແລ້ວເປັນຫຽັງເຂົາພາກັນຢ້ານພຣະອົງ? ພຣະອົງຊົງຢູ່ກັບພວກເຮົາໃນຄາວມີຄວາມທຸກໃຈ, ພຣະອົງຊົງຢູ່ນຳພວກເຮົາໃນຍາມຫວຸ້ນວາຍທໍ້ໃຈ, ພຣະອົງຈະທຳໃຫ້ທຸກສິ່ງທີ່ເປັນໄປບໍ່ໄດ້ໃຫ້ມາເປັນໄປໄດ້. ພຣະອົງຊົງຍ່າງດັ່ງຈະກາຍໄປ (6:48) ເມື່ອພວກເຮົາເຫັນພຣະອົງແລະຮ້ອງຂໍພຣະອົງໃຫ້ຊ່ອຍ. ໃນຖ້າມກາງມໍຣະສຸມຂອງພາຍຸ ພຣະອົງຈະກ່າວວ່າ, "ຢ່ານ້ອຍໃຈເທາະ ແມ່ນເຮົາເອງ ຢ່າຊູ່ຢ້ານ" (6:50).

**<u>ຄຳຖາມ</u>**

1. ທ່ານຈະສະແດງຄວາມສົງສານຕໍ່ຄົນອື່ນດ້ວຍໃຈບໍຣິສຸດແບບຄຣິສຕຽນຢ່າງໃດ? ຕໍ່ຄົນນອກຄອບຄົວ ແລະຍາດມິດຂອງທ່ານ? ຕໍ່ຜູ້ທີ່ເປັນສັດຕູຂອງທ່ານດ້ວຍ?

2. ຄຳເວົ້າສອງຄຳນີ້ໃຫ້ຄຳຕອບແຕກຕ່າງກັນຢ່າງໃດ, "ໃຫ້ເຂົາໄປຫາຊອກກິນເອງເສັຽ" ແລະ "ຈົ່ງລ້ຽງເຂົາສາ" ໃນລັກສະນະຂອງການເປັນສາວົກຂອງທ່ານ? ຄຣິສຕະຈັກຂອງທ່ານ? ມີອັນໃດແດ່ທີ່ຈະພິສູດໄດ້ວ່າພວກສາວົກມີຄວາມສົງສານຕໍ່ຝູງຊົນທີ່ມານັ້ນ?

3. ພຣະຜູ້ເປັນເຈົ້າຍັງສະແດງການອັສຈັນຢູ່ບໍ່ໃນສມັຍນີ້? ແບ່ງປັນໃຫ້ຫມູ່ໃນຫ້ອງຮຽນຟັງເບິ່ງວ່າທ່ານເຫັນການອັສຈັນເກີດຂຶ້ນໃນຫມໍ່ໆນີ້. ແບ່ງປັນໃຫ້ຫມູ່ຟັງປະສົບການທີ່ທ່ານໄດ້ຮັບກ່ຽວກັບການຊ່ອຍເຫລືອຄົນອື່ນໃນເມື່ອເຂົາມາຫາໂດຍທີ່ບໍ່ໄດ້ຕຽມພ້ອມ.

4. ພຣະຄຣິດໄດ້ສືບທົບການຮັບໃຊ້ສັງຄົມແລະຄຳສອນຂອງພຣະອົງໄປນຳກັນຢ່າງໃດ? ທ່ານມີຄວາມຄິດຢ່າງໃດກ່ຽວກັບການຈັດຕັ້ງກອງປະກາດຂ່າວປະເສີດ? ການຈັດຕັ້ງກອງປະກາດຂ່າວປະເສີດ ຄຣິສຕຽນຈະຕ້ອງສ້າງໂຮງພະຍາບານ, ໂຮງລ້ຽງເດັກກຳພ້າ, ແລະສະຖາບັນຕ່າງໆ ແລະກະສິກັມປູກຝັງ?

5. ຄຣິສຕະຈັກຂອງທ່ານເຮັດຫຍັງແດ່ທີ່ມີການຊ່ອຍເຫລືອຄົນອື່ນ? ຄຣິສຕະຈັກຂອງທ່ານໃຫ້ໂອກາດເພື່ອມີພາກສ່ວນພົວພັນກັບການຮັບໃຊ້ບໍ່? ຈຳເປັນບໍ່ທີ່ຈະອາສັຍແຕ່ຄຣິສຕະຈັກປະກາດໃຫ້ທ່ານຊາບເຖິງຄວາມຕ້ອງການ?

6. ທ່ານໄດ້ໃຫ້ເງິນຊ່ອຍເຫລືອຄົນອື່ນທີ່ມີຄວາມຕ້ອງການໃນເດືອນທີ່ຜ່ານມານີ້ຫລາຍປານໃດ?

# ບົດຮຽນທີ 7
# ພຣະເຢຊູຂະຫຍາຍວົງການຮັບໃຊ້

---

**ຂໍ້ພຣະຄັມພີສໍາລັບບົດຮຽນ:** ມາຣະໂກ 7:1-8, 14-30
**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ມາຣະໂກ 6:53-8:10
**ຈຸດສໍາຄັນຂອງບົດຮຽນນີ້:** ພຣະເຢຊູຊົງຍົກເລີກເຣື່ອງຮີດຄອງ, ເຊື້ອຊາດ, ສັງຄົມ, ແລະວັທນະທັມເພື່ອທຸກຄົນຈະໄດ້ມາສູ່ຄວາມລອດພົ້ນ.
**ຄໍາຖາມເພື່ອການສໍາຫລວດ:** ຖ້າມີສິ່ງທີ່ກີດກັ້ນບໍ່ໃຫ້ຄົນໄດ້ຮັບຄວາມລອດພົ້ນພວກເຮົາຈະເຮັດຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ຈະຊ່ອຍໃຫ້ພວກເຮົາເຫັນວ່າມີອັນໃດແດ່ທີ່ກີດກັ້ນບໍ່ໃຫ້ຄົນໄດ້ຮັບຄວາມລອດພົ້ນຈາກພຣະເຈົ້າ.

## ບົດຮຽນ

### ຄໍານໍາ

ພຣະເຢຊູຈະບໍ່ໃຫ້ສິ່ງໃດມາກີດກັ້ນພຣະອົງໄດ້. ພຣະອົງມີຄວາມເຊື່ອຟັງ, ມີຄວາມກ້າຫານ, ແລະຕັດສິນໃຈຢ່າງເດັດຂາດຈະຍົກເລີກຄວາມກີດກັ້ນເນື່ອງຈາກຮີດຄອງ, ເຊື້ອຊາດ, ສັງຄົມ, ແລະວັທນະທັມ ເພື່ອທຸກຄົນຈະໄດ້ມາສູ່ຄວາມລອດພົ້ນ.

### ການກີດກັ້ນຈາກຮີດຄອງທີ່ໄຮ້ປໂຍດ (7:1-5)

ພວກຟາຣີຊາຍແລະພວກນັກທັມຕໍ່ຕ້ານພຣະເຢຊູ. ພວກເຂົາໄດ້ເດີນທາງມາຈາກກຸງເຢຣູຊາເລັມເພື່ອສັງເກດການແລະຈັບຜິດໃນຫລັກຄໍາສອນຂອງພຣະອົງ. ພວກເຂົາກ່າວຫາວ່າພວກສາວົກຂອງພຣະອົງບໍ່ຕິດຕາມຄໍາສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານ. ເປັນຫຍັງພຣະອົງຈຶ່ງບໍ່ປະຕິບັດຕາມ "ຄໍາສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານ" (7:3)? ຄວາມແຕກຕ່າງລະວ່າງຄໍາສອນຂອງພຣະອົງແລະຄໍາສອນຂອງເຖົ້າເກົ່າບູຮານນັ້ນກໍເຫັນຢ່າງແຈ່ມແຈ້ງ. ພຣະອົງອ້າງເຫດຜົນວ່າຫລັກຄໍາສອນຂອງເຖົ້າເກົ່າບູຮານນັ້ນເປັນກົດລະບຽບຫລືວ່າກົດບັນຍັດທີ່ພວກເຖົ້າເກົ່າບູຮານໄດ້ຕັ້ງຂຶ້ນມາເອງ.

ເມື່ອກ່າວເຖິງພຣະບັດຍັດຂອງຊາວຢິວນັ້ນແມ່ນພຣະທັມຫ້າເຫລັ້ມທໍາອິດຂອງພຣະສັນຍາເດີມ(ປະຖົມມະການ, ອົບພະຍົບ, ລະບຽບຊາວເລວີ, ຈົດເຊັນບັນຊີ, ແລະພຣະບັນຍັດສອງ). ຫລັງຈາກນັ້ນ ກໍມີຄໍາສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານຊຶ່ງກາຍມາເປັນພິທີຕາມຮີດຄອງ. ຫລັງຈາກສັດຕະວັດທີສາມກໍໄດ້ຂຽນຂຶ້ນມາເປັນລາຍລັກອັກສອນຢ່າງຄັກແນ່ເພື່ອໃຫ້ຊາວຢິວປະຕິດບັດຕາມທີ່ເອີ້ນກັນວ່າ ມິສນາ (Mishnah). ຫລັກຄໍາສອນດັ່ງກ່າວໄດ້ສອນໃຫ້ມີພິທີລ້າງມື, ລ້າງຈອກ, ໂຖໃສ່ນໍ້າ, ເຕົ້າກາ, ແລະເຄື່ອງໃຊ້ອື່ນໆ (7:4).

ຜູ້ນໍາຊາວຢິວສັງເກດເຫັນວ່າສາວົກຂອງພຣະອົງບໍ່ໄດ້ລ້າງມືກ່ອນກິນເຂົ້າຈຶ່ງຖືວ່າເປັນມົນທິນ (ບໍ່ສະອາດ) ຕາມພິທີທາງສາສນາ (7:2). ຄໍາວ່າ ເປັນມົນທິນ ຫລືວ່າບໍ່ສະອາດ ບໍ່ໄດ້ໝາຍເຖິງທາງດ້ານອະນາມັຍ. ແຕ່ມີຄວາມໝາຍວ່າ ເປັນມົນທິນທາງດ້ານສາສນາ. ມືຂອງພວກສາວົກຖືວ່າເປັນມົນທິນໃນສາຍພຣະເນດຂອງພຣະເຈົ້າ.

ຫລັກຄຳສອນພວກເຖົ້າເກົ່າບູຮານໄດ້ກາຍມາເປັນຮີດຄອງແລະກາຍມາເປັນກົດບັນຍັດຖັດຈາກພຣະບັນຍັດແລ້ວ. ພຣະເຢຊູຈຶ່ງປະຕິເສດຫລັກຄຳສອນ ຫລືວ່າຮີດຄອງດັ່ງກ່າວ ເພາະວ່າຮີດຄອງບໍ່ໄດ້ມາຈາກອົງພຣະຜູ້ເປັນເຈົ້າ. ແຕ່ມາຈາກມະນຸດນັ້ນເອງ. ພວກຟາຣີຊາຍແລະພວກນັກທັມເຫັນວ່າຖືຕາມຮີດຄອງນັ້ນເປັນຫລັກຂອງສາສນາອັນແທ້ຈິງ. ຖ້າຫາກວ່າບໍ່ປະຕິບັດຕາມພິທີຂອງຮີດຄອງຖືວ່າເປັນການເຮັດບາບ. ພວກເຂົາຖືວ່າການປະຕິບັດຕາມຮີດຄອງທີ່ສະແດງອອກພາຍນອກໃຫ້ຄົນເຫັນຈຶ່ງຖືວ່າສັກສິດແລະເປັນຜູ້ມີສິນທັມ.

ພວກເຮົາອາດຈະເວົ້າວ່າພວກເຂົາບໍ່ມີເຫດຜົນ. ແຕ່ວ່າພວກເຮົາ ແບັບຕິສອາດຈະປ່ອຍປະໃຫ້ຮີດຄອງປະເພນີເຂົ້າໄປແຊກຊຶມຢູ່ໃນຄຣິສຕະຈັກກໍໄດ້.

**<u>ການກົດກັ້ນຈາກຄົນຫນ້າຊື່ໃຈຄົດ</u>** (7:6-8)

ພຣະເຢຊູໄດ້ໃຊ້ຄຳເວົ້າຂອງຜູ້ປະກາດພຣະທັມທີ່ພວກຟາຣີຊາຍນັບຖື ຄືເອຊາຢາອອກມາໃຫ້ພວກເຂົາຟັງ. ເພື່ອຈະຕອບຄຳຖາມທີ່ສາຍເຫດພວກສາວົກຂອງພຣະອົງໄດ້ປະຕິເສດຮີດຄອງພິທີລ້າງມື. ພຣະອົງໄດ້ກ່າວຕໍ່ພວກເຂົາດ້ວຍຄວາມກ້າຫານວ່າ, "ເອຊາຢາໄດ້ທຳນວາຍຄັກແນ່ເຖິງພວກເຈົ້າຜູ້ເປັນຄົນຫນ້າຊື່ໃຈຄົດ" (7:6). ພຣະອົງໃຊ້ພຣະທັມເອຊາຢາ 29:13. ພຣະຜູ້ເປັນເຈົ້າໄດ້ກ່າວໂທດຊາວອິສຣາເອັນວ່າ, "ພົລເມືອງເຫລົ່ານີ້ໃຫ້ກຽດເຮົາແຕ່ປາກ, ແຕ່ສ່ວນໃຈຂອງພວກເຂົາຮ່າງໄກຈາກເຮົາ" (7:6).

ພຣະເຢຊູບໍ່ຮັບຮູ້ກົດບັນຍັດຫລືເອີ້ນກັນວ່າຮີດຄອງທີ່ພວກຟາຣີຊາຍປະຕິດບັດ "ດ້ວຍເອົາບົດບັນຍັດຂອງມະນຸດມາຕູ່ວ່າ ເປັນພຣະໂອວາດ" (7:7). "ຮີດສິບສອງຄອງສິບສີ່" ພວກເຮົາເຄີຍໄດ້ຍິນກັນມາ. ມະນຸດໄດ້ "ປະລະພຣະບັນຍັດຂອງພຣະເຈົ້າ ແລະກັບໄປຖືຕາມຄຳສອນຕົກທອດມາຈາກມະນຸດ" (7:8). ຜູ້ກ່າວຫາພຣະອົງຈຶ່ງບໍ່ມີຄຳເວົ້າໂຕ້ຕອບພຣະອົງໄດ້.

ພຣະອົງບໍ່ໄດ້ຢຸດຢູ່ເທົ່ານັ້ນ ແຕ່ພຣະອົງເອົາພວກເຂົາຫນັກເຂົ້າໄປກວ່ານັ້ນອີກ. ເພື່ອເຈາະຈົ້ມໃຫ້ເຫັນວ່າພວກເຂົາຫນ້າຊື່ໃຈຄົດຫລາຍປານໃດ. ເຊັ່ນຕົວຢ່າງໃນບົດທີ 7:9 ພຣະອົງຊີ້ໃຫ້ພວກເຂົາເຫັນຢ່າງຄັກ "ເກີນວ່າດີແທ້ຫນໍ ທີ່ເຈົ້າທັງຫລາຍໄດ້ລະຖິ້ມພຣະບັນຍັດຂອງພຣະເຈົ້າ ໄປຖືຕາມຄຳສອນທີ່ສືບຕໍ່ມາຈາກເຖົ້າເກົ່າບູຮານ". ໂມເຊໄດ້ຮັບພຣະບັນຍັດມາຈາກພຣະເຈົ້າ ແລະໄດ້ສັ່ງໄວ້ວ່າ, "ຈົ່ງນັບຖືບິດາມານດາຂອງເຈົ້າ ແລະ ຜູ້ໃດຫມິ່ນປມາດບິດາມານດາຈະຕ້ອງມີໂທດເຖິງຕາຍ" (7:10). ແຕ່ພວກເຂົາກັບມາສອນດັ່ງນີ້ ຖ້າຜູ້ໃດຈະເວົ້າກັບບິດາມານດາວ່າ, "ສິ່ງຂອງຂ້ອຍທີ່ອາດຈະຊ່ອຍເຫລືອເຈົ້າໄດ້ ສິ່ງນັ້ນເປັນໂກຣະບານ" (ຄືເປັນຂອງຖວາຍໄວ້ແລ້ວ) ຈະເອົາໄປໃຊ້ໃນທາງອື່ນບໍ່ໄດ້ (7:11). ລັກຄຳສອນຂອງເຖົ້າເກົ່າບູຮານໄດ້ອະນຸຍາດໃຫ້ຜູ້ເປັນລູກປະລະການຊ່ອຍເຫລືອພໍ່ແມ່ໂດຍປະກາດວ່າສິ່ງຂອງຄວນທີ່ຈະເອົາໄປຊ່ອຍເຫລືອພໍ່ແມ່ວ່າເປັນສິ່ງຂອງທີ່ໄປຖວາຍໄວ້ໃຫ້ພຣະເຈົ້າ. ເປັນຫລັກຄຳສອນຫລອກລວງຈາກມານທີ່ປົກປິດຕາມະນຸດ ແຕ່ວ່າພຣະຄຣິດມີພຣະສະຕິປັນຍາເປີດໃຫ້ຮູ້ແຈ້ງເຫັນຈິງ.

ພຣະອົງໄດ້ເປີດເຜີຍຄວາມບາບຂອງຜູ້ນຳຂອງສາສນາ, ໃຫ້ພວກປະຊາຊົນເຫັນຄວາມຫນ້າຊື່ໃຈຄົດຂອງພວກຟາຣີຊາຍແລະພວກນັກທັມ. ເພື່ອຝູງຊົນຟັງພຣະອົງແລ້ວຈະເຂົ້າໃຈໃນບົດຮຽນທີ່ພວກເຂົາໄດ້ຮຽນຈາກພຣະອົງ. ຄວາມບາບປະເພດຫນ້າຊື່ໃຈຄົດຍັງຕິດຢູ່ກັບພວກເຮົາໃນຮູບແບບຕ່າງໆ. ຄວາມດີເຮັດໃຫ້ພວກເຮົາເປັນປະຊາຊົນດີ, ຜົວທີ່ດີ, ແລະພໍ່ທີ່ດີ. ການຮັບໃຊ້ພຣະຜູ້ເປັນເຈົ້າທີ່ເຫັນກັນ ເຊັ່ນການໄປຄຣິສຕະຈັກ, ການສຶກສາພຣະຄັມພີ, ການຮັບໃຊ້, ການຖວາຍເງິນ, ການສອນພຣະຄັມພີ, ແລະການເທສນາ. ການກະທຳດັ່ງກ່າວມານີ້ ຈະເປັນພຽງພິທີທາງສາສນາເປົ່າໆເທົ່ານັ້ນ ຖ້າຈິດໃຈຂອງພວກເຮົາຍັງເຕັມໄປດ້ວຍຄວາມກຽດຊັງຄົນອື່ນແລະມີການບໍ່ເຊື່ອຟັງຢ່າງລີ້ລັບ. ບາງ

ຄັ້ງບາງຄາວ ຜູ້ໃດຜູ້ນຶ່ງເປັນຄົນໜ້າຊື່ໃຈຄົດ. ການເປັນຄົນໜ້າຊື່ໃຈຄົດນັ້ນເປັນໄດ້ງ່າຍ ຕ່າງກໍມີເຫດຜົນຂອງການເປັນມາ ແຕ່ເຫດຜົນນັ້ນກໍເປັນພຽງຜູ້ຮັບໃຊ້ໃນທາງສາສນາເປົ່າໆເທົ່ານັ້ນ.

## <u>ສຳຄັນຢູ່ທີ່ໃຈ</u> (7:14-23)

ສາສນາຈານ ບາຄເລ 70ຣສສຣັທ໊ພແສ໌8 ໄດ້ປະກາດວ່າ ພຣະຄຳຕ່ອນນີ້ເປັນພຣະຄຳພິກປັ້ນປະວັດສາດໃນພຣະສັນຍາໃໝ່. ພຣະເຢຊູໄດ້ທຳລາຍແລະຝັງກົດບັນຍັດສຳຄັນທີ່ສຸດໃນຊີວິດຂອງຊາວຢິວ. ຊາວຢິວທີ່ເຄັ່ງຄັດທາງດ້ານສາສນາ ຈ໋ຳພະັ້ນກນມປ໋ຳໂ8ປະຈຸບັນນີ້ຍັງປະຕິບັດກັນຢູ່ກ່ຽວກັບເຣື່ອງການກິນຊີ້ນສັດ. ຊີ້ນສັດບາງຈຳພວກ ພວກເຂົາຈະບໍ່ກິນເພາະວ່າກົດບັນຍັດ "ລະບຽບພວກເລວີ ບົດທີ11" ສັ່ງຫ້າມບໍ່ໃຫ້ກິນສັດບາງຈຳພວກທີ່ບໍ່ສະອາດ. ໃນສມັຍລະຫວ່າງພຣະສັນຍາເກົ່າແລະພຣະສັນຍາໃໝ່ ກະສັດຊີເຣັຽ ແອນຕີໂອກັດ ເອພິເຟີນີສ ຈ໊ະຣມແ໊ຫ້າຍຣຢ໊້າຫ8 ເຄັ່ນຂ້າຊາວຢິວ ບັງຄັບໃຫ້ພວກເຂົາກິນຊີ້ນໝູ. ພວກເຂົາຍອມຕາຍແທນທີ່ຈະກິນຊີ້ນໝູນັ້ນ. ໃນຄຳອຸປມາເຣື່ອງລູກທີ່ເສັຽ (ລູກາ15:11-32) ລູກຜູ້ນັ້ນໄດ້ກະທຳໃນສິ່ງທີ່ຕ່ຳຊ້າຄືໄປກິນຝັກຖົ່ວທີ່ໝູກິນ. ຄຳສອນຂອງພຣະເຢຊູໃນພຣະທັມມາຣະໂກ 7:14-23 ໄດ້ບອກເຫດການລ່ວງໜ້າເຖິງນິມິດທີ່ອັຄສາວົກເປໂຕຈະໄດ້ເຫັນຢູ່ຫລັງຄາຕຶກໃນຂນະທີ່ລາວລືມຄິງໄປ. ມີພຣະສຸຣະສຽງມາວ່າ, "ເປໂຕເອີຍ, ຈົ່ງລຸກຂຶ້ນຂ້າກິນເສັຽ". ຝ່າຍເປໂຕຈຶ່ງທູນວ່າ, "ບໍ່ໄດ້ແທ້ພຣະອົງເຈົ້າເອີຍ ສິ່ງທີ່ເປັນຂອງຕ້ອງຫ້າມ ຫລືສິ່ງທີ່ບໍ່ທັນຊຳຣະໃຫ້ສະອາດ ຂ້າພະອົງບໍ່ໄດ້ຮັບປະທານຈັກເທື່ອ" (ກິຈການ 10:13-14). ຝູງຊົນຄົງຈະຕົກສະເງີ້ ເມື່ອພຣະອົງກ່າວວ່າ, "ບໍ່ມີສິ່ງໃດຢູ່ພາຍນອກ ເມື່ອເຂົ້າພາຍໃນມະນຸດຈະເຮັດໃຫ້ມະນຸດຊົ່ວມົວໝອງໄດ້" (7:15). ພຣະອົງເນັ້ນໃສ່ປະສາດສ່ວນສຳຄັນຂອງກົດບັນຍັດຂອງພວກເຂົາອີກ.

ພຣະເຢຊູສເນີຫລັກຖານຂອງພຣະອົງເໝືອນກັບທະນາຍທີ່ມີຄວາມສລາດ. ພຣະອົງໄດ້ເປີດເຜີຍພິທີລ້າງມືເປັນພິທີທີ່ບໍ່ມີແກ່ນສານ, ພຣະອົງໄດ້ກ່າວໂທດໃສ່ພວກເຂົາໃນກົດບັນຍັດກ່ຽວກັບ<u>ໂກຣະບານ</u>ຊຶ່ງເປັນພິທີຂອງມະນຸດໄດ້ປັ້ນແຕ່ງຂຶ້ນມາ. ພິທີນີ້ໄດ້ຕໍ່ຕ້ານກັບພຣະຄຳຂອງພຣະຜູ້ເປັນເຈົ້າ ແລະ ພຣະອົງປະກາດວ່າພິທີຂອງມະນຸດແຕ່ງຂຶ້ນມານັ້ນໃຊ້ການບໍ່ໄດ້ ເພາະວ່າ "ສາຣະພັດການຊົ່ວເຫລົ່ານີ້ເກີດມາຈາກພາຍໃນ ແລະເຮັດໃຫ້ມະນຸດຊົ່ວມົວໝອງ" (7:23). ພວກສາວົກບໍ່ເຂົ້າໃຈຄຳສອນຂອງພຣະອົງ. ພວກເຂົາຄິດເຖິງແຕ່ອາຫານທີ່ມີມົນທິນ ຫລືບໍ່ສະອາດ. ພວກເຂົາເບິ່ງແຕ່ຂອງພາຍນອກ ແຕ່ພວກເຂົາບໍ່ສາມາດສັງເກດຢັ່ງຮູ້ໄປເຖິງພາຍໃນໃຈ. ແຕ່ວ່າພຣະອົງນັ້ນ ເນັ້ນໃສ່ເຂົ້າໄປໃນຈິດໃຈຂອງມະນຸດຊຶ່ງເປັນບໍ່ເກີດຂອງຄວາມບາບ. ພຣະອົງອະທິບາຍໃຫ້ພວກສາວົກຟັງເປັນຄັ້ງທີສອງໃນບົດທີ 7:17-19, ແລະໄດ້ຍົກຕົວຢ່າງໃຫ້ພວກເຂົາເຫັນອີກໃນບົດທີ 7:20-23. ພຣະອົງກ່າວວ່າ, "ເພາະວ່າຈາກພາຍໃນຄືຈາກຈິດໃຈມະນຸດມີຄວາມຄິດຊົ່ວບໍ່ດີ, ການຜິດຊາຍຍິງ, ການລັກຊັບ, ການຂ້າຄົນ, ການຫລິ້ນຊູ້ຈາກຜົວເມັຽ, ການໂລບ, ການອະທັມ, ການລໍ້ລວງ, ຣາຄະຕັນຫາ, ການອິດສາ, ການນິນທາ, ຄວາມຈອງຫອງ, ຄວາມໂງ່ທີ່ປ່ອຍຕົວໄປຕາມລຳພັງໃຈ" (7:21-22). ຄວາມສຳພັນອັນບໍຣິສຸດກັບພຣະເຈົ້ານັ້ນບໍ່ແມ່ນການເຮັດໃຫ້ຖືກຕ້ອງຕາມພິທີທາງສາສນາຫລືຮີດຄອງ, ແຕ່ແມ່ນການຖິ້ມໃຈເກົ່າ ແລະຮັບເອົາໃຈໃໝ່ຫລາຍກວ່າ. ການກັບໃຈມາຫາພຣະເຈົ້າໄດ້ນຳການປ່ຽນແປງພາຍໃນດ້ວຍຈິດໃຈທີ່ຂາວສະອາດບໍຣິສຸດຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ.

ຄຳສອນທີ່ພຣະອົງໄດ້ສອນພວກເຂົານັ້ນເປັນຄຳສອນໃໝ່ທີ່ພວກເຂົາຈະໄດ້ເອົາໄປປະຕິບັດ. ພວກເຂົາຍັງຮັບເອົາໄປປະຕິບັດບໍ່ໄດ້ທັນທີ. ເປັນຄຳສອນທີ່ຈະນຳໄປໃຫ້ເຂົ້າໃຈເຖິງຣາຊອານາຈັກຂອງພຣະອົງ. ພຣະເຢຊູໄດ້ມາໂຜດໃຫ້ມະນຸດໃຫ້ພົ້ນຈາກບາບແລະການປະຕິບັດຕາມພິທີຮີດຄອງທາງສາສນາທີ່ບໍ່ໄດ້ມາຈາກພຣະເຈົ້າ. ພຣະອົງກໍຮັບຮູ້ວ່າຈະເອົາຫລັກຄຳສອນໃໝ່ມາສອນຄົນເກົ່ານັ້ນກໍຍາກຫລາຍ.

## <u>ການກີດກັ້ນຈາກການຖືໂຕ</u> (7:24-30)

ຫລັງຈາກພຣະເຢຊູໄດ້ປະເຊີນກັບຊາວຢິວທີ່ປະຕິບັດຕາມຮີດຄອງປະເພນີ ແລະພວກຟາຣີຊາຍແລະນັກທັມຫນ້າຊື່ໃຈຄົດແລ້ວ ພຣະອົງໄດ້ສະເດັດໄປຍັງເຂດແດນເມືອງຕີໂຣ ມີຄວາມຈັ້ງໃຈຈະບໍ່ໃຫ້ຜູ້ໃດຮູ້ເພື່ອຈະໄດ້ພັກຜ່ອນ (7:24). ມີຍິງຄົນນຶ່ງຊຶ່ງເປັນຄົນຕ່າງຊາດໄດ້ມາຫາພຣະອົງຈຶ່ງເປັນທາງນໍາຂ່າວປະເສີດ ແລະວົງການຮັບໃຊ້ຂອງພຣະອົງໄປສູ່ຄົນຕ່າງຊາດ. ເຫດການນີ້ຈະເປັນບັງເອີນ ຫລືຕັ້ງໃຈກໍຕາມ ພຣະອົງຊົງໃຊ້ໂອກາດຢ່າງນີ້ສອນສາວົກຂອງພຣະອົງໄປໃນຕົວສເມີ. ມາຣະໂກໄດ້ບັນທຶກເຫດການນີ້ໄວ້ກໍເພື່ອສະແດງໃຫ້ຮູ້ວ່າພຣະອົງຊົງມີຄວາມເມດຕາຕໍ່ທຸກໆຄົນບໍ່ວ່າຈະເປັນຄົນຊົນຊາດໃດເຊື້ອຊາດໃດກໍຕາມ.

ຍິງຄົນນີ້ເປັນຊາວກຣີກ ເກີດໃນແຂວງຊີເຣັຽຟອຍນີເກ ຊຶ່ງມີບັນພະບຸຣຸດເປັນຊາວການາອານທີ່ຢູ່ໃນແຜ່ນດິນອິສຣາເອັນມາກ່ອນ. ສ່ວນໃຫຍ່ແລ້ວ ຄົນກຸ່ມນີ້ຖືສາສນາກຣີກ ແລະເວົ້າພາສາຊີເຣັຽ. ຄົນຢິວຈະລັງກຽດຄົນຕ່າງຊາດເພາະວ່າຄົນຢິວຖືວ່າຊາດຂອງຕົນນັ້ນດີກວ່າຊາດອື່ນ. ເຖິງຢ່າງໃດກໍຕາມ ຍິງຄົນນີ້ກໍໄດ້ຮັບຄວາມເມດຕາຈາກພຣະຄຣິດເຫມືອນກັບຄົນຊົນຊາດຢິວຄືກັນ. ພຣະເຢຊູຈະປະທານພະລັງອໍານາດຂອງພຣະອົງໃຫ້ທຸກໆຄົນທີ່ຕ້ອງການບໍ່ວ່າຄົນນັ້ນຈະເປັນຄົນຊົນຊາດໃດກໍຕາມ.

ເມື່ອຍິງຄົນນັ້ນຮູ້ວ່າພຣະອົງສະເດັດມາ ນາງໄດ້ຜ່ານຜ່າຄວາມກີດກັ້ນລະຫວ່າງເຊື້ອຊາດໄປຫາພຣະອົງທັນທີ. "ນາງກໍມາຂາບລົງທີ່ພຣະບາດຂອງພຣະອົງ" (7:25). "ນາງໄດ້ທູນອ້ອນວອນຂໍໃຫ້ພຣະອົງຂັບໄລ່ຜີອອກຈາກລູກສາວຂອງຕົນ" (7:26). ນາງເປັນແມ່ທີ່ມີຄວາມທຸກໂສກເພາະລູກສາວຂອງນາງໄດ້ຮັບຄວາມທໍຣະມານ. ເຫມືອນດັ່ງຢາຣີໂອ ລາວບໍ່ໄດ້ເປັນຫ່ວງຫນ້າທີ່ຕໍາແຫນ່ງຂອງລາວຢູ່ໃນໂຮງທັມມະເທສນາ ລາວໄດ້ມາຫາພຣະອົງເພື່ອລູກສາວຂອງລາວຈະໄດ້ເປັນຄືນມາ. ຍິງຄົນນີ້ກໍເຊັ່ນດຽວກັນ ນາງຈະບໍ່ໃຫ້ການແບ່ງແຍກລະຫວ່າງເຊື້ອຊາດມາເປັນສິ່ງທີ່ກີດກັ້ນ. ນາງໄດ້ມາຮ້ອງຂໍພຣະອົງປິ່ນປົວຮັກສາລູກສາວຂອງລາວໃຫ້ດີຈາກຄວາມເຈັບປ່ວຍ.

ຄໍາຕອບຂອງພຣະອົງໃນບົດທີ 7:27 ເປັນຄໍາຕອບທີ່ແປກປລາດແລະສັບສົນສໍາລັບພວກເຮົາ. ແຕ່ນາງມີຄວາມເຂົ້າໃຈພຣະອົງ ເພາະວ່ານາງຢູ່ໃນສະພາບລະຫວ່າງຄວາມແຕກຕ່າງຂອງຊົນຊາດທັງສອງ. ຄໍາຕອບຂອງພຣະຄຣິດນັ້ນເປັນຄໍາຕອບທີ່ຫນ້າສົນໃຈ. ເປັນຫຍັງພຣະອົງຈຶ່ງຕອບນາງຢ່າງນັ້ນ? ພຣະອົງໃຊ້ຄໍາເວົ້າແຮງຢ່າງນີ້ ເພາະວ່ານາງມາລົບກວນພຣະອົງບໍ? ຫລືພຣະອົງທົດສອບຄວາມເຊື່ອຂອງນາງບໍ? ພຣະອົງກ່າວຕໍ່ນາງວ່າ, "ໃຫ້ລູກກິນອີ່ມເສັຽກ່ອນເພາະວ່າບໍ່ສົມຄວນຈະເອົາອາຫານຂອງລູກໂຍນໃຫ້ຫມານ້ອຍກິນ" (7:27). ພຣະອົງໃຊ້ຄໍາວ່າຫມານ້ອຍດີກວ່າທີ່ຈະວ່າຫມາໃຫຍ່. ເຖິງຢ່າງໃດກໍຕາມ ນາງຕອບພຣະອົງດ້ວຍຄໍາເວົ້າສລາດຫລັກແຫລມວ່າ, "ຈິງຢູ່ຂ້ານ້ອຍ ແຕ່ເຖິງແມ່ນຫມານ້ອຍທີ່ຢູ່ໃຕ້ໂຕະ ກໍເຄີຍກິນເສດອາຫານຂອງເດັກນ້ອຍນັ້ນ" (7:28).

ໃນພຣະທັມຕອນນີ້ ເປັນໄປໄດ້ບໍ່ວ່າກ່ອນອື່ນຂ່າວປະເສີດໄດ້ນໍາໄປສູ່ຊາວອິສຣາເອນ, ແຕ່ດ້ວຍຖ້ອຍຄໍາທີ່ສລາດຫລັກແຫລມຂອງຍິງຄົນນີ້ຂ່າວປະເສີດຈຶ່ງໄດ້ນໍາໄປສູ່ຄົນຕ່າງຊາດ? ຍິງຄົນນີ້ໃຊ້ຄໍາວ່າຫມານ້ອຍປຽບເຫມືອນກັບລູກສາວຂອງລາວແລະຄົນຕ່າງຊາດດ້ວຍ ແລະອາຫານປຽບເຫມືອນກັນກັບຂ່າວປະເສີດບໍ? ພຣະເຢຊູໄດ້ສະແດງອອກໃຫ້ເຫັນວ່າຊາວຢິວມີອຸປນິສັຍຕໍ່ຄົນຕ່າງຊາດຢ່າງນີ້ບໍ ເພື່ອເປັນບົດຮຽນຄະຕິເຕືອນໃຈໃຫ້ສາວົກຂອງພຣະອົງ? ບາງທີພຣະອົງຢາກຈະສະແດງອອກໃຫ້ເຫັນຄວາມຮູ້ສຶກວ່າບາງຄົນນັ້ນເຫັນວ່າຕົນດີກວ່າຄົນອື່ນເພື່ອສາວົກຂອງພຣະອົງຈະໄດ້ມີໃຈອ່ອນນ້ອມຕໍ່ຄວາມຮ້ອງຂໍຂອງຍິງຄົນນັ້ນ?

ເປັນຄໍາຖາມທີ່ໄດ້ຕັ້ງຂຶ້ນມາຫລາຍກວ່າທີ່ຈະສາມາດຕອບໄດ້. ເຖິງຢ່າງໃດກໍຕາມບົດຮຽນອັນສໍາຄັນນັ້ນກໍຄືວ່າ ບໍ່ວ່າຈະເອົາເຊື້ອຊາດໃດ, ຊົນຊາດ,ຮີດຄອງປະເພນີຫລືພາສາສາມາກີດກັ້ນການທີ່ຈະນໍາຂ່າວປະເສີດໄປຮອດຜູ້ນຶ່ງຜູ້ໃດໃນໂລກນີ້. ຍິງຄົນນີ້ລາວສ່ຽງຕໍ່ຄໍາວິພາກວິຈານຂອງຄົນອື່ນໄດ້ຍອມຮັບວ່າພຣະເຢຊູຊົງເປັນພຣະເຈົ້າຂອງລາວ. ຄວາມ

ໄວ້ວາງໃຈເຊື່ອມີລາວມີໃນພຣະອົງ ນາງຈຶ່ງໄດ້ຮັບຄຳຕອບຈາກການທູນຂໍຂອງນາງ. "ຝ່າຍຍິງນັ້ນໄດ້ກັບເມືອເຮືອນຂອງຕົນ ກໍເຫັນລູກນອນຢູ່ເທິງຕຽງແລະຜີຮ້າຍນັ້ນໄດ້ອອກແລ້ວ" (7:30).

**<u>ຄຳຖາມ</u>**

1. ເວລາໃດຮີດຄອງຈຶ່ງກາຍເປັນພຽງແຕ່ພິທີທີ່ບໍ່ມີຄວາມໝາຍ? ຄວາມດີຂອງຮີດຄອງປະເພນີມີດີບໍ?

2. ມີຮີດຄອງປະເພນີອັນໃດແດ່ຢູ່ໃນຄຣິສຕະຈັກຂອງທ່ານໄດ້ສ້າງຄວາມກີດກັ້ນໃຫ້ກັບການປະກາດຂ່າວປະເສີດ?

3. ມີກົດໝາຍຂໍ້ບັງຄັບອັນໃດແດ່ທີ່ບໍ່ໄດ້ຮັບອຳນາດ? ມີຂໍ້ໃດແດ່ຢູ່ໃນຄຣິສຕະຈັກຂອງທ່ານ?

4. ໃຫ້ອະທິບາຍແລະຍົກຕົວຢ່າງຄຳວ່າ ໜ້າຊື່ໃຈຄົດທີ່ທ່ານໄດ້ເຫັນໃນຄຣິສຕະຈັກຂອງທ່ານ, ໃນຊີວິດຂອງທ່ານ. ໜ້າຊື່ໃຈຄົດເປັນອຸປສັກໃນການນຳຄົນຫລົງເສັຽມາເຊື່ອໃນພຣະເຈົ້າບໍ່? ທ່ານຈະເຮັດຢ່າງໃດ?

5. ຈົ່ງອະທິບາຍເຖິງຄວາມສຳຄັນຂອງຄວາມເຊື່ອທີ່ມີການພົວພັນກັບຮີດຄອງປະເພນີທີ່ບໍ່ໄດ້ຮັບອຳນາດຈາກພຣະເຈົ້າ, ເຣື່ອງໜ້າຊື່ໃຈຄົດ, ແລະການເຫັນວ່າຕົນດີກວ່າຄົນອື່ນ.

6. ເມື່ອຄົນທີ່ບໍ່ເຊື່ອພຣະເຈົ້າໄດ້ຟັງຂ່າວປະເສີດແລ້ວ ລາວຕອບວ່າ, "ຂ້ອຍເປັນຄົນດີຢູ່ແລ້ວ." ຄຳເວົ້າຢ່າງນີ້ເປັນຄົນໜ້າຊື່ໃຈຄົດໄດ້ຢ່າງໃດ? ທ່ານຈະທຳຢ່າງໃດຈຶ່ງຈະເອົາຊະນະການກີດກັ້ນເຊັ່ນນີ້ໄດ້?

# <u>ບົດຮຽນທີ 8</u>
# <u>ພຣະເຢຊູຮຽກຮ້ອງໃຫ້ຕັດສິນໃຈ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນ:</u>** ມາຣະໂກ 8:27-38
**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ມາຣະໂກ 8:11-38
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຢຊູຊົງຮຽກຮ້ອງໃຫ້ທຸກຄົນມອບກາຍຖວາຍໃຈໃຫ້ກັບພຣະອົງ.
**<u>ຄຳຖາມເພື່ອການສຳຫລວດ:</u>** ພຣະເຢຊູແມ່ນໃຜ?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ຈະຊ່ອຍໃຫ້ພວກເຮົາມອບກາຍຖວາຍໃຈໃຫ້ກັບພຣະເຢຊູ.

## <u>ບົດຮຽນ</u>

### <u>ຄຳນຳ</u>

ເມື່ອພວກເຮົາຍອມຮັບວ່າພຣະເຢຊູຊົງເປັນພຣະບຸດຂອງພຣະຜູ້ເປັນເຈົ້າແລ້ວ. ພຣະອົງຮຽກຮ້ອງໃຫ້ພວກເຮົາຕິດຕາມພຣະອົງ ເຖິງແມ່ນວ່າພວກເຮົາຈະໄດ້ຮັບຄວາມອັບອາຍເພາະພຣະອົງ, ຖືກປະຕິເສດຈາກຫມູ່ກອງ, ເສັຽສລະເພາະພຣະອົງ, ປະເຊີນກັບຄວາມລຳບາກ, ຫລືວ່າຖືກຂົ່ມເຫງກໍເປັນໄດ້.

<u>U.S. News and World Report</u> ຫນັງສືພິມສະຫາຣັຖ ແລະ ລາຍງາຍຂ່າວຕ່າງປະເທດໄດ້ຖແລງວ່າຣັຖບານສັງຄົມນິຍົມຈີນມີຄວາມຮຸນແຮງຕໍ່ຄຣິສຕຽນໃຕ້ດິນ (ຄຣິສຕຽນທີ່ບໍ່ໄດ້ຂື້ນຢູ່ກັບການຄວບຄຸມຂອງຣັຖ). ເຖິງແມ່ນວ່າຊີວິດຂອງພວກເຂົາໄດ້ຮັບອັນຕະຣາຍ ພວກເຂົາກໍບໍ່ປະການນະມັສການພຣະຜູ້ເປັນເຈົ້າ, ສ້າງສາວົກແລະຫນູນຈິດໃຈຊຶ່ງກັນແລະກັນ.

ຄຣິສຕຽນກຸ່ມນີ້ຍອມເອົາຊີວິດຂອງພວກເຂົາໄປແລກເອົາການຖືກຂົ່ມເຫງ, ຖືກຄວາມທຸກທໍຣະມານ, ແລະຄວາມຕາຍກໍໄດ້. ສຳລັບພວກເຂົາແລ້ວ ພວກເຂົາບໍ່ຢ້ານການຂູ່ເຂັນຈາກຣັຖບານສັງຄົມນິຍົມ. ພວກເຂົາຈຶ່ງຮັກພັກດີຕໍ່ພຣະຄຣິດເທົ່ານັ້ນ. ຍອມທົນທຸກທໍຣະມານເພາະພຣະຄຣິດນັ້ນຄືການທົດສອບຄວາມເຊື່ອແລະຄວາມຮັກທີ່ມີຕໍ່ພຣະອົງ.

### <u>ການເປີດເຜີຍເຖິງພຣະຄຣິດ</u> (8:27-30)

ພວກສາວົກໄດ້ຟັງຄຳສັ່ງສອນຈາກພຣະເຢຊູ, ໄດ້ເຫັນການອັສຈັນຕ່າງໆ, ແລະມີຄວາມໃກ້ຊິດກັບພຣະອົງ. ຫລັງຈາກພວກສາວົກຂອງພຣະອົງໄດ້ຕິດຕາມພຣະອົງເປັນເວລາດົນພໍສົມຄວນ ເວລາທົດສອບກໍໄດ້ມາເຖິງ. ພຣະອົງຕ້ອງການໃຫ້ພວກເຂົາເຂົ້າໃຈແລະຮັບຮູ້ວ່າພຣະອົງນັ້ນແມ່ນໃຜ, ພວກເຂົ້າໄດ້ຮຽນຮູ້ອັນໃດແດ່ກ່ຽວກັບພຣະອົງ ແລະເສັ້ນທາງທີ່ຈະກ້າວຕໍ່ໄປ. ພຣະອົງຖາມຄຳຖາມສອງຄຳຈາກຄວາມເຫັນຂອງຄົນທົ່ວໄປແລ້ວກໍເຈາະຈົງເຂົ້າມາຫາພວກສາວົກ. ເມື່ອມາເຖິງຈຸດນີ້ ເປັນຈຸດທີ່ພວກເຂົາຕ້ອງມີການປ່ຽນແປງໃນການຮັບໃຊ້ຂອງອົງພຣະເຢຊູຄຣິດ.

ເປັນຄຳຖາມທີ່ຈະຕ້ອງໄດ້ຖືກຖາມຫມົດທຸກຄົນມາທຸກທົ່ວສມັຍ. ເມື່ອພວກເຮົາຖືກຖາມຫລືຖືກທົດສອບ, ພວກເຮົາຈຳເປັນຈະຕ້ອງມີການຕັດສິນໃຈ. ເລືອກທາງທີ່ຈະເດີນຕາມພຣະອົງນັ້ນເປັນສິ່ງສຳຄັນທີ່ສຸດ.

ອອກຈາກເບດຊາອີດາແລະມຸ້ງຫນ້າໄປ25 ໄມສູ່ທິດຕາເວັນອອກສ່ຽງເຫນືອ, ພຣະອົງໄດ້ພາພວກເຂົາໄປເຂດເມືອງ

ກາຍຊາເຣັຽ ຟີລິບປອຍ, ທິດເໜືອຂອງແຜ່ນດິນອິສຣາເອນ, ຢູ່ຕີນພູສູງບ່ອນພຣະອົງຊົງປ່ຽນລັກສນະພຣະກາຍ (9:1-8). ກາຍຊາເຣັຽແປວ່າບ້ານຂອງກາຍຊາ, ເປັນດິນແດນທີ່ກະສັດເຮໂຣດ (Herod the Great) ໄດ້ສ້າງວິຫານໃຫ້ປະຊາຊົນນະມັສການກາຍຊາ (ຈັກກະພັດ ກາຍຊາ ໂອຄຸໂຕ Caesar Augustus), ເປັນວິຫານມີສລັກດ້ວຍຫີນອ່ອນສີຂາວ. ຕໍ່ມາລູກຊາຍຂອງກະສັດເຮໂຣດ ຊື່ວ່າ ເຮໂຣດ ຟີລິບໄດ້ຂຍາຍເມືອງກາຍຊາເຣັຽອອກແລະຈຶ່ງໄດ້ຕັ້ງຊື່ເມືອງນີ້ວ່າ ກາຍຊາເຣັຽ ຟີລິບປອຍ. ປະຊາຊົນຢູ່ໃນເມືອງນີ້ນະມັສການຈັກກະພັດແທນທີ່ຈະນະມັສການພຣະເຈົ້າ. ສະນັ້ນ ຄຳທຳອິດທີ່ພຣະເຢຊູຖາມວ່າ, "ຄົນທັງຫລາຍເວົ້າກັນວ່າເຮົາແມ່ນຜູ້ໃດ" (8:27). ຄຳຖາມທີ່ຢາກຮູ້ຄຳຕອບອັນຈະແຈ້ງ. ພວກສາວົກທູນຕອບວ່າ, "ຜູ້ລາງຄົນວ່າແມ່ນໂຢຮັນບັບຕິສະໂຕ ແຕ່ຄົນອື່ນວ່າແມ່ນເອລີຢາ ແລະຄົນອື່ນອີກວ່າແມ່ນຜູ້ນຶ່ງໃນພວກຜູ້ປະກາດພຣະທັມ" (8:28; ໃຫ້ອ່ານ 6:14-15). ບາງຄົນຄິດວ່າພຣະອົງແມ່ນເອລີຢາ ເພາະວ່າໃນພຣະທັມ ມາລະກີ 4:5-6 ໄດ້ກ່າວໄວ້. ຄວາມຄິດຂອງຝູງຊົນບໍ່ປ່ຽນແປງ ພວກເຂົາຄິດສເມີວ່າພຣະອົງນັ້ນແມ່ນຜູ້ນຶ່ງໃນຈຳນວນພວກຜູ້ປະກາດພຣະທັມຂອງພວກເຂົາ. ຕໍ່ມາຢູ່ເທິງພູສູງ ພຣະອົງໄດ້ປ່ຽນລັກສນະພຣະກາຍຂອງພຣະອົງ. ເອລີຢາແລະໂມເຊໄດ້ມາລົມກັບພຣະອົງ (9:4-5). ພຣະບິດາໄດ້ຕັດມີພຣະສຸຣະສຽງອອກມາຈາກເມກນັ້ນວ່າ, "ທ່ານຜູ້ນີ້ແຫລະ, ເປັນບຸດທີ່ຮັກຂອງເຮົາ ພວກເຈົ້າຈົ່ງເຊື່ອຟັງເພິ່ນ" (9:7). ການປ່ຽນລັກສນະພຣະກາຍໄດ້ຊີ້ໃຫ້ເຫັນການຊົງປາກົດຂອງພຣະຄຣິດ.

ພຣະອົງຖາມເປັນຄັ້ງທີສອງເປັນຄຳຖາມເຈາະຈົງເຖິງພວກສາວົກເອງວ່າ, "ພວກທ່ານເດ ວ່າເຮົາແມ່ນໃຜ?" (8:29). ໝາຍຄວາມວ່າພວກເຈົ້າເດ. ຖາມເຖິງຄວາມຄິດການຮັບຮູ້ຂອງສ່ວນບຸກຄົນ. ອັຄສາວົກເປໂຕທູນຕອບວ່າ, "ທ່ານແມ່ນພຣະຄຣິດ" (8:29). ພາສາກຣີກໃຊ້ຄຳວ່າ <u>ພຣະຄຣິດ</u> ແລະພາສາເຮັບເຣີໃຊ້ຄຳວ່າ <u>ພຣະເມຊີອາ</u> ຄືເປັນຜູ້ທີ່ຖືກຫົດສົງຈາກພຣະຜູ້ເປັນເຈົ້າ. ໃນຕຳແໜ່ງເປັນພຣະຄຣິດ, ພຣະເຢຊູຊົງເປັນກະສັດ, ປະໂລຫິດ, ຜູ້ປະກາດພຣະທັມ, ແລະພຣະຜູ້ໂຜດໃຫ້ພົ້ນ.

ຢ່າງໜ້ອຍໃນຈຳນວນພວກສາວົກເປໂຕໄດ້ຮັບຮູ້ວ່າພຣະເຢຊູຊົງເປັນພຣະຄຣິດ. ພຣະອົງບໍ່ແມ່ນເຢເຣມີຢາ, ບໍ່ແມ່ນເອຊາຢາ, ແລະບໍ່ແມ່ນເອລີຢາ. ພຣະອົງຊົງແມ່ນພຣະຄຣິດ. ພວກສາວົກເຫັນພຣະອົງເໝືອນດັ່ງກະສັດທີ່ຖືກຫົດສົງແຕ່ພວກເຂົາບໍ່ເຂົ້າໃຈການລີ້ລັບຂອງພຣະສງ່າຣາສີ ແລະຣາຊອານາຈັກຂອງພຣະອົງ (8:31-33). ພຣະອົງໄດ້ສັ່ງຫ້າມພວກສາວົກບໍ່ໃຫ້ບອກຄົນອື່ນ ແລະໄດ້ກ່າວເຖິງການສິ້ນພຣະຊົນຂອງພຣະອົງ.

## <u>**ການເປີດເຜີຍເຖິງໄມ້ກາງແຂນ**</u> (8:31-33)

ພຣະອົງຊົງຕັ້ງຕົ້ນກ່າວສອນພວກສາວົກກ່ຽວກັບເຣື່ອງການທໍຣະມານຢູ່ເທິງໄມ້ກາງແຂນແລະການຄືນພຣະຊົນຂອງພຣະອົງ. "ຄຳເຫລົ່ານີ້ພຣະອົງຊົງກ່າວໂດຍເປີດເຜີຍ" (8:32). ເພື່ອໃຫ້ພວກສາວົກເຂົ້າໃຈຢ່າງແຈ່ມແຈ້ງ. ພຣະອົງສອນພວກເຂົາວ່າ, "ບຸດມະນຸດຈະຕ້ອງທົນທຸກທໍຣະມານຫລາຍປະການ" (8:31). ຄຳວ່າຈະຕ້ອງໝາຍຄວາມວ່າຫລີກລ້ຽງບໍ່ໄດ້ຢ່າງເດັດຂາດ. ຈະຕ້ອງຖືກປະຕິເສດບໍ່ຮັບຮູ້, ຈະຕ້ອງຖືກຂ້າເສັຽແລະຈະຕ້ອງຄືນພຣະຊົນໃນວັນຖ້ວນສາມ. ພວກເຖົ້າແກ່, ພວກປະໂຣຫິດຕົນໃຫຍ່, ແລະພວກນັກທັມຈະສອບສວນພຣະອົງແລະຈະບໍ່ຮັບຮູ້ພຣະອົງວ່າເປັນພຣະຄຣິດ. ພຣະອົງບໍ່ແມ່ນພຣະຄຣິດທີ່ປະເພດພວກເຂົາຢາກໄດ້.

ເປໂຕໄດ້ຍິນເຣື່ອງຄວາມເຈັບປວດຂອງພຣະອົງ ຖືກປະຕິເສດຈົນເຖິງແກ່ຄວາມຕາຍ. ເປໂຕໄດ້ຍິນຫລາຍໂພດລາວຈຶ່ງພາພຣະອົງໄປຕ່າງຫາກແລະຫ້າມພຣະອົງ. ເປໂຕຫ້າມພຣະອົງດ້ວຍຄວາມຫ່ວງໃຍ ແຕ່ເປໂຕກັບໄດ້ຮັບຄຳຕອບຈາກພຣະອົງເປັນຄຳເວົ້າແຂງແຮງຢ່າງບໍ່ໜ້າເຊື່ອ. ເປໂຕຍັງບໍ່ເຂົ້າໃຈເນື້ອໃນໃຈຄວາມຂອງພຣະອົງເທື່ອ. ຖ້າຫາກພຣະອົງສິ້ນພຣະຊົນ, ພຣະອົງຈະເຮັດໃຫ້ເປົ້າໝາຍຂອງພຣະອົງສຳເຣັດໄດ້ຢ່າງໃດ?

ພຣະອົງຊີງຕິເປໂຕຢ່າງແຂງແຮງວ່າ, "ອ້າຍຊາຕານເຮີຍ, ຈົ່ງຖອຍໜີຈາກເຮົາເສັຽ" (8:33). ພຣະອົງຈຳໄດ້ວ່າຊາຕານເຄີຍທົດລອງພຣະອົງມາກ່ອນ (1:12-13). ເໝືອນກັບວ່າເປໂຕໄດ້ຖືກຊາຕານໃຊ້ມາທົດລອງພຣະອົງ. ພຣະອົງຮູ້ບໍ່ເກີດຂອງການທົດລອງຈຶ່ງໄດ້ກ່າວຕໍ່ເປໂຕອີກວ່າ "ເພາະເຈົ້າຄຶດຢ່າງມະນຸດ ບໍ່ຄຶດຢ່າງພຣະເຈົ້າ" (8:33). ທີ່ພຣະອົງໄດ້ກ່າວຕໍ່ເປໂຕຢ່າງນັ້ນ, ຄວາມໝາຍຂອງພຣະອົງກໍຄືວ່າ ເປໂຕເອີຍ ເຈົ້າເຈຕນາດີຢູ່ແຕ່ວ່າມັນບໍ່ແມ່ນພຣະປະສົງຂອງພຣະເຈົ້າ ເຈົ້າຍັງຕ້ອງໄດ້ຮຽນຮູ້ຫລາຍຢ່າງເຖິງຄວາມໝາຍອັນເລິກກ່ຽວກັບວ່າພຣະເຢຊູນັ້ນແມ່ນໃຜແລະການກະທຳຂອງພຣະອົງ.

**<u>ການເປີດເຜີຍເຖິງການມອບກາຍຖວາຍໃຈ</u>** (8:34)

ສາວົກຂອງພຣະອົງບໍ່ພຽງແຕ່ຮັບຮູ້ວ່າພຣະອົງຈະຕ້ອງຖືກຄຶງຢູ່ທີ່ໄມ້ກາງແຂນເທົ່ານັ້ນ. ພວກເຂົາຕ້ອງຕຽມພ້ອມທີ່ຈະຕ້ອງແບກໄມ້ກາງແຂນຂອງພວກເຂົາເອງດ້ວຍ. ເປໂຕປະຕິເສດໄມ້ກາງແຂນຂອງພຣະອົງ, ແຕ່ດຽວນີ້ລາວຕ້ອງຮັບເອົາໄມ້ກາງແຂນຂອງລາວເອງ. ບໍ່ພຽງແຕ່ພວກສາວົກເທົ່ານັ້ນ. ພຣະອົງໄດ້ເອີ້ນເອົາປະຊາຊົນມາຮ່ວມດ້ວຍ, "ຖ້າຜູ້ໃດຢາກຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເສັຽແລະຮັບແບກໄມ້ກາງແຂນຂອງຕົນຕິດຕາມເຮົາມາ" (8:34).

"ຕັດສິດ" ແລະ "ຮັບແບກ" ສອງປະການນີ້ຈະຕ້ອງປະຕິບັດໄປພ້ອມກັນ. ຄຳວ່າ "ຕິດຕາມ" ນັ້ນຈະຕ້ອງປະຕິບັດໃຫ້ເປັນນິສັຍໄປຢູ່ເລື້ອຍໆ. ຄຣິສຕຽນຈະຕ້ອງຕັດສິດຂອງຕົນເສັຽ ແລະຮັບແບກໄມ້ກາງແຂນຂອງຕົນ ເປັນການຕັດສິນໃຈໃຫ້ເປັນວິທີທາງດຳເນີນຊີວິດ ແລະຕິດຕາມພຣະອົງໄປ.

**<u>ການເປີດເຜີຍເຖິງຄວາມເສັຽສລະ</u>** (8:35-37)

ພຣະອົງໃຊ້ຄຳຜຍາ, "ເພາະວ່າຜູ້ໃດຢາກຊ່ອຍຊີວິດຂອງຕົນໃຫ້ພົ້ນ ຜູ້ນັ້ນຈະເສັຽຊີວິດ ແຕ່ຜູ້ໃດຈະເສັຽຊີວິດຂອງຕົນເພາະເຫັນແກ່ເຮົາແລະເຫັນແກ່ຂ່າວປະເສີດ ຜູ້ນັ້ນກໍຈະຊ່ອຍຊີວິດໃຫ້ພົ້ນ" (8:35). ນີ້ຄືຫົວໃຈສຳຄັນຂອງຫລັກຄວາມເຊື່ອຂອງຄຣິສຕຽນ.

ສິ່ງທີ່ມະນຸດຕ້ອງການຫລາຍທີ່ສຸດກໍຄື "ຢາກຈະຊ່ອຍຊີວິດຂອງຕົນໃຫ້ພົ້ນ". ແຕ່ມີທາງດຽວເທົ່ານັ້ນກໍຄືວ່າເຂົາຈະຕ້ອງສລະຊີວິດຂອງເຂົາເພາະຂ່າວປະເສີດ, ຖ້າບໍ່ດັ່ງນັ້ນເຂົາກໍຈະເສັຽຊີວິດຂອງເຂົາ. ການສລະຊີວິດຂອງເຂົາເພາະຂ່າວປະເສີດຄືສະລະຄວາມເຫັນແກ່ຕົວຂອງເຂົາ. ຖ້າເຂົາສລະໄດ້ເຂົາກໍຈະໄດ້ຮັບຜົນກຳໄລຄືຊີວິດອັນຕລອດໄປເປັນນິດ. ເຂົາກ້າສລະສ່ວນໜ້ອຍ ແລະ ເຂົາຈະໄດ້ຮັບຜົນຕອບແທນເປັນຈຳນວນຫລາຍ. ຜົນທີ່ໄດ້ຮັບຈາກໂລກນີ້ຈະບໍ່ພຽງພໍຈັກເທື່ອ. ສະນັ້ນແຫລະ, ສິ່ງສຳຄັນທີ່ສຸດກໍຄືຮັບເອົາການຮຽກຮ້ອງຈາກພຣະເຢຊູ. ໃຫ້ຊີວິດນີ້ ຢູ່ເພາະພຣະອົງແລະເພາະຂ່າວປະເສີດ.

ເພື່ອຊ່ອຍໃຫ້ພວກສາວົກແລະປະຊາຊົນເຂົ້າໃຈເລິກໄປກວ່ານັ້ນອີກ ພຣະອົງຊົງກ່າວອີກວ່າ, "ເພາະຖ້າຜູ້ໃດຈະໄດ້ສິ່ງຂອງໝົດທັງໂລກ ແຕ່ຕ້ອງເສັຽຊີວິດອັນແທ້ຈິງຂອງຕົນ ຜູ້ນັ້ນຈະໄດ້ປໂຍດອັນໃດ? ຫລືຜູ້ນັ້ນຈະນຳເອົາສິ່ງໃດໄປແລກເອົາຊີວິດອັນແທ້ຈິງຂອງຕົນກັບຄືນມາ" (8:36-37). ພຣະອົງສະແດງໃຫ້ເຫັນວ່າພຣະອົງນັ້ນເຂົ້າໃຈແລະເຫັນໃຈມະນຸດຈຶ່ງໄດ້ຕັ້ງຄຳຖາມດັ່ງກ່າວ. ຫລາຍຄົນມອບຄຸນຄ່າຊີວິດຂອງຕົນໄວ້ກັບຄວາມສນຸກສນານ, ໜ້າທີ່ຕຳແໜ່ງ, ຜົນງານ, ກຳໄລ,ຫລື ຊື່ສຽງ. ສິ່ງດັ່ງກ່າວມານີ້ມັນມີຄຸນຄ່າແທ້ບໍ່ໃນຊີວິດຂອງເຂົາ? ສິ່ງຂອງໝົດທັງໂລກຈະບໍ່ມີຄຸນຄ່າເທົ່າກັບຈິດວິນຍານດວງດຽວ.

**<u>ຄຳທ້າທາຍຂອງພຣະອົງ</u>** (8:38)
ພຣະເຢຊູໄດ້ທ້າທ້າຍໃຫ້ພວກສາວົກແລະປະຊາຊົນເລືອກລະຫວ່າງການໄດ້ແລະການເສັຽຂອງຊີວິດ. "ດ້ວຍວ່າຖ້າຜູ້ໃດມີຄວາມອາຍເພາະເຮົາແລະຖ້ອຍຄຳຂອງເຮົາໃນຊົ່ວຊີວິດນີ້ ຊຶ່ງປະກອບດ້ວຍການບໍ່ສັດຊື່ແລະຊົ່ວຮ້າຍ ບຸດມະນຸດກໍຈະມີຄວາມອາຍເພາະຜູ້ນັ້ນ ໃນເມື່ອເພິ່ນມາດ້ວຍສງ່າຣາສີແຫ່ງພຣະບິດາແລະດ້ວຍຝູງເທວະດາຕົນບໍຣິສຸດ" (8:38) ພຣະອົງຊົງຄາດໝາຍໄວ້ວ່າປະຊາຊົນຈະມີຄວາມອາຍເພາະພຣະອົງ, ຖ້ອຍຄຳຂອງພຣະອົງ, ແລະການສິ້ນພຣະຊົນ.

ຄວາມອາຍນັ້ນມີອຳນາດ ມັນມີທາງຜົນໄດ້ກັບຜົນເສັຽດ້ວຍ. ຜົນໄດ້ຂອງຄວາມອາຍກໍຄືຈະຊ່ອຍໃຫ້ຜູ້ກ່ຽວເຂົ້າສນິດກັບພຣະຜູ້ເປັນເຈົ້າໃໝ່ ໃນເມື່ອຜູ້ກ່ຽວຮູ້ສຶກວ່າມີຄວາມອາຍເພາະວ່າໄດ້ຫ່າງເຫີນຈາກພຣະອົງ. ຜົນເສັຽຂອງຄວາມອາຍກໍຄືຈະເຮັດໃຫ້ຜູ້ກ່ຽວນັ້ນແຫ່ງໜີໄປໄກເພາະວ່າເກີດມີຄວາມອາຍ. ການຍອມຮັບຊຶ່ງກັນແລະກັນນັ້ນແມ່ນສິ່ງທີ່ມະນຸດຕ້ອງການ. ເມື່ອມີການຍອມຮັບຊຶ່ງກັນແລະກັນຄວາມອາຍກໍຈະບໍ່ມີອີກຕໍ່ໄປ. ຫລາຍຄັ້ງຫລາຍຄາວເມື່ອຄົນທັງຫລາຍໄດ້ຟັງຂ່າວປະເສີດ, ກໍເກີດມີການຕັດສິນໃຈຢາກຈະຮັບເຊື່ອ, ແຕ່ແລ້ວກໍປະຕິເສດການເຊື່ອເຊີນເສັຽ ເພາະວ່າມີຄວາມອາຍທີ່ຈະຍ່າງອອກໄປສເນີຕົວ, ມີຄວາມອາຍເພາະຮັບສິນບັບຕິສະມາ, ຫລືວ່າຢ້ານໝູ່ຮູ້ວ່າຕົນນັ້ນໄດ້ຕິດຕາມພຣະເຢຊູ. ຄວາມອາຍນີ້ແມ່ນການຫລອກລໍ້ຂອງມານເພາະວ່າມັນບໍ່ຢາກໃຫ້ຈິດວິນຍານນັ້ນໄດ້ຮັບຄວາມລອດພົ້ນ.

ມີຄວາມຮູ້ສຶກອັບອາຍເພາະພຣະຄຣິດຈະເປັນສິ່ງກີດກັ້ນພາຣະກິດຂອງພຣະອົງແລະກໍ່ໃຫ້ເກີດຄວາມສົງສັຍແລະມີຈິດໃຈບໍ່ແນ່ບໍ່ນອນ. ຊາຕານຈະໃຊ້ຄວາມອາຍນີ້ເປັນສິ່ງຍັບຍັ້ງບໍ່ໃຫ້ຄົນມາເປັນສາວົກຂອງພຣະອົງ. ພຣະອົງເຫັນວ່າຄວາມອາຍເປັນອຸປສັກຂອງມະນຸດທີ່ຈະຕ້ອງເອົາຊັຍຊະນະ. ອັຄສາວົກໂປໂລກ່າວວ່າ, "ເພາະວ່າເຮົາບໍ່ມີຄວາມລະອາຍໃນຂ່າວປະເສີດ ດ້ວຍວ່າຂ່າວປະເສີດນັ້ນເປັນຣິດເດດຂອງພຣະເຈົ້າ ເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຮັບຄວາມພົ້ນພວກຢິວກ່ອນແລະພວກຕ່າງຊາດດ້ວຍ" (ໂຣມ 1:16).

**<u>ຄຳຖາມ</u>**
1. ການເປັນພຣະເມຊີອາແລະການເປັນສາວົກມີຄວາມສຳພັນຕໍ່ກັນຢ່າງໃດ?

2. ເປັນຫຍັງອັຄສາວົກເປໂຕຈຶ່ງຮູ້ວ່າພຣະເຢຊູເປັນພຣະຄຣິດ ແຕ່ລາວບໍ່ເຂົ້າໃຈເຖິງເຣື່ອງໄມ້ກາງແຂນ?

3. ຖ້າຫາກທ່ານຕິດຕາມພຣະຄຣິດ ທ່ານບໍ່ຈຳເປັນຕ້ອງສລະຫຍັງໝົດ ມັນຈະມີຄຸນຄ່າຫຍັງບໍ່?
   ທ່ານໄດ້ສລະຫຍັງແດ່ຕັ້ງແຕ່ທ່ານໄດ້ຕິດຕາມພຣະຄຣິດມາ?

4. ຄວາມເຊື່ອຂອງທ່ານໄດ້ຖືກທົດສອບບໍ່ໃນໝໍ່ໆມານີ້? ການທົດສອບມີອຳນາດບໍ່?

5. ເປັນຫຍັງປະສົບການຂອງການຖືກທົດສອບຈຶ່ງເປັນຈຸດທີ່ມີການປ່ຽນແປງໃນຊີວິດຂອງພຣະເຢຊູ?
   ທ່ານມີຄວາມຄິດເຫັນຢ່າງໃດເຖິງ ຄຳຖາມທີ່ຖາມກ່ຽວກັບພຣະເຢຊູນັ້ນ ເປັນການບາງເອີນ ຫລືວ່າພຣະອົງມີພຣະປະສົງຈະຖາມຢູ່ແລ້ວ?

6. ທ່ານຮູ້ຈັກໃຜແດ່ທີ່ພວກເຂົາມີອຸປສັກຍອມຮັບວ່າພຣະເຢຊູເປັນພຣະຄຣິດ? ເປັນຫຍັງ?

# ບົດຮຽນທີ 9
# ພຣະເຢຊູຊົງສອນເຣື່ອງການຮັບໃຊ້

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ມາຣະໂກ 9:30-37; 10:35-45
ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ: ມາຣະໂກ 9:1-10:52
ຈຸດສໍາຄັນຂອງບົດຮຽນນີ້: ພຣະເຢຊູຊົງສອນສາວົກຂອງພຣະອົງວ່າ ຄວາມຍິ່ງໃຫຍ່ເກີດມາຈາກການຮັບໃຊ້ແບບຖ່ອມຕົວຊຶ່ງພຣະອົງໄດ້ຊົງເປັນຕົວຢ່າງ.
ຄໍາຖາມເພື່ອການສໍາຣວດ: ແມ່ນຫຍັງເຮັດໃຫ້ຄົນກາຍເປັນຜູ້ຍິ່ງໃຫຍ່ຢ່າງແທ້ຈິງ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສໍາຣວດເບິ່ງຊີວິດຂອງທ່ານເອງ ແລະມາຕະຖານທີ່ພຣະເຢຊູຊົງຕັ້ງໄວ້.

ເຣື່ອງທີ່ຈະເນັ້ນໃນການສຶກສາຄັ້ງນີ້:

- ຮັບໃຊ້ເພື່ອນມະນຸດໃນພຣະນາມພຣະເຢຊູ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
- ເສີມສ້າງຄອບຄົວຄຣິສຕຽນ
- ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ່ມຂຶ້ນ

## ຄໍານໍາ

ມາເຖິງຕອນນີ້, ພຣະເຢຊູພຍາຍາມຫລີກໜີຈາກກຸ່ມຊົນທັງຫລາຍ; ພຣະອົງມີພຣະປະສົງທີ່ຈະໃຊ້ເວລາຢູ່ກັບພວກສາວົກເພື່ອສັ່ງສອນພວກເຂົາໃຫ້ຫລາຍຂຶ້ນ. ພຣະເຢຊູຊົງຫລິງເຫັນຄວາມສໍາຄັນຂອງການສອນພວກສາວົກໃຫ້ເຂັ້ມແຂງເພາະພວກເຂົາຈະເປັນຜູ້ສັ່ງສອນເຣື່ອງແຜ່ນດິນສວັນຂອງພຣະເຈົ້າຕໍ່ໄປເມື່ອພຣະອົງສະເດັດສູ່ຟ້າສວັນ. ການຮຽນທຸກຢ່າງຕ້ອງໃຊ້ເວລາ; ແມ່ນແຕ່ພວກສາວົກກໍຕ້ອງໄດ້ຖືມວຽກໃນລະຍະຊົ່ວຄາວເພື່ອຈະໄດ້ຮຽນຈາກ "ພຣະອາຈານຜູ້ຍິ່ງໃຫຍ່.

ກ. ການເດີນທາງໄປສູ່ ກາເປນາອູມ (9:30-37)

ພຣະເຢຊູຊົງຮັກຄົນບາບ (9:30-32)
ພຣະເຢຊູຊົງກ່າວລ່ວງໜ້າເປັນຄັ້ງທີສອງກ່ຽວກັບເຣື່ອງທີ່ພຣະອົງຈະຖືກທໍຣະມານ, ຖືກຂ້າ, ແລະຈະຖືກຊົງບັນດານໃຫ້ເປັນຄືນມາ ກັບພວກສາວົກ (9:30-32). ພຣະເຢຊູຊົງກ່າວວ່າ "ບຸດມະນຸດຈະຖືກມອບໄວ້ໃນມືມະນຸດ." ຄໍາວ່າ "ຖືກມອບ" ສະແດງໃຫ້ພວກເຮົາເຫັນວ່າ ການຕາຍຂອງພຣະເຢຊູບໍ່ແມ່ນສິ່ງທີ່ເກີດຂຶ້ນໂດຍບັງເອີນ. ແຕ່ທຸກຢ່າງໄດ້ເປັນໄປຕາມແຜນທີ່ພຣະເຈົ້າໄດ້ຊົງວາງໄວ້ກ່ອນແລ້ວ(ໂຣມ 4:25; 8:32).ພຣະເຢຊູຊົງສະເດັດມາຕາຍແທນຄົນບາບ.

ພຣະເຢຊູຊົງສອນພວກສາວົກ(9:33-37)
ພຣະເຢຊູຊົງບອກພວກສາວົກເຣື່ອງການຈະຖືກທໍຣະມານແລະການຕາຍ, ແຕ່ສາວົກສິບສອງຄົນຖົກຖຽງກັນວ່າແມ່ນໃຜຈະເປັນໃຫຍ່ກວ່າໝູ່. ພວກເຂົາບໍ່ເຂົ້າໃຈຄໍາສອນຂອງພຣະອົງ. ພວກສາວົກໄດ້ເຫັນເຣື່ອງສິດອໍານາດໃນສັງຄົມທີ່ພວກເຂົາເຈົ້າເຄີຍຢູ່ມາ; ເຂົາເຈົ້າພາກັນຄິດວ່າຊີວິດຄຣິສຕຽນກໍຄືຈະດໍາເນີນໄປໃນທໍານອງດຽວກັນ. ແມ່ນແຕ່ເວລາ

ຢູ່ຫ້ອງໃຫຍ່ຊັ້ນເທິງກ່ອນທີ່ພຣະເຢຊູຈະຖືກຂ້າທີ່ເທິງໄມ້ກາງແຂນ, ພວກສາວົກກໍຍັງມີການຖົກຖຽງກັນວ່າໃຜໃນລະຫວ່າງພວກເຂົາຈະເປັນຜູ້ໃຫຍ່ກວ່າໝູ່ (ລູກາ 22:24-30). ພຣະເຈົ້າຊົງປາຖນາໃຫ້ພວກເຮົາເປັນເໝືອນເດັກນ້ອຍເພື່ອພວກເຮົາຈະໄດ້ເຊື່ອຟັງພຣະອົງ; ແຕ່ພຣະອົງບໍ່ຊົງປະສົງໃຫ້ພວກເຮົາປະພຶດເໝືອນເດັກນ້ອຍທີ່ບໍ່ຮູ້ຫຍັງ. ພຣະເຢຊູຊົງໃຊ້ຄຳເວົ້າຄຳດຽວກັນເວລາພຣະອົງກ່າວເຖິງ "ເດັກນ້ອຍ" ແລະ "ຜູ້ຮັບໃຊ້." ພຣະອົງຊົງສອນພວກສາວົກວ່າຄວາມຍິ່ງໃຫຍ່ທີ່ແທ້ບໍ່ໄດ້ຢູ່ທີ່ຕຳແໜ່ງ ຫລືຊັບສົມບັດ ແຕ່ຢູ່ທີ່ອຸປນິສັຍແລະການຮັບໃຊ້(ຟີລິບປອຍ 2:1-13). ພຣະອົງຊົງກ່າວກັບພວກສາວົກວ່າ "ຖ້າຜູ້ໃດຢາກເປັນຜູ້ຕົ້ນ ກໍໃຫ້ຜູ້ນັ້ນເປັນຜູ້ປາຍແລະເປັນຜູ້ຮັບໃຊ້ຂອງຄົນທັງປວງ" (9:35). ພຣະເຢຊູຊົງສອນພວກສາວົກໃຫ້ຕ້ອນຮັບພວກເດັກນ້ອຍ. ຄຳສອນນີ້ເປັນຄຳສອນແບບໃໝ່ສຳລັບພວກສາວົກເພາະຕາມປະເພນີຂອງພວກເຂົາແລ້ວເດັກນ້ອຍບໍ່ເຄີຍຖືວ່າສຳຄັນ. ພວກເຮົາຄວນຈະເຫັນເດັກນ້ອຍເປັນຜູ້ສຳຄັນແລະຄວນສັ່ງສອນພວກເຂົາເຣື່ອງອົງພຣະເຢຊູຄຣິດ. ພວກເຮົາຄວນຈະຖືວ່າການຮັບໃຊ້ເດັກນ້ອຍໃນຄຣິສຕະຈັກກໍມີຄວາມສຳຄັນເທົ່າທຽມກັບການຮັບໃຊ້ຜູ້ໃຫຍ່.

ຂ. ການເດີນທາງໄປກຸງເຢຣູຊາເລັມ (10:32-45)

<u>ພຣະເຢຊູຊົງກ່າວລ່ວງໜ້າວ່າຈະຖືກຂ້າ(10:30-34)</u>

ພຣະເຢຊູແລະສາວົກເດີນທາງໄປສູ່ກຸງເຢຣູຊາເລັມເປັນຄັ້ງສຸດທ້າຍ. ເມື່ອກຳລັງເດີນທາງຢູ່ນັ້ນພຣະເຢຊູກໍໄດ້ຊົງສອນພວກສາວົກອີກເປັນເທື່ອທີສາມກ່ຽວກັບການຕາຍທີ່ຈະມາເຖິງພຣະອົງ. ພຣະເຢຊູຊົງບອກພວກເຂົາວ່າພຣະອົງຈະຖືກປະຫານຊີວິດທີ່ເທິງໄມ້ກາງແຂນທີ່ກຸງເຢຣູຊາເລັມ (ມັດທາຍ 20:19). ທ່ານຄົງຈະຄິດວ່າພວກສາວົກທັງສິບສອງຄົນຄົງເຂົ້າໃຈດີໃນເຣື່ອງນີ້ເພາະພຣະອົງໄດ້ບອກພວກເຂົາເຖິງສາມຄັ້ງແລ້ວ; ແຕ່ຕົງກັນຂ້າມ, ຢາໂກໂບ,ໂຢຮັນ,ແລະແມ່ຂອງພວກເຂົາ (ມັດທາຍ 20:20)ໄດ້ເຂົ້າມາທູນຂໍຕຳແໜ່ງຈາກພຣະອົງ. ພວກເຂົາບໍ່ໄດ້ເຂົ້າໃຈຄຳສອນທີ່ວ່າ "ໄມ້ກາງແຂນຈະມາກ່ອນບັນລັງ ແລະຄວາມທໍຣະມານຈະມາກ່ອນຄວາມສະງ່າຣາສີ."

<u>ຄຳທູນຂໍຂອງຢາໂກໂບແລະໂຢຮັນ(10:35-37)</u>

ຢາໂກໂບແລະໂຢຮັນທູນຂໍຕຳແໜ່ງຈາກພຣະເຢຊູ. ພຣະເຢຊູຊົງຖາມພວກເຂົາວ່າ "ຈອກທີ່ເຮົາດື່ມນີ້ທ່ານຈະດື່ມໄດ້ຫລື ແລະບັບຕິສະມາທີ່ເຮົາຮັບນັ້ນ ທ່ານຈະຮັບໄດ້ຫລື" (10:38). ຄຳວ່າ "ຈອກ" ໃນຕອນນີ້ພຣະເຢຊູໝາຍເຖິງການທີ່ພຣະອົງຍອມຮັບແລະເຮັດຕາມພຣະປະສົງຂອງ ພຣະບິດາໂດຍຍອມລົງມາໂລກມະນຸດເພື່ອຮັບເອົາຄວາມຜິດບາບຂອງພວກເຮົາ (14:36; ໂຢຮັນ 18:11). ຄຳວ່າ "ບັບຕິສະມາ" ບອກເຖິງການທໍຣະມານຂອງພຣະເຢຊູຄຣິດທີ່ໄມ້ກາງແຂນເພື່ອຄວາມຜິດບາບໃນໂລກນີ້ (ລູກາ 12:50; ພສສ 41:7 ແລະ 69:2, 15). ບໍ່ມີມະນຸດຄົນໃດໃນໂລກນີ້ (ຮວມທັງ ຢາໂກໂບ ແລະໂຢຮັນ) ສາມາດທີ່ຈະດື່ມຈອກຂອງພຣະເຢຊູ ແລະຮັບບັບຕິສະມາທີ່ພຣະເຢຊູຊົງຮັບ. ຢາໂກໂບເປັນຄົນແລກໃນຈຳນວນພວກສາວົກສິບສອງຄົນທີ່ໄດ້ຖືກປະຫານຊີວິດເພາະຄວາມເຊື່ອໃນອົງພຣະຄຣິດ (ກິຈການ 12:2) ແລະ ໂຢຮັນໄດ້ຖືກການຂົ່ມເຫັງຈາກພວກໂຣມໃນບັ້ນປາຍຂອງຊີວິດ (ພຣະນິມິດ 1:9). ສນັ້ນພວກເຮົາຄວນລະວັງເວລາພວກເຮົາອ້ອນວອນຂໍສິ່ງໃດສິ່ງນຶ່ງ ເພາະພຣະເຈົ້າອາດຈະປະທານສິ່ງທີ່ຂໍນັ້ນໃຫ້ກັບທ່ານ.

ພຣະເຢຊູຊົງໃຊ້ໂອກາດນີ້ສອນພວກສາວົກສິບສອງຄົນອີກເທື່ອນຶ່ງເຣື່ອງຄວາມສຳຄັນຂອງການຮັບໃຊ້ແບບຖ່ອມຕົວໃນພຣະນາມຂອງພຣະອົງ. ພຣະທັມມາຣະໂກ 10:45 ເປັນຂໍ້ສລຸບສຳຄັນທີ່ສຸດຂອງປຶ້ມພຣະທັມມາຣະໂກ: ພຣະເຢຊູຊົງມາ (ມຣກ ບົດທີ 1), ເພື່ອປະຕິບັດຄົນອື່ນ (ມຣກ ບົດທີ 2-13), ແລະປະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ (ມຣກ ບົດທີ 14-16).

ຄຳສລຸບ:

ອີງຕາມຄຳສອນຂອງອົງພຣະເຢຊູຄຣິດ, ຖ້າບຸກຄົນໃດຕ້ອງການທີ່ຈະເປັນຜູ້ຍິ່ງໃຫຍ່ທີ່ແທ້ຈິງ ເຂົາຈະຕ້ອງເຮັດສາມຢ່າງດັ່ງຕໍ່ໄປນີ້:

(1). ປະຕິບັດຮັບໃຊ້ຄົນອື່ນເໝືອນເປັນຂ້ອຍຂ້າ.

(2). ຖວາຍຕົວເພື່ອເປັນຂ້ອຍຂ້າຂອງພຣະເຈົ້າ.

(3). ສລະຊີວິດຂອງຕົນເພື່ອເປັນເຄື່ອງຖວາຍບູຊາ.

ພຣະເຢຊູຄຣິດຊົງສອນພວກສາວົກແລະຊົງໃຫ້ຕົວຢ່າງໂດຍ:

(1). ເປັນຜູ້ຮັບໃຊ້ຄົນອື່ນ--ບໍ່ໄດ້ມາໃຫ້ຄົນອື່ນປະຕິບັດແຕ່ປະຕິບັດຄົນອື່ນ (ພຣະອົງຊົງລ້າງຕີນພວກສາວົກໃນໂຢຮັນ 13:1-5).

(2). ເປັນຂ້າທາດ--ເຮັດຕາມນ້ຳພຣະທັຍຂອງພຣະບິດາ (ອັບບາບິດາເອີຍ...ຂໍຢ່າໃຫ້ເປັນໄປຕາມໃຈປາຖນາຂອງລູກ ແຕ່ໃຫ້ເປັນໄປຕາມພຣະທັຍຂອງພຣະອົງເທີນ. ເບິ່ງ ມາຣະໂກ 14:36).

(3). ເປັນຄ່າໄຖ່--ປະທານຊີວິດເພື່ອເປັນຄ່າໄຖ່ສຳລັບຄົນບາບ (ຄຳອະທິບາຍຂອງມາຣະໂກກ່ຽວກັບການຕາຍຂອງພຣະເຢຊູ. ເບິ່ງ ມາຣະໂກ 10:45).

ເພາະພຣະເຢຊູໄດ້ຊົງເຮັດທຸກຢ່າງທີ່ກ່າວມານັ້ນ, ພຣະອົງຈຶ່ງໄດ້ກາຍເປັນຜູ້ຍິ່ງໃຫຍ່ທີ່ແທ້ຈິງ-ພຣະອົງຄືກະສັດທີ່ເໜືອກວ່າພວກກະສັດທັງຫລາຍ ແລະ ເຈົ້ານາຍເໜືອກວ່າພວກເຈົ້ານາຍທັງຫລາຍ. ທ່ານຢາກຈະເປັນຄຣິສຕຽນຜູ້ຍິ່ງໃຫຍ່ກວ່າທຸກໆຄົນບໍ່? ຈົ່ງຍອມເປັນ ຜູ້ຮັບໃຊ້, ເປັນຂ້າທາດ, ແລະເປັນເຄື່ອງຖວາຍບູຊາແລ້ວພຣະເຈົ້າຈະຖືວ່າທ່ານເປັນຜູ້ຍິ່ງໃຫຍ່ທີ່ແທ້ຈິງ.

ຄຳຖາມ:

1. ຄຣິສຕຽນສົມຄວນທີ່ຈະສແວງຫາຄວາມຍິ່ງໃຫຍ່ໃນການຮັບໃຊ້ພຣະຄຣິດບໍ່?

2. ຄຳສອນຂອງພຣະເຢຊູເຣື່ອງ "ຖ້າຜູ້ໃດຢາກເປັນຕົ້ນ ກໍໃຫ້ຜູ້ນັ້ນເປັນປາຍ" ຍັງໃຊ້ໄດ້ບໍ່ໃນສມັຍນີ້?

3. ເປັນຫຍັງພຣະເຢຊູຄຣິດຈຶ່ງມັກໃຊ້ "ເດັກນ້ອຍ" ເປັນຕົວຢ່າງໃນການສອນຂອງພຣະອົງ? ເດັກນ້ອຍມີຄວາມສຳຄັນແນວໃດ?

4. ເປັນຫຍັງພວກສາວົກສິບສອງຄົນບໍ່ເຂົ້າໃຈເວລາພຣະເຢຊູຄຣິດຊົງບອກລ່ວງໜ້າເຣື່ອງການຕາຍຂອງພຣະອົງ?

# ບົດຮຽນທີ 10
# ພຣະເຢຊູຊົງໃຊ້ສິດອຳນາດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມາຣະໂກ 11:15-18, 27--12:12
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ມາຣະໂກ 11:1--12:44
ຈຸດສຳຄັນຂອງບົດຮຽນນີ້: ການກະທຳແລະຄຳສັ່ງສອນຂອງພຣະເຢຊູໄດ້ສແດງເຖິງສິດອຳນາດຂອງພຣະອົງໃນຖານະພຣະບຸດຂອງພຣະເຈົ້າ.
ຄຳຖາມເພື່ອການສຳຣວດ: ໃຜເປັນຄົນຮັບຜິດຊອບໃນຊີວິດເຮົານີ້?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະຮູ້ຄວາມໝາຍຕ່າງໆຈາກຊີວິດຂອງພຣະເຢຊູທີ່ໄດ້ຊົງສະແດງສິດອຳນາດໃຫ້ເຫັນຜ່ານການກະທຳແລະຄຳສັ່ງສອນຂອງພຣະອົງ.

ເຣື່ອງທີ່ຈະເນັ້ນໃນການສຶກສາຄັ້ງນີ້:

- ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັສ, ໃນສະຫະຣັຖ, ແລະໃນທົ່ວໂລກ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ

## ຄຳນຳ

ພຣະເຢຊູແລະພວກສາວົກໄດ້ເດີນທາງມາເຖິງກຸງເຢຣູຊາເລັມນຶ່ງອາທິດກ່ອນທີ່ພຣະເຢຊູຈະຖືກປະຫານຊີວິດ. ໃນເວລານັ້ນຄົນຢິວຈາກເມືອງຕ່າງໆໃນເຂດປົກຄອງຂອງໂຣມກໍໄດ້ເດີນທາງມາກຸງເຢຣູຊາເລັມເພື່ອຈະສລອງວັນປັສຄາຊຶ່ງເປັນວັນລະນຶກເຖິງການປົດປ່ອຍອອກຈາກປະເທດອີຢີບຂອງຄົນເຮັບເຣີ (ອພຍ 12:37-51). ຄົນສ່ວນຫລາຍເຄີຍໄດ້ຟັງພຣະເຢຊູແລະເຄີຍໄດ້ເຫັນພຣະອົງ. ພວກເຂົາມີຄວາມຫວັງວ່າຈະໄດ້ເຫັນພຣະອົງທີ່ພຣະວິຫານ. ໃນບົດຮຽນພາກຕໍ່ໄປນີ້ພວກເຮົາຈະໄດ້ເຫັນພຣະເຢຊູໃຊ້ສິດອຳນາດຂອງພຣະອົງໃນການປ້ອຍຕົ້ນເດື່ອ, ການຊຳຣະພຣະວິຫານ, ການໂຕ້ຕອບຜູ້ທີ່ຕິຕຽນພຣະອົງ, ແລະ ການຫລີກເວັ້ນການຈັບກຸມ.

### ພຣະເຢຊູຊົງປ້ອຍຕົ້ນເດື່ອເທດ (11:12-14, 20-26)

ການອັສຈັນກ່ຽວກັບຕົ້ນເດື່ອເທດເປັນເຣື່ອງທີ່ເຮັດໃຫ້ຫລາຍຄົນມີຄວາມສົງສັຍ; ເພາະວັນປັສຄາບໍ່ແມ່ນຣະດູສຳລັບການເກັບກ່ຽວໝາກເດື່ອເທດ. ຕາມປົກຕິແລ້ວຕົ້ນເດື່ອເທດຈະອອກໝາກປີນຶ່ງສອງເທື່ອ, ເທື່ອນຶ່ງໃນຣະດູໃບໄມ້ປົ່ງແລະອີກເທື່ອນຶ່ງໃນຣະດູໃບໄມ້ລົ່ນ. ເຫດການຕອນນີ້ເກີດຂຶ້ນໃນຕົ້ນຣະດູຊຶ່ງເປັນເວລາ ທີ່ຕົ້ນເດື່ອກຳລັງອອກໃບ. ຕົ້ນເດື່ອຕົ້ນນີ້ໄດ້ເຕັມໄປດ້ວຍໃບອັນສວຍງາມ. ບຸຄມະນຸດຫວັງຈະໄດ້ກິນໝາກເດື່ອເທດ ແຕ່ປາກົດວ່າຕົ້ນໄມ້ທີ່ສວຍງາມຕົ້ນນີ້ບໍ່ມີໝາກເດື່ອແຕ່ພຽງໜ່ວຍດຽວ. ຫລາຍຄົນພາກັນຖາມວ່າເປັນຫຍັງອົງພຣະເຢຊູຄຣິດຈຶ່ງຊົງໃຊ້ຣິດອຳນາດຂອງພຣະອົງເພື່ອທຳລາຍຕົ້ນເດື່ອ; ເປັນຫຍັງພຣະອົງບໍ່ໃຫ້ພອນຕົ້ນໄມ້ນັ້ນໃຫ້ມີໝາກຫລາຍຂຶ້ນ. ຄວາມຈິງແລ້ວການກະທຳຂອງພຣະເຢຊູຄຣິດໃນຄັ້ງນີ້ມີບົດຮຽນສຳຄັນສຳລັບທຸກຄົນ. ຕົ້ນເດື່ອເທດແມ່ນຊົນຊາດອິສຣາເອັນ (ໂຮເຊອາ 9:10, 16; ນາຮູມ 3:12) ທີ່ບໍ່ໄດ້ເກີດດອກອອກຜົນເພື່ອຄວາມສະງ່າຣາສີຂອງພຣະເຈົ້າ. ກົກຮາກທາງຈິດວິນຍານຂອງພວກເຂົາໄດ້ຕາຍແລ້ວ ແລະບໍ່ສາມາດທີ່ຈະເກີດຜົນໄດ້.

ພຣະເຢຊູໃຊ້ການອັສຈັນນີ້ເພື່ອສອນພວກສາວົກເຣື່ອງຄວາມເຊື່ອແລະການອະທິຖານ. ພູຄືຄວາມຍາກລຳບາກທີ່ພວກເຮົາຈະຕ້ອງຍົກອອກຈາກຊີວິດ (ຊາກະຣີອາ 4:7), ແລະຄວາມເຊື່ອໃນພຣະເຈົ້າຈະຊ່ວຍພວກເຮົາໃຫ້ໄດ້ຊັຍຊະນະ. ແຕ່ຄວາມເຊື່ອໃນພຣະເຈົ້າເທົ່ານັ້ນກໍບໍ່ພຽງພໍ; ພວກເຮົາຈະຕ້ອງມີການໃຫ້ອະພັຍກັບຄົນອື່ນໆດ້ວຍ (11: 25-26). ທີ່ຈິງແລ້ວພວກເຮົາບໍ່ໄດ້ຮັບການໃຫ້ອະພັຍເພາະເຮົາໃຫ້ອະພັຍຄົນອື່ນ ແຕ່ການໃຫ້ອະພັຍຄົນອື່ນສະແດງ ເຖິງການຖ່ອມໃຈຂອງພວກເຮົາຕໍ່ພຣະພັກພຣະເຈົ້າ.

<u>ພຣະເຢຊູຊົງຊຳຣະພຣະວິຫານ (11:11, 15-19)</u>

ພຣະເຢຊູຊົງໄປສຳຣວດເບິ່ງສິ່ງຕ່າງໆທີ່ເກີດຂຶ້ນໃນບໍຣິເວນພຣະວິຫານແລ້ວພຣະອົງກໍຊົງສະເດັດກັບມາໃໝ່ໃນມື້ ຕໍ່ໄປເພື່ອຈະຊົງຊຳຣະພຣະວິຫານນັ້ນ. ພຣະເຢຊູໄດ້ຊົງຊຳຣະພຣະວິຫານຄັ້ງນຶ່ງແລ້ວ (ໂຢຮັນ2:13-22), ແຕ່ຕໍ່ມາບໍ່ນານ ພວກພໍ່ຄ້າຂາຍສາສນາໄດ້ພາກັນກັບມາອີກ. ການປ່ຽນແປງພາຍນອກຢູ່ໄດ້ແບບບໍ່ຍາວນານ ເວັ້ນເສັຽແຕ່ພວກເຮົາຈະມີການປ່ຽນແປງພາຍໃນຈິດໃຈ. ໃນຕອນແລກ ເຈົ້າໜ້າທີ່ໄດ້ອະນຸຍາດໃຫ້ມີການແລກເງິນແລະການຂາຍນົກໃນບໍຣິເວນພຣະວິຫານເພື່ອໃຫ້ຄວາມສະດວກກັບຊາວຢິວທີ່ມາຈາກຕ່າງເມືອງ. ແຕ່ພາຍຫລັງມາພວກພໍ່ຄ້າໄດ້ໃຊ້ບໍຣິເວນພຣະວິຫານເພື່ອປະກອບການທຸຣະກິດທົ່ວໆໄປຊຶ່ງເປັນການບໍ່ສົມຄວນ.

ພຣະເຢຊູຊົງບອກພວກຄົນທັງຫລາຍວ່າ, "ວິຫານ...ເປັນສະຖານທີ່ໄຫວ້ວອນຂອງຄົນທຸກຊາດ ແຕ່ຝ່າຍພວກເຈົ້າໄດ້ເຮັດໃຫ້ ເປັນຖ້ຳຂອງໂຈນ" (11: 17). ພຣະເຢຊູຄຣິດຊົງອ້າງເຖິງພຣະທັມເອຊາຍາ 56:7 ແລະ ພຣະທັມເຢຣະ ມີຢາ 7:11. ຜູ້ປະກາດພຣະທັມທັງສອງຄົນໄດ້ປະນາມປະເທດອິສຣາເອັນສຳລັບຄວາມບາບໃນພຣະວິຫານໃນສມັຍຂອງພວກເຂົາເຈົ້າ (ອຊຍ 1; ຢຣມ 7). "ຖ້ຳຂອງໂຈນ" ເປັນບ່ອນທີ່ພວກຜູ້ຮ້າຍອ້າຍຂະໂມຍພາກັນໄປລີ້ຕົວ ຫລັງຈາກພວກເຂົາໄດ້ທຳການຂ້າເຈົ້າເອົາຂອງແລ້ວ. ພວກຜູ້ນຳທາງສາສນາໃນສມັຍຂອງພຣະເຢຊູພາກັນໃຊ ການນະມັສການພຣະເຈົ້າເປັນສາກບັງໜ້າເພື່ອປົດບັງຄວາມຜິດບາບຂອງພວກເຂົາ.

<u>ການທ້າທາຍເຣື່ອງສິດອຳນາດ (11:27-33)</u>

ພວກຜູ້ນຳສາສນາເກີດຄວາມເດືອດຮ້ອນເພາະການກະທຳແລະພຣະຄຳຂອງພຣະເຢຊູ; ຄວາມຈິງແລ້ວພວກເຂົາມີຄວາມຕັ້ງໃຈທີ່ຈະທຳລາຍພຣະອົງ (11:18), ແຕ່ພວກເຂົາຍັງບໍ່ມີຂໍ້ຫາພຽງພໍ. ພວກເຂົາໄດ້ຖາມພຣະອົງວ່າ, "ເຈົ້າມີສິດອັນໃດເຮັດການເຫລົ່ານີ້ ໃຜໃຫ້ສິດນີ້ແກ່ເຈົ້າ? " (ຂໍ້ 28-29, 33). ພວກເຂົາສົນໃຈວ່າ ພຣະເຢຊູໄດ້ສິດມາຈາກໃຜໃນການ ຊົງຊຳຣະພຣະວິຫານ ແລະຊົງປະກາດວ່າ ພຣະວິຫານເປັນຂອງພຣະອົງ? ພຣະເຢຊູໄດ້ຊົງປະກາດວ່າພຣະອົງຄືພຣະເຈົ້າໃນ 11:17.

ພຣະເຢຊູຊົງຕອບພວກນັກສາສນາທັງຫລາຍໂດຍກ່າວເຖິງການຮັບໃຊ້ຂອງໂຢຮັນບັບຕິສະໂຕ; ພຣະອົງຊົງຖາມພວກເຂົາວ່າ ໂຢຮັນໄດ້ສິດມາຈາກໃຜໃນການບັບຕິສະມາຂອງເຂົາ? ພຣະອົງຖາມຕໍ່ໄປວ່າ "ມາຈາກສວັນຫລືມາຈາກມະນຸດ?" (ຂໍ້ 30). ພວກນັກທັມແລະເຖົ້າແກ່ບໍ່ສາມາດທີ່ຈະຕອບຄຳຖາມຂອງພຣະອົງ; ພວກເຂົາຮູ້ຕົວເອງວ່າພວກຕົນກຳລັງພົບກັບບັນຫາທີ່ແກ້ບໍ່ໄດ້. ເພາະຖ້າພວກເຂົາບອກວ່າການຮັບໃຊ້ຂອງໂຢຮັນມາຈາກສວັນ, ປະຊາຊົນທັງຫລາຍກໍຈະກຽດຊັງພວກນັກສາສນາເພາະພວກເຂົາໄດ້ປະຕິເສດໂຢຮັນ. ແລະຖ້າຕອບວ່າການຮັບໃຊ້ຂອງໂຢຮັນມາຈາກມະນຸດ, ປະຊາຊົນກໍຈະກຽດຊັງພວກເຂົາເຊັ່ນດຽວກັນເພາະປະຊາຊົນທັງຫລາຍເຊື່ອວ່າໂຢຮັນເປັນຜູ້ປະກາດພຣະທັມທີ່ມາຈາກພຣະເຈົ້າແທ້ໆ (11:32). ໃນທາງສ່ວນຕົວແລ້ວ ພວກປະໂຣຫິດໃຫຍ່ໄດ້ປະຕິເສດໂຢຮັນ (ລູກາ 7:29-30); ພວກເຂົາຍອມປ່ອຍໃຫ້ ກະສັດເຮໂຣດປະຫານຊີວິດໂຢຮັນບັບຕິສະໂຕ. ພວກເຂົາຮູ້ວ່າອີກບໍ່ດົນພວກເຂົາກໍຈະມອບພຣະເຢຊູຄຣິດໃຫ້ ປີລາດເພື່ອປະຫານຊີວິດເຊັ່ນກັນ.

ຄວາມເຫັນແກ່ຕົວຂອງພວກນັກທັມ (12:1-12)
ພຣະເຢຊູຊົງຮູ້ດີວ່າພວກຜູ້ນຳທາງສາສນາຕ້ອງການທີ່ຈະຂ້າພຣະອົງ; ໃນຄຳອຸປມາຕໍ່ໄປນີ້ພຣະອົງໄດ້ເປີດເຜີຍເຈຕນາຂອງພວກເຂົາ. ພວກປະໂຣຫິດຕ້ອງການຂ້າພຣະເຢຊູເພື່ອຈະຮັກສານໍຣະດົກໄວ້ໃຫ້ກັບຕົວເອງ (ໂຢຮັນ 11:45-53). ໃນເຣື່ອງອຸປມານີ້ພວກເຮົາຮູ້ວ່າ ສວນອະງຸ່ນໝາຍເຖິງປະເທດອິສຣາເອັນ (ອຊຢ 5:1-7; ພສສ 80: 8-16; ຢຣມ 2:21), ຄົນເຊົ່າສວນໝາຍເຖິງພວກຜູ້ນຳປະເທດ (ມຣກ 12:10; ກຈກ 4:11).

ພຣະທັມ ລະບຽບພວກເລວີ ບົດທີ 19:23-25 ໄດ້ບອກກົດລະບຽບກ່ຽວກັບການເກັບກ່ຽວສຳລັບຄົນເຊົ່າສວນ. ເຈົ້າຂອງສວນມີສິດໄດ້ຮັບພາກສ່ວນຂອງຜົນປູກ ເພື່ອເປັນການຮັກສາສິດທີໃນການເປັນເຈົ້າຂອງທີ່ດິນ. ການທີ່ຜູ້ເຊົ່າສວນບໍ່ຍອມຈ່າຍຄ່າເຊົ່ານັ້ນ ກໍຄືການບໍ່ຖືສິດຂອງເຈົ້າຂອງສວນ. ນອກຈາກນັ້ນ, ຖ້າຜູ້ສືບນໍຣະດົກຕາຍໄປ ນໍຣະດົກທັງໝົດກໍຈະຕົກເປັນຂອງພວກຜູ້ເຊົ່າ.

ພຣະເຢຊູຊົງອີງໃສ່ ບົດເພັງສັຣເສີນ 118 (ອ່ານ ພສສ 118:22-23; ປຽບທຽບ ມຣກ 11:9 ແລະ ພສສ 118: 25-26); ແລະພຣະອົງຊົງປ່ອຍໃຫ້ພວກຜູ້ຟັງທັງຫລາຍຕັດສິນຕົນເອງ (ມັດທາຍ 21:41). ພຣະເຢຊູຊົງປຽບທຽບພຣະອົງເອງໃສ່ຫີນເສົາເອກເພື່ອທຸກຄົນຈະໄດ້ຮູ້ວ່າພຣະອົງຄືພຣະຜູ້ໂຜດໃຫ້ພົ້ນ (ກຈກ 4:11; 1 ເປໂຕ 2: 7). ແຕ່ສຳລັບພວກນັກທັມແລະພວກປະໂຣຫິດແລ້ວພວກເຂົາຖືວ່າພຣະເຢຊູຫມິ່ນປມາດພຣະເຈົ້າ; ແລະພວກເຂົາກໍໄດ້ຫລັກຖານເພີ້ມເຕີມເພື່ອຈະຈັບພຣະອົງໂດຍບໍ່ຢ້ານການຕໍ່ຕ້ານຂອງປະຊາຊົນອີກຕໍ່ໄປ.

ຄຳຖາມ:

1. ພຣະເຢຊູຊົງຕຳຫນິການນະມັສການໃນພຣະວິຫານ. ຄຳຕຳໜິນີ້ມີຄວາມໝາຍແນວໃດສຳລັບການນະມັສການໃນສມັຍນີ້?

2. ມັດທາຍໃຊ້ຄຳວ່າ "ຜູ້ໃຈອ່ອນສຸພາບແລະຖ່ອມລົງ" ເມື່ອເຂົາເວົ້າເຖິງພຣະເຢຊູຄຣິດ (ມັດທາຍ 11:29). ທ່ານຈະອະທິບາຍການຊົງປ້ອຍຕົ້ນເຄື່ອເທດ ແລະການຊົງຊຳຣະພຣະວິຫານຂອງພຣະເຢຊູຄຣິດແນວໃດ?

3. ທ່ານໄດ້ເຫັນຄົນສລາດໃນສມັຍນີ້ທ້າທາຍສິດອຳນາດຂອງພຣະເຢຊູແນວໃດແດ່?

4. ຄຳອຸປມາເຣື່ອງສວນອະງຸ່ນແລະຄົນເຊົ່າມີຄຳສອນແນວໃດແດ່ສຳລັບຄຣິສຕະຈັກໃນສມັຍນີ້?

# ບົດຮຽນທີ 11
# ພຣະເຢຊູຖວາຍຊີວິດຂອງພຣະອົງເອງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 14: 12-26; 32-42

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 14:1-42

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູສະມັກໃຈທີ່ຈະຖວາຍຊີວິດຂອງຕົນດ້ວຍຄວາມເຊື່ອ ໃນພຣະເຈົ້າ ພຣະບິດາ ຜູ້ຊົງສົ່ງພຣະອົງລົງມາ.

**ຄຳຖາມເພື່ອສຳຣວດ:** ແມ່ນຫຍັງທີ່ມີຄຸນຄ່າຫລາຍກວ່າຫມູ່ໃນຊີວິດຂອງຄົນໆນຶ່ງ?

**ຈຸດປະສົງຂອງບົດຮຽນ:** ເພື່ອຊ່ວຍໃຫ້ນັກຮຽນ ເຂົ້າໃຈໃນການຮູ້ບຸນຄຸນທີ່ພຣະເຢຊູໄດ້ສະລະຊີວິດ ຫລືການຖວາຍຕົວ ຂອງພຣະອົງ.

## ຄຳນຳ

ນິທານເກົ່າຂອງຊາວຍິວເຣື່ອງນຶ່ງ ທີ່ເລົ່າກັນສືບມາເປັນເວລານານ. ມີຄົນລ້ຽງແກະຄົນນຶ່ງ ໄດ້ນຳແກະຂອງຕົນອອກໄປລ້ຽງທີ່ທົ່ງຫຍ້າທຸກໆວັນ. ເມື່ອຫມົດຫຍ້າບ່ອນນຶ່ງລາວກໍຈະຍ້າຍຝູງແກະ ໄປຫາອີກທີ່ອື່ນ ເຮັດຢ່າງນັ້ນເປັນປະຈຳ. ບໍ່ວ່າຈະມີສັດຮ້າຍປານໃດກໍຕາມລາວກໍຈະພະຍາຍາມ ຕໍ່ສູ້ສັດຮ້າຍນັ້ນ ເພື່ອປ້ອງກັນແກະຂອງລາວ. ມີວັນນຶ່ງ ສິງຮ້າຍໂຕນຶ່ງທີ່ໃຫຍ່ ແລະແຂງແຮງ ອອກຈາກປ່າອັນຕຶບຫນາມາ ຫວັງຈະມາກິນແກະຂອງລາວ. ເມື່ອລາວແນມເຫັນລາວກໍຕຽມຕົວຈະໄປສູ້ກັບສິງຮ້າຍນັ້ນ ແຕ່ພໍສູ້ໄປເປັນເວລາອັນຍາວນານ ລາວກໍອ່ອນແຮງ ແລະແລ້ວລາວກໍເສັຍເສັຽຊີວິດ. ເຫດການນີ້ ພວກເຮົາຈະເຫັນວ່າ ລາວໄດ້ສລະຊີວິດຂອງລາວເພື່ອແກະຂອງລາວ.

ຕົວຢ່າງນີ້ ຖ້າເຮົາຈະເບິ່ງໃນພຣະເຢຊູ ພວກເຮົາກໍຈະເຫັນການສລະພຣະຊົນຂອງພຣະອົງເອງ ດັ່ງຈະເຫັນໃນພຣະທັມຄັມພີ ໂຣມ 5:7. ຢ່າງໃດກໍຕາມ ບົດຮຽນນີ້ຈະສອນພວກເຮົາເຖິງການ ສມັກໃຈ ທີ່ຈະຊ່ວຍທຸກຄົນ ບໍ່ແມ່ນແຕ່ຄົນດີ ແລະ ຄົນຊອບທັມເທົ່ານັ້ນ. ແຕ່ຄົນບາບຢ່າງທ່ານແລະຂ້າພະເຈົ້າດ້ວຍ.

## ພຣະເຢຊູໄດ້ສ້າງຄວາມຊົງຈຳໃນການສິ້ນພຣະຊົນຂອງພຣະອົງ (14:12-26)

ການສເລີມສລອງເທສການປັສຄາ ຂອງຊາວອິສຣາເອນ ແມ່ນຍາມທີ່ລູກໂຕປີຂອງຊາວຍິວຖືກຂ້າ ແລະກໍແມ່ນການກິນອາຫານຄາບແລງ ຂອງວັນທີ ສິບຫ້າ ເດືອນນີສານ ຂອງຍິວ (ຖ້າເປັນປະຕິທິນປັດຈຸບັນກໍແມ່ນ ລະຫວ່າງເດືອນ ມີນາ ແລະເມສາ). ແລະກໍແມ່ນ ເທສການນີ້ ແມ່ນການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ລວມທັງເປັນລະດູເກັບກ່ຽວເຂົ້າບາລີ. ແລະກໍຍັງເປັນການລະນຶກເຖິງການອອກຈາກ ອີຢິບຂອງຄົນອິສຣາເອນ .

ຫົວຫນ້າຄອບຄົວແຕ່ລະເຮືອນຕ້ອງໄດ້ນຳແກະມາວິຫານ ໃນຕອນແລງຂອງວັນທີ ສິບສີ່ ຂອງເດືອນນີສານ. ເມື່ອນຳມາເຖິງວິຫານແລ້ວ ຫົວຫນ້າທີ່ຢູ່ໃນໂບດຈະເປັນຜູ້ຂ້າແລະເອົາເລືອດພົມ ສະຖານທີ່ບູຊາ. ສ່ວນເນື້ອຊີ້ນ ແລະເຄື່ອງໃນຕ່າງໆນັ້ນແມ່ນນຳໄປຄົວກິນ ເພື່ອຈະກິນໃນແລງວັນນັ້ນ.

ໃນສມັຍນັ້ນຄົນຂ້າແກະເປັນຈຳນວນຫລວງຫລາຍ ຖ້າຈະປະມານເບິ່ງແລ້ວ ປີນຶ່ງເຖິງ ສອງແສນຫ້າ ຫາ ສາມລ້ານຕົວ. ເທສການນີ້ກໍມີການວຸ້ນວາຍ ແລະຈາລະຈົນ ເລື້ອຍໆ. ດັ່ງນັ້ນ ຣັຖບານກຸງໂຣມ ຈຶ່ງຍົກຍ້າຍຈາກເຢຣູຊາເລັມ ມາເຮັດທີ່ກາຍຊາເຣັຽ ເພື່ອຈະໄດ້ຄວບຄຸມສະຖານະການໄດ້ດີ.

**1. ການຕຽມປັສຄາ** (14:12-16)

ເມື່ອພຣະເຢຊູ ແລະ ພວກສາວົກຍັງຢູ່ບ້ານເບັດທານີ, ພວກເຂົາເຈົ້າຕ້ອງໄດ້ໄປກຸງເຢຣູຊາເລັມ ເພື່ອ ໄປຊື້ສິ່ງຂອງບາງຢ່າງທີ່ຈຳເປັນ. ພຣະເຢຊູສົ່ງສອງຄົນ (ໂຢຮັນ ແລະ ເປໂຕ ລກ 22:8). ແລະສັ່ງພວກເຂົາ ວ່າ ໃຫ້ຕິດຕາມຄົນນຶ່ງທີ່ທູນໝໍ້ນ້ຳ ແລ້ວລາວຈະບອກບ່ອນທີ່ຈະກິນປັສຄາ.

ເຮືອນທີ່ ເຢຣູຊາເລັມ ຈະມີ ນຶ່ງ ຫາ ສີ່ຫ້ອງໃນຊັ້ນດຽວກັນ. ແຕ່ຖ້າເຮືອນຫລັງໃດຫາກມີ ຫ້ອງຊັ້ນ ເທິງ ກໍໝາຍຄວາມວ່າເຮືອນນັ້ນຈະເປັນຄົນຮັ່ງມີແດ່. ໃນຮູບພາບເຊັ່ນນີ້ ພວກເຮົາຈະເຫັນວ່າພຣະເຢຊູກຳລັງຢູ່ໃນການນຳພາໃນການເດີນໄປສູ່ການຖວາຍຕົວ. ບໍ່ແມ່ນວ່າບໍ່ມີໃຜຊ່ວຍພຣະອົງ ຫລືກຳລັງຖືກການວາງແຜນສັງຫານແຕ່ຢ່າງໃດ. ແຕ່ພຣະເຈົ້າຊົງຄວບຄຸມທຸກພຶດຕິກັມ, ພຣະເຢຊູເປັນອິສລະພາບ, ພຣະອົງຢູ່ໃນແຜນການທຸກຢ່າງ ທີ່ຈະນຳຕົວເອງໄປສູ່ການໄຖ່ບາບຂອງມະນຸດ.

**2. ການກິນປັສຄາ** (14: 17-21)

ໂຕະກິນເຂົ້າອາດຈະຕ່ຳໄປແດ່ ພວກສາວົກກໍນັ່ງອ້ອມເທິງໄປທາງຊ້າຍແລະໃຊ້ມືຂວາກິນເຂົ້າ. ພຣະເຢຊູ ເລີ້ມກ່າວຂຶ້ນວ່າ ພວກທ່ານໃນທີ່ນີ້ຈະມີຄົນນຶ່ງທໍຣະຍົດຕໍ່ເຮົາ (14:18) ການຮັປທານອາຫານຮ່ວມກັນແມ່ນການຜູກສັມພັນ ແຕ່ໃນທີ່ນີ້ເປັນຫຍັງພຣະອົງຈຶ່ງກ່າວດັ່ງນັ້ນ. ພວກສາວົກກໍພາກັນສະທ້ານໃຈ. ທຸກຄົນກໍພາກັນຕອບວ່າ ບໍ່ແມ່ນຂ້ານ້ອຍຕີ້. (14:19) ການຮັປທານກໍຜ່ານໄປ.

**3. ສເລີມສລອງການລະນຶກໃໝ່** (14:22-26)

ຫລັງຈາກນັ້ນ ພຣະເຢຊູ ກໍໄດ້ເລີ້ມການຖືສິນລະນຶກຄັ້ງທຳອິດ (14:22) ພຣະເຢຊູຊົງຮັບເຂົ້າຈີ່ແລະຮັບຈອກແລ້ວສົ່ງໃຫ້ສາວົກຕໍ່ໆໄປ. ການລະນຶກຄັ້ງນີ້ ມີການສັງເກດຫລາຍຢ່າງ : ການເບິ່ງ, ການສັມພັດ, ການຊີມຣົດ, ການສືບກິ່ນ, ການຟັງ. ຕັ້ງແຕ່ນັ້ນມາ ທົ່ວໂລກກໍພາກັນເຮັດສືບຕໍ່ກັນມາ.

ໃນມາຣະໂກ 14:24 ພຣະເຢຊູກ່າວວ່າ ນີ້ຄືພັນທະສັນຍາທີ່ຖອກອອກມາເພື່ອຫລາຍຄົນ. ສັນຍາເກົ່າທີ່ ມີການຖວາຍສັດນັ້ນແມ່ນໄດ້ຜ່ານພົ້ນໄປແລ້ວ. ພຣະເຢຊູຊົງກ່າວຢ່າງຈະແຈ້ງວ່າພຣະອົງຊົງເປັນແກະ ແລະຍັງກ່າວວ່າ ນີ້ຄືເລືອດຂອງເຮົາ. ນ້ຳຜົນອະງຸ່ນ ທີ່ພຣະເຢຊູກ່າວນັ້ນ ຕ້ອງແມ່ນນ້ຳອະງຸ່ນທີ່ຖືກມັກ ໄວ້ ແລະນຳມາປະສົມກັບນ້ຳ ເພື່ອໃຫ້ ແອນກໍຮໍທີ່ມີໃນນັ້ນ ຈືດຈາງອອກ. (14:25)

## <u>ພຣະເຢຊູ ອ້ອນວອນດ້ວຍຄວາມທຸກໃຈແລະຖວາຍຕົວ (14:32-42)</u>

ໃນແຜ່ນດິນຕອນທີ່ຊື່ວ່າ ເຄັດເຊມະເນນີ້ ພວກເຮົາຈະເຫັນພຣະເຢຊູໜັກໃຈຫລາຍສ່ຳໃດ, ພຣະອົງໄດ້ຊວນເອົາ ເປໂຕ, ຢາໂກໂບ ແລະ ໂຢຮັນ ອອກໄປນຳເພື່ອວ່າຈະມີຫຍັງເກີດຂຶ້ນ. ລູກາກ່າວວ່າ ສວນນີ້ແມ່ນສວນໝາກກອກເທດ (ລກ 23:39) ສ່ວນໂຢຮັນ ເວົ້າວ່າ ສວນ (ຢຮ 18:1) ເຖິງຈະເວົ້າຢ່າງໃດກໍຕາມ ສວນນັ້ນກໍແມ່ນບ່ອນທີ່ພຣະເຢຊູຊົງເປັນທຸກໃຈຫລາຍທີ່ສຸດ. ຄິດນຳກັນໜ້ອຍນຶ່ງ ເປັນຫຍັງພຣະເຢຊູຈຶ່ງຊັກຊວນ ເອົາ ສາມຄົນນີ້:

ເປໂຕ: ເປັນຄົນມັກສເນີຫນ້າ " ເຖິງແມ່ນວ່າທຸກຄົນຈະສະດຸດໃຈ ສ່ວນຂ້ານ້ອຍບໍ່ສະດຸດໃຈ" ແລະ " ເຖິງແມ່ນຂ້ານ້ອຍຈະຕ້ອງຕາຍກັບທ່ານ ຂ້ານ້ອຍຈະບໍ່ປະຕິເສດທ່ານ" ມກ 14:29; 31

ຢາໂກໂບແລະໂຢຮັນ: ເປັນຄົນມັກໄດ້, ຢາກໄດ້ຕຳແນ່ງ. "ຂໍໂຜດໃຫ້ຂ້ານ້ອຍນັ່ງທີ່ເບື້ອງຂວາທ່ານຄົນນຶ່ງ ແລະເບື້ອງຊ້າຍຄົນນຶ່ງ." ມກ 10:35-40

ພຣະເຢຊູໄດ້ໃຫ້ໂອກາດເຂົາ ແຕ່ແລ້ວເຂົາກໍລົ້ມເຫລວ.

**ການອ້ອນວອນຂອງພຣະເຢຊູໃນສວນເຄັດເຊມະເນ ສຳແດງອອກເຖິງສາມຢ່າງທີ່ສຳຄັນຄື:**

**1. ພຣະເຢຊູຊົງຮູ້ຈັກຄວາມຮັກຂອງພຣະບິດາດີ** (14:36) "ອັບບາ ບິດາເອີຍ ພຣະອົງຊົງກະທຳສິ່ງທັງປວງໄດ້" ແທ້ຈິງແລ້ວ ຫລາຍສັດຕະວັດຜ່ານມາ ຄົນຢິວສ່ວນຫລາຍກໍໃຊ້ຄຳວ່າ ພຣະບິດາ. ການທີ່ພຣະເຢຊູ ໃຊ້ຄຳວ່າອັບບາ ກໍຄ້າຍໆກັບລູກຂອງພວກເຮົາ ມັກຮ້ອງພໍ່ວ່າ ແດ໋ດີ້ ຊຶ່ງເປັນຄຳເວົ້າທີ່ໃກ້ຊິດຂຶ້ນ. ພຣະອົງຍັງຮູ້ວ່າ ພຣະບິດາມີອຳນາດຫລາຍປານໃດ. ພຣະອົງຊົງເຊື່ອເຫມືອນເດັກໆ ທີ່ຮັກພໍ່ຂອງຕົນເອງ.

**2. ພຣະເຢຊູບໍ່ຢາກທໍຣະມານ ແລະ ບໍ່ຢາກຕາຍ** (14:36) ພຣະເຢຊູອ້ອນວອນ " ຂໍໃຫ້ຈອກນີ້ເລື່ອນພົ້ນໄປຈາກລູກທ້ອນ " ໃນພຣະກິດຕິຄຸນ ທັງສີ່ເຫລັ້ມ ບໍ່ໄດ້ມີການເນັ້ນຫນັກຄວາມນຶກຄິດຂອງພຣະເຢຊູຫລາຍປານໃດ ແຕ່ໃນນີ້ ມີການສຳແດງຄວາມຮູ້ສຶກຂອງພຣະອົງຫລາຍ. ພຣະອົງທຸກຣະທົມແລະອ່ອນເພັຽໄປທັງ ກາຍ (14:33) ພຣະອົງສິ້ນເນື້ອປະດາຕົວ, ຮູ້ສຶກໂດດດ່ຽວ, ຮູ້ສຶກຫວ່າງເປົ່າ ເພາະໃນເວລານີ້ ພຣະເຢຊູບໍ່ໄດ້ຍິນສຽງຂອງພຣະບິດາ ວ່າ "ເຈົ້າເປັນບຸດທີ່ຮັກຂອງເຮົາ" ແລະບໍ່ມີນົກພິລາບບິນລົງມາຫາພຣະອົງ. ບໍ່ມີທູດສວັນ ແລະບໍ່ມີເພື່ອນທີ່ໃກ້ຊິດ. ສາວົກຂອງພຣະອົງກໍພາກັນຫາຍຫນ້າຫມົດເລີຍ.

ໃນສະພາບຂອງມະນຸດແລ້ວ ພຣະເຢຊູບໍ່ຢາກຕາຍ. ພຣະອົງຍັງຫນຸ່ມນ້ອຍຫລາຍ ພຽງແຕ່ 33 ປີເທົ່ານັ້ນ. ແຕ່ພຣະອົງຊົງຊາບດີວ່າຈະຕ້ອງມີການຖວາຍຕົວ ພຣະອົງຕົວສັ່ນ ແລະຢ້ານກົວຫລາຍແທ້ໆ. ໂດຍສະເພາະຢ່າງຍິ່ງແລ້ວ ພຣະອົງຜູ້ບໍ່ເຄີຍມີບາບ ຈະມາແບກບາບຂອງມະນຸດທັງໂລກ.

ພວກເຮົາໄດ້ຮັບການຫນູນໃຈໃນຂໍ້ນີ້ ກໍຄືວ່າ ພຣະເຢຊູຍອມເຮັດຕາມພຣະບິດາ, ພຣະເຢຊູເຊື່ອໃນການອະທິຖານ. ພຣະເຢຊູເຊື່ອວ່າພຣະອົງຊົງຮັບຟັງຄຳອະທິຖານ ແລະພຣະອົງຊົງຈັດຕຽມທຸກຢ່າງ. ພວກເຮົາບໍ່ຄວນລັງເລໃຈ ອະທິຖານຕໍ່ພຣະອົງວັນນີ້.

**3. ເມື່ອທຸກໃຈຫລາຍເຊັ່ນນັ້ນ, ພຣະເຢຊູກໍຊົງມອບໃຫ້ເປັນພາຣະຂອງພຣະບິດາ** (14:36) ພຣະເຢຊູອ້ອນວອນ "ຂໍຢ່າໃຫ້ເປັນໄປຕາມຄວາມປາຖນາຂອງລູກ ແຕ່ໃຫ້ເປັນໄປຕາມພຣະທັຍຂອງພຣະອົງເຖີ້ນ." 30 ປີກ່ອນທີ່ພຣະເຢຊູຈະມາບັງເກີດ, ມາຣີອາ ມານດາຂອງພຣະອົງກໍໄດ້ອ້ອນວອນຄ້າຍຄືກັນ. ໃນເວລາທີ່ພຣະເຈົ້າຊົງເລືອກເອົາເພິ່ນ ໃຫ້ເປັນຄົນຖືພາ. ລາວຢ້ານແລະສັ່ນສາຍ. ແລະແລ້ວໃນທີ່ສຸດລາວກໍຕອບວ່າ " ຂ້ານ້ອຍນີ້ລະ ເປັນຂ້ອຍຍິງຂອງອົງພຣະຜູ້ເປັນເຈົ້າ ຂໍໃຫ້ບັງເກີດແກ່ຂ້ານ້ອຍ ຕາມຄຳຂອງເຈົ້າກູເຖີ້ນ." ລກ 1:38 ເຖິງແມ່ນວ່າ ຄຳເວົ້າຈະບໍ່ແມ່ນຄຳດຽວກັນ ແຕ່ກໍຄ້າຍຄືກັນ.

ແປກປລາດຫລາຍ ເຫດການຮ້າຍແຮງຈະເກີດຂຶ້ນ ແຕ່ສາວົກ ຊໍ້າພັດພາກັນນອນຫລັບ. ແທນທີ່ຈະເປັນຜູ້ຊ່ວຍໃນການອະທິຖານ ແລະເປັນຜູ້ຢືນຢູ່ຄຽງຂ້າງ. ເປໂຕຜູ້ບອກວ່າຈະບໍ່ຕິເສດເຖິງສາມເທື່ອ ກໍຍັງນອນຫລັບເຖິງສາມເທື່ອ. ພວກເຂົາຄົງຈະເສັຽໃຈຫລາຍທີ່ບໍ່ຮັບເອົາປະສົບການຈາກພຣະອົງໃນເວລານັ້ນ.

ຍິງຄົນດຽວ (ຜູ້ທີ່ເອົາກະອອມທີ່ນນ້ຳຫອມ ໄປທົດສົງພຣະເຢຊູ) ຢູ່ໃກ້ພຣະອົງ ໃນຂນະທີ່ສາວົກທີ່ໃກ້ຊິດ ແຕກກະຈັດກະຈາຍກັນໄປ. ພວກຜູ້ຍິງທີ່ມີຄວາມເຊື່ອ ຢືນເຝົ້າເບິ່ງພຣະເຢຊູ ແລະ ຕໍ່ມາ ກໍນຳນ້ຳຫອມ ໄປທົດສົບຂອງພຣະອົງ.

## <u>**ຄຳຖາມ:**</u>

1. ທ່ານຄິດບໍ່ວ່າ ຊາຍຄົນທີ່ຫູບຫມໍ້ນ້ຳ ແມ່ນຫມາຍຂອງການຕຽມປັສຄາ ຫລືທ່ານຄິດວ່າຢ່າງໃດ?

2. ເປັນຫຍັງພຣະເຢຊູຈຶ່ງຊົງເລືອກ ເອົາເທສການປັສຄານີ້ ເປັນການຖືສິນລະມຶກ?

3. ເປັນຫຍັງພຣະເຢຊູຈຶ່ງ ຖືວ່າສຳຄັນໃນການທີ່ພຣະອົງຊົງຖວາຍຕົວເພື່ອໄຖ່ບາບໃຫ້ຊາວໂລກ?

4. ທ່ານຄວນຈະມີຫນ້າທີ່ຮັບຜິດຊອບຫຍັງແດ່ບໍ່ ທີ່ພຣະເຢຊູ ຖວາຍຕົວຂອງພຣະອົງ?

# <u>ບົດຮຽນທີ 12</u>
# <u>ພຣະເຢຊູຖືກຕັດສິນລົງໂທດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 14: 53 -- 15:20

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ມາຣະໂກ 14:43--15:20

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຫລາຍຄົນມີສ່ວນຮ່ວມ ໃນການສອບສວນ, ພຣະເຢຊູໂຕ້ຕອບດ້ວຍການ ມິດງຽບ ແລະ ວາງເສີຍ.

**<u>ຄຳຖາມເພື່ອສຳຣວດ:</u>** ທ່ານຈະເຮັດຢ່າງໃດ ໃນເມື່ອຖືກທ້າທາຍໃນຄວາມເຊື່ອ?

**<u>ຈຸດປະສົງຂອງບົດຮຽນ:</u>** ໃນການທົດລອງນີ້ ພຣະເຢຊູຊົງ ໂຕ້ຕອບຜູ້ທີ່ມາສອບສວນພຣະອົງຢ່າງໃດ.

## <u>ຄຳນຳ</u>

ໃນປີ 1805, ທ່ານ ແຟຣນຊີສ ໂບຟອດ ໄດ້ຄົ້ນພົບເຄື່ອງວັດແທກອາກາດ ຊຶ່ງພວກເຮົາໃຊ້ກັນຢູ່ທຸກວັນນີ້. ເຄື່ອງນີ້ສາມາດແທກ ອາກາດ ຕັ້ງແຕ່ (ລົມພັດຄ່ອຍໆ) 1 ຫາ 3 ໄມລ ຕໍ່ຊົ່ວໂມງ -- (ພາຍຸ) 73 ຫາ 136 ໄມລ ຕໍ່ຊົ່ວໂມງ. ຖ້າຫາກລົມພັດ ຕ່ຳກ່ວາ 1 ໄມລຕໍ່ຊົ່ວໂມງ ຮ້ອງວ່າ ລົມສງົບງຽບ ຖ້າປຽບໃສ່ການກະທຳຂອງຄົນ ກໍອາດຈະເວົ້າໄດ້ວ່າ ເປັນຄົນສຸຂຸມ ຮຽບໆ. ການສງົບງຽບຂອງຄຣິສຕຽນ ແມ່ນການທີ່ເຫັນວ່າ ທຸກສິ່ງຢູ່ໃນສາຍພຣະເນດຂອງພຣະເຈົ້າ, ເຮັດໃຫ້ເຮົາເຫັນຄວາມກ້າຫານ, ການມີກຳລັງ ແລະມີຄວາມເຊື່ອໝັ້ນໃນຕົວເອງ.

ການວາງຕົວສງົບງຽບຂອງພຣະເຢຊູ ໃນເວລາຊົ່ວໂມງສຸດທ້າຍ ກ່ອນຈະກ້າວໄປສູ່ຫລັກປະຫານນັ້ນ ສະແດງເຖິງຄວາມສລາດ ເດັດດ່ຽວ ຕໍ່ສູ້ກັບຄວາມໂຫດຮ້າຍ ອາລົມຮຸນແຮງທີ່ຢູ່ອ້ອມໆ ພຣະອົງ ໃນເວລານັ້ນ. ວັນນີ້ ພວກເຮົາຈະມາສຶກສາ ເຖິງຄວາມສງົບງຽບຂອງ ພຣະເຢຊູ ຕໍ່ການກະທຳຂອງຢູດາ, ຂອງພວກນັກທັມ, ຂອງຊີໂມນເປໂຕ, ຂອງຝູງຊົນໃນສະພາແຊນຮິດຣິນ, ຂອງ ປີລາດ ແລະຂອງທະຫານໂຣມັນ.

**ຢູດາ ອິສກາຣີອົດ** (14:43-52)

ວັນນຶ່ງ ປະມານປີ ທີ 4 ກ່ອນຄຣິສຕະການ, ໃນໝູ່ບ້ານເຄຣີອົດ ມີເດັກນ້ອຍຄົນນຶ່ງເກີດຂຶ້ນມາ. ພໍ່ ແມ່ຂອງລາວດີໃຈ ເພາະມີລູກຊາຍ, ໃສ່ຊື່ໃຫ້ລາວວ່າ ສັຣເສີນ. ຍາດພີ່ນ້ອງກໍນຳຂອງຂວັນມາມອບໃຫ້.

ປະມານເວລາໃກ້ໆກັນ, ທີ່ບ້ານເບັດເລເຮັມ ກໍມີເດັກນ້ອຍຄົນນຶ່ງເກີດມາ. ພໍ່ ແມ່ ຂອງລາວ ກໍດີໃຈເພາະມີລູກຊາຍເຫມືອນກັນ, ໃສ່ຊື່ໃຫ້ລາວວ່າ ຜູ້ຊ່ວຍ. ພວກລ້ຽງແກະ ແລະໂຫຣາຈານກໍນຳຂອງຂັວນມາມອບໃຫ້ລາວ.

ສາມສິບປີຕໍ່ມາ, ເດັກນ້ອຍທີ່ເກີດຈາກບ້ານ ເຄຣີອົດ ກໍມີຊື່ອີກວ່າ ຢູດາ(ສັຣເສີນ) ແລະເດັກນ້ອຍຜູ້ທີ່ເກີດ ຈາກເບັດເລເຮັມ ກໍມີຊື່ອີກວ່າ ເຢຊູ (ຜູ້ຊ່ວຍ) ໄດ້ມາພົບພໍ້ກັນ ແລະຢູດາ ກໍໄດ້ຕິດຕາມພຣະເຢຊູວ່າເປັນພຣະເມຊີອາ. ເມື່ອຢູດາຮູ້ດີວ່າພຣະເຢຊູຈະບໍ່ນຳພາໃນການປະຕິວັດ ລາວຈຶ່ງຂາຍພຣະເຢຊູ. (14:10)

ມກ 14:43 ຢູດາຄົງຮູ້ດີວ່າພຣະເຢຊູ ຢູ່ໃນສວນເຄັດເຊມະເນ ຈຶ່ງນຳທະຫານແລະຝູງຊົນ ຖືດາບແລະໄມ້

ຄ້ອນໄປຈັບພຣະອົງ. ເວລານັ້ນອາດຈະຍັງເດີກຢູ່ ຢູດາຈຶ່ງມອບພຣະເຢຊູດ້ວຍການຈູບ. ທຸກວັນນີ້ຈຶ່ງບໍ່ມີ ໃຜຢາກໃສ່ຊື່ລູກຫລານຂອງຕົນວ່າ ຢູດາ ເພາະເປັນຄົນຂາຍຄົນທັງເປັນ.

ເປໂຕພະຍາຍາມຈະຕໍ່ສູ້ ແຕ່ພຣະເຢຊູຊົງຫ້າມປາມໄວ້. ເພາະວ່າ:

(1) ຜູ້ຖືດາບຈະຖືກທຳລາຍດ້ວຍດາບ ມທ 26:52

(2) ພຣະອົງວາງໃຈໃນການປົກປ້ອງຂອງພຣະບິດາ ມທ 26:53

(3) ພຣະອົງຮູ້ວ່າພຣະປະສົງຂອງພຣະບິດາຢູ່ນຳພຣະອົງ ມທ 26:54

ຄຣິສຕຽນບັບຕິສ ເມື່ອມີການຂັດແຍ້ງຜິດຖຽງກັນ, ພາກັນຂຶ້ນກ້ອນ ຂຶ້ນສານຟ້ອງຮ້ອງກັນ ບອກວ່າເປັນ ເຣື່ອງຂອງກົດຫມາຍ. ເປັນຫຍັງຈຶ່ງເຮັດຢ່າງນັ້ນ ທ່ານຍັງຈຳໄດ້ບໍ່ ຄຳເຕືອນຂອງພຣະເຢຊູວ່າ ເຖິງແມ່ນວ່າ ເຮົາຢູ່ໃນໂລກນີ້ກໍຈິງ ເຮົາກໍບໍ່ໄດ້ສູ້ຮົບຕາມທັມມະດາຂອງມະນຸດ ເພາະວ່າເຄື່ອງອາວຸດຂອງເຮົາບໍ່ເປັນຝ່າຍ ໂລກ ແຕ່ມີຣິດອຳນາດຈາກພຣະເຈົ້າ ອາດທຳລາຍ ຄ້າຍອັນເຂັ້ມແຂງໄດ້ ຄືທຳລາຍຄວາມຄິດທີ່ມີເຫດ ຜົນອັນບໍ່ຈິງ. 2ກທ 10:3-4

ການຕໍ່ສູ້ ຢູດາ, ພຣະເຢຊູສັດຊື່ຕໍ່ພຣະບິດາ ຕິດຕາມພຣະປະສົງຂອງພຣະເຈົ້າ. ພຣະເຢຊູປຽບເຫມືອນບໍ່ນ້ຳ ພຣະອົງສງົບງຽບດ້ວຍຄວາມຫມັ້ນໃຈ ເພື່ອເອົາຊະນະຕໍ່ຄວາມຢ້ານກົວ.

## ພວກມະຫາປະໂຣຫິດ (14:53-64)

ມາຣະໂກ ກ່າວວ່າ ພວກທຳອິດ ທີ່ເຂົາຈັບພຣະເຢຊູໄປຫາກໍຄື ພວກປະໂຣຫິດ ຊຶ່ງໃນນັ້ນກໍມີພວກ ປະໂຣຫິດ, ພວກນັກທັມ, ພວກເຖົ້າແກ່, ທີ່ຊຸມນຸມກັນຢູ່ແລ້ວ ຫລືອີກຄວາມນຶ່ງກໍເວົ້າວ່າສະພາແຊນຮິດຣິນ. ສະພານີ້ມີອຳນາດຕ່ຳກວ່າ ອຳນາດຂອງໂຣມັນ. ພວກນີ້ຕຽມຈັບພຣະເຢຊູແຕ່ນານແລ້ວ, ບັດນີ້ພວກເຂົາ ກໍ ກຳລັງຈະຊອກຂໍ້ກ່າວຫາໃຫ້ຫນັກຂຶ້ນ.

ພວກເຂົາມີພະຍານຫລາຍປາກ: ຄົນນີ້ ປິ່ນປົວພະຍາດຂ້ອຍ, ຄົນນີ້ ເຮັດໃຫ້ລູກສາວຂ້ອຍຟື້ນຂຶ້ນຈາກ ຕາຍ ແຕ່ວ່ານັ້ນບໍ່ແມ່ນຂໍ້ກ່າວຫາທີ່ເຂົາຊອກຫາ. ພວກເຂົາຈຶ່ງຊອກຫາພະຍານເທັດເພື່ອປັກປຳ ພຣະອົງ ເມື່ອເຂົາໃຫ້ພະຍານເທັດແລ້ວ ເຂົາຈຶ່ງຖາມພຣະເຢຊູ. ພຣະອົງບໍ່ໃຫ້ຄຳຕອບແຕ່ຢ່າງໃດ (ມິດຢູ່) ພວກ ເຂົາຈຶ່ງຈີ້ຈໍ້ພຣະອົງ. "ເຈົ້າເປັນພຣະຄຣິດພຣະບຸດຂອງພຣະເຈົ້າຫລື" ພຣະອົງຈຶ່ງຕອບວ່າ "ເຮົາເປັນຜູ້ນັ້ນ ແຫລະ" ພວກເຂົາຈຶ່ງຄຽດແຄ້ນຫາຂໍ້ວ່າພຣະອົງຫມິ່ນປມາດພຣະເຈົ້າ. ແລະທັງຫມົດທຸກຄົນກໍກ່າວວ່າຕ້ອງ ລົງໂທດເຖິງຄວາມຕາຍ. ພຣະເຢຊູຮູ້ດີວ່າຖ້າເວົ້າຄວາມຈິງຈະຕ້ອງມີໂທດເຖິງຕາຍ, ແຕ່ພຣະອົງກໍເຊື່ອວ່າ ເຖິງຢ່າງໃດກໍຕ້ອງເຊື່ອ ແລະຖວາຍກຽດໃຫ້ແກ່ພຣະເຈົ້າ.

## ຊີໂມນ ເປໂຕ (14:54,66-72)

ພຣະທັມມາຣະໂກ ແມ່ນຈາກການບັນທຶກການເປັນພະຍານຂອງ ຊີໂມນ ເປໂຕ. ໃນການສອນ ເປໂຕ ອາດຈະກ່າວຄຳພະຍານນີ້ຊ້ຳແລ້ວຊ້ຳອີກ. ນີ້ລະ ຄືຊີວິດທີ່ຂ້າພະເຈົ້າປະຕິເສດພຣະເຢຊູ ແຕ່ພຣະອົງກໍຍັງ ຮັກຂ້າພະເຈົ້າຢູ່ຕລອດມາ. ພຣະອົງຊົງອະພັຍໃຫ້ຂ້າພະເຈົ້າດ້ວຍພຣະຄຸນ. ບໍ່ວ່າ ທ່ານຈະກະທຳສິ່ງໃດ ພຣະອົງ ຈະໃຫ້ອະພັຍ,ແລະໃຫ້ຄວາມລອດແກ່ທ່ານ.

ເປໂຕປະຕິເສດພຣະເຢຊູໃນຂນະທີ່ຍິງຄົນໃຊ້ຄົນນຶ່ງທັກທ້ວງລາວ. (14:67) ບໍ່ແມ່ນແຕ່ຄັ້ງດຽວ ເທົ່ານັ້ນ, ລາວປະຕິເສດເຖິງສາມຄັ້ງ. ຢ່າງນຶ່ງທີ່ເປໂຕກະທຳ ແລະຫລາຍຄົນຄວນຈະເອົາເປັນແບບຢ່າງຄື ລາວບໍ່ຍອມປະລະພຣະເຢຊູ. ລາວຕິດຕາມຕລອດເວລາ ແລະຕິດຕາມໄປຈົນເຖິງເວລາສຸດທ້າຍຂອງລາວ. ເຖິງແມ່ນຈະຕາມໄປຫ່າງໆ ກໍຍັງດີກວ່າບໍ່ຕາມເລີຍ.

**ຝູງຊົນໃນສະພາແຊນຮີດຣິນ** (14:65)

ຖ້າຈະເວົ້າແລ້ວ ຫລາຍຄົນມີຖານະດີຈົນເຖິງເປັນຜູ້ນັ່ງໃນສະພາ ແຕ່ການກະທຳນັ້ນຊ່າງເປັນໜ້າລັງກຽດ ຫລາຍ: ບາງຄົນຖົ່ມນ້ຳລາຍ, ເອົາຜ້າມັດຕາ ໃຫ້ທວາຍ, ຂ້ຽນຕີແບບບໍ່ມີຄວາມເປັນມະນຸດ.

ຕໍ່ສູ້ກັບຄວາມໂຫດຮ້າຍນີ້ ພຣະເຢຊູ ຕ້ອງໄດ້ໃຊ້ຄວາມອົດທົນແລະມິດງຽບຢູ່. ເຖິງແມ່ນເຂົາເອົາຜ້າມັດຕາ ແຕ່ພຣະອົງກໍຮູ້ວ່າ ຜູ້ໃດເຮັດອັນໃດ. ພຣະອົງພ້ອມແລ້ວທີ່ຈະໃຫ້ອະພັຍແກ່ເຂົາ. ພຣະອົງມີຄວາມຮັກໄຄ່ມະ ນຸດຫລາຍກວ່າສິ່ງໃດທັງໝົດ.

**ປີລາດ** (15:1-15)

ຜູ້ທີສອງທີ່ພວກເຂົານຳໄປຫາ ກໍຄືປີລາດ. ສະພາແຊນຮີດຣິນ ກ່າວຫາວ່າພຣະເຢຊູດູໝິ່ນພຣະເຈົ້າ. ແຕ່ວ່າ ເວລານຳມາຫາປີລາດ ແມ່ນຫາວ່າເປັນນັກໂທດການເມືອງ, ນຳການຊຸມນຸມ, ຕໍ່ຕ້ານອຳນາດຂອງກາຍຊາ ແລະເອີ້ນຕົວເອງວ່າເປັນກະສັດ. (ລກ 23:1-5) ປີລາດກໍພະຍາຍາມຊັກໃຊ້ໄລ່ຖາມ ແຕ່ພຣະອົງຊົງຊາບດີ ວ່າ ການຕອບໄປກໍຄົງຈະບໍ່ມີປໂຍດຫຍັງ. ສິ່ງທັງໝົດນີ້ເຮັດໃຫ້ປີລາດປລາດໃຈ.

ໃນທີ່ສຸດປີລາດກໍບໍ່ຮູ້ຈະເຮັດຢ່າງໃດ. ລາວຈຶ່ງຍົກເອົາຊື່ສອງຄົນຂຶ້ນມາ ຄືບາຣະບາແລະພຣະເຢຊູ. (27:16) ບາຣະບາ ແປວ່າ ລູກຂອງພໍ່ ແລະ ເຢຊູ ພຣະບຸດອົງດຽວຂອງພຣະບິດາ. ພວກສະພາແຊນຮີດຣິນ ໄດ້ໄປຍຸ ຍົງຝູງຊົນໃຫ້ຮ້ອງໂຮຂຶ້ນ "ປະຫານພຣະເຢຊູ, ປະຫານພຣະເຢຊູ" ປີລາດເລືອກເອົາການເມືອງ, ຄິດວ່າຕົວ ເອງສລາດເອົາຕົວລອດເປັນຍອດດີ ເຮັດໃຫ້ປະຊາຊົນພໍໃຈ. ພວກເຮົາທັງຫລາຍກໍມັກເປັນເຫມືອນປີລາດ, ມັກເອົາຕາມຝູງຊົນ. ນັກເທດບາງຄົນກໍຍັງເອົາຕາມຝູງຊົນເພາະເຂົາຈ່າຍຄ່າໂບດ ແລະເຂົາກໍຊື້ໂບດໃຫ້.

**ທະຫານໂຣມັນ** (15:16-20)

ສູນກາງການປົກຄອງຂອງທະຫານໂຣມັນ ແມ່ນບ່ອນທີ່ມີຫົວໜ້າສູງສຸດປະຈຳການຢູ່. (15:16) ທະຫານ ເປັນຝູງປະມານ 400 ຫາ 600, ທຸກຄົນມາຮ່ວມກັນເຍາະເຍີ້ຍພຣະອົງ. ພວກເຂົາເອົາເສື້ອສີມ່ວງ ມາຄຸມໃຫ້ ພຣະອົງ ເຮັດມົງກຸດດ້ວຍໜາມອກໜາມ ແລະກໍດູຖູກວ່າເປັນກະສັດຂອງຊາດຢິວ. ພຣະເຢຊູບໍ່ຍອມເອີ່ຍປາກ ແມ້ແຕ່ຄຳດຽວ.

ແຕ່ກ່ອນພຣະເຢຊູເຄີຍເປັນພະເອກ ສາມາດປົວຄົນ ຫ້າມພະຍຸ, ລ້ຽງເກືອຝູງຊົນ ແຕ່ບັດນີ້ພຣະເຢຊູຊົງຢູ່ເສີຍໆ ງຽບສງົບ ພຣະອົງຊົງກະທຳດັ່ງນີ້ສອນພວກເຮົາວ່າ ໃຫ້ມີຄວາມອົດທົນ, ບໍ່ວ່າຈະທຸກໂສກປານໃດກໍຕາມ

ຈົ່ງຕໍ່ສູ້ດ້ວຍສັນຕິວິທີ ແລະດ້ວຍພຣະຄຸນຂອງພຣະເຈົ້າ ວາງໃຈວ່າພຣະອົງຈະຊົງນຳເຮົາອອກຈາກການທໍຣະມານນັ້ນໄດ້.

**<u>ຄຳຖາມ:</u>**

1. ແມ່ນໃຜເປັນຜູ້ຂ້າພຣະເຢຊູແທ້? ພວກນັກທັນ, ອຳນາດຂອງໂຣມັນ, ຝູງຊົນ? ຫລືວ່າແມ່ນແຜນການຂອງພຣະເຈົ້າ?

2. ພຶດຕິກັມຂອງຢູດາ, ເປໂຕ, ສາວົກ, ແລະພວກອື່ນໆ ອະພັຍໃຫ້ໄດ້ບໍ່?

3. ເມື່ອພວກເຮົາຫາກພົບກັບວິກິດການທີ່ບໍ່ຄາດຝັນໄວ້ກ່ອນ, ເຮົາຈະຮັບເອົາຕົວຢ່າງຂອງພຣະເຢຊູຢ່າງໃດ?

4. ເມື່ອຄວາມເຊື່ອຖືກທ້າທາຍ, ມີໃຜແດ່ໃນພຣະຄັມພີ ທີ່ທ່ານຮູ້ ແລະຄວນຖືເປັນຕົວຢ່າງເໝືອນພຣະເຢຊູ?

# ບົດຮຽນທີ 13
# ພຣະເຢຊູຊົງສິ້ນພຣະຊົນແລະເປັນຄືນມາອີກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 15:21--41; 16:1-8

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 15:21--16:8

**ຈຸດສຳຄັນຂອງບົດຮຽນນີ້:** ການສິ້ນພຣະຊົນແລະການເປັນຄືນມາ ສະແດງວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າແທ້.

**ຄຳຖາມເພື່ອສຳຣວດ:** ແມ່ນຫຍັງທີ່ເຮັດໃຫ້ທ່ານເຊື່ອພຣະເຢຊູ ການດຳເນີນຊີວິດ,ການສິ້ນພຣະຊົນ ຫລືການຄືນພຣະຊົນ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ເຫັນຈຸດເດັ່ນ ໃນການປ່າວປະກາດ, ໃນການຖວາຍຕົວ, ໃນການຄືນພຣະຊົນ ວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າແທ້ ຜູ້ທີ່ເຮົາມອບຊີວິດໃຫ້.

## ຄຳນຳ

ຄຣິສຕຽນສມັຍແຕ່ກ່ອນບໍ່ໄດ້ສເລີມສລອງຄຣິສມາດ ແຕ່ວ່າແຕ່ລະອາທິດພວກເຂົາເຈົ້າພາກັນນັ່ງລະນຶກເຖິງ ການເກີດ, ການຕາຍ ແລະ ການຄືນພຣະຊົນຂອງພຣະເຢຊູ. ການເຮັດດັ່ງນັ້ນ ກໍປຽບເຫມືອນຝັງໄຟແຫ່ງຄວາມຄິດເຖິງໄວ້ໃນດວງໃຈ. ໄຟນັ້ນກໍເຫມືອນພຣະກິດຕິຄຸນ ຂອງພຣະຄັມພີ ຊຶ່ງມີແສງແຫ່ງຄວາມອົບອຸ່ນໃນພຣະສັນຍາໃຫມ່.

**ການປະຫານຊີວິດພຣະເຢຊູ** (15:21-41)

**1. ຊີໂມນຄົນກີເຣເນ ເປັນຜູ້ແບກໄມ້ກາງແຂນ** (15:21) ເປັນທັມມະດາການສັງຫານຂອງຄົນໂຣມັນມີການປ່ຽນແປງ. ໄມ້ສອງທ່ອນ ຊຶ່ງໄດ້ມາຈາກຊ່າງໄມ້ ກໍສາມາດໃຊ້ຂ້າຄົນໄດ້. ຄົນທີ່ຈະຖືກຂ້າຕ້ອງໄດ້ແບກໄມ້ຂອງຕົນເອງ ມຸ້ງຫນ້າໄປຫາບ່ອນປະຫານ ລະຫວ່າງກາງທະຫານສີ່ຄົນ, ສ່ວນຄົນທີຫ້າຈະຖືແຜ່ນປ້າຍ ທີ່ຂຽນບອກຄວາມຜິດຂອງນັກໂທດ. ພວກເຂົາຈະໃຊ້ຫົນທາງທີ່ເວົ້ງໄກ ເພື່ອໃຫ້ຫລາຍຄົນເຫັນ. ເມື່ອເຖິງສະຖານທີ່ແລ້ວ ພວກເຂົາກໍໃຫ້ນັກໂທດນອນລົງ ຢຽດໃສ່ໄມ້. ແລ້ວກໍຕອກຕະປູໃສ່ມືແລະຕີນ ແລ້ວກໍປຸກຫລັກຂຶ້ນ ປ່ອຍໃຫ້ນັກໂທດ ຕາຍເອງຍ້ອນຄວາມເຈັບ, ການຫາຍໃຈຝືດ, ການເຈັບປວດຕາມກ້ອນຊີ້ນ, ການອ່ອນເພັຽແລ້ວກໍຕາຍໄປ, ບາງຄົນກໍຕາຍໄວ ບາງຄົນກໍຕາຍຊ້າ.

ຄວາມອ່ອນເພັຽຈາກການທຸບຕີ, ຈາກການຂາດອາຫານ ແລະຈາກການທີ່ວນອນ ພຣະເຢຊູບໍ່ສາມາດທີ່ຈະແບກກາງແຂນຕົນເອງໄປໄດ້ ຊີໂມນຈຶ່ງໄດ້ມາແບກຕາງ.

**2. ພວກທະຫານນຳພາໄປທີ່ປະຫານ** (15:22-27)

ໂກລະໂກທາ ແມ່ນພາສາ ອາລາເມັກ. ຄຳນີ້ ແປວ່າ "ກະໂຫລກຫົວ" ບໍ່ມີພຣະກິດຕິຄຸນເຫລັ້ມໃດກ່າວເຖິງວ່າເປັນບ່ອນໃດແທ້ ແຕ່ພໍຮູ້ໄດ້ ກໍຄືນອກເມືອງ ເພາະການເດີນທາງໄປນັ້ນມີໄລຍະໄກພໍປະມານ.

ທີ່ເອີ້ນວ່າ ກະໂຫລກຫົວນັ້ນ ອາດຈະແມ່ນ ສະຖານທີ່ນີ້ ຢູ່ໃກ້ທາງຫຼວງ ຂອງນັກທ່ອງທ່ຽວ ແລະເຫັນກະໂຫລກຫົວຢາຍຊະຊາຍຢູ່.

ສມັຍ ປີ326 , ນັກທໍຣະນີສາດ ກ່າວວ່າ ແຕ່ກ່ອນທີ່ນັ້ນເປັນດິນແດນຂອງໂບດ ເປັນບ່ອນທີ່ສັກສິດ. ອີກສະຖານທີ່ນຶ່ງຊື່ງຢູ່ໃກ້ງກັບ ປະຕູເຂົ້າ ດາມາເຊ ພວກນັກທ່ອງທ່ຽວມັກໄປຢ້ຽມຢາມຫລາຍເຫມືອນກັນ. ແຕ່ວ່າສວນນີ້ ແມ່ນມີມາໃຫມ່ໆ ຫລັງຈາກສມັຍພຣະເຢຊູມານານແລ້ວ.

ເຫລົ້າແວງ ໃນ (15:23) ແມ່ນສິ່ງນຶ່ງຊື່ງແລ້ວເຮັດໃຫ້ມຶນເມົາ ລືມຄວາມເຈັບປວດ. ພຣະເຢຊູປະຕິເສດທີ່ຈະຮັບ ເພາະພຣະອົງ ຈະໄດ້ຮັບຮູ້ເຖິງຄວາມເຈັບປວດ ແລະ ຄວາມຕາຍຢ່າງແທ້ຈິງ. ສໍາລັບເຄື່ອງນຸ່ງ ພວກເຂົາກໍໄດ້ເອົາມາຈົກສລາກແບ່ງປັນກັນ.

ອີງໃສ່ການບັນທຶກຂອງມາຣະໂກແລ້ວ ພຣະເຢຊູຖືກຄຶງຕອນເວລາ 9 ໂມງເຊົ້າ. ຕອນ 12 ໂມງທ່ຽງຄວາມມືດໄດ້ປົກຄຸມແຜ່ນດິນ ພຣະເຢຊູໄດ້ຮ້ອງສຽງດັງແລະສິ້ນພຣະຊົນເວລາ 3 ໂມງແລງ. ຕາມທັມນຽມແລ້ວ ຂໍ້ຫາລົງໂທດນັ້ນຕ້ອງໄດ້ຂຽນຕິດໄວ້ເທິງຫົວຂອງນັກໂທດ, ແຕ່ສໍາຫລັບພຣະເຢຊູແລ້ວເຂົາຂຽນວ່າ "ກະສັດຂອງຊາດຍິວ" ຄໍາເວົ້ານັ້ນຫມາຍເຖິງການດູຖູກ ແຕ່ນັ້ນເປັນຄວາມຈິງ. (15:26)

ໂຈນສອງຄົນທີ່ຢູ່ ແຕ່ລະຂ້າງນັ້ນ, ພວກນີ້ແມ່ນພວກທີ່ມີຄວາມຜິດແລະສົມຄວນທີ່ຈະໄດ້ຮັບໂທດຕາມທີ່ພວກເຂົາກະທໍາຜ່ານມາ. ພຣະຄັມພີຂຽນໄວ້ວ່າພຣະອົງຕ້ອງຖືກນັບເຂົ້າຮ່ວມກັບຄົນລ່ວງລະເມີດ.

**3. ຝູງຊົນເຍາະເຍີ້ຍພຣະອົງ** (15:29-32)

ຄົນທັງຫລາຍທີ່ຍ່າງໄປຍ່າງມາ ກໍເຍາະເຍີ້ຍແລະ ຫມິ່ນປມາດພຣະອົງ ແລະສັ່ນຫົວດ້ວຍ. ພວກນັກທັມກໍພາກັນເຍາະເຍີ້ຍເຫມືອນກັນ. "ມັນຊ່ອຍຄົນອື່ນໃຫ້ພົ້ນໄດ້ ແຕ່ຊ່ອຍຕົນເອງບໍ່ໄດ້, ຊ່ວຍຕົວເອງໃຫ້ລົງມາຈາກໄມ້ກາງແຂນທະແມ້ ເພື່ອພວກເຮົາຈະໄດ້ເຊື່ອນໍາ." ທຸກວັນນີ້ການເຍາະເຍີ້ຍນີ້ກໍຍັງຫລົງເຫລືອຢູ່ ແລະກໍຍັງມີບາງພວກນໍາມາໃຊ້ກັນ. ດີແລ້ວທີ່ພຣະເຢຊູບໍ່ໄດ້ລົງມາຈາກກາງແຂນ ຖ້າພຣະອົງລົງມາພວກເຮົາກໍບໍ່ໄດ້ເຊື່ອມາເຖິງປານນີ້.

**4. ພຣະເຢຊູແບກຄວາມບາບຂອງຊາວໂລກ** (15:33-39)

ເພື່ອຈະຢັ້ງຢືນວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າແທ້ຈິງນັ້ນ, ມາຣະໂກ ເນັ້ນວ່າພຣະເຢຊູເປັນມະນຸດ ຮ້ອຍເປີເຊັນ ແລະເປັນພຣະເຈົ້າແທ້ ເພາະພຣະອົງຄວບຄຸມອາລົມ, ເຊື່ອຢ່າງແທ້ຈິງ, ເປັນຜູ້ທໍານວາຍ, ໃຫ້ອະພັຍແກ່ຄົນບາບ, ໃນຖານະມະນຸດ ພຣະອົງ ຮູ້ຈັກອິດເມື່ອຍ, ມີການເລືອດຕົກຢາງອອກ, ຫິວນ້ໍາ ແລະພຣະອົງຍັງຖາມພຣະບິດາວ່າ " ເປັນຫຍັງພຣະອົງຈິ່ງປິ່ນພຣະພັກໄປຈາກຂ້ານ້ອຍ? "

ການສິ້ນພຣະຊົນແບບແປກປລາດຢ່າງນີ້ ກໍສາມາດພິສູດໃຫ້ເຫັນການເປັນພຣະບຸດຂອງພຣະເຈົ້າໄດ້. ແຕ່ກໍຍັງມີບາງຄົນ ວ່າແມ່ນກົບກິນເດືອນ, ລົມພັດຂີ້ຝຸ່ນຫລາຍຈົນເຮັດໃຫ້ຟ້າມືດ, ຫລື ວ່າໃກ້ຝົນຈະຕົກຟ້າກໍມືດມົວ. ແຕ່ມາຣະໂກ ຢາກແນະນໍາວ່າ ມັນບໍ່ແມ່ນເຣື່ອງທັມມະດາ, ມັນແມ່ນເຣື່ອງທີ່ສລັບຊັບຊ້ອນ ເປັນເຣື່ອງມະຫັສຈັນຢ່າງໃຫຍ່.

ຄໍາສຸດທ້າຍທີ່ໄດ້ຍິນ ດັງມາຈາກໄມ້ກາງແຂນ (15:34) ຊີ້ແຈງວ່າ ການຕາຍນັ້ນແມ່ນການຕາຍເພື່ອ

ຄວາມບາບຂອງຊາວໂລກ. ການລົງໂທດທີ່ໜັກໜ່ວງທີ່ສຸດ ໄດ້ສະແດງໃນຄວາມທໍຣະມານຂອງພຣະອົງ ກ່ອນໜົດລົມຫາຍໃຈ. ພຣະເຢຊູມີປະສົບການໃນການຖືກຕັດຂາດຈາກພຣະບິດາ. ໂປໂລກ່າວໃນ 2 ໂກຣິນໂທ 5:21 ວ່າ "ເພາະວ່າພຣະເຈົ້າໄດ້ຊົງກະທຳໃຫ້ພຣະຄຣິດ ຜູ້ຊົງບໍ່ມີຄວາມຜິດບາບນັ້ນ ໄດ້ເຂົ້າສ່ວນກັບຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ສ່ວນໃນຄວາມຊອບທັມຂອງພຣະເຈົ້າໂດຍທາງພຣະອົງ."

ຕາມທັມມະດາ ຄົນທີ່ຖືກຄຶງຈະອ່ອນແຮງລົງແລ້ວກໍຕາຍໄປ, ແຕ່ພຣະເຢຊູ ມີແຮງຢູ່, ເມື່ອຮ້ອງສຽງດັງແລ້ວກໍສິ້ນພຣະຊົນ. (15:37) ອີກອັສຈັນນຶ່ງກໍຄືຜ້າກັ້ງໃນພຣະວິຫານຖືກຈີກຂາດ ຕັ້ງແຕ່ເທິງຈົນເຖິງລຸ່ມ (15:38) ນີ້ກໍສະແດງວ່າທຸກຄົນ ທີ່ເຊື່ອໃນພຣະເຢຊູ ສາມາດຕິດຕໍ່ກັບພຣະເຈົ້າໄດ້. ນາຍຮ້ອຍຜູ້ນຶ່ງຊຶ່ງສັງຊອມເຫດການຢູ່ນັ້ນ ກໍເວົ້າວ່າ "ຈິງແທ້ແລ້ວ ທ່ານຜູ້ນີ້ ແມ່ນພຣະບຸດຂອງພຣະເຈົ້າ" (15:39)

**<u>5. ພວກຜູ້ຍິງຍັງມີຄວາມເຊື່ອໃນພຣະອົງ</u>** (15:40-41)

ທັງສອງມາຣີອາ ແລະນາງຊາໂລເມ ຍັງພາກັນຕິດຕາມເບິ່ງເຫດການຂອງພຣະອົງ ແລະພວກຜູ້ຍິງອື່ນອີກດ້ວຍ.

## ການຄືນພຣະຊົນຂອງພຣະເຢຊູ (15:42-16:8)

**<u>1. ພຣະເຢຊູສິ້ນພຣະຊົນແລະຖືກນຳໄປຝັງ</u>** (15:42-47 )

ເປັນຫຍັງພຣະຄັມພີຈຶ່ງກ່າວເຖິງການສິ້ນພຣະຊົນຂອງພຣະເຢຊູ ຫລາຍບ່ອນແລະລະອຽດແທ້? ຄຳຕອບກໍມີຢູ່ວ່າ ການຖືກຝັງນັ້ນເປັນຄວາມຈິງ ພຣະເຢຊູສິ້ນພຣະຊົນແທ້ ພຣະອົງບໍ່ແມ່ນເປັນລົມໄປຊື່ໆ ຫລືນອນຫລັບໄປຊື່ໆ ແລ້ວເພື່ອຈະລໍ້ລວງຄົນໃຫ້ເຊື່ອ. ລາຍລະອຽດອີກອັນນຶ່ງກໍຄືອຸບໂມງຖືກເປົ່າແປນ ຊຶ່ງມີຫລາຍຄົນໄດ້ເປັນພະຍານ.

ໂຢເຊບໄທບ້ານອາຣີມາທາຍ ເປັນຄົນທີ່ບໍ່ມີຊື່ສຽງປານໃດ. ແຕ່ຮູ້ວ່າເປັນສະມາຊິກສະພາ ແຊນຮິດຣິນ. ລາວອາດຈະຢູ່ໃນທີ່ນັ້ນດ້ວຍ ເວລາພຣະເຢຊູຖືກຕັດສິນ. ລາວຈຶ່ງກ້າສາມາດ ເຂົ້າໄປຫາປີລາດ ເພື່ອຂໍເອົາພຣະສົບຂອງພຣະອົງ. ໃນການບັນຈຸສົບນັ້ນ ມາຣີອາໄທມັກດາລາ ແລະ ມາຣີອາແມ່ຂອງໂຢເຊບ ກໍເຫັນດ້ວຍ. (15:42)

ໃນການສັງຫານແບບນີ້ ຕາມທັມມະດາແລ້ວ ຕ້ອງໃຊ້ເວລາຫລາຍວັນ, ປີລາດກໍແປກປລາດໃຈ ທີ່ມີພຽງແຕ່ 6 ຊົ່ວໂມງ ພຣະເຢຊູກໍໜົດລົມຫາຍໃຈແລ້ວ. ປີລາດຈຶ່ງສັ່ງທະຫານໄປກວດກາເບິ່ງ. ໂຢເຊບເປັນຄົນຮັ່ງມີ ຈຶ່ງສາມາດມີອຸໂມງສ່ວນຕົວໄດ້. ໃນການຈັດຕຽມພຣະສົບນັ້ນກໍມີຫລາຍຄົນມາຊ່ວຍ ໃນນັ້ນ ມີທັງນີໂກເດມ ຜູ້ທີ່ມາຫາພຣະເຢຊູໃນຍາມກາງຄືນ (ໂຢຮັນ 19:38-39)

**<u>2. ພຣະເຢຊູຟື້ນຄືນຈາກຕາຍ ແລະ ຍັງມີຊີວິດຢູ່</u>** (16:1-8)

ມາຣະໂກຂຽນບົດສຸດທ້າຍຂອງລາວ, ຫລາຍຄົນກ່າວວ່າ ມາຈົບຢູ່ທີ່ ຂໍ້ 8. ສ່ວນຂໍ້ຕໍ່ໄປອາດແມ່ນຜູ້ອື່ນເພາະບໍ່ແມ່ນຄຳເວົ້າຂອງມາຣະໂກ. 8 ຂໍ້ກໍພຽງພໍກັບຄວາມຕ້ອງການຢູ່ແລ້ວ, ຊຶ່ງໃຫ້ຄວາມກະຈ່າງແຈ້ງສົມຄວນ ໃນຄວາມເຊື່ອຂອງຄຣິສຕຽນ. ພຣະເຢຊູຟື້ນຄືນມາຈາກຕາຍແລະຍັງມີຊີວິດຢູ່ທຸກວັນນີ້. ເຊົ້າມືດຂອງວັນອາທິດ, ສອງມາຣີອາ ກໍພາກັນມຸ້ງໜ້າໄປຫາອຸໂມງ ທີ່ໂຢເຊບຝັງສົບພຣະເຢຊູໄວ້. ກັງວົນແຕ່ນຳ

ກ້ອນຫີນໃຫຍ່ທີ່ປິດປາກອຸໂມງ "ໃຜຈະເປັນຜູ້ຊ່ວຍກິ້ງຫີນອອກ?" ແຕ່ພໍໄປເຖິງ ພວກເຂົາກໍພາກັນຕົກໃຈ ເພາະກ້ອນຫີນກິ້ງອອກກ່ອນແລ້ວ. ພວກເຂົາເຫັນດັ່ງນັ້ນກໍຟ້າວແລ່ນໄປທີ່ວາງພຣະສົບ. ສົບກໍຫາຍໄປແລ້ວ. ແຕ່ວ່າມີທູດສວັນຫນຸ່ມຄົນນຶ່ງ ນັ່ງຢູ່ເບື້ອງຂວາ ໃສ່ເສື້ອຍາວສີຂາວ ພວກເຂົາກໍຍິ່ງຕົກໃຈ. ທູດສວັນກ່າວວ່າ : ຢ່າຕົກໃຈເທາະ ພຣະອົງຊົງເປັນຄືນມາແລ້ວ ຈົ່ງໄປບອກພວກສາວົກທັງຫລາຍເຖີ້ນ ! ເມື່ອໄດ້ຮັບຂ່າວຢ່າງນັ້ນແລ້ວພວກເຂົາກໍຟ້າວແລ່ນກັບຄືນ ນຳຂ່າວດີໄປບອກພວກສາວົກ. ຄັ້ງແລກ ພວກເຂົາຢ້ານຫລາຍ ຈົນບໍ່ກ້າຈະບອກຜູ້ໃດ.

ປື້ມມາຣະໂກກໍເຫັນວ່າສິ້ນສຸດລົງ, ມາຣະໂກ ແລະບົດຂຽນຂອງລາວແມ່ນເພື່ອ ຈະບອກຂ່າວໃຫ້ຄົນທັງຫລາຍຮູ້ວ່າ ພຣະເຈົ້າກຳລັງເຮັດຫຍັງ ແລະ ພຣະອົງຈະເຮັດຫຍັງ ແລະພຣະອົງໄດ້ເຮັດຫຍັງຜ່ານມາແດ່.

<u>**ຄຳຖາມ:**</u>

1. ໃນສັຕວັດທີນຶ່ງ ແມ່ນຫຍັງເປັນສິ່ງສະແດງອອກວ່າພຣະເຢຊູ ໄດ້ຟື້ນຄືນມາຈາກຕາຍ?

2. ມາຣະໂກອະທິບາຍວ່າ ຊີໂມນ ໄດ້ແບກໄມ້ກາງແຂນໃຫ້ພຣະເຢຊູ. ຄຳວ່າ ຈົ່ງແບກກາງແຂນຂອງຕົນ ແລະຕິດຕາມພຣະເຢຊູ ມີຄວາມຫມາຍຫຍັງ ສຳຫລັບເຮົາ?

3. ຫນ້າທີ່ ແລະ ຮ່າງກາຍຂອງພຣະເຢຊູ ສຳແດງໃຫ້ເຮົາເຫັນຢ່າງໃດ ໃນບົດຮຽນນີ້?

4. ຜ້າກັ້ງທີ່ພຣະວິຫານແມ່ນການສະແດງເຖິງຫຍັງ? (15:38) ການຈີກຂາດແຕ່ເທິງຮອດລຸ່ມ ມີຄວາມຫມາຍຢ່າງໃດ?

# <u>ບົດຮຽນເພີ້ມເຕີມ</u>
# <u>ພຣະເຢຊູຊົງສອນເລື່ອງອະນາຄົດ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 13:1-37

<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ມາຣະໂກ 13:1-37

<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຢຊູຊົງສອນສາວົກຂອງພຣະອົງໃຫ້ຄອຍຣະວັງແລະໃຫ້ຕັ້ງໝັ້ນຢູ່ໃນພຣະອົງ ແລະ ໃຫ້ຣະວັງການຫລອກລວງໃຫ້ຫລົງທາງຂອງຜູ້ຄົນທີ່ອ້າງຕົວເອງວ່າພວກເຂົາຮູ້ທຸກຢ່າງທີ່ຈະເກີດຂື້ນ.

<u>ຄຳຖາມເພື່ອການສຳຣວດ:</u> ພວກເຮົາຄວນຈະດຳເນີນຊີວິດແນວໃດໃນສະພາບການທີ່ບໍ່ແນ່ນອນ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສລຸບຄຳສອນຂອງພຣະເຢຊູຄຣິດໃນ ມາຣະໂກ 13 ແລະຫາວິທີທີ່ຖືກຕ້ອງເພື່ອການຕຽມພ້ອມສຳລັບການກັບມາຄັ້ງທີສອງຂອງພຣະອົງ.

<u>ເຣື່ອງທີ່ຈະເນັ້ນໃນການສຶກສາຄັ້ງນີ້:</u>

- ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັສ, ໃນສະຫະຣັຖ, ແລະໃນທົ່ວໂລກ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ

## <u>ຄຳນຳ</u>

ຄຣິສຕຽນໃນສມັຍທີ່ມາຣະໂກໄດ້ຂຽນພຣະທັມມາຣະໂກນີ້ກຳລັງຖືກກົດຂີ່ຂົ່ມເຫງ. ຫລາຍຄົນເກືອບຈະຍອມແພ້ໃນການເປັນພະຍານເຣື່ອງພຣະຄຣິດ. ມາຣະໂກຂຽນພຣະທັມຕອນນີ້ເພື່ອຊັກຊວນໃຫ້ຄຣິສຕຽນພາກັນຕັ້ງໝັ້ນຢູ່ໃນຄວາມເຊື່ອໃນອົງພຣະເຢຊູຄຣິດ. ພຣະທັມພາກນີ້ມີສ່ວນຄ້າຍຄືກັນກັບພຣະທັມມັດທາຍບົດທີ 24 ແລະ 25. ມາຣະໂກໄດ້ແບ່ງເຫດການໃນວັນສຸດທ້າຍນີ້ອອກເປັນສາມພາກດ້ວຍກັນ: ພາກຕົ້ນ (13:5-13), ພາກກາງ (13:14-18), ແລະພາກສຸດທ້າຍຂອງຄວາມທຸກລຳບາກໄປເຖິງວັນທີ່ພຣະເຢຊູຈະສະເດັດກັບມາເທື່ອທີສອງ (13:19-27). ພຣະທັມມາຣະໂກໃນຕອນນີ້ຍັງຈະເປັນຄຳສອນສຳຄັນສຳລັບຄຣິສຕຽນທີ່ຖືກຂົ່ມເຫງໃນທຸກໆສມັຍດ້ວຍ.

### <u>ຢ່າໃຫ້ຜູ້ໃດຫລອກລວງໃຫ້ຫລົງ (13:1-8)</u>

ພຣະວິຫານອັນສວຍງາມກຳລັງຈະຖືກທຳລາຍ (ຂໍ້ 2). ພວກສາວົກສີ່ຄົນໄດ້ຖາມພຣະເຢຊູວ່າ ເຫດການເຫລົ່ານີ້ຈະເກີດຂື້ນເມື່ອໃດ ແລະສິ່ງໃດຈະເປັນໝາຍສຳຄັນ. ພວກສາວົກເຂົ້າໃຈຜິດວ່າ ການທຳລາຍພຣະວິຫານ, ວັນສຸດທ້າຍ, ແລະ ການສະເດັດມາຂອງຣາຊອານາຈັກພຣະເຈົ້າຈະເກີດຂື້ນໃນເວລາດຽວກັນ; ສະນັ້ນພຣະເຢຊູຈຶ່ງໃຊ້ເວລາເພື່ອອະທິບາຍເຣື່ອງວັນສຸດທ້າຍໃຫ້ພວກເຂົາເຂົ້າໃຈເພື່ອທຸກຄົນຈະບໍ່ໄດ້ຖືກຫລອກລວງໃຫ້ຫລົງ. ພຣະເຢຊູຊົງເຕືອນພວກສາວົກເຖິງໝາຍຕ່າງໆທີ່ບໍ່ແມ່ນຂອງຈິງ (ຂໍ້ 7-8). ຄຳຕັກເຕືອນເຫລົ່ານັ້ນໄດ້ໃຫ້ໄວ້ກັບຊົນຊາດຢິວ ແຕ່ຄຣິສຕະຈັກຈະ ຕ້ອງຄອຍຣະວັງພວກຄຣູສອນປອມທີ່ຈະເກີດຂື້ນໃນຖ້າມກາງພວກເຮົາ (2 ເປໂຕ 2); ພວກເຮົາຄວນຈະຊອກຫາພຣະ ຜູ້ຊົງໂຜດໃຫ້ພົ້ນຂອງພວກເຮົາແທນທີ່ຈະສແວງຫາໝາຍສຳຄັນຕ່າງໆ (ຟີລິປອຍ 3:20-21).

### <u>ຢ່າມີຄວາມຢ້ານກົວ (13:9-13)</u>

ເວລາຖືກຂົ່ມເຫງຄືເວລາທີ່ພວກເຮົາຈະຕ້ອງປະກາດ. ພວກເຮົາບໍ່ຕ້ອງຢ້ານທີ່ຈະປະກາດຂ່າວປະເສີດ ແລະປະກາດວ່າພຣະເຢຊູຄຣິດຄືພຣະຜູ້ຊົງໂຜດໃຫ້ພົ້ນ ແລະພຣະເຈົ້າໃນຊີວິດຂອງພວກເຮົາ. ພຣະວິນຍານບໍຣິສຸດຈະຊົງຊ່ວຍຜູ້ທີ່

ປາຖນາຈະດຳເນີນຊີວິດໃນພຣະເຈົ້າແລະມີເຈຕນາທີ່ຈະຖວາຍກຽດແກ່ພຣະອົງໃນທຸກໆສິ່ງ. ພວກເຮົາໄດ້ເຫັນການທຳງານແລະສິ່ງອັສຈັນທີ່ພຣະວິນຍານບໍຣິສຸດໄດ້ເຮັດໃນພຣະທັມກິຈການຢ່າງຫລວງຫລາຍ.

ການສະເດັດກັບມາຂອງພຣະຄຣິດບໍ່ໄດ້ຢູ່ທີ່ຄວາມສຳເຣັດຂອງຂໍ້ 10. ແຕ່ສິ່ງເຫລົ່ານັ້ນຄືຄວາມປະສົງຂອງພຣະເຈົ້າ; ເຖິງວ່າມານຊາຕານຈະພຍາຍາມຂັດຂວາງຫລາຍປານໃດກໍຕາມ, ພຣະທັມຂອງພຣະເຈົ້າຈະຕ້ອງຖືກປະກາດ ແລະພຣະປະສົງສຳລັບໂລກມະນຸດຈະຕ້ອງສຳເຣັດ. ໃນຂນະດຽວກັນ, ພຣະເຈົ້າບໍ່ໄດ້ໃຫ້ພຣະທັມຂໍ້ 11 ເພື່ອໃຫ້ພວກເຮົາກາຍເປັນຄົນກຽດຄ້ານ. ສິດຍາພິບານ ແລະອາຈານທັງຫລາຍມີໜ້າທີ່ໃນການສຶກສາພຣະທັມ ແລະການອະທິຖານເພື່ອຕຽມຕົວສຳລັບການເທສນາແລະການສອນ. ພຣະເຢຊູຊົງໃຫ້ຄຳໜູນໃຈໃນຕອນນີ້ເພື່ອພວກເຮົາຈະບໍ່ໄດ້ທຸກກັງວົນຈົນເກີນໄປໃນເວລາພວກເຮົາພົບກັບຄວາມທຸກລຳບາກຫລືພົບກັບພັຍອັນຕະລາຍແລະບໍ່ຮູ້ວ່າຈະເວົ້າຫຍັງ.

ພຣະສັນຍາໃນຂໍ້ 13 ບໍ່ໄດ້ໝາຍຄວາມວ່າຖ້າຜູ້ໃດບໍ່ອົດທົນຜູ້ນັ້ນຈະບໍ່ໄດ້ລອດພົ້ນ; ພຣະທັມໃນຕອນນີ້ເວົ້າເຖິງພວກຜູ້ເຊື່ອໃນລະຍະທີ່ມີຄວາມທຸກລຳບາກອັນໃຫຍ່. ຄຳວ່າ "ວັນສຸດທ້າຍ" ໃນຂໍ້ 7 ແລະຂໍ້ 13 ໝາຍເຖິງວັນໝົດກັບ ແລະບໍ່ໄດ້ໝາຍເຖິງວັນສຸດທ້າຍຂອງຊີວິດພວກເຮົາແຕ່ລະຄົນ. ຄວາມເຊື່ອທີ່ແທ້ຈິງຈະຕິດຕາມດ້ວຍຄວາມຊື່ສັດ.

## <u>ຢ່າເປັນຄົນທີ່ບໍ່ມີສະຕິປັນຍາ (13:14-27)</u>

ພຣະທັມຂໍ້ 14 ແລະ 23 ເນັ້ນເຖິງການຮຽນຮູ້ແລະເຂົ້າໃຈຄຳສອນໃນພຣະທັມພຣະເຈົ້າ. "ສິ່ງທີ່ໜ້າກຽດຊັງ" ເວົ້າເຖິງຮູບພາບຂອງຜູ້ຕໍ່ຕ້ານພຣະຄຣິດ ("ສັດຮ້າຍ" ໃນພຣະນິມິດ 13) ທີ່ຈະຖືກນຳໄປໄວ້ທີ່ວິຫານຂອງຊາວຢິວ (ດານີເອັນ 9:27; 2 ເທຊະໂລນີກ 2:3-10) ເພື່ອໃຫ້ໂລກທີ່ຂາດພຣະເຈົ້າໄປໂຄຣົບບູຊາ. ສິ່ງເຫລົ່ານີ້ຈະເກີດລະຍະກາງຂອງຄວາມທຸກລຳບາກອັນໃຫຍ່ຊຶ່ງຈະເປັນເວລາທັງໝົດເຈັດປີ; ນີ້ຄືໝາຍທີ່ຈະເຕືອນຊາວຢິວໃນຢູດາຍໃຫ້ໜີອອກຈາກເມືອງ. ແຕ່ສິ່ງເຫລົ່ານີ້ຍັງບໍ່ແມ່ນໝາຍສຳຄັນສຳລັບການກັບມາຄັ້ງທີສອງຂອງພຣະຄຣິດເທື່ອ (1 ເທຊະໂລນີກ 4:13-18); ເພາະວັນເວລາດັ່ງກ່າວບໍ່ມີໃຜສາມາດຮູ້ໄດ້. ສນັ້ນພວກເຮົາແຕ່ລະຄົນຄວນສຶກສາແລະເຂົ້າໃຈຄຳທຳນວາຍໃນພຣະທັມຄັມພີເພື່ອພວກເຮົາຈະບໍ່ໄດ້ຢູ່ໃນຄວາມມືດແລະຈະບໍ່ໄດ້ຖືກຫລອກລວງໃຫ້ຫລົງ (2 ເປໂຕ 1:12-21).

ພຣະທັມຂໍ້ 24 ເຖິງ 27 ບັລຍາຍຄາວສຸດທ້າຍຂອງການທຸກລຳບາກແລະການກັບມາສູ່ແຜ່ນດິນໂລກຂອງອົງພຣະຄຣິດເພື່ອຈະທຳລາຍສັດຕູຂອງພຣະອົງແລະຈະສະຖາປະນາອານາຈັກຂອງພຣະອົງ (ພຣະນິມິດ 19:11--20:5). ໝາຍສຳຄັນຕ່າງໆນີ້ແມ່ນເພື່ອພວກຄົນຢິວ ເພາະ "ຝ່າຍພວກຢິວກໍຂໍເຫັນການສຳຄັນ" (1 ໂກຣິນໂທ 1:22). ໃນຕອນນີ້ພວກຄົນຢິວທີ່ແຈກຢາຍໄປຢູ່ທົ່ວໂລກຈະໄດ້ຖືກເຕົ້າໂຮມກັນອີກ ແລະພວກເຂົາຈະໄດ້ມີປະເທດອັນຖາວອນ.

## <u>ຢ່າເປັນຄົນປມາດ (13:28-37)</u>

ພຣະທັມໃນຕອນນີ້ ເນັ້ນເຖິງເຣື່ອງການຮຽນຮູ້ (ຂໍ້ 28-29) ແລະການຄອຍຣະວັງ (ຂໍ້ 33-35, 37). ຄຳອຸປມາເຣື່ອງຕົ້ນເດື່ອເທດເນັ້ນເຖິງເຣື່ອງທີ່ເຮົາຮູ້ (ການກັບມາຂອງພຣະຄຣິດໃກ້ຈະເຖິງແລ້ວ) ແລະຄຳອຸປມາເຣື່ອງຂ້ອຍໃຊ້ເນັ້ນເຖິງເຣື່ອງທີ່ພວກເຮົາບໍ່ຮູ້ (ເວລາທີ່ພຣະອົງຈະກັບມາ). ເວລາໃດພວກເຮົາໄດ້ເຫັນໝາຍຂອງຄວາມທຸກລຳບາກ, ພວກເຮົາກໍຮູ້ໄດ້ວ່າການກັບມາຂອງພຣະອົງໄດ້ໃກ້ເຂົ້າມາແລ້ວ (ລູກາ 21:28). ແຕ່ສິ່ງສຳຄັນສຳລັບຄຣິສຕຽນບໍ່ແມ່ນການເບິ່ງປະຕິທິນ ແຕ່ແມ່ນການຕຽມຕົວໃຫ້ພ້ອມເພື່ອຕ້ອນຮັບພຣະຄຣິດ. ພວກເຮົາຕ້ອງຄອຍລະວັງ ແລະຕ້ອງທຳງານທີ່ພຣະອົງໄດ້ຊົງມອບໝາຍໃຫ້ພວກເຮົາເຮັດຈົນກວ່າວ່າພຣະອົງຈະສະເດັດມາ (1 ເທຊະໂລນີກ 5:1-11).

"ຄົນໃນສມັຍນີ້" ໃນຂໍ້ 30 ອາດຈະໝາຍເຖິງຄົນທັງຫລາຍທີ່ມີຊີວິດຢູ່ເວລາໝາຍສຳຄັນຕ່າງໆໄດ້ປາກົດຂຶ້ນ. ພຣະເຢ

ຊູຊົງໃຊ້ຄຳວ່າ "ຄົນໃນສມັຍນີ້" ເວລາພຣະອົງເວົ້າເຖິງຄົນທັງຫລາຍທີ່ກຳລັງຢູ່ຕໍ່ໜ້າພຣະອົງ (ມາຣະໂກ 8:12, 38 ແລະ 9:19). ພວກເຮົາສາມາດໝັ້ນໃຈໄດ້ວ່າ ຄວາມໂຫດຮ້າຍຂອງມະນຸດ ແລະການຕໍ່ຕ້ານຕ່າງໆຂອງມານຊາຕາ ຈະບໍ່ສາມາດທຳລາຍປະເທດອິສຣາເອັນໄດ້ ເພາະຊາວຢິວເປັນຊົນຊາດທີ່ພຣະເຈົ້າໄດ້ຊົງເລືອກໄວ້.

ພຣະທັມມາຣະໂກບົດທີ 13 ເປັນພຣະທັມທີ່ຍາກໃນການອະທິບາຍ. ຈຸດສຳຄັນທີ່ຄວນເຂົ້າໃຈມີດັ່ງນີ້:

- ພຣະທັມໄດ້ເຕືອນພວກເຮົາໃຫ້ຣະວັງພວກຜູ້ປະກາດປອມທີ່ຈະຊັກຊວນພວກຜູ້ເຊື່ອໃຫ້ຫລົງທາງ
- ພຣະທັມໄດ້ສັນຍາວ່າ ພຣະວິນຍານບໍຣິສຸດຈະຊົງຮັກສາພວກເຮົາເວລາຖືກຂົ່ມເຫງ
- ພຣະທັມຊັກຊວນພວກເຮົາໃຫ້ເຮັດວຽກການປະກາດຕາມທີ່ພຣະເຈົ້າໄດ້ມອບໝາຍໄວ້
- ພຣະທັມເຕືອນພວກເຮົາວ່າບໍ່ມີໃຜຈະສາມາດຮູ້ວ່າ "ວັນສຸດທ້າຍ" ຈະມາເຖິງເມື່ອໃດ

ພວກສາວົກທີ່ກຳລັງຮັບຟັງຄຳສອນຂອງພຣະເຢຊູຄຣິດຫ່ວງໃຍເຣື່ອງອານາຄົດ. ພວກສິດຜູ້ທີ່ອ່ານພຣະທັມມາຣະໂກເປັນຄັ້ງແລກປະມານປີ ຄ.ສ. 65 ກໍມີຄວາມຫ່ວງໃຍເຣື່ອງອານາຄົດ. ແລະໃນປັດຈຸບັນ, 2000 ປີຜ່ານມາ, ພວກເຮົາກໍມີຄວາມຫ່ວງໃຍເຣື່ອງອະນາຄົດເຊັ່ນດຽວກັນ. ຂ່າວດີສຳລັບພວກເຮົາກໍຄື ອະນາຄົດຂອງພວກເຮົາແຕ່ລະຄົນໄດ້ຢູ່ໃນຄວາມປອດພັຍແລ້ວ ເພາະພວກເຮົາມີອົງພຣະເຢຊູຄຣິດຢູ່ໃນຊີວິດ.

<u>ຄຳຖາມ:</u>

1. ທ່ານສາມາດເອີ້ນຊື່ພວກ "ຜູ້ໂຜດປອມ" ຫລາຍໆຄົນໃນລະຍະບໍ່ຫລາຍປີທີ່ຜ່ານມາ ທີ່ມີລັກສນະເໝືອນທີ່ພຣະເຢຊູຄຣິດໄດ້ຊົງເຕືອນໄວ້ໃນພຣະທັມມາຣະໂກ 13:5-6, 21-23? (ຕົວຢ່າງ: ຈິມ ໂຈນ)

2. ທ່ານຄິດວ່າເປັນຫຍັງພຣະເຢຊູຄຣິດຈຶ່ງບໍ່ຍອມບອກວັນເວລາສຳລັບການກັບມາຄັ້ງທີສອງຂອງພຣະອົງ?

3. ມີຫລາຍໆຢ່າງໃນ ມາຣະໂກ 13 ທີ່ພວກເຮົາບໍ່ສາມາດເຂົ້າໃຈໄດ້ຢ່າງແຈ່ມແຈ້ງ, ແຕ່ທ່ານຄິດວ່າມີຫຍັງແດ່ທີ່ພວກເຮົາສາມາດຮູ້ຢ່າງແນ່ນອນ?

4. ການຄິດວ່າພຣະເຢຊູອາດຈະກັບມາໃນເວລາໃດກໍໄດ້ ເປັນຄວາມຄິດທີ່ຖືກຕ້ອງບໍ່?

# ບົດຮຽນທີ 1
# ການປະກາດຂອງພຣະເຢຊູ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມາຣະໂກ 1:9-15, 29-39
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ມາຣະໂກ 1:1-45
ຈຸດສຳຄັນຂອງບົດຮຽນນີ້: ບອກໃຫ້ເຮົາຮູ້ວ່າພຣະເຢຊູໄດ້ສະແດງຊີວິດການຢູ່ກິນເພື່ອພິສູດໃນການປະກາດເຣື່ອງແຜ່ນດິນສວັນມາໃກ້ແລ້ວນັ້ນມີຄວາມຈິງ.
ຄຳຖາມເພື່ອການສຳຣວດ ການສະເດັດມາຂອງພຣະເຢຊູຄຣິດມີຄວາມໝາຍຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ບອກໃຫ້ຮູ້ວ່າພຣະເຢຊູແມ່ນໃຜແລະພຣະອົງມີຄວາມສຳຄັນຫລາຍປານໃດ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ**

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຊ່ອຍເຫລືອເບິ່ງແຍງທຸກຄົນໃນພຣະນາມແຫ່ງພຣະເຢຊູຄຣິດ ທີ່ຕົກຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.
- ເສີມສ້າງຄອບຄົວຄຣິສຕຽນໃຫ້ເຂັ້ມແຂງ ແລະສ້າງຕັ້ງໂບດເລື້ອຍໄປ.

ການບັບຕິສມາຂອງພຣະເຢຊູເປັນການປາກົດຕົວຄັ້ງແຣກຂອງພຣະເຢຊູ ຫລັງຈາກການປາກົດຕົວຂອງພຣະອົງໃນເວລາພຣະອົງມີອາຍຸສິບສອງປີ. ຈາກນັ້ນເຮົາກໍບໍ່ໄດ້ຍິນຂ່າວໃດໆຂອງພຣະອົງເລີຍ. ບັດນີ້ກຳໜົດເວລາທີ່ຕັ້ງໄວ້ມາເຖິງແລ້ວດັ່ງນັ້ນພຣະອົງຈຶ່ງປາກົດຕົວເພື່ອປະກາດເຣື່ອງແຜ່ນດິນສວັນຂອງພຣະເຈົ້າໃກ້ມາເຖິງແລ້ວ.

ພຣະເຢຊູຕຽມຕົວປະກາດ (1:9-13)

ເມື່ອເຖິງກຳໜົດເວລາພຣະເຢຊູສະເດັດມານາຊາເຣັດແຂວງຄາລີເລ ເພື່ອຮັບບັບຕິສມານຳໂຢຮັນທີ່ແມ່ນ້ຳຢໍດາເນ. ໃນຂນະທີ່ຊາວຢິວພາກັນອອກໄປຟັງການປະກາດຂອງໂຢຮັນຢ່າງຫລວງຫລາຍ ພຣະເຢຊູໄດ້ປາກົດຕົວໃນເວລານັ້ນເພື່ອຮັບສົມບັບຕິສະມາຈາກໂຢຮັນ.

ຄຳຖາມມີຢູ່ວ່າເປັນຫຍັງພຣະເຢຊູຈຶ່ງຮັບບັບຕິສະມາເພາະພຣະອົງບໍ່ມີບາບ?

- ພຣະເຢຊູຊົງກ່າວຕໍ່ໂຢຮັນວ່າ "ເພາະສົມຄວນທີ່ເຮົາຈະເຮັດຢ່າງນັ້ນໃຫ້ຖືກກັບຄວາມຊອບທັມທຸກປະການ" (ມັດທາຍ 3:15). ນີ້ເປັນຄຳເວົ້າຂອງພຣະອົງເອງ.
- ມີພວກສາສນາສາດບອກວ່າພຣະເຢຊູຮັບບັບຕິສະມາເປັນຕົວຢ່າງແກ່ເຮົາທັງຫລາຍ, ຊຶ່ງໃນຄຳສັ່ງໃຫຍ່ຂອງພຣະອົງໃນ ມັດທາຍ 28:19-20 ໄດ້ສັ່ງວ່າ "ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາ" ດັ່ງນັ້ນຄຣິສຕະຈັກຈຶ່ງຂໍໃຫ້ທຸກຄົນທີ່ເຊື່ອໄດ້ບັບຕິສະມາເພາະພຣະເຢຊູຊົງຮັບບັບຕິສມາ.

- ບາງຄົນໄດ້ບອກວ່າເປັນຮູບພາບຂອງການຕາຍເພື່ອໄຖ່ຄວາມຜິດບາບແລະຄືນມາມີຊີວິດໃຫມ່. ເພາະທຸກຄົນທີ່ບັບຕິສະມາແມ່ນໄດ້ຕາຍຈາກຊີວິດເກົ່າແລະຄືນມາມີຊີວິດໃນພຣະເຢຊູຄຣິດ.
- ສາສນາຈານບາງກຸ່ມໃຫ້ການສັນນິຖານວ່າ ເປັນຄຳສັ່ງຂອງພຣະເຈົ້າອີງຕາມພຣະສຸຣະສຽງຂອງພຣະເຈົ້າອອກມາຈາກທ້ອງຟ້າວ່າ " ທ່ານເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈໃນທ່ານຫລາຍ" (ມັດທາຍ 3:22).

ພຣະເຈົ້າປະກາດວ່າ "ທ່ານເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈໃນທ່ານ" (ມາຣະໂກ 1:11). ເປັນການເລົ້າໂລມໃຈຈາກພຣະເຈົ້າທີ່ເຫັນພຣະບຸດຂອງພຣະອົງຊົງຖ່ອມຕົວເຮັດຕາມນ້ຳພຣະທັຍຂອງພຣະບິດາ, ໃນການຍອມເຮັດຕາມນ້ຳພຣະທັຍຂອງພຣະບິດາເຮັດໃຫ້ພຣະບິດາໄດ້ສະແດງເຖິງຄວາມໂຄຣົບຢຳເກງ ເມື່ອມີຄວາມເຄົາຣົບຢຳເກງ ພຣະບິດາກໍພໍພຣະທັຍຈຶ່ງຊົງກ່າວວ່າ " ເຮົາຊອບໃຈໃນທ່ານ" ຊຶ່ງແປວ່າ ເຮົາພໍໃຈໃນທ່ານ.

ເຮົາທັງຫລາຍມີພຣະເຢຊູເປັນພຣະອາຈານຂອງພວກເຮົາ ສິ່ງໃດທີ່ພຣະເຢຊູເຮັດເຮົາກໍພະຍາຍາມເຮັດ, ສິ່ງໃດທີ່ພຣະເຢຊູເວົ້າເຮົາກໍພະຍາຍາມເວົ້າ ດ້ວຍເຫດນີ້ເມື່ອພຣະອົງຊົງຍອມຖ່ອມຕົວເຊື່ອຟັງພຣະບິດາສັນໃດ ເຮົາກໍຄວນຍອມເຊື່ອຟັງພຣະເຢຊູສັນນັ້ນ. ພຣະບິດາຊົງກ່າວກັບພຣະເຢຊູສັນໃດ ພຣະບິດາກໍຈະກ່າວແກ່ເຮົາສັນນັ້ນ ເມື່ອຍອມຖ່ອມຕົວເຫມືອນພຣະເຢຊູພຣະອາຈານຂອງພວກເຮົາ. ຈົ່ງລະນຶກເຖິງພຣະເຈົ້າຊົງກ່າວວ່າ " ທ່ານເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈໃນທ່ານ" ຈົ່ງເຮັດໃຫ້ພຣະເຈົ້າພໍໃຈໃນຊີວິດຂອງເຮົາເຫມືອນດັ່ງພຣະອົງພໍໃຈໃນພຣະອາຈານຂອງພວກເຮົາ.

ຫລັງພຣະເຢຊູສະເດັດຂຶ້ນຈາກນ້ຳພຣະວິນຍານຂອງພຣະເຈົ້າຊົງນຳພຣະເຢຊູເຂົ້າໄປໃນປ່າ. ໃນມາຣະໂກໄດ້ແປຄຳວ່າ Ekballo "ບັງຄັບ" ໃນພາສາເດີມແປດັ່ງນີ້: Ekballo ແປວ່າ ອອກໄປ, ຈາກໄປ, ປ່ອຍໄປ, ນຳໄປ, ບັງຄັບໄປ, ສົ່ງໄປ, ເອົາໄປ ດັ່ງນີ້ເປັນຕົ້ນ. ດັ່ງນັ້ນຂ້າພະເຈົ້າຢາກແປ Ekballo ວ່າ "ນຳໄປ" ຂ້າພະເຈົ້າຈຶ່ງແປທັງຫມົດວ່າ ພຣະວິນໄດ້ຊົງນຳພຣະອົງໃຫ້ສະເດັດເຂົ້າໄປໃນປ່າກັນດານ. ໃນມັດທາຍ ແປວ່າ "ຊົງພາ" ແລະລູກາແປວ່າ "ເຕັມໄປດ້ວຍພຣະວິນຍານບໍຣິສຸດ" ດັ່ງນັ້ນຂ້າພະເຈົ້າມີຄວາມເຫັນວ່າ ຄຳວ່າບັງຄັບແມ່ນບໍ່ຢາກເຮັດ, ຫລືຢາກ ໄປ, ແຕ່ການຊົງນຳແມ່ນໄປດ້ວຍກັນ. ເຫດທີ່ພຣະວິນຍານຊົງນຳໄປກໍເພື່ອທົດລອງເບິ່ງຄວາມດີຂອງພຣະບຸດພຣະເຈົ້າເປັນເວລາສີ່ສິບວັນ ແລະໃນທີ່ສຸດພຣະເຢຊູກໍຊະນະການທົດລອງຂອງຊາຕານທຸກປະການ.

<u>ການປະກາດຂອງພຣະເຢຊູ</u> (1:14-15)

ພຣະເຢຊູຊົງເລີ້ມຕົ້ນປະກາດເຣື່ອງແຜ່ນດິນສວັນຂອງພຣະເຈົ້າທີ່ຄົນທົ່ວໂລກໄດ້ຊອກຄົ້ນຫາບັດນີ້ໄດ້ມາໃກ້ແລ້ວ ຂ່າວນີ້ຈຶ່ງເປັນຂ່າວປະເສີດທີ່ສຸດເພາະເປັນຂ່າວທີ່ໃຫ້ຄວາມຫວັງແກ່ມະນຸດ (ໂກໂລຊາຍ 1:23) ຂ່າວເຣື່ອງສັນຕິສຸກ (ເອເຟໂຊ 6:15). ແລະຍັງເປັນຂ່າວເຣື່ອງຂອງຊີວິດນິຣັນດອນໃນຟ້າສວັນອີກ (ໂຢຮັນ 3:1). ພຣະອົງເລີ້ມຕົ້ນປະກາດຂ່າວນີ້ທີ່ແຂວງຄາລີເລຫລັງຈາກໂຢຮັນຖືກຈັບ. ພຣະເຢຊູໄດ້ສັ່ງໃຫ້ປະຊາຊົນ "ຈົ່ງຖິ້ມໃຈເກົ່າເອົາໃຈໃຫມ່ແລະເຊື່ອໃນຂ່າວປະເສີດ" ພຣະອົງໄດ້ກ່າວເປັນສອງປະເດັນໃຫຍ່ຄື:

1. <u>**ຖິ້ມໃຈເກົ່າ**</u> ແປວ່າປ່ຽນຄວາມຄິດແລະປ່ຽນວິທີທາງຫລືການດຳຣົງຊີວິດຂອງຕົນໃຫມ່.
   - ຄວາມຄິດອອກມາຈາກໃຈດັ່ງນັ້ນຄວາມຄິດຈຶ່ງເປັນເຣື່ອງໃນໃຈ ພຣະອົງສອນໃຫ້ປະລະຖິ້ມແລ້ວເອົາຄວາມຄິດຈິດໃຈໃຫມ່ເພາະຄວາມຄິດຈິດໃຈເປັນເຄື່ອງບັງຄັບຮ່າງກາຍໃຫ້ປະຕິບັດຕາມໃຈຄິດ.

- ວິທີທາງຊີວິດແມ່ນຜົນປາກົດເຣື່ອງໃນໃຈຊຶ່ງເຫັນໄດ້ໃນການດຳຣົງຊີວິດປະຈຳວັນ.

2. **<u>ເຊື່ອໃນຂ່າວປະເສີດ</u>** ໃນພາສາເດີມ ວ່າ euaggelion ແປວ່າເຣື່ອງຂອງພຣະເຈົ້າ. ຄືພຣະອົງສົ່ງພຣະບຸດຂອງພຣະອົງລົງມາເກີດ, ແລ້ວຕາຍເພື່ອໄຖ່ຄົນຈຳນວນຫລາຍໃຫ້ພົ້ນຈາກບຶງໄຟ ເມື່ອພຣະອົງຕາຍແລ້ວບໍ່ຈົບລົງພຽງເທົ່ານັ້ນ ພຣະອົງຍັງຄືນມາອີກເພື່ອພິສູດໃຫ້ເຫັນວ່າພຣະອົງຊົງເປັນພຣະເຈົ້າ ແລະຜູ້ທີ່ເຊື່ອທຸກຄົນກໍຈະຕາຍໃນພຣະອົງແລະໃນວັນສຸດທ້າຍກໍຈະຄືນມາເຫມືອນພຣະອົງ. ທັງຫມົດນີ້ເຮົາຮ້ອງວ່າຂ່າວປະເສີດ ເພາະບໍ່ມີຂ່າວໃດທີ່ປະເສີດຫລາຍໄປກວ່າຂ່າວນີ້.

ເຮົາສັງເກດເຫັນວ່າການປະກາດຄັ້ງແຣກຂອງພຣະເຢຊູລ້ວນແລ້ວແຕ່ເປັນການເລົ້າໂລມໃຈຜູ້ຟັງທີ່ຄິດວ່າຕົນເອງຫມົດຫວັງທີ່ຈະພົບກັບຊີວິດນິຣັນດອນ. ດັ່ງນັ້ນຈຶ່ງມີຜູ້ຄົນຈຳນວນຫລວງຫລາຍມາຟັງຄຳເທສນາສັ່ງສອນຄັ້ງນີ້ ແລະເມື່ອຟັງແລ້ວປະຊາຊົນຈຳນວນຫລວງຫລາຍກໍຖິ້ມໃຈເກົ່າເອົາໃຈໃຫມ່ເຊື່ອໃນຂ່າວປະເສີດຕາມທີ່ພຣະອົງໄດ້ປະກາດ.

<u>ຣິດອຳນາດພຣະເຢຊູ</u> (1:29-34)

ພຣະເຢຊູບໍ່ໄດ້ປະກາດເຣື່ອງແຜ່ນດິນສວັນເທົ່ານັ້ນພຣະອົງຍັງໃຊ້ອຳນາດໃນການໂຜດຫລາຍຄົນໃຫ້ດີພະຍາດ. ໃນເວລາແລງພໍສົມຄວນທີ່ພຣະອົງຈະຕ້ອງພັກຜ່ອນແຕ່ປະຊາຊົນກໍພາບັນດາຄົນເຈັບປ່ວຍແລະຄົນທີ່ມີຜີຮ້າຍສິງຢູ່ມາຫາພຣະອົງ ແລະຄົນທັງເມືອງກໍພາກັນມາອັ່ງອໍຢູ່ຕໍ່ຫນ້າປະຕູ ເພື່ອລໍຖ້າໂອກາດຈະເຂົ້າຫາພຣະເຢຊູປົວພະຍາດເຖິງຢ່າງໃດກໍດີການປິ່ນປົວພະຍາດບໍ່ແມ່ນຈຸດປະສົງອັນແຣກຂອງພຣະອົງ ທີ່ພຣະອົງໄດ້ປິ່ນປົວແລະຂັບໄລ່ຜີນັ້ນ ກໍເພື່ອ ສະແດງໃຫ້ເຮົາທັງຫລາຍເຫັນວ່າພຣະອົງຊົງມີຣິດອຳນາດບໍ່ຈຳກັດ ເພາະພຣະອົງຊົງເປັນພຣະເຈົ້າ.

ໃນແລງວັນນັ້ນເປັນວັນສິນບໍຣິສຸດ (ມາຣະໂກ 1:21) ກົດຫມາຍຂອງຊາວຢິວວັນນັ້ນຕ້ອງເປັນວັນພັກຜ່ອນການປົວພະຍາດກໍຈະບໍ່ມີໃນວັນນັ້ນ ດັ່ງນັ້ນປະຊາຊົນຈຶ່ງມາອັ່ງອໍທີ່ປະຕູເພື່ອລໍຖ້າໃຫ້ວັນສິນບໍຣິສຸດຜ່ານໄປໃນຮຸ່ງເຊົ້າ. ພໍເຖິງວັນຮຸ່ງເຊົ້າພຣະອົງກໍຊົງປິ່ນປົວປະຊາຊົນແລະຂັບໄລ່ຜີຮ້າຍທີ່ສິງຢູ່ໃນປະຊາຊົນອອກ. ແລະພຣະອົງຊົງສັ່ງຜີຮ້າຍບໍ່ໃຫ້ປາກ ທັງນີ້ກໍເພື່ອສະແດງຣິດອຳນາດຂອງພຣະອົງໃຫ້ປະຊາຊົນເຫັນວ່າພຣະອົງມີອຳນາດເຫນືອຜີຕົວນັ້ນເມື່ອມັນຍັງສິງຄົນຢູ່ນັ້ນມັນເຄີຍປາກເວົ້າຢູ່ບໍ່ເຊົາແລະບໍ່ມີໃຜເຮັດໃຫ້ມັດຢຸດປາກໄດ້.

<u>ຈຸດປະສົງຂອງການປະກາດ</u> (1: 35-39)

ໃນເວລາຍັງເຊົ້າມືດຫລັງຈາກປິ່ນປົວປະຊາຊົນແລ້ວພຣະອົງກໍສະເດັດອອກໄປບ່ອນງຽບສງັດເພື່ອນະມັສການໄຫວ້ວອນຂອບພຣະຄຸນພຣະເຈົ້າ ເປັນຮູບພາບທີ່ສຳຄັນອັນນຶ່ງທີ່ຄຣິສຕຽນທັງຫລາຍຄວນຈະເຮັດດັ່ງນີ້ທຸກຄັ້ງຫລັງ ຈາກເທສນາສັ່ງສອນ, ຫລືຫລັງຈາກເຮັດງານຂອງພຣະເຈົ້າທຸກກໍຣະນີ. ໃນຂະນະທີ່ພຣະອົງກຳລັງອ້ອນວອນຢູ່ນັ້ນຊີໂມນກໍເຂົ້າມາຣົບກວນພຣະອົງຊົງກ່າວວ່າ "ຄົນທັງຫລາຍກໍຊອກຫາທ່ານຢູ່ (ມາຣະໂກ 1: 37). ພຣະອົງຊົງກ່າວກັບສາວົກວ່າ "ໃຫ້ເຮົາທັງຫລາຍເຂົ້າໄປໃນເຂດບ້ານເມືອງໃກ້ຄຽງ ເພື່ອເຮົາຈະປະກາດທີ່ນັ້ນດ້ວຍ" (ມາຣະໂກ 1: 38).

ມີນັກສາສນາສາດອະທິບາຍວ່າ ພຣະເຢຊູມີຈຸດປະສົງປະກາດເຣື່ອງແຜ່ນດິນສວັນຫລາຍກວ່າການປິ່ນປົວພະຍາດທັງນີ້ເນື່ອງຈາກວ່າ ການປິ່ນປົວພະຍາດແລະຂັບໄລ່ຜີອອກແລ້ວບໍ່ ຫມາຍຄວາມວ່າຄົນທີ່ເປັນພະຍາດແລະ

ຄົນທີ່ມີພິສົງນັ້ນຈະຫາຍດີເປັນພະຍາດຕລອດໄປ ດັ່ງນັ້ນພຣະອົງຈຶ່ງຕັ້ງໜ້າປະກາດເຣື່ອງແຜ່ນດິນສວັນຫລາຍກວ່າເຣື່ອງປົວພະຍາດເພາະເມື່ອຄົນທັງຫລາຍກັບໃຈເຊື່ອໃນຂ່າວປະເສີດທີ່ພຣະອົງປະກາດແລ້ວເຂົາກໍຈະໄດ້ຊີວິດນິຣັນ ສ່ວນຄົນທີ່ດີພະຍາດນັ້ນວັນນຶ່ງເຂົາກໍຈະເກີດພະຍາດແນວອື່ນອີກ.

<u>ຄຳຖາມ:</u>

1. ເປັນຫຍັງພຣະເຢຊູຈຶ່ງຮັບບັບຕິສມານຳໂຢຮັນທີ່ແມ່ນ້ຳຢໍດາເນ?

2. ພຣະເຢຊູໄດ້ເລີ້ມຕົ້ນປະກາດແນວໃດ? ມີສິ່ງໃດແດ່ທີ່ເຮົາສົມຄວນຮຽນແບບພຣະອົງ?

3. ເປັນຫຍັງປະຊາຊົນຈຶ່ງມາອັ່ງອໍທີ່ປະຕູໃນແລງວັນສົມບໍຣິສຸດ?

4. ຫຍັງຈາກປະກາດເຣື່ອງແຜ່ນດິນສວັນແລະປິ່ນປົວພະຍາດແລ້ວພຣະເຢຊູເຮັດຫຍັງ?

5. ການປະກາດເຣື່ອງແຜ່ນດິນສວັນກັບການປິ່ນປົວພະຍາດ ພຣະເຢຊູເອົາໃຈໃສ່ອັນໃດຫລາຍກວ່າ? ເປັນຫຍັງ?

# ບົດຮຽນທີ 2
# ຜູ້ນຳສາສນາຊາດຢິວປອງຮ້າຍພຣະເຢຊູ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 2:1-17; 3:1-6
<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u> ມາຣະໂກ 2:1--3:6
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຢຊູຊົງເຕືອນຜູ້ນຳສາສນາຊາດຢິວຢ່າຄິດຊົ່ວໃນໃຈ.
<u>ຄຳຖາມເພື່ອການສຳຣວດ</u> ພຣະເຢຊູຊົງແກ້ໄຂບັນຫາແນວໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າພຣະເຢຊູມີບັນຫາກ່ອນພວກເຮົາແລ້ວຢ່າສູ່ຢ້ານ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຊ່ອຍເຫລືອເບິ່ງແຍງທຸກຄົນໃນພຣະນາມແຫ່ງພຣະເຢຊູຄຣິດ ທີ່ຕົກຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.

ເມື່ອພຣະເຢຊູຊົງອະພັຍຄວາມຜິດບາບແລະປິ່ນປົວຄົນເປັ້ຽລ່ອຍ ແລະຊົງເອີ້ນເອົາຄົນເກັບພາສີໃຫ້ເປັນຜູ້ຕິດຕາມພຣະອົງໃນວັນສົບບໍຣິສຸດແລະປົວຄົນມີລີບເບື້ອງນຶ່ງເປັນຕົ້ນເຫດໃຫ້ບັນດາພວກຫົວໜ້າສາສນາທ້ອງຖິ່ນບໍ່ພໍໃຈທີ່ພຣະອົງເຮັດການອັສຈັນໃນວັນຊະບາໂຕ ດັ່ງນັ້ນພວກເຂົາຈຶ່ງຊອກຫາເຣື່ອງພຣະອົງຢູ່ບໍ່ເຊົາ.

<u>ຊົງໂຜດຄົນເປັ້ຽໃຫ້ຄືນດີເປັນປົກກະຕິ</u> (2:1-12).

ຫລັງຈາກການເທສນາສັ່ງສອນທີ່ຄາລີເລແລ້ວພຣະອົງກໍສະເດັດກັບຄືນເມືອງກາເປນາອູມ, ມີສາສນາສາດໃຫ້ຄຳເຫັນວ່າເມືອງກາເປນາອູມເປັນບ້ານຂອງເປໂຕສາວົກຂອງພຣະເຢຊູ ແລະເນື່ອງຈາກວ່າເປັນບ້ານຂອງເປໂຕຜູ້ເປັນສາວົກທີ່ໃກ້ຊິດກັບພຣະເຢຊູ ບ້ານນັ້ນຈຶ່ງກາຍເປັນສູນກາງການປະເຣື່ອງແຜ່ນດິນສວັນຂອງອົງພຣະຜູ້ເປັນເຈົ້າ.

ຊື່ສຽງຄວາມດີຂອງພຣະເຢຊູໄດ້ຊ່າລືໄປທົ່ວເມືອງກາເປນາອູມດັ່ງນັ້ນຄົນທັງຫລາຍຈຶ່ງພາກັນຫລັ່ງມາຫາພຣະອົງເພື່ອຟັງຄຳສັ່ງສອນເຣື່ອງແຜ່ນດິນສວັນຂອງພຣະເຈົ້າ. ໃນເວລານັ້ນມີຄົນເປັ້ຽຜູ້ນຶ່ງມີຄວາມເຊື່ອໃນໃຈຂອງລາວຢ່າງເຕັມອົກເຕັມໃຈລາວຈຶ່ງວານຍາດພີ່ນ້ອງໃຫ້ຫາມລາວເຂົ້າໄປຫາພຣະເຢຊູເພື່ອຈະຂໍໃຫ້ພຣະອົງປິ່ນປົວລາວແຕ່ພໍເມື່ອຍາດພີ່ນ້ອງຫາມລາວມາເຖິງເຮືອນທີ່ພຣະເຢຊູຊົງປະທັບຢູ່ ກໍບໍ່ສາມາດເຂົ້າໄປຫາພຣະເຢຊູໄດ້ເພາະຄົນໜາແໜ້ນໄປໝົດ. ດັ່ງນັ້ນເຂົາເຈົ້າຈຶ່ງຫາມລາວຂຶ້ນໄປເທິງຫລັງຄາເຮືອນ,ຊຶ່ງເປັນເຮືອນແບບຊາວຢິວທີ່ມີຫລັງຄາພຽງແລະແຂງ ຄົນລາວເຮົາຮ້ອງວ່າດາດຟ້າ. "ເມື່ອເຂົາເຂົ້າໄປເຖິງພຣະອົງບໍ່ໄດ້ເພາະຄົນຫລາຍເຂົາຈຶ່ງຮື້ຫລັງຄາຊື່ບ່ອນພຣະອົງປະທັບນັ້ນ ເມື່ອຮື້ເປັນປ່ອງແລ້ວເຂົາກໍຢ່ອນບ່ອນນອນທີ່ຄົນເປັ້ຽນອນຢູ່ນັ້ນລົງມາ" (ມາຣະໂກ 1: 4)

ທີ່ບ້ານໃກ້ຄຽງຂອງຂ້າພະເຈົ້າທີ່ເມືອງລາວໃນສມັຍກ່ອນມີຄົນເປັ້ຽຜູ້ນຶ່ງເປັນເປັ້ຽແຕ່ອາຍຸເຈັດປີເນື່ອງ ຈາກການສັກຢາຜິດ. ປັດຈຸບັນນີ້ຄົນເປັ້ຽຜູ້ນັ້ນກາຍເປັນຄົນແກ່ແລ້ວແລະລາວກໍຍັງເປັນເປັ້ຽຢູ່. ຂ້າພະເຈົ້າໄດ້ພົວພັນກັບຄົນເປັ້ຽຜູ້ນີ້ຢ່າງສົມຄວນ ຫລັກສະນະຮ່າງກາຍຂອງລາວຄືຂາທັງສອງຂ້າງຂອງລາວນ້ອຍກວ່າຂໍ່ແຂນຂອງເຮົາ ແລະກົກແຂນທັງສອງຂ້າງກໍນ້ອຍ, ແຕ່ແຂນທັງສອງຂ້າງເລີ້ມແຕ່ແຂນສອກມາເຖິງມືກໍ ໃຫຍ່ເປັນປົກກະຕິ ຫົວແລະໜ້າຕາຂອງລາວກໍໃຫຍ່ປົກກະຕິ ຂ້າພະເຈົ້າຮັກແລະສົງສານລາວຈຶ່ງອາສາສມັກຮັບໃຊ້ລາວຫລາຍອັນຕໍ່ ອາທິດໂດຍພາລາວໄປແລະມາຕາມທີ່ລາວຢາກໄປດ້ວຍການອູ້ມ. ໃນຂະນະທີ່ອູ້ມລາວຂ້າພະເຈົ້າຈຳຕ້ອງຣະວັງ ເພາະທາງຫົວລາວໜັກກວ່າທາງລຸ່ມຂອງຮ່າງກາຍຫລາຍເພາະພາກສ່ວນຂອງຮ່າງກາຍບໍ່ມີນ້ຳໜັກເໝືອນຄົນທັມມະດາ, ຫາກບໍ່ຣະວັງຫົວຂອງລາວກໍຈະອ່ຽງລົ້ມໄປຂ້າງໜ້າ.

ໃນພຣະຄັມທີ່ເຮົາກຳລັງສຶກສາກັນຢູ່ນີ້ເຂົານຳຄົນເປັ້ຽມາຫາພຣະເຢຊູ ເຂົາຕ້ອງໃຊ້ຄົນຫາມຈາກສອງເຖິງສີ່ຄົນເພາະເຂົາຫາມມາທັງບ່ອນນອນຂອງຄົນເປັ້ຽ. ຂ້າພະເຈົ້າອາດພາບເຫັນຄົນເປັ້ຽທີ່ຍ່າງໄດ້ຄັ້ງແຮກໃນຊີວິດຄືຈະບໍ່ຍ່າງຄືພວກເຮົາ ເພາະບໍ່ເຄີຍຍ່າງຈັກເທື່ອ ແລະຂາຂອງລາວອາຈບໍ່ໃຫຍ່ເປັນຂາທັມດາ ຫລືຂານັ້ນອາຈຍັງຈ່ອຍຢູ່. ດ້ວຍຣິດອຳນາດຂອງພຣະເຢຊູເຖິງແມ່ນລາວບໍ່ເຄີຍຍ່າງຫລືຂາຍັງຈ່ອຍຢູ່ກໍບໍ່ສຳຄັນ ແຕ່ລາວໄດ້ຍ່າງແລະແບກບ່ອນນອນຂອງຕົນໄປດ້ວຍການສັຣເສີນພຣະເຈົ້າດ້ວຍຄວາມຊົມຊື່ນຍິນດີ.

ດ້ວຍຄວາມເຊື່ອຂອງຄົນເປັ້ຽຜູ້ນັ້ນພຣະເຢຊູຊົງກ່າວວ່າ "ລູກເອີຍ, ຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ" ແຕ່ມີພວກນັກທັມບາງຄົນ (ບໍ່ແມ່ນທຸກຄົນ) ຄຶດໃນໃຈວ່າ ເປັນຫຍັງຄົນນີ້ (ພຣະເຢຊູ)ຈຶ່ງເວົ້າແນວນັ້ນເປັນການໝິ່ນປມາດພຣະເຈົ້າແທ້ ໃຜຈະຍົກຄວາມຜິດບາບໄດ້ ເວັ້ນແຕ່ພຣະເຈົ້າເທົ່ານັ້ນ (ມາຣະໂກ 2:5). ພວກນັກທັມເວົ້າຖືກແລ້ວບໍ່ມີໃຜຍົກຄວາມຜິດບາບໄດ້ນອກຈາກພຣະເຈົ້າ ແຕ່ພວກເຂົາບໍ່ຮູ້ວ່າພຣະເຢຊູຊົງເປັນພຣະເຈົ້າ. ໃນໃຈຂອງເຂົາຄຶດອິດສາກໍເພາະວ່ານັບແຕ່ມື້ເຂົາເປັນນັກທັມມາເຂົາບໍ່ມີຄວາມສາມາດເຮັດການນີ້ຈັກເທື່ອ, ເມື່ອເຂົາເຫັນພຣະເຢຊູກະທຳການອັສຈັນນີ້ເຂົາຈຶ່ງຄຶດອິດສາ ເພາະເຂົາຄຶດວ່າພຣະເຢຊູແມ່ນຄົນທັມມະດາຄືເຂົາ ຈາກນັ້ນເຂົາກໍສົ່ງຊອນເອົາເຣື່ອງພຣະເຢຊູເພີ້ມເຕີມ. ດັ່ງນັ້ນເຮົາ ທັງຫລາຍຢ່າເອົາໃຈໃສ່ໃນຄົນທີ່ຄຶດອິດສາເຮົາໃນການເຮັດດີແຕ່ໃຫ້ເອົາໃຈໃສ່ຫລີກເວັ້ນຈາກການຊົ່ວ.

<u>ຊົງເອີ້ນເລວີ</u> (2:13-17)

ຕໍ່ຈາກນັ້ນມາພຣະອົງກໍສະເດັດໄປຕາມແຄມທະເລສາບເພື່ອສັ່ງສອນປະຊາຊົນ "ເມື່ອພຣະອົງກຳລັງສະເດັດໄປນັ້ນກໍຊົງເຫັນເລວີລູກອາລາຟາຍນັ່ງຢູ່ດ່ານພາສີ ພຣະອົງຈຶ່ງຊົງກ່າວວ່າ, "ຈົ່ງຕາມເຮົາມາ" ເພິ່ນກໍລຸກຕາມພຣະອົງໄປ ເມື່ອພຣະອົງປະທັບສເວີຍອາຫານຢູ່ໃນເຮືອນຂອງເລວີ ມີຄົນເກັບພາສີແລະຄົນນອກສິນທັມຫລາຍຄົນ ນັ່ງຮ່ວມໂຕະກັບພຣະເຢຊູແລະພວກສິດຂອງພຣະອົງເພາະມີຄົນຕິດຕາມພຣະອົງໄປຫລາຍ ແລະມີພວກນັກທັມຝ່າຍຟາຣີຊາຍເມື່ອເຫັນພຣະອົງສເວີຍອາຫານກັບຄົນນອກສິນທັມແລະຄົນເກັບພາສີ ໄດ້ຫ້ວງຖາມສິດຂອງພຣະອົງວ່າ "ເປັນຫຍັງໜໍ ເພິ່ນຈຶ່ງຍອມຮັບປະທານອາຫານຮ່ວມກັບຄົນນອກສິນທັມແລະຄົນເກັບພາສີ" (ມາຣະໂກ 2:14-16).

ຄົນເກັບພາສີຜູ້ນີ້ໃນພຣະທັມ <u>ມັດທາຍ 9:9</u> ໄດ້ບອກເຮົາວ່າແມ່ນສາວົກມັດທາຍນັ້ນເອງ. ຄົນເລວີຜູ້ນີ້ໄດ້ເຮັດການເປັນຄົນເກັບພາສີໃຫ້ໂຣມັນ ຈຶ່ງເປັນຕົ້ນເຫດໃຫ້ປະຊາຊົນກຽດຊັງຈົນບໍ່ຢາກເບິ່ງໜ້າ, ເໝືອນກັບຄົນທັງຫລາຍມັກຈະເວົ້າໃຫ້ຄົນລາວຄຣິສຕຽນວ່າເປັນຄົນຂາຍຊາດ, ຂາຍສາສນາ ຈົນບາງຄົນເກືອບບໍ່ຢາກເວົ້ານຳຄຣິສຕຽນ.

ໃນຂນະທີ່ພຣະອົງກຳລັງສເວີຍອາຫານຮ່ວມ ກັບຄົນເກັບພາສີແລະພັກພວກຂອງຄົນເກັບພາສີຢູ່ ມີພວກທີ່ຮ້ອງຕົນເອງວ່ານັກທັມ ກໍເຂົ້າມາຖາມເຣື່ອງນັ້ນນຳສາວົກ ພຣະອົງໂດຍກ່າວວ່າ " ເປັນຫຍັງຫນໍເພິ່ນຈຶ່ງຍອມຮັບປະທານອາຫານຮ່ວມກັບຄົນນອກສິນທັມແລະຄົນເກັບພາສີ" ດ້ວຍໃຈອິດສາຂອງຟາຣີຊາຍເຂົາຈຶ່ງເຫັນແຕ່ຄວາມຜິດທຸກຢ່າງທີ່ພຣະເຢຊູກະທຳ ເພາະຄວາມອິດສານັ້ນໄດ້ບັງຕາໄວ້ບໍ່ໃຫ້ເຫັນພຣະອົງເຮັດການດີ.

"ຄັນພຣະເຢຊູຊົງໄດ້ຍິນດັ່ງນັ້ນ ກໍຊົງກ່າວແກ່ເຂົາວ່າ "ຄົນສະບາຍບໍ່ຕ້ອງການຫມໍຢາ ແຕ່ຄົນເຈັບຕ້ອງການຫມໍ ເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິນທັມ ແຕ່ມາເອີ້ນເອົາຄົນນອກສິນທັມ" (ມາຣະໂກ 2:17). ພວກນັກທັມຟາຣີຊາຍເຂົ້າໃຈວ່າຕົນເອງເປັນຄົນສິລທັມຈຶ່ງບໍ່ຍອມຮ່ວມໂຕະນຳຄົນບາບ ແຕ່ພຣະເຢຊູຊົງພໍພຣະທັຍທີ່ຈະພົວພັນນຳຄົນບາບ. ພຣະອົງຊົງຮັກຄົນບາບ ເພາະພຣະອົງຊົງຮູ້ວ່າຄົນບາບເຫລົ່ານັ້ນຕ້ອງການຟັງຄຳສັ່ງສອນຂອງພຣະອົງ ດັ່ງນັ້ນເຂົາຈຶ່ງຊັກຊວນພັກພວກມາຮ່ວມໂຕະກັບພຣະອົງ. ແຕ່ສຳລັບຄົນທີ່ຮ້ອງຕົນເອງວ່າເປັນຄົນສິນທັມບໍ່ຢາກຟັງຄຳສັ່ງສອນພຣະອົງເພາະຖືວ່າຕົນເອງເປັນຄົນສິລທັມ. ຄຳຕອບຂອງພຣະເຢຊູພໍຈະສລຸບໄດ້ວ່າ ໃຜກໍຕາມທີ່ຮ້ອງວ່າຕົນເອງເປັນຄົນມີສິລທັມ ແລະຄົນທີ່ບໍ່ຍອມຖ່ອມຕົວ ພຣະອົງບໍ່ມີປະສົງຈະຮ້ອງເອົາຄົນນັ້ນ ແຕ່ພຣະອົງສະເດັດມາຮ້ອງເອົາທຸກຄົນທີ່ຍອມຮັບວ່າຕົນເອງເປັນຄົນບາບ ບໍ່ວ່າຈະເປັນຄົນຍາກຈົນຫລືຮັ່ງມີເປັນເສດຖີຫລືຂໍທານເປັນຄົນພິການຫລືຄົນມີກຳລັງ ພຣະອົງບໍ່ໄດ້ເລືອກຫນ້າ ຂໍແຕ່ຍອມຖ່ອມຕົວຟັງພຣະທັມພຣະອົງເທົ່ານັ້ນຄົນນັ້ນຈະກາຍເປັນຄົນສິນທັມໃນສາຍພຣະເນດຂອງພຣະເຈົ້າ. ດັ່ງນັ້ນເຮົາທັງຫລາຍຢ່າອິດສາເຫມືອນຟາຣີຊາຍທີ່ເຫັນຜູ້ອື່ນມີຊື່ສຽງດີກວ່າພວກເຮົາ.

<u>ຊົງໂຜດຊາຍມືລີບເບື້ອງນຶ່ງ</u> (3:1-6)

ພວກຟາຣີຊາຍຕິດຕາມພຣະເຢຊູ ບໍ່ເຫມືອນສາວົກຕິດຕາມ, ສາວົກຕິດຕາມພຣະອົງຢ່າງໃກ້ຊິດເພື່ອຮຽນຮູ້ແລະຮັບໃຊ້ພຣະອົງ ສຳລັບພວກຟາຣີຊາຍຕິດຕາມພຣະອົງຢູ່ຫ່າງໄກເພື່ອຈັບຄວາມຜິດພຣະອົງ. ໃນທີ່ສຸດພວກຟາຣີຊາຍກໍເຫັນພຣະອົງເຂົ້າໄປໃນໂຮງທັມມະເທສນາອີກ " ແລ້ວພຣະອົງໄດ້ສະເດັດເຂົ້າໂຮງທັມມະເທສນາອີກ ແລະທີ່ນັ້ນມີຄົນນຶ່ງມີເບື້ອງນຶ່ງລີບ ເຂົາຊອມເບິ່ງວ່າພຣະອົງຈະຊົງໂຜດໃຫ້ຄົນນັ້ນດີໃນວັນຊະບາໂຕຫລື ເພື່ອເຂົາຈະຟ້ອງພຣະອົງໄດ້" (ມາຣະໂກ 3: 1-2). ສ່ວນພຣະເຢຊູກໍຮູ້ຕົວດີວ່າພວກຟາຣີຊາຍຕິດຕາມຢູ່ຫ່າງໄກເພື່ອເອົາເຣື່ອງພຣະອົງດັ່ງນັ້ນເມື່ອເຫັນຊາຍມືລີບແລ້ວ "ພຣະອົງຊົງກ່າວແກ່ຄົນມືລີບວ່າ ຈົ່ງລຸກຂຶ້ນມາຢືນຂ້າງຫນ້າສາ" (ມາຣະໂກ 3:3).

ຄວາມຈິງແລ້ວຊາຍຄົນນີ້ບໍ່ແມ່ນຄົນຕາຍ ລາວພຽງແຕ່ມືລີບຂ້າງນຶ່ງ ຄຳຖາມມີຢູ່ວ່າເປັນຫຍັງພຣະອົງຈຶ່ງບໍ່ຖ້າເວັ້ນຈາກວັນຊະບາໂຕເສັຽກ່ອນຈຶ່ງປົວລາວ ເພາະການກະທຳຂອງພຣະອົງເວລານີ້ເຫັນໄດ້ປະຈັກຕາວ່າພຣະອົງບໍ່ຢ້ານແລະເກງໃຈພວກຟາຣີຊາຍ ຫລືຢ້ານຕໍ່ກົດຣະບຽບຂອງຢິວໂດຍຊົງກ່າວວ່າ "ໃນວັນຊະບາໂຕຄວນຈະເຮັດການດີຫລືຄວນຈະເຮັດການຮ້າຍ ຈະເອົາຊີວິດໄວ້ຫລືຈະຕັດຊີວິດເສັຽ" ແຕ່ເຂົາກໍມິດຢູ່ ເມື່ອທອດພະເນດເບິ່ງອ້ອມເຂົາດ້ວຍຄວາມເຄືອງພຣະທັຍ ພຣະອົງກໍຊົງເປັນທຸກພຣະທັຍເພາະເຂົາແຂງກະດ້າງປີກທັນ ແລ້ວພຣະອົງຊົງກ່າວແກ່ຄົນມືລີບວ່າ "ຈົ່ງຢຽດມືອອກ" ຄົນນັ້ນກໍຢຽດມືອອກແລະມືຂອງຄົນນັ້ນກໍດີເປັນປົກກະຕິ (ມາຣະໂກ 3: 4).

ເຫດທີ່ພຣະເຢຊູບໍ່ໄດ້ລໍຖ້າຈົນກາຍວັນຊະບາໂຕແລ້ວຈຶ່ງປົວຄົນມືລີບຜູ້ນັ້ນເພາະວ່າພຣະອົງຢາກສະແດງໃຫ້ເຂົາເຫັນ ວ່າພຣະອົງເປັນເຈົ້າຂອງວັນຊະບາໂຕ. "ເຫດສັນນັ້ນຢ່າໃຫ້ຜູ້ໃດກ່າວໂທດເຈົ້າທັງຫລາຍໃນເຣື່ອງການກິນການດື່ມໃນເຣື່ອງເທສການ, ເຣື່ອງວັນຕົ້ນເດືອນ, ຫລືວັນຊະບາໂຕ ສິ່ງເຫລົ່ານີ້ເປັນພຽງແຕ່ເງົາຂອງເຫດການທີ່ຈະມາພາຍຫລັງ ແຕ່ຕົວຈິງນັ້ນຄືອົງພຣະຄຣິດ" (ໂກໂລຊາຍ 2: 16-17).

ພຣະອົງເຫັນພວກເຂົາມິດຢູ່ບໍ່ຕອບ, ພຣະອົງຈຶ່ງເຄືອງພຣະທັຍ (ໃຈຮ້າຍ) ເພາະພຣະອົງພະຍາຍາມສະແດງຣິດອຳນາດໃຫ້ເຂົາເຫັນວ່າພຣະອົງຊົງເປັນພຣະເຈົ້າ ແຕ່ພວກເຂົາກໍບໍ່ຍອມເຂົ້າໃຈ ເພາະເຂົາຢ້ານຈະເສັຽຕຳແໜ່ງ, ຊື່ສຽງ ແລະໜ້າຕາຂອງພວກເຂົາ. ພຣະອົງເປັນທຸກໃຈເພາະເຂົາແຂງກະດ້າງບໍ່ຍອມຮັບເຊື່ອຄວາມຈິງ. ເຖິງແມ່ນວ່າຈະເຫັນກັບຕາເຂົາກໍຮັບບໍ່ໄດ້ ດ້ວຍເຫດນີ້ເຂົາຈຶ່ງວາງແຜນຈະຂ້າພຣະອົງເພື່ອກຽດແລະສັກສີຂອງເຂົາຈະຍັງຄົງຢູ່ເຫມືອນເດີມ.

<u>ຄຳຖາມ:</u>

1. ດ້ວຍເຫດໃດຄົນເປັ້ຽຈຶ່ງໄປຫາພຣະເຢຊູ? ເມື່ອເຂົ້າໄປບໍ່ໄດ້ເຂົາເຮັດແນວໃດຈຶ່ງເຂົ້າໄປໄດ້?

2. ວາດພາບຄົນເປັ້ຽຍ່າງໄດ້ຄັ້ງແຣກໃນຊີວິດຈະເປັນແນວໃດ?

3. ຄົນສະບາຍບໍ່ຕ້ອງການໝໍຢາ ແຕ່ຄົນເຈັບຕ້ອງການໝໍ ເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິນທັມ ແຕ່ມາເອີ້ນເອົາຄົນນອກສິນທັມ ທີ່ພຣະເຢຊູກ່າວໝາຍຄວາມວ່າແນວໃດ?

4. ມີສອງພວກຕິດຕາມພຣະເຢຊູນັ້ນ ມີພວກໃດແດ່? ແຕ່ລະພວກຕິດຕາມແຕກຕ່າງກັນຢ່າງໃດ?

5. ເປັນຫຍັງພຣະເຢຊູຈຶ່ງບໍ່ລໍຖ້າຈົນພົ້ນວັນຊະບາໂຕແລ້ວຈຶ່ງເຮັດການອັສຈັນເຫລົ່ານີ້?

6. ເປັນຫຍັງພວກຟາຣີຊາຍຈຶ່ງບໍ່ພໍໃຈແລະປອງຂ້າພຣະອົງເສັຽ?

7. ມີສອງພວກທີ່ຕິດຕາມພຣະເຢຊູນັ້ນທ່ານແມ່ນພວກໃດ?

8. ເຮົາທັງຫລາຍຈະນຳເຣື່ອງນີ້ໄປບອກກັບຍາດພີ່ນ້ອງເຮົານີ້ໃດ?

# ບົດຮຽນທີ 3
# ກຸ່ມຕິດຕາມພຣະເຢຊູ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມາຣະໂກ 3: 7-35
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ມາຣະໂກ 3: 7-35
ຈຸດສຳຄັນຂອງບົດຮຽນນີ້: ພຣະເຢຊູຊົງແຕ່ງຕັ້ງທ່ານໃຫ້ເຮັດພາຣະກິດຂອງພຣະບິດາ
ຄຳຖາມເພື່ອການສຳຣວດ ເຮົາຈະຕອບສນອງໃນການແຕ່ງຕັ້ງພຣະອົງແນວໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າທຸກຄົນທີ່ເຮັດພາຣະກິດຂອງພຣະເຈົ້າແມ່ນຄອບຄົວພຣະເຢຊູ.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຊ່ອຍເຫລືອເບິ່ງແຍງທຸກຄົນໃນພຣະນາມແຫ່ງພຣະເຢຊູຄຣິດ ທີ່ຕົກຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.
- ປັບປຸງຄອບຄົວຄຣິສຕຽນໃຫ້ເຂັ້ມແຂງ.

ຫລັງຈາກພຣະອົງຊົງປົວຄົນມືລີບແລ້ວປະຊາຊົນຈາກຫລາຍແຫ່ງໄດ້ຕິດຕາມພຣະອົງຮວມທັງຜູ້ທີ່ຖືກປົວໃຫ້ດີພະຍາດ ແລະຄົນຍັງເປັນພະຍາດຢູ່ກໍຕາມຫາພຣະອົງເພື່ອຈະເຂົ້າໃກ້ພຣະອົງ, ສ່ວນພວກຟາຣີຊາຍກໍຕິດຕາມສອດແນມຢູ່ເໝືອນກັນ ເພື່ອເຂົາຈະຈັບເອົາຫລັກຖານຟ້ອງພຣະອົງຕໍ່ສານສູງສຸດ. ທຸກວັນນີ້ກໍມີບຸກຄົນສີ່ປະເພດຕິດຕາມພຣະອົງ ເໝືອນສມັຍກ່ອນບໍ່ຜິດເລີຍ, ຄົນສີ່ຈຳພວກນີ້ຄື:

1. ສາວົກຂອງພຣະອົງ ຕິດຕາມພຣະອົງຢ່າງໃກ້ຊິດເພື່ອຮຽນຮູ້ແລະຄອຍຮັບໃຊ້ພຣະອົງ.
2. ຜູ້ທີ່ພຣະອົງປົວພະຍາດໃຫ້ຫາຍດີແລ້ວກໍຕິດຕາມເພາະຮູ້ຈັກພຣະຄຸນພຣະອົງ.
3. ຜູ້ຍັງເປັນພະຍາດກໍຕິດຕາມເພື່ອຫາໂອກາດເຂົ້າຫາພຣະອົງເພື່ອປົວພະຍາດ.
4. ຟາຣີຊາຍຕິດຕາມເພື່ອຊອກຫາພະຍານຫລັກຖານເພື່ອຟ້ອງພຣະອົງ.

ຄຳຖາມມີຢູ່ວ່າ ໃນຈຳນວນຄົນສີ່ປະເພດນີ້ທ່ານແມ່ນຜູ້ຕິດຕາມແນວໃດ? ທ່ານແນ່ໃຈວ່າທ່ານເປັນແນວນັ້ນແທ້ບໍ່?

ປະຊາຊົນຜູ້ຕິດຕາມ (ມາຣະໂກ 3: 7-12)

- ກຸ່ມຕິດຕາມພຣະເຢຊູກຸ່ມທີ 1

ຫລັງຈາກພຣະອົງຊົງປົວຄົນມືລີບແລ້ວ ພວກຟາຣີຊາຍຈຶ່ງໄປປຶກສາກັບພັກພວກຂອງເຮໂຣດວາງແຜນການຈະຂ້າພຣະເຢຊູເສັຽ ເມື່ອພຣະອົງຮູ້ຂ່າວນັ້ນພຣະອົງຈຶ່ງຟ້າວອອກໄປຍັງບ່ອນເປີດແປນຄືສະເດັດໄປຍັງແຄມທະເລສາບພ້ອມກັບສາວົກພຣະອົງດ້ວຍຄວາມຣະມັດຣະວັງ. ສາວົກຂອງພຣະອົງນອກຈາກການຕິດຕາມຢ່າງ

ໃກ້ຊິດເພື່ອຮຽນຈາກພຣະອົງແລ້ວພວກເຂົາເຈົ້າຍັງຮັບໃຊ້ພຣະອົງດ້ວຍໃຈໂມທະນາພຣະຄຸນແລະຍັງປ້ອງກັນພັຍອັນຕະລາຍ ໃຫ້ພຣະອົງອີກ ຕົວຢ່າງ: "ຊີໂມນເປໂຕ ມີດາບຈຶ່ງຖອດອອກຟັນຂ້ອຍໃຊ້ຄົນນຶ່ງຂອງມະຫາປະໂລຫິດຖືກຫູເບື້ອງຂວາຂາດ ຂ້າໃຊ້ຜູ້ນັ້ນຊື່ວ່າມາລະໂຂ (ໂຢຮັນ 18:10). ຂ້າພະເຈົ້າຄິດວ່າເປໂຕຄົງບໍ່ຫມາຍໃຈຈະຕັດຫູຂອງຂ້າໃຊ້ ປະໂລຫິດດອກແຕ່ຄິດວ່າລາວຫມາຍໃຈຈະຜ່າຫົວລົງມາເລີຍແຕ່ກໍພາດໄປເພາະຄົນນັ້ນອາຈຫລີກຫລີເປໂຕເອງບໍ່ແມ່ນນັກຟັນດາບຈຶ່ງຟັນບໍ່ຖືກເປົ້າຫມາຍ.

- ກຸ່ມຕິດຕາມພຣະເຢຊູກຸ່ມທີ 2

ກຸ່ມຕິດຕາມພຣະເຢຊູກຸ່ມທີ 2 ຕິດຕາມພຣະອົງດ້ວຍໃຈສັດຊື່ເພາະພວກເຂົາເຈົ້າຮູ້ວ່າເມື່ອເຂົາໄດ້ຟັງຄໍາ ເທສນາສັ່ງສອນຂອງພຣະເຢຊູແລ້ວເຮັດໃຫ້ເຂົາປິ້ມປິຕິຍິນດີເພາະຕົນເອງໄດ້ຮັບຄວາມລອດພົ້ນຝ່າຍຈິດວິນຍານ ສ່ວນຝ່າຍຮ່າງກາຍກໍຫາຍດີພະຍາດເນື່ອງຈາກພຣະອົງຊົງປິ່ນປົວເຂົາ,ດ້ວຍເຫດນີ້ຄົນຈໍາພວກນີ້ຈຶ່ງສມັກໃຈຕິດຕາມພຣະອົງດ້ວຍຄວາມຍິນດີແລະໃຈໂມທະນະພຣະຄຸນ.

- ກຸ່ມຕິດຕາມພຣະເຢຊູກຸ່ມທີ 3

ກຸ່ມຕິດຕາມພຣະເຢຊູກຸ່ມທີ 3 ໄດ້ແກ່ຜູ້ທີ່ເຫັນຊີວິດຂອງກຸ່ມທີ 2 ແລ້ວຢາກໃຫ້ຊີວິດຂອງຕົນເອງເປັນຄືເຂົາເຈົ້າຄືໄດ້ຮັບຄວາມລອດພົ້ນຝ່າຍຈິດວິນຍານ ແລະຈະຂໍໃຫ້ພຣະເຢຊູປົວພະຍາດທາງຮ່າງກາຍຂອງພວກເຂົາເຫມືອນດັ່ງພຣະອົງໄດ້ປົວຄົນໃນກຸ່ມທີ 2 ນັ້ນ.

ຄົນຫລວງຫລາຍໄດ້ມາຫາພຣະອົງເພາະເຂົາໄດ້ຍິນເຖິງເຣື່ອງທີ່ພຣະອົງຊົງກະທໍາຢູ່ "ພຣະອົງຈຶ່ງສັ່ງພວກລູກສິດໃຫ້ເອົາເຮືອນ້ອຍມາຄອຍຮັບພຣະອົງ ເພື່ອບໍ່ໃຫ້ປະຊາຊົນບຽດພຣະອົງ ເພາະວ່າພຣະອົງໄດ້ຊົງໂຜດຫລາຍຄົນໃຫ້ດີພະຍາດ ແລະຜີຖ່ອຍຮ້າຍທີ່ສິງຢູ່ໃນຫລາຍຄົນ ເມື່ອໄດ້ເຫັນພຣະອົງກໍໄດ້ຫມູບລົງຂາບພຣະອົງແລ້ວຮ້ອງຂຶ້ນວ່າ "ທ່ານເປັນບຸດຂອງພຣະເຈົ້າ." ( ມາຣະໂກ 3: 10-11).

- ກຸ່ມຕິດຕາມພຣະເຢຊູກຸ່ມທີ 4

ສ່ວນກຸ່ມທີ 4 ເປັນກຸ່ມຟາຣີຊາຍທີ່ຄອຍຕິດຕາມຫ່າງໆໄກເພື່ອສອດແນມຊອກຫາເອົາຄວາມຜິດທຸກປະການທີ່ພຣະອົງຊົງເຮັດ ເຂົາເຮັດ ດັ່ງນີ້ເພື່ອເຂົາຈະປ້າຍຄວາມຜິດໃຫ້ແກ່ພຣະເຢຊູ ແລະນໍາເຣື່ອງທັງຫມົດໄປຟ້ອງຕໍ່ສານເພື່ອໃຫ້ສານຕັດສິນຂ້າພຣະອົງເສັຽ ແລະເມື່ອພຣະອົງຖືກຂ້າແລ້ວອໍານາດແລະຊື່ສຽງທັງຫມົດກໍຈະກັບມາສູ່ພວກເຂົາເຫມືອນເດີມ. ຄົນຈໍາພວກນີ້ຍັງມີເຊື້ອສາຍມາຈົນເຖິງທຸກວັນນີ້ດ້ວຍ ຄືຄົນຄອຍຖ້າເບິ່ງຄວາມຜິດຜູ້ອື່ນໃນໂບດ, ຄົນທີ່ຄອຍຈັບຄວາມຜິດຄຣູສອນ ແລະໃນທີ່ສຸດກໍຈັບຄວາມຜິດຂອງຜູ້ເທສນາອີກຊໍ້າ.

<u>ຊົງແຕ່ງຕັ້ງສາວົກ</u> (ມາຣະໂກ 3:13-19).

ເມື່ອປະຊາຊົນມາຫາພຣະອົງຢ່າງຫລວງຫລາຍພຣະອົງກໍຊົງແຕ່ງຕັ້ງສາວົກສິບສອງຄົນ ເພື່ອພຣະອົງຈະມອບສິດແລະອໍານາດໃຫ້ເຂົາ. ມີຄົນເຄີຍຖາມຂ້າພະເຈົ້າວ່າ "ການທີ່ພຣະເຢຊູມອບວຽກນີ້ໃຫ້ກັບພວກສາວົກສິບສອງຄົນນັ້ນເພາະພຣະອົງເຮັດຜູ້ດຽວບໍ່ໄດ້ແມ່ນບໍ່?" ຂ້າພະເຈົ້າຕອບເພິ່ນວ່າຖ້າຈະເບິ່ງຕາມສາຍຕາຂອງມະນຸດກໍອາຈເປັນດັ່ງນັ້ນແທ້, ແຕ່ຂ້າພະເຈົ້າເຂົ້າໃຈວ່າພຣະອົງຊົງເປັນພຣະເຈົ້າມີຣິດອໍານາດທີ່ຈະເຮັດທຸກຢ່າງໄດ້ໂດຍບໍ່ມີຂອບເຂດຈໍາກັດ. ຄວາມຈິງແລ້ວພຣະອົງບໍ່ຕ້ອງການຄວາມຊ່ວຍເຫລືອຈາກສາວົກສິບສອງຄົນເລີຍ ແລະພຣະອົງກໍບໍ່ຕ້ອງການຄວາມຊ່ວຍເຫລືອຈາກພວກເຮົາເຊັ່ນດຽວກັນ ເພາະພຣະອົງມີອໍານາດທີ່ຈະເຮັດໄດ້ດັ່ງທີ່ເຮົາເຫັນພຣະອົງຊົງເລືອກ

ເອົາສາວົກຕາມພຣະທັຍຂອງພຣະອົງ ເຫດທີ່ພຣະອົງຊົງແຕ່ງຕັ້ງສາວົກກໍເພາະວ່າ ທັງສິບສອງຄົນນີ້ຕຽມພ້ອມແລ້ວທີ່ຈະມອບກາຍຖວາຍຕົວຮັບໃຊ້ພຣະອົງ ແລະກິຈການຂອງພຣະອົງ. ອີກປະການນຶ່ງທີ່ພຣະອົງສະເດັດມາໃນໂລກບໍ່ແມ່ນມາຊອກຫາກຽດຕິຍົດແລະຊື່ສຽງຂອງພຣະອົງ ແຕ່ມາເພື່ອໂຜດຄົນທັງຫລາຍໃຫ້ໄດ້ພົ້ນ ດັ່ງນັ້ນພຣະອົງຈຶ່ງແຕ່ງຕັ້ງສາວົກແລະຜູ້ຮັບໃຊ້ຈາກວັນນັ້ນຈົນເຖິງວັນນີ້ ເພາະຜູ້ທີ່ພຣະອົງຊົງແຕ່ງຕັ້ງແຕ່ລະຄົນລ້ວນແລ້ວແຕ່ຜູ້ຖວາຍຕົວຮັບໃຊ້ພຣະອົງທັງຫມົດ.

ພຣະເຢຊູເລືອກສາວົກທັງສິບສອງຄົນອອກມາຈາກຄົນຈຳນວນຫລວງຫລາຍທີ່ຕິດຕາມພຣະອົງ. ການທີ່ພຣະຊົງແຕ່ງຕັ້ງສາວົກທັງສິບສອງຄົນນີ້ບໍ່ແມ່ນຍ້ອນວ່າເຂົາເຈົ້າເປັນຄົນດີມີສິລທັມ, ບໍ່ແມ່ນຍ້ອນພວກເຂົາເຈົ້າມີຄວາມຮູ້ສລາດຫລັກແຫລມ, ບໍ່ແມ່ນຍ້ອນພວກເຂົາເຈົ້າມີຊື່ສຽງດີ, ບໍ່ແມ່ນຍ້ອນພວກເຂົາເຈົ້າມີວິຊາຫາກິນຢ່າງດີ ແຕ່ແມ່ນຍ້ອນຄົນທັງສິບສອງຄົນນີ້ພ້ອມທີ່ຈະເຊື່ອຟັງແລະປະຕິບັດຕາມຄຳສັ່ງຂອງພຣະອົງທຸກຢ່າງ ດັ່ງນັ້ນພຣະອົງຈຶ່ງຊົງແຕ່ງຕັ້ງໄວ້ໂດຍພຣະປະສົງຂອງພຣະອົງ. "ພຣະອົງຊົງຕັ້ງສິດສິບສອງຄົນໄວ້ ຈຶ່ງເອີ້ນເຂົາວ່າສາວົກໃຫ້ຢູ່ກັບພຣະອົງເພື່ອຊົງໃຊ້ໄປປະກາດ, ແລະຊົງໃຫ້ມີອຳນາດຂັບໄລ່ຜີອອກໄດ້ (ມາຣະໂກ 3: 14-15).

ເຮົາເຫັນວ່າພຣະເຢຊູໄດ້ເລືອກເອົາຄົນທຸກປະເພດເພື່ອນຳຂ່າວປະເສີດໄປທົ່ວໂລກ. ອີກປະການນຶ່ງເຮົາເຫັນວ່າພຣະເຢຊູບໍ່ຕ້ອງການຄວາມຊ່ວຍເຫລືອຈາກສາວົກ ເນື່ອງຈາກການຮູ້ພຣະຄຸນ ສາວົກຈຶ່ງຍອມມອບກາຍຖວາຍຕົວຮັບໃຊ້ພຣະອົງ.

ມີຄຳຖາມເຄີຍຖາມກັນມາວ່າ ເປັນຫຍັງພຣະອົງຈຶ່ງເລືອກສາວົກສິບສອງຄົນ, ເປັນຫຍັງຈຶ່ງບໍ່ເລືອກສິບເອັດຫລືສິບສາມຫລືເລືອກຫລາຍກວ່ານັ້ນເພາະຫລາຍຄົນທີ່ຕິດຕາມພຣະເຢຊູໃນເວລານັ້ນກໍມີຈິດໃຈຄືສາວົກທັງສິບສອງຄົນນີ້?. ເພື່ອຕອບຄຳຖາມນີ້ກະຣຸນາອ່ານ ຂໍ້ 13 " ແລ້ວພຣະອົງໄດ້ສະເດັດຂຶ້ນພູເຂົາ ແລະພໍພຣະທັຍຈະເອີ້ນຜູ້ໃດມາພຣະອົງເອີ້ນຜູ້ນັ້ນ ແລ້ວເຂົາກໍມາຫາພຣະອົງ" ໃນພຣະຄັມພີຕອນນີ້ບອກເຮົາວ່າການເອີ້ນຜູ້ໃດ, ຈຳນວນເທົ່າໃດນັ້ນເປັນນ້ຳພຣະທັຍຂອງພຣະອົງ. ນັກສາສນາສາດຜູ້ນຶ່ງໄດ້ຊີ້ແຈງໂດຍອ້າງເຖິງ ມັດທາຍ 19:28 ວ່າພຣະເຢຊູແຕ່ງຕັ້ງສາວົກທັງສິບສອງຄົນເພື່ອໃຫ້ຖືກຕ້ອງກັບນ້ຳເບີສິບສອງຕະກຸນຂອງອິສເອນທີ່ແຕກກະຈາຍກັນໃນທົ່ວໂລກ. ດັ່ງນັ້ນສາວົກທັງສິບສອງຈຶ່ງໄດ້ຮັບການຝຶກຫັດໂດຍໃຊ້ຊີວິດຕິດຕາມພຣະເຢຊູທຸກມື້ທຸກວັນເປັນເວລາສາມປີກວ່າ.

## **<u>ແມ່ແລະນ້ອງຂອງພຣະເຢຊູ</u> ( 3:-31-35)**

ນາງມາຣີອາມານດາຂອງພຣະອົງພ້ອມດ້ວຍພວກນ້ອງຊາຍຂອງພຣະອົງມີຊື່ວ່າ "ຢາໂກໂບ, ໂຢເຊ, ຢູດາ ແລະຊີໂມນ" (ມາຣະໂກ 6:3). ໄດ້ມາຫາພຣະອົງ. ເມື່ອເຂົ້າໄປຫາພຣະອົງບໍ່ໄດ້ເນື່ອງຈາກວ່າຄົນຫນາແຫນ້ນມາຟັງຄຳສັ່ງສອນຂອງພຣະອົງ ມາຣີອາຈຶ່ງໃຊ້ຄົນໄປທູນພຣະອົງວ່າ "ເບິ່ງແມ, ມານດາແລະພວກນ້ອງຊາຍຂອງທ່ານມາຫາທ່ານຄອຍຢູ່ຂ້າງນອກ ພຣະອົງຊົງຕອບເຂົາວ່າ ໃຜເປັນມານດາແລະເປັນນ້ອງຊາຍຂອງເຮົາ" (ມາຣະໂກ 3: 32). ພຣະເຢຊູຊົງຮັກແລະໃຫ້ກຽດນາງມາຣີອາຜູ້ເປັນແມ່ຂອງພຣະອົງ ແຕ່ພຣະອົງໃຫ້ກຽດຜູ້ທີ່ຮັກແລະເຊື່ອໃນພຣະອົງເຊັ່ນກັນ. ຜູ້ທີ່ມາກ່າວຕໍ່ພຣະອົງກໍກ່າວທາງເນື້ອຫນັງ ແຕ່ພຣະອົງຊົງຕອບດ້ວຍເຣື່ອງຂອງຈິດວິນຍານດ້ວຍເຫດນີ້ພຣະອົງຈຶ່ງຊົງກ່າວວ່າ "ດ້ວຍວ່າຜູ້ໃດຈະເຮັດຕາມນ້ຳພຣະທັຍພຣະເຈົ້າ ຜູ້ນັ້ນແຫລະ, ເປັນນ້ອງຊາຍ, ນ້ອງສາວ, ແລະເປັນມານດາຂອງເຮົາ" (ມາຣະໂກ 3:35).

ຄຳເວົ້າຂອງພຣະເຢຊູຕອນນີ້ເປັນຫນ້າຊົມຊື່ນຍິນດີສຳລັບຄຣິສຕຽນແທ້ງ ເພາະເປັນຄຳເວົ້າເລົ້າໂລມໃຈຄຣິສຕຽນຜູ້ທີ່ເຮັດຕາມນ້ຳພຣະທັຍພຣະເຈົ້າທຸກຄົນຄືທຸກຄົນໄດ້ກາຍເປັນຄອບຄົວຂອງອົງພຣະຜູ້ເປັນເຈົ້າ, ແລະຄຳ

ເວົ້າຄຳດຽວກັນນີ້ ຫາກເຮົາຟັງບໍ່ດັກເຮົາກໍຈະເຂົ້າໃຈຜິດວ່າພຣະເຢຊູບໍ່ໃຫ້ກຽດມານດາຂອງພຣະອົງ ທັງນີ້ກໍເພາະວ່າ ເຮົາທັງເປັນຄົນທັມດາສາມັນມີຄວາມຄິດແລະສະຕິປັນຍາແບບເນື້ອໜັງ ສ່ວນພຣະເຢຊູເປັນພຣະບຸດຂອງພຣະເຈົ້າແລະກຳລັງເຮັດພຣະຣາຊກິດຂອງພຣະບິດາ ພຣະອົງກໍກ່າວເຣື່ອງຂອງຝ່າຍຈິດວິນຍານ.

<u>ຄຳຖາມ:</u>

1. ຄົນສີ່ປະເພດທີ່ຕິດຕາມພຣະເຢຊູມີປະເພດໃດແດ່?

2. ຄົນແຕ່ລະປະເພດມີຄວາມແຕກຕ່າງກັນຢ່າງໃດ?

3. ຄົນສີ່ປະເພດນີ້ທ່ານຄິດວ່າທ່ານເປັນຄົນປະເພດໃດ? ເປັນຫຍັງຈຶ່ງວ່າແນວນັ້ນ?

4. ດ້ວຍເຫດໃດພຣະອົງຈຶ່ງເລືອກສາວົກສິບສອງຄົນ?

5. ພຣະອົງຊົງເລືອກສິບສອງຄົນມາເຮັດຫຍັງ?

6. ດ້ວຍເຫດໃດພຣະເຢຊູຈຶ່ງກ່າວວ່າ " ດ້ວຍວ່າຜູ້ໃດຈະເຮັດຕາມນ້ຳພຣະທັຍພຣະເຈົ້າ ຜູ້ນັ້ນແຫລະ, ເປັນນ້ອງຊາຍ, ນ້ອງສາວ, ແລະເປັນມານດາຂອງເຮົາ "

7. ເຮົາຈະເຮັດແນວໃດຈຶ່ງຈະເຮັດຕາມນ້ຳພຣະທັຍພຣະເຈົ້າໄດ້ ນັບແຕ່ວັນນີ້ເປັນຕົ້ນໄປ?

# ບົດຮຽນທີ 4
# ຊົງສອນເປັນຄຳອຸປມາ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມາຣະໂກ 4:1-20
ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: ມາຣະໂກ 4:1-34
ຈຸດສຳຄັນຂອງບົດຮຽນນີ້: ພຣະເຢຊູຊົງສອນເປັນຄຳອຸປະມາເຣື່ອງຊີວິດນິຣັນ.
ຄຳຖາມເພື່ອການສຳຣວດ ເຮົາຮູ້ໄດ້ແນວໃດວ່າພຣະເຢຊູມາຈາກພຣະເຈົ້າ.
ຈຸດປະສົງຂອງບົດຮຽນນີ້: ບອກໃຫ້ຮູ້ວ່າພຣະເຈົ້າມີພຣະປະສົງໃຫ້ທຸກຄົນມີຊີວິດໃນແຜ່ນດິນຂອງພຣະອົງ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ**

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.
- ປັບປຸງຄອບຄົວຄຣິສຕຽນໃຫ້ເຂັ້ມແຂງ.

ຜູ້ຮັບໃຊ້ພຣະເຈົ້າແຕ່ລະຄົນມີຫນ້າທີ່ປ່າວປະກາດເຣື່ອງຂອງພຣະເຈົ້າເທົ່ານັ້ນ, ຜູ້ທີ່ຈະເຊື່ອຫລືບໍ່ເຊື່ອບໍ່ແມ່ນຫນ້າທີ່ຂອງຜູ້ປະກາດແຕ່ລະຄົນ ເຖິງແມ້ວ່າຜູ້ທີ່ເຊື່ອແລ້ວຈະເຊື່ອນ້ອຍຫລືເຊື່ອຫລາຍກໍບໍ່ແມ່ນຫນ້າທີ່ຂອງຜູ້ຮັບໃຊ້ອີກ ແຕ່ເປັນຫນ້າທີ່ຂອງພຣະວິນຍານບໍຣິສຸດກັບຜູ້ທີ່ເຊື່ອເອງ ຫາກຜູ້ເຊື່ອຍອມມອບກາຍຖວາຍຕົວຕໍ່ພຣະເຈົ້າແລ້ວພຣະອົງຈະເປັນຜູ້ອວຍພຣະພອນແກ່ຜູ້ນັ້ນເອງ. ດັ່ງນັ້ນຜູ້ຮັບໃຊ້ພຣະເຈົ້າຢ່ານ້ອຍໃຈເມື່ອບໍ່ສາມາດນຳຄົນມາໂບດ ຫລືຄົນທີ່ມາໂບດແລ້ວບໍ່ຢູ່ ຫລືສອນທຸກໆວັນອາທິດແຕ່ຮູ້ສຶກວ່າບໍ່ໃຫຽ ຈົ່ງເຂົ້າໃຈເສັຽວ່າຫນ້າທີ່ຂອງທ່ານຄືຕັ້ງໃຈຕຽມການສອນໃຫ້ດີທີ່ສຸດໂດຍການຊົງນຳຂອງພຣະວິນຍານບໍຣິສຸດເທົ່ານັ້ນກໍຫມົດຫນ້າທີ່ຂອງທ່ານ. ການໃຊ້ຄຳອຸປະມາຂອງພຣະເຢຊູນັ້ນກໍເພື່ອອະທິບາຍໃຫ້ຜູ້ຟັງໄດ້ຄຶດແລະພິຈາຣະນາໃຫ້ເຫັນຮູບພາບຕົວຈິງຄືເຣື່ອງແຜ່ນດິນສວັນ ດັ່ງນັ້ນເຮົາທັງຫລາຍຄວນຣະມັດຣະວັງຢ່າພະຍາຍາມແປໄປຢ່າງອື່ນທີ່ເກີນກວ່າພຣະເຢຊູໄດ້ສອນ.

ພຣະເຢຊູເລົ່າເຣື່ອງ (4:1-9)

ເມື່ອປະຊົນຫລວງຫລາຍມາຫາພຣະອົງເພື່ອຟັງຄຳສັ່ງສອນ ພຣະອົງຈຶ່ງຫາທາງທີ່ຈະໃຫ້ປະຊາຊົນໄດ້ຍິນແລະໄດ້ເຫັນທົ່ວເຖິງກັນ ພຣະອົງຈຶ່ງສະເດັດເຂົ້າໃນເຮືອແລ້ວອອກໄປນ້ອຍນຶ່ງ ດ້ວຍວິທີນີ້ປະຊົນໄດ້ຍິນແລະໄດ້ເຫັນພຣະອົງຢ່າງຊັດເຈນ. ພຣະອົງຕັ້ງຕົ້ນກ່າວກັບປະຊາຊົນເປັນຄຳອຸປະມາເຣື່ອງແຜ່ນດິນສວັນເປັນດັ່ງນີ້: "ມີຄົນນຶ່ງອອກໄປຫວ່ານ ພືດ, ແລະເມື່ອກຳລັງຫວ່ານຢູ່ນັ້ນ ລາງເມັດກໍຕົກໃສ່ແຄມທາງແລ້ວນົກກໍມາກິນເສັຽ. ລາງເມັດກໍຕົກໃສ່ບ່ອນຫີນ ຫລາຍດິນຫນ້ອຍຈຶ່ງງອກຂຶ້ນໂລດເພາະດິນບໍ່ເລິກ. ເມື່ອຕາເວັນອອກມາກໍແຫ້ມຈຶ່ງຫ່ຽວແຫ້ງໄປເພາະບໍ່ມີຮາກ ລາງເມັດກໍຕົກກາງພຸ່ມຫນາມ ຫນາມຈຶ່ງປົ່ງຂຶ້ນຫຸ້ມຮັດເສັຽ ຈຶ່ງບໍ່ເກີດຜົນ ລາງເມັດກໍຕົກໃສ່

ດິນ ດີ  ແລ້ວງອກງາມຈະ ເຣີນຂຶ້ນ ເກີດຜົນສາມສິບຕໍ່, ຫົກສິບຕໍ່, ແລະຮ້ອຍຕໍ່ ແລ້ວພຣະອົງກ່າວແກ່ເຂົາວ່າ ຜູ້ໃດມີຫູຢາກຟັງ ຈົ່ງຟັງເອົາ (ມາຣະໂກ 4:3-9). ເຣື່ອງນີ້ຈຶ່ງເປັນເຣື່ອງທີ່ເຂົ້າໃຈຍາກສຳລັບຜູ້ບໍ່ເຊື່ອໃນພຣະອົງ. ນັກສາສນາສາດແປມາຈາກນັດທາຍດັ່ງນີ້:

- ຜູ້ຫວ່ານ		ໄດ້ແກ່ພຣະເຢຊູເອງ (ດຽວນີ້ແມ່ນຜູ້ຮັບໃຊ້ພຣະເຈົ້າ).
- ເມັດພືດ		ໄດ້ແກ່ພຣະຄຳ.
- ນົກມາກິນ		ໄດ້ແກ່ມານຊາຕານຍາດເອົາໄປ (ຫລືມານປິດຫູປິດຕາບໍ່ໃຫ້ຮູ້ໃຫ້ເຫັນ).
- ດິນ		ໄດ້ແກ່ຈິດໃຈມະນຸດທັມດາ.
- ແດດ		ໄດ້ແກ່ຄວາມທຸກ ຫລືອຸປສັກຕ່າງໆ.
- ພຸ່ມໜາມ		ໄດ້ແກ່ສັຕຣູແຂງແຮງກວ່າຄວາມເຊື່ອ.
- ດິນດີໄດ້ແກ່		ຈິດໃຈຍອມຮັບເອົາພຣະທັມຄຳສອນ.
- ຜູ້ໃດມີຫູຢາກຟັງຈົ່ງຟັງເອົາ. ແປວ່າຟັງດ້ວຍຫູ ພິຈາຣະນາດ້ວຍຄວາມຄິດ, ແລະຕຶກຕອງດ້ວຍໃຈສຳນຶກ, ເຮັດດັ່ງນີ້ຈຶ່ງຈະເຂົ້າໃຈຄວາມໝາຍຂອງພຣະເຢຊູ ແລະພຣະທັມຈະເຂົ້າໄປໃນໃຈຂອງຜູ້ຢາກຟັງເທົ່ານັ້ນ.

ພຣະອົງໃຫ້ຄຳອຸປມາວ່າໃຈເຮົາເປັນດິນເພື່ອພຣະເຈົ້າຈະໄດ້ຫວ່ານພຣະທັມຂອງພຣະອົງໃສ່ສ່ວນເມັດພຣະທັມນັ້ນ ຈະຂຶ້ນຫລືບໍ່ນັ້ນຂຶ້ນກັບເຮົາໄດ້ຕຽມດິນແນວໃດ.    ຂ້າພະເຈົ້າບໍ່ແມ່ນຄົນເຮັດສວນໃດໆແຕ່ພໍຈະເຂົ້າໃຈຈາກການສັງເກດເຫັນພີ່ນ້ອງໃນໂບດເຮັດສວນຜັກຫລັງບ້ານ. ຄືກ່ອນອື່ນລາວຕ້ອງເສັຽຫຍ້າ ຫລືຕັດຕົ້ນໄມ້ທີ່ປົກຄຸມອອກກ່ອນ, ຕໍ່ມາລາວກໍຂຸດດິນປີ້ນຈາກດິນດ້ານລຸ່ມຂຶ້ນມາເທິງ, ຕໍ່ມາລາວກໍທຸບຕີດິນນັ້ນໃຫ້ມຸ່ນລະອຽດພ້ອມທັງເກັບທຸກສິ່ງທີ່ ບໍ່ຕ້ອງການອອກໃຫ້ໝົດ ແລະໃນທີ່ສຸດດິນນັ້ນກໍພ້ອມທີ່ຈະຮັບເອົາເມັດພືດ ຫລືແນວຜັກທີ່ກ້າແລ້ວທຸກເວລາ.

ຄຣິສຕຽນເຮົາມັກຈະເວົ້າວ່າ ຈິດໃຈຂອງຂ້ອຍປຽບເໝືອນດິນດີ ແຕ່ດິນດີທຸກຕອນກໍຈຳຕ້ອງຂຸດກົ່ນເໝືອນຄົນເຮັດສວນຜູ້ນີ້ເສັຽກ່ອນບໍ່ດັ່ງນັ້ນດິນຫລືຈິດໃຈດີກໍຈະບໍ່ພ້ອມທີ່ຈະຮັບເມັດພືດໄດ້ ເຖິງແມ່ນຮັບໄດ້ກໍຈະຢັ່ງຮາກບໍ່ເລິກ, ເມື່ອແດດຮ້ອນເຜົາກໍຈະແຫ້ງແຫ່ວຕາຍເພາະດິນນັ້ນຮັບນ້ຳບໍ່ໄດ້ຫລາຍຈຶ່ງລ້ຽງເມັດພືດບໍ່ໄດ້.  ດັ່ງນັ້ນທຸກຄັ້ງທີ່ເຮົາມານັ່ງໃນໂບດຈົ່ງຕຽມໃຈໃຫ້ພ້ອມແລ້ວເມັດພຣະທັມຂອງພຣະເຈົ້າຈະເຂົ້າມາໃນໃຈເຮົາແລ້ວຈເຣີນງອກງາມຂຶ້ນຈົນເບິ່ງເຫັນໃນຊີວິດປະຈຳວັນຂອງເຮົາ.

**<u>ຈຸດປະສົງຄຳອຸປມາ</u>** ((4:10-12)

ຫລັງຈາກພຣະເຢຊູຊົງຈົບການສິດສອນວັນນັ້ນດ້ວຍຄຳອຸປມາແລ້ວຜູ້ຄົນທັງຫລາຍກໍພາກັນກັບບ້ານ  ສ່ວນສາວົກແລະຄົນທີ່ຍັງຄ້າງຢູ່ໄດ້ພາກັນມາຖາມພຣະອົງໃນຄຳອຸປະມາຂອງພຣະອົງ.  "ເມື່ອຫວ້າງຄົນແລ້ວພວກທີ່ຕິດຕາມພຣະອົງພ້ອມດ້ວຍສາວົກສິບສອງຄົນໄດ້ທູນຖາມພຣະອົງເຣື່ອງຄຳອຸປະມາ ພຣະອົງຈຶ່ງຊົງກ່າວແກ່ເຂົາວ່າ ຂໍ້ຄວາມລັບເລິກເຣື່ອງຣາຊອານາຈັກຂອງພຣະເຈົ້າ   ຊົງປະທານໃຫ້ທ່ານທັງຫລາຍໄດ້ຮູ້ ແຕ່ຝ່າຍຄົນນອກນັ້ນບັນດາຂໍ້ຄວາມເລົ່ານີ້ຈະແຈ້ງໃຫ້ຮູ້ດ້ວຍຄຳອຸປະມາທັງໝົດເພື່ອ ເຂົາເບິ່ງແລ້ວເບິ່ງອີກ ແຕ່ບໍ່ເຫັນ ແລະຟັງແລ້ວຟັງອີກ ແຕ່ບໍ່ເຂົ້າໃຈ ຢ້ານວ່າເຂົາຈະຫັນກັບມາຫາພຣະເຈົ້າແລະຈະຮັບການຊົງອາພັຍ" (ມາຣະໂກ 4:10-12).

ເຮົາທັງຫລາຍເປັນຜູ້ຮັບໃຊ້ແລະເປັນສາວົກຂອງພຣະອົງແທ້ ແຕ່ມີຫລາຍຢ່າງເຮົາຍັງບໍ່ທັນເຂົ້າໃຈ  ສະນັ້ນ

ຈຶ່ງຮຽນຮູ້ແບບສາວົກລຸ້ນແຮກຄືພວກເຂົາເຈົ້າລໍຖ້າຈົນຄົນອື່ນອອກໄປສາກ່ອນພວກສາວົກຈຶ່ງຖາມພຣະອົງ. ພຣະເຢຊູໄດ້ບອກສາວົກຂອງພຣະອົງວ່າ "ຂໍ້ຄວາມລັບເລິກເຣື່ອງຣາຊອານາຈັກຂອງພຣະເຈົ້າ ຊົງໂຜດປະທານໃຫ້ທ່ານທັງຫລາຍໄດ້ຮູ້" ຊຶ່ງພຣະອົງໝາຍຄວາມວ່າຜູ້ທີ່ເຊື່ອໃນພຣະອົງຈະເຂົ້າໃຈເພາະພຣະອົງຊົງສອນດ້ວຍຄວາມເປີດເຜີຍສໍາລັບຜູ້ບໍ່ເຊື່ອພຣະອົງຊົງສອນເປັນຄໍາອຸປະມາ.

ເຮົາທັງຫລາຍບໍ່ສາມາດເຮັດໃຫ້ຄົນທັງຫລາຍເຂົ້າໃຈໄດ້ ເພາະຄວາມເຂົ້າໃຈນັ້ນຜູ້ຟັງບໍ່ຍອມເຂົ້າໃຈ. ຄົນທີ່ຟັງແລ້ວເຂົ້າໃຈນັ້ນຄົນນັ້ນແມ່ນຄົນພ້ອມທີ່ຈະເຂົ້າໃຈ. <u>ຕົວຢ່າງ:</u> ເວລາເຮົາຍັງເປັນເດັກນ້ອຍເຄີຍໄດ້ຍິນ ຜູ້ເຖົ້າຜູ້ແກ່ເວົ້າວ່າເຈັບຫລັງ, ເຈັບແອວເຮົາບໍ່ຄ່ອຍ ເຂົ້າໃຈ.ເມື່ອເຮົາກາຍເປັນຄົນແກ່ແລ້ວຄືທຸກວັນນີ້ເຮົາຈຶ່ງເຂົ້າໃຈວ່າເຈັບຫລັງເຈັບແອວເປັນແນວໃດ. ເຫດສະນັ້ນການທີ່ຈະເຂົ້າໃຈໃນສິ່ງໃດສິ່ງນຶ່ງນັ້ນຜູ້ຟັງຈໍາຕ້ອງພ້ອມທີ່ຈະເຂົ້າໃຈ ແລະເປັນຜູ້ຍອມຮັບສະພາບຂອງຄວາມເປັນຈິງເສັຽກ່ອນແລະຫາກຍັງບໍ່ເຂົ້າໃຈຈໍາເປັນຕ້ອງໃຊ້ເວລາເປັນເດືອນເປັນປີຈຶ່ງຈະເຂົ້າ ໃຈໄດ້. ດັ່ງນັ້ນຢ່ານ້ອຍໃຈເມື່ອທ່ານເບິ່ງຍັງບໍ່ເຫັນ, ຟັງແລ້ວຍັງບໍ່ເຂົ້າໃຈ ຫາກທ່ານຈິງໃຈຢາກເຂົ້າໃຈ ເຣື່ອງຂອງພຣະອົງເຈົ້າຢ່າງແທ້ຈິງມີທາງດຽວຄືຍອມຈໍານົນໂດຍການມອບກາຍຖວາຍຕົວຕໍ່ພຣະອົງແລ້ວທ່ານຈະເຂົ້າໃຈດັ່ງພຣະອົງຊົງສັນຍາວ່າ " ຂໍ້ຄວາມ ລັບເລິກເຣື່ອງຣາຊອານາຈັກຂອງພຣະເຈົ້າ ຊົງໂຜດປະທານໃຫ້ທ່ານທັງຫລາຍໄດ້ຮູ້".

ຂ້າພະເຈົ້າມີເພື່ອນນັກຮຽນຜູ້ນຶ່ງສມັຍຮຽນຢູ່ໂຮງຮຽນລີເຊດ້ວຍກັນເພື່ອນຜູ້ນີ້ຮຽນເກັ່ງແລະສລາດກວ່າຂ້າພະເຈົ້າຫລາຍ, ເພື່ອນຄົນນີ້ຮຽນຈົບສ່ວນຂ້າພະເຈົ້າຮຽນບໍ່ເກັ່ງໂຮງຮຽນຈຶ່ງໃຫ້ຮຽນຕໍ່ໄປ. ຈາກນັ້ນມາຂ້າພະເຈົ້າແລະເພື່ອນຜູ້ນີ້ກໍຂາດການຕິດຕໍ່ພົວພັນກັນ, ແຕ່ພໍຮູ້ຂ່າວວ່າເພື່ອນຜູ້ນີ້ກາຍເປັນຄຣູສອນແລະມີຖານະດີອີກດ້ວຍ. ສາມສິບປີກວ່າຜ່ານໄປສິ່ງທີ່ບໍ່ຄາດຝັນກໍມີມາ. ໃນຂະນະທີ່ຂ້າພະເຈົ້າກໍາລັງສອນພຣະຄັມພີໃນບ້ານຫລັງນຶ່ງກໍເຫັນເພື່ອນເກົ່າຜູ້ນີ້ຍ່າງເຂົ້າມາໃນບ້ານພໍທັງສອງເຫັນໜ້າກັນກໍຈໍາກັນໄດ້. ເມື່ອສິ້ນສຸດການສອນແລ້ວຂ້າພະເຈົ້າແລະເພື່ອນຈຶ່ງ ມາຖາມຂ່າວຄາວກັນດ້ວຍຄວາມຍິນດີທີ່ໄດ້ເຫັນກັນອີກໃນຕ່າງປະເທດ. ຂ້າພະເຈົ້າບໍ່ເຄີຍລືມຄໍາຖາມຂອງລາວທີ່ ຖາມຂ້າພະເຈົ້າວ່າ " ເຈົ້າສອນເຣື່ອງຫຍັງ ຂ້ອຍຄືຟັງບໍ່ເຂົ້າໃຈ". ຂ້າພະເຈົ້າກໍບອກເພິ່ນຕາມຄວາມຈິງວ່າເປັນພຣະທັມຂອງພຣະເຈົ້າ. ຕົວຢ່າງທີ່ຂ້າພະເຈົ້າກໍາລັງເລົ່ານີ້ແມ່ນຄ້າຍຄືສິ່ງພຣະເຢຊູກໍາລັງເວົ້າວ່າ " ເຂົາເບິ່ງແລ້ວເບິ່ງອີກ ແຕ່ບໍ່ເຫັນ ແລະຟັງແລ້ວຟັງອີກ ແຕ່ບໍ່ເຂົ້າໃຈ" ເພາະວ່າຄວາມຮູ້,ຄວາມສລາດຂອງມະນຸດນັ້ນຈະທຽບ ກັບພຣະທັມຂອງພຣະເຈົ້າບໍ່ໄດ້ເປັນເດັດຂາດ.ຂ້າພະເຈົ້າຮຽນໜັງສືບໍ່ເກັ່ງຄືລາວແຕ່ພຣະເຈົ້າໃຫ້ຂ້າພະເຈົ້າເຂົ້າໃຈເຣື່ອງຂອງພຣະອົງ.

## <u>ຊົງອະທິບາຍໃຫ້ສາວົກຟັງ</u> (4:13-20)

ພຣະເຢຊູຊົງອະທິບາຍໃຫ້ສາວົກໄດ້ເຂົ້າໃຈໃນພຣະຄັມພີ ແລະຂ້າພະເຈົ້າຢາກຂຍາຍຄໍາເວົ້າຂອງພຣະເຢຊູໃຫ້ທ່ານເຂົ້າໃຈເພີ້ມດັ່ງນີ້:

- ຜູ້ຫວ່ານ ໄດ້ແກ່ພຣະເຢຊູ (ໃນສມັຍນັ້ນ ສ່ວນສມັຍນີ້ແມ່ນທ່ານແລະຂ້າພະເຈົ້າ).
- ພຣະທັມ ໄດ້ແກ່ຄໍາເທສນາສັ່ງສອນຂອງພຣະເຈົ້າ.
- ຊາຍຕາມທາງ ໄດ້ແກ່ຜູ້ທີ່ນັ່ງຟັງແຕ່ບໍ່ໄດ້ປະຕິບັດຕາມ. ຫລືໃຈເລື່ອນລອຍຂນະທີ່ຟັງ ໝາຍຄວາມວ່າ ຈິດໃຈທີ່ບໍ່ຍອມຮັບ.
- ບ່ອນຫີນຫລາຍ ໄດ້ແກ່ຜູ້ຟັງທີ່ຂາດຄວາມອົດທົນຕໍ່ເຫດການຕ່າງໆທີ່ເກີດຂື້ນ.

- ກາງພຸ່ມໜາມ   ໄດ້ແກ່ຜູ້ຟັງແຕ່ບໍ່ຍອມປະລະວັດຖຸສິ່ງຂອງແລະຊັບສິນບັດຝ່າຍໂລກ.
- ດິນດີ   ໄດ້ແກ່ຜູ້ຕຽມພ້ອມຖ່ອມໃຈຮັບຟັງແລະເອົາໄປໃຊ້ໃນຊີວິດຂອງຕົນ.

## <u>ສິ່ງທີ່ເຮົາຄວນຮຽນຮູ້ວັນນີ້</u>

ເຣື່ອງຄຳອຸປະມາຂອງພຣະເຢຊູຊົງສອນເຮົາເຖິງການປະກາດຂ່າວປະເສີດຂອງພຣະອົງ, ບາງຄົນໃນພວກເຮົາໄດ້ຮັບຂອງພຣະຣາຊທານໃນການປ່າວປະກາດ ຫລືເປັນອາຈານ, ຫລືຄຣູສອນຕາມທີ່ພຣະອົງຊົງພຣະຣາຊທານໃຫ້ (ເອເຟໂຊ 4:11)ຂອງພຣະຣາຊທານທີ່ພວກເຮົາມີອາດແຕກຕ່າງກັນແຕ່ມີຈຸດປະສົງດຽວຄືປະກາດເຣື່ອງຣາຊອານາຈັກຂອງພຣະເຈົ້າໃຫ້ຜູ້ຟັງໄດ້ເຊື່ອແລະກັບໃຈຫັນໜີຈາກທາງຊົ່ວແລະເດີນຕາມທາງແຫ່ງພຣະເຢຊູຄຣິດ. ແຕ່ຄຳຖາມມີຢູ່ວ່າ "ຄົນຈະເຊື່ອໃນພຣະອົງໄດ້ຢ່າງໃດ ແລະເມື່ອບໍ່ມີຜູ້ໃດປະກາດ " (ໂຣມ 10:14). ເຫດສັນນັ້ນເຮົາທັງຫລາຍຜູ້ເປັນຂ້ອຍໃຊ້ທີ່ເຊື່ອຟັງຈຶ່ງປະກາດໄປເລື້ອຍໆ ເຣື່ອງຄົນຈະເຊື່ອຫລືບໍ່ເຊື່ອນັ້ນບໍ່ແມ່ນໜ້າທີ່ຂອງເຮົາ ແຕ່ເປັນໜ້າທີ່ຂອງພຣະວິນຍານບໍຣິສຸດພຸ້ນ. ເຮົາທັງຫລາຍມີໜ້າທີ່ປະກາດຈຶ່ງປະກາດ.

<u>ຄຳຖາມ:</u>

1. ເປັນຫຍັງພຣະເຢຊູຈຶ່ງສອນເປັນຄຳອຸປະມາ?

2. ໃນຖານະທີ່ເຮົາເປັນຜູ້ປະກາດພຣະທັມ, ຄຳອຸປະມາໄດ້ສອນເຮົາຫຍັງແດ່?

3. ເຮົາຈະປະກາດພຣະທັມພຣະເຈົ້າໄດ້ຢ່າງໃດໃນເມື່ອສະພາບການແລະຈິດໃຈຂອງມະນຸດເປັນຄືທຸກວັນນີ້?.

4. ຍາມໃດເຮົາຈະເລີ້ມປະກາດເຣື່ອງຂອງພຣະອົງ?

5. ຫາກເຮົາບໍ່ປະກາດໃຜຈະປະກາດ.

# ບົດຮຽນທີ 5

# ພະລັງອຳນາດຂອງພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ມາຣະໂກ 4:35-41; 5:21-43

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 4:35-5:43

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູມີພະລັງອຳນາດເໜືອກວ່າພາຍຸ, ພຍາດໂຣຄາ ແລະຄວາມຕາຍ ຈຶ່ງຢັ້ງຢືນໃຫ້ພວກເຮົາຮູ້ວ່າພຣະອົງສາມາດຊ່ອຍພວກເຮົາໄດ້ໃນຄາວລຳບາກ.

**ຄຳຖາມເພື່ອການສຳຫລວດ:** ພຣະເຢຊູສາມາດຊ່ອຍພວກເຮົາຫຍັງໄດ້ແດ່ໃນຄາວລຳບາກ?

**ຈຸດປະສົງຂອງບົດຮຽນນີ້:** ຈະຊ່ອຍໃຫ້ຂ້າພະເຈົ້າມີປະສົບການກັບຄວາມຮັກແລະເຫັນວ່າພຣະເຢຊູເປັນຫ່ວງຂ້າພະເຈົ້າໃນຄາວລຳບາກ.

## ບົດຮຽນ

### ຄຳນຳ

ພຣະເຢຊູຊົງຫ່ວງໃຍມະນຸດແທ້ບໍ່? ພະລັງອຳນາດຂອງພຣະເຢຊູເໜືອກວ່າພັຍທັມມະຊາດ, ພຍາດໂຣຄາ, ແລະຄວາມຕາຍ ຈຶ່ງໄດ້ນຳຄວາມໝັ້ນໃຈມາສູ່ພວກເຮົາວ່າ ພຣະອົງສາມາດຊ່ອຍພວກເຮົາໄດ້ໃນຄາວລຳບາກ. ພຣະເຢຊູສາມາດເຮັດຫຍັງໄດ້ແດ່ໃນເຫດການດັ່ງກ່າວນີ້? ຜູ້ຍິງຄຣິສຕຽນທີ່ມີຄວາມໄວ້ວາງໃຈເຊື່ອໃນພຣະເຈົ້າຜູ້ນຶ່ງເຫັນຜົວຂອງລາວຕາຍຕໍ່ໜ້າຕໍ່ຕາຂອງລາວໃນທີ່ເກີດອຸບັດຕິເຫດ ແລະຕົວລາວເອງກໍໄດ້ຮັບບາດເຈັບ. ລາວໄດ້ຖາມວ່າ, "ເປັນຫຍັງພຣະເຈົ້າຈຶ່ງເອົາຜົວຂ້ານ້ອຍໄປ ທັງໆທີ່ລາວສາມາດເຮັດຫລາຍສິ່ງຫລາຍຢ່າງເພື່ອພຣະເຈົ້າ ແລະຄົນອື່ນໆໄດ້?"

ສຸຂພາບທີ່ເສື່ອມໂຊມ, ປະສາດທີ່ກະວົນກະວາຍ, ແລະຈິດວິນຍານທີ່ອ່ອນເພັຽສິ່ງເຫລົ່ານີ້ເກີດຂຶ້ນກັບຊີວິດແທ້ຂອງທຸກໆຄົນ. ແຕ່ໃນຂນະດຽວກັນ ຊີວິດນັ້ນສາມາດສຳຜັດກັບພະລັງອຳນາດອັນແທ້ຈິງໃນຂນະທີ່ຂາດກຳລັງ. ກຳລັງໄດ້ມາດ້ວຍຄວາມໄວ້ວາງໃຈເຊື່ອໃນພະລັງອຳນາດຂອງອົງພຣະຜູ້ເປັນເຈົ້າ. ດ້ວຍຄວາມໄວ້ວາງໃຈເຊື່ອໃນພຣະຄຣິດ, ສິ່ງທີ່ສູນເສັຽໄປນັ້ນກໍຈະໄດ້ຄືນມາເປັນກຳໄລ.

### ພະລັງອຳນາດເໜືອພັຍທັມມະຊາດ (4:35-41)

ຫລັງຈາກພຣະເຢຊູໄດ້ສັ່ງສອນເປັນເວລາດົນນານ, ພຣະອົງໄດ້ເອີ້ນໃຫ້ພວກສາວົກນຳພຣະອົງຂ້າມຟາກແມ່ນ້ຳໄປ. ພວກເຂົາມີຄວາມຊຳນິຊຳນານກັບທະເລທັງນັ້ນ. ໃນຂນະນັ້ນ ເປັນເວລາຕອນແລງໃກ້ຈະຄ່ຳພຣະອົງກໍເມື່ອຍຈາກການສັ່ງສອນຈຶ່ງໄດ້ວາງຫົວລົງນອນຢູ່ທ້າຍເຮືອ ເປັນໂອກາດທີ່ພຣະອົງຈະໄດ້ພັກຜ່ອນ. ມາຣະໂກໄດ້ບັນທຶກໄວ້ວ່າມີເຮືອຫລາຍລຳໄປພ້ອມ (4:37).

"ແລ້ວລົມພາຍຸໃຫຍ່ຮັບັງເກີດຂຶ້ນ ແລະຟອງນ້ຳໄດ້ຊັດເຂົ້າຈົນເຮືອຈວນຈະເຕັມ" (4:37). ປົກກະຕິແລ້ວພາຍຸເກີດຂຶ້ນຢູ່ສເມີໃນຂົງເຂດນີ້. ເມື່ອພື້ນທີ່ຂອງທະເລນີ້ມີຣະດັບພື້ນທີ່ຕ່ຳ 682 ຟີດ (204.6 ແມດ) ກວ່າຣະດັບຂອງທະເລ ( 682 feet below sea level) ແລະມີພູຢູ່ອ້ອມແອ້ມຈຶ່ງເປັນສ່ອງທາງທີ່ແຄບໃຫ້ລົມພັດໄປມາໃນບໍຣິເວັນນັ້ນ. ອາກາດຮ້ອນທີ່ຂຶ້ນຈາກໜ້ານ້ຳໄດ້ດຶງດູດເອົາຄວາມເຢັນຈາກເບື້ອງເທິງແລ້ວກໍໃຫ້ເກີດມໍຣະສຸມໃນສ່ອງທາງທີ່ແຄບຈຶ່ງເກີດມີພາຍຸຂຶ້ນ. ແຕ່ວ່າພາຍຸທີ່ເກີດຂຶ້ນໃນເຫດການນີ້ເປັນພາຍຸທີ່ແຮງຫລາຍຈົນວ່າພວກສາວົກນັ້ນຕົກໃຈແລະບໍ່ສາມາດຈະຄວບຄຸມສະຖານະການໄດ້. ມາຣະໂກຢາກໃຫ້ພວກເຮົາຮູ້ວ່າເຫດການນັ້ນຮ້າຍແຮງຫລາຍຈຶ່ງໄດ້ບັນລະຍາຍເຖິງເຫດການວ່າ, "ຟອງນ້ຳໄດ້ຊັດເຂົ້າຈົນເຮືອຈວນຈະເຕັມ" (4:37). ນ້ຳຟອງຊັດເຂົ້າເຮືອຢູ່ບໍ່ເຊົາ.

ໃຫ້ພວກເຮົາມາອາດມະໂນພາບເບິ່ງວ່າໃນຂະນະນັ້ນພວກສາວົກຂອງພຣະອົງກຳລັງພາຍເຮືອຕ້ານກັບພາຍຸຝົນ ບາງຄົນຟ້າວຕັກນ້ຳອອກຈາກເຮືອ ຜູ້ຄຶງທ້າຍເຮືອກໍເຮັດສຸດຄວາມສາມາດຂອງຕົນ. ຄວາມຢ້ານ ທັງຕົກໃຈ ແລະຄວາມເຈັບປວດທັງມືແລະກ້າມເນື້ອຂອງພວກເຂົາເຈົ້າ. ເຫດການນັ້ນຮ້າຍແຮງຂຶ້ນກວ່າເກົ່າ ແຕ່ກຳລັງຂອງພວກເຂົາຈະເອົາຊະນະກັບພາຍຸນັ້ນບໍ່ໄດ້.

ໃນຂະນະນັ້ນ "ພຣະອົງຊົງບັນທົມຫນູນຫມອນຫລັບຢູ່ທ້າຍເຮືອ" (4:38). ພຣະເຢຊູນອນຫລັບຢູ່ໃນຂະນະທີ່ພາຍຸລົມ ຝົນ ແລະນ້ຳຟອງຊັດເຮືອໄປມາ. ສຽງຮ້ອງຂອງພວກສາວົກຮ້ອງໂຮໃສ່ກັນດ້ວຍຄວາມຢ້ານແລະຕົກໃຈ. ທ້າຍເຮືອນັ້ນເປັນບ່ອນທີ່ຫນາແຫນ້ນກວ່າທຸກໆບ່ອນຂອງພາກສ່ວນໃນຕົວເຮືອ ແລະເປັນບ່ອນຂອງນາຍທ້າຍທີ່ບັງຄັບທິດທາງການເດີນຂອງເຮືອ. ໃຫ້ພວກເຮົາມາອາດມະໂນພາບອີກວ່າພຣະອົງຄົງຈະເມື່ອຍຫລາຍຈົນນອນຫລັບໄປໃນທ່າມກາງຄວາມສັບສົນວຸ້ນວາຍອັນນີ້ ແລະຈຶ່ງເປັນຂໍ້ສນັບສນູນວ່າພຣະອົງນັ້ນຊົງເປັນມະນຸດແລະຊົງເປັນພຣະບຸດຂອງພຣະເຈົ້າ. ພວກສາວົກບໍ່ສາມາດຈະເອົາຊະນະຄວາມແຮງຂອງພາຍຸໄດ້ ໃນທີ່ສຸດພວກເຂົາຈຶ່ງໄດ້ມາປຸກພຣະອົງ (4:38). "ອາຈານເອີຍ, ທ່ານບໍ່ເປັນຫ່ວງດອກຫລື ພວກຂ້ານ້ອຍກຳລັງຈະຈົບຫາຍຢູ່ແລ້ວ?" ເປັນຄຳຖາມຢ່າງແຈ່ມແຈ້ງ. ແຕ່ເປັນຄຳຖາມທີ່ຫນ້າເອົາມາຄິດແລະຕຶກຕອງ. ໃຫ້ພວກເຮົາລອງມາຕີຄວາມຫມາຍຂອງຄຳຖາມນີ້ເບິ່ງດູກັບຄົນໃນສມັຍຂອງພວກເຮົານີ້. ພວກເຂົາປຸກພຣະອົງເພາະວ່າພວກເຂົາເຫັນອົກເຫັນໃຈພຣະອົງວ່າພຣະອົງນັ້ນເມື່ອຍຫລາຍ. ພວກເຂົາເລີຍປຸກພຣະອົງກ່ອນພວກເຂົາຈະຖິ້ມເຮືອຂອງພວກເຂົາໄປບໍ່? ພວກເຂົາປຸກພຣະອົງເພື່ອຈະເວົ້າໃສ່ພຣະອົງວ່າພຣະອົງນັ້ນບໍ່ເປັນຫ່ວງພວກເຂົາບໍ່? ຫລືວ່າພວກເຂົາປຸກພຣະອົງເພື່ອພວກເຂົາຈະໄດ້ພົ້ນພັຍວິບັດທີ່ຈະເກີດຂຶ້ນດ້ວຍອຳນາດຂອງພຣະອົງບໍ່?

"ພຣະອົງຈຶ່ງຕື່ນຂຶ້ນຫ້າມລົມ ແລະຊົງກ່າວແກ່ທະເລວ່າ, "ມິດສງົບແມ" (4:39). ລົມກໍເຊົາ ແລະນ້ຳຟອງກໍງຽບສງົບໄປ. ພາຍຸຈາກທັມມະຊາດໄດ້ງຽບສງົບລົງໄປແລ້ວ, ພຣະອົງມີພາຣະຫນັກອີກຄືວ່າຈະທຳຢ່າງໃດຈຶ່ງໃຫ້ພວກສາວົກຂອງພຣະອົງມີຄວາມໄວ້ວາງໃຈເຊື່ອ. ພວກສາວົກຂອງພຣະອົງໄດ້ຕັດສິນໃຈຕິດຕາມພຣະອົງ ແລະພວກເຂົາໄດ້ເຫັນວ່າພຣະອາຈານຂອງພວກເຂົາສາມາດຮັກສາປິ່ນປົວຄົນເຈັບໃຫ້ດີຈາກພຍາດແລະສາມາດໄລ່ຜີມານອອກຈາກຜູ້ເຈັບເປັນ ແຕ່ວ່າພວກເຂົາຍັງບໍ່ຮູ້ວ່າພຣະອົງນັ້ນເປັນພຣະບຸດຂອງພຣະເຈົ້າ. ຄວາມເຂົ້າໃຈຂອງພວກເຂົາກ່ຽວກັບພຣະຄຣິດນັ້ນຍັງໄກຫລາຍ. ພຣະອົງຈຶ່ງຖາມພວກເຂົາວ່າ, "ພວກທ່ານຍັງບໍ່ມີຄວາມເຊື່ອຫລື?" (4:40). ຄຳຖາມຂອງພຣະອົງຈຶ່ງບົ່ງບອກໃຫ້ພວກເຮົາເຫັນວ່າພວກເຂົາບໍ່ມີຄວາມໄວ້ວາງໃຈເຊື່ອໃນພຣະອົງເລີຍ. ພຣະອົງບອກໃຫ້ພາຍຸງຽບສງົບລົງຍັງງ່າຍກວ່າຈະຫນູນໃຈພວກເຂົາໃຫ້ມີຄວາມໄວ້ວາງໃຈເຊື່ອໃນພຣະອົງໃນຂະນະທີ່ປະເຊີນກັບພາຍຸ.

ຄວາມຢ້ານ (fear) ນັ້ນມີອຳນາດ ແລະເປັນຄວາມຮູ້ສຶກທີ່ເກີດຈາກຕົວຂອງເຮົາເອງ. ພາສາກຣີກມີສອງຄຳທີ່ໃຊ້ກັບຄຳວ່າ ຢ້ານ (fear). ຄຳວ່າຢ້ານ ຄຳທີ່ນຶ່ງມີຄວາມຫມາຍວ່າ ຢ້ານ “afraid” (4:40). ຄຳທີສອງມີຄວາມຫມາຍວ່າຕົກໃຈຈົນວ່າໃຫ້ກຽດແລະຢຳເກງ “terrify” (4:41). ພວກສາວົກມີຄວາມຮູ້ສຶກຢ້ານໃນຂະນະທີ່ປະເຊີນກັບອັນຕະລາຍແຕ່ຈາກຄວາມຢ້ານກັບກາຍມາເປັນຄວາມຢຳເກງ. ບໍ່ວ່າພວກເຂົາມີຄວາມຢ້ານຫລາຍປານໃດກໍຕາມຈາກພາຍຸນັ້ນ. ແຕ່ພວກເຂົາມີຄວາມຢຳເກງພຣະຜູ້ຊົງໂຜດພວກເຂົາໃຫ້ພົ້ນຈາກພາຍຸ. ພວກເຂົາໄດ້ເຫັນວ່າພຣະອົງມີພະລັງອຳນາດເຫນືອກວ່າພາຍຸ ຫລືວ່າພັຍທັມມະຊາດ, ພວກເຂົາຈຶ່ງຫັນຫນີຈາກຄວາມຢ້ານພາຍຸກັບມາຢ້ານ ຫລືວ່າຢຳເກງພຣະຜູ້ເປັນເຈົ້າຜູ້ຊົງມີພະລັງອຳນາດ ເຫນືອກວ່າພາຍຸ.

ພວກເຮົາກໍເຊັ່ນດຽວກັນຄວນຈະຢ້ານພຣະຜູ້ເປັນເຈົ້າຄືພຣະຜູ້ຊົງສ້າງຈັກກະວານແທນທີ່ຈະໄປຢ້ານບັນຫາທີ່ເກີດຂຶ້ນ

ຈາກພັຍທັມມະຊາດ ຫລືວ່າເກີດຂຶ້ນໃນຈັກກະວານນີ້. ພວກເຮົາເຫັນໃນສິ່ງທີ່ພວກສາວົກເຫັນຈົນພວກເຂົາກ່າວວ່າ "ທ່ານຜູ້ນີ້ແມ່ນໃຜຫນໍ? ຈົນວ່າລົມແລະທະເລກໍຍອມຟັງເພິ່ນ" (4:41).

**<u>ພະລັງອຳນາດເຫນືອພຍາດໂຣຄາແລະຄວາມຕາຍ</u>** (5:21-34)

ເມື່ອຂ້າມທະເລກັບມາຍັງແຂວງຄາລິເລ ພຣະເຢຊູໄດ້ພົບກັບຝູງຊົນແລະເຫດການສຸກເສີນທີ່ເກີດຂື້ນກັບພວກເຂົາ. ຢາອີໂອ ນາຍໂຮງທັມມະເທສນາໄດ້ມາຂາບລົງທີ່ພຣະບາດຂອງພຣະອົງ. ລາວເປັນຜູ້ບໍຣິຫານ ແລະຈັດແຈງພິທີການນະມັສການຂອງຊາວຢິວ. ລາວມີໃຈກ້າພໍທີ່ຈະມາຫາພຣະອົງ ເພາະການມາຂອງລາວຈະເຮັດໃຫ້ລາວເສັຽຕຳແຫນ່ງໃນໂຮງທັມມະເທສນາກໍໄດ້ ແລະຊາວຢິວເບິ່ງລາວໄປໃນຮູບໃດກໍບໍ່ຮູ້. ພຣະອົງໄດ້ປະກາດ, ສັ່ງສອນ, ປິ່ນປົວຄົນເຈັບໃຫ້ດີໃນໂຮງທັມມະເທສນາຢູ່ເລື້ອຍໆ, ມີພວກຄຣູສອນໃນທີ່ນັ້ນເກີດຄວາມຄຽດແຄ້ນແລະບໍ່ມັກພຣະອົງກໍບໍ່ຫນ້ອຍ. ຢາອີໂອອາດຈະເຄີຍໄດ້ຟັງຄຳສັ່ງສອນຂອງພຣະອົງ ແລະໄດ້ເຫັນພຣະອົງປິ່ນປົວຫລາຍຄົນໃຫ້ດີຈາກພຍາດຂອງເຂົາ. ຈະເອົາການເປັນນາຍໂຮງທັມມະເທສນາມາຖ່ວງຫນ່ຽວການໄປຮ້ອງທຸກກັບພຣະເຢຊູນັ້ນກໍບໍ່ໄດ້ ເພາະຄວາມທຸກໃຈຜູ້ເປັນພໍ່ທີ່ເຫັນລູກສາວຂອງຕົນເຈັບຈວນຈະຕາຍຢູ່ແລ້ວ. ລາວໄດ້ຕັດສິນໃຈຜ່ານຜ່າອຸປສັກທຸກຢ່າງເຂົ້າເຝົ້າພຣະເຢຊູຂໍໃຫ້ແຕ່ລູກສາວອາຍຸສິບສອງປີຂອງລາວໄດ້ຫາຍດີຈາກພຍາດ ນີ້ເປັນສິ່ງທີ່ລາວຕ້ອງການຫລາຍທີ່ສຸດ. ພຣະອົງຊົງສະເດັດໄປກັບລາວທັນທີ ທັງໆທີ່ຝູງຊົນຫລວງຫລາຍຕາມໄປແລະບຽດພຣະອົງ.

ໃນຝູງຊົນນັ້ນມີຜູ້ຍິງຄົນນຶ່ງ ເປັນພຍາດເລືອດຕົກໄດ້ສິບສອງປີມາແລ້ວ. ຍ້ອນພຍາດຂອງລາວ ລາວຈຶ່ງໄດ້ຖືກຈັດໄວ້ວ່າເປັນຄົນຈຳພວກທີ່ເປັນມົນທິນ (ບໍ່ສະອາດ) ແລະຝູງຊົນຈະຈຳແນກລາວໄວ້ເຫມືອນກັບຄົນທີ່ເປັນຂີ້ທູດ. ແຕ່ລາວມີຄວາມໄວ້ວາງໃຈເຊື່ອໃນພຣະອົງຢ່າງແຂງແຮງ. ລາວຈຶ່ງເຂົ້າໄປບາຍເຄື່ອງທົງຂອງພຣະອົງ. ລາວເວົ້າວ່າ, "ຖ້າເຮົາໄດ້ບາຍເສື້ອຂອງເພິ່ນເທົ່ານັ້ນ ເຮົາກໍຈະດີພຍາດ" (5:28). ໃນທັນໃດນັ້ນເລືອດທີ່ຕົກນັ້ນກໍຢຸດແຫ້ງໄປ (5:29). ຜູ້ຍິງຄົນນັ້ນຮູ້ສຶກທັນທີວ່າພຍາດຂອງລາວໄດ້ຫາຍດີ. ໃນເວລານັ້ນພຣະອົງຮູ້ສຶກວ່າຣິດໄດ້ອອກຈາກພຣະອົງໄປແລ້ວ. ເມື່ອພຣະເຢຊູຫລຽວຫາລາວ, ລາວກໍຢ້ານຈົນຕົວສັ່ນເພາະຮູ້ເຣື່ອງທີ່ເກີດຂື້ນແກ່ລາວເອງ ຈຶ່ງມາຂາບລົງທູນຕໍ່ພຣະອົງຕາມຄວາມຈິງທີ່ເປັນມາ. ພຣະອົງຊົງກ່າວຕໍ່ລາວວ່າ, "... ຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າດີແລ້ວ ຈົ່ງໄປເປັນສຸກແລະດີພຍາດເທີນ" (5:34). ລາວຕ້ອງການໃຫ້ພຍາດຂອງລາວຫາຍດີເທົ່ານັ້ນ ແຕ່ລາວໄດ້ພົບພຣະຜູ້ຊົງໂຜດໃຫ້ພົ້ນຝ່າຍຈິດວິນຍານອີກດ້ວຍ. ເມື່ອພວກເຮົາໄດ້ມາພົບພຣະຄຣິດເຈົ້າ ຈະມີການປ່ຽນແປງໃນຊີວິດຂອງພວກເຮົາ ກໍເພາະວ່າພວກເຮົາມີຄວາມປະສົງຢາກຈະສຳຜັດກັບພຣະອົງ, ເຂົ້າຫາພຣະອົງດ້ວຍການຖວາຍຕົວ, ແລະຮັບຮູ້ຄວາມຈິງດ້ວຍໃຈບໍຣິສຸດ. ຫລັງຈາກພຣະອົງປິ່ນປົວຍິງຄົນນັ້ນແລ້ວ ພຣະອົງກໍມຸ້ງຫນ້າໄປຫາລູກສາວຂອງຢາອີໂອ.

**<u>ຄວາມໂສກເສົ້າເສັຽໃຈ</u>** (5:35-41)

ມີບາງຄົນມາຈາກເຮືອນຂອງຢາອີໂອບອກວ່າລູກສາວຂອງລາວຕາຍເສັຽແລ້ວ ຍັງຈະໄປລົບກວນພຣະອົງເຮັດຫຍັງ. ໃນຂນະນັ້ນເປັນເວລາທີ່ຕຶງຄຽດຫລາຍ. ຄວາມຕາຍກໍຄືການສິ້ນສຸດ, ເປັນເວລາອັນຫນ້າວິຕົກ, ແລະຢ້ານສັ່ນສາຍ. ຄວາມຫວັງແລະຄວາມຕັ້ງໃຈຂອງຢາອີໂອໄດ້ຫມົດສິ້ນໄປ. ຝ່າຍພຣະອົງບໍ່ໄດ້ຫົວຊາກັບຄວາມເຂົາເວົ້ານັ້ນ. ຄຳຕອບຂອງພຣະອົງເປັນທີ່ປລາດໃຈ, "ຢ່າວິຕົກເທາະ ຈົ່ງເຊື່ອເທົ່ານັ້ນ" (5:36). ຄວາມເຊື່ອນັ້ນກົງກັນຂ້າມກັບຄວາມຢ້ານ. ຢາອີໂອຈະກ່າວຕໍ່ພຣະອົງວ່າ, "ຢ່າເທາະຄົນກໍຕາຍແລ້ວ" ຫລືວ່າ ລາວຈະໄວ້ວາງໃຈເຊື່ອໃນພຣະອົງ? ຄຳຕອບກໍຄືວ່າ ເຖິງແມ່ນວ່າລູກສາວຂອງລາວບໍ່ໄດ້ຖືກນຳຄືນມາມີຊີວິດໃຫມ່ກໍຕາມ. "ຈົ່ງເຊື່ອເທົ່ານັ້ນ" ນີ້ແລ້ວເປັນສິ່ງທີ່ສຳຄັນທີ່ສຸດໃນຂນະນັ້ນ.

ເປໂຕ, ຢາໂກໂບ, ແລະໂຢຮັນກໍໄປນຳພຣະອົງເພື່ອເປັນພະຍານໃນເຫດການອັສຈັນຄັ້ງນີ້. ເມື່ອພຣະອົງກັບຄົນເຫລົ່ານັ້ນໄປຮອດເຮືອນຂອງຢາອີໂອກໍຊົງເຫັນການຫວຸ້ນວາຍທັງຄົນແຜດສຽງຮ້ອງໄຫ້ຮ່ຳໄຮຫລາຍຢູ່. ພຣະອົງຈຶ່ງຖາມ

ພວກເຂົາດ້ວຍຄຳຖາມທີ່ບໍ່ໜ້າເຊື່ອວ່າ, "ພວກເຈົ້າພາກັນວຸ້ນວາຍຮ້ອງໄຫ້ເຮັດຫຍັງ ເດັກນ້ອຍບໍ່ໄດ້ຕາຍດອກ ແຕ່ຫລັບຢູ່ເທົ່ານັ້ນ" (5:39).
ມາຣະໂກໃຊ້ຄຳວ່າ ຫລັບຢູ່ ເຊິ່ງເປັນຄຳດຽວກັນທີ່ລາວໃຊ້ກ່າວວ່າພຣະເຢຊູຫລັບຢູ່ທ້າຍເຮືອ. ສຳລັບພວກເຮົານັ້ນແນ່ນອນວ່າໃຊ້ຄຳວ່າ "ຕາຍ" ແຕ່ສຳລັບພຣະອົງແລ້ວ ພຣະອົງສາມາດໃຊ້ຄຳວ່າ "ຫລັບຢູ່". ເພາະວ່າພຣະອົງມີພະລັງອຳນາດເໜືອກວ່າຄວາມຕາຍ. ເຖິງແມ່ນວ່າຄົນທີ່ຕາຍແລ້ວພຣະອົງກໍຍັງສາມາດປຸກໃຫ້ຟື້ນຄືນມາໄດ້.

## ມະນຸດຫົວຂວັນພຣະເຈົ້າ

"ເຂົາກໍພາກັນຫົວຂວັນພຣະອົງ" (5:40). ພວກຄົນທີ່ຫົວຂວັນພຣະອົງນັ້ນເຂົາຮູ້ວ່າເດັກນ້ອຍຕາຍແທ້. ພວກເຂົາຫົວຂວັນເຍາະເຍີ້ຍພຣະອົງ. ເຖິງແມ່ນວ່າໃນທ່າມກາງຄວາມໂສກເສົ້າພວກເຂົາຍັງກ້າອອກສຽງຫົວຂວັນເຍາະເຍີ້ຍພຣະອົງໄດ້. ທັງໆທີ່ພວກເຂົາເອງກໍໃຫ້ຄວາມຫວັງແກ່ຄອບຄົວນັ້ນບໍ່ໄດ້. ສຳລັບຜູ້ຄົນທີ່ບໍ່ເຊື່ອ ສຽງຫົວຂວັນຂອງເຂົານັ້ນຈະກັບມາຫາພວກເຂົາເອງໃນຄາວຂອງພວກເຂົາ. ພວກເຂົາອາດຈະເຊື່ອວ່າຖ້າເດັກນ້ອຍເຈັບປ່ວຍ ເດັກນ້ອຍນັ້ນອາດຈະຖືກປິ່ນປົວໃຫ້ຫາຍດີຈາກພຍາດໄດ້. ແຕ່ຖ້າເດັກນ້ອຍນັ້ນຕາຍແລ້ວ ບໍ່ມີທາງເດັກນັ້ນຈະຟື້ນຄືນມາໄດ້. ຄົນໃນສມັຍນີ້ ພວກເຂົາພາກັນຫົວຂວັນຜູ້ທີ່ເຊື່ອໃນເຣື່ອງການຟື້ນຄືນມາຈາກຕາຍ. ພະລັງອຳນາດຂອງພຣະເຢຊູຈະຊົງປາກົດໃຫ້ເຂົາເຫັນໃນນາທີສຸດທ້າຍຂອງຊີວິດພວກເຂົາ ແລະພວກເຂົາຈະຮັບຮູ້ຈິນຕລອດໄປເປັນນິດ.

## ສິ່ງອັສຈັນໄດ້ເກີດຂຶ້ນ

ພຣະອົງຊົງໄລ່ຄົນພວກນັ້ນອອກແລ້ວຈຶ່ງພາພໍ່ແມ່ກັບສາວົກທັງສາມເຂົ້າໄປໃນບ່ອນເດັກນ້ອຍນອນຢູ່. ເມື່ອພຣະອົງເຂົ້າໄປໃກ້ເດັກນັ້ນພຣະອົງຊົງຈັບມືເດັກນ້ອຍນັ້ນ ແລ້ວຊົງກ່າວວ່າ, "ຍິງນ້ອຍເອີຍ ເຮົາບອກເຈົ້າຈົ່ງລຸກຂຶ້ນແມ" (5:41). ພຣະອົງມີອຳນາດສາມາດສັ່ງໃຫ້ຄົນຕາຍເປັນຄືນມາໄດ້. "ໃນທັນໃດນັ້ນ" ເດັກຍິງຜູ້ນັ້ນກໍລຸກຂຶ້ນຍ່າງໄປມາ. ໃນທັນໃດນັ້ນ ຄົນທັງປວງທີ່ເຄີຍຫົວຂວັນພຣະອົງ "ກໍງືດປລາດໃຈຫລາຍ" (5:43). ສິ່ງທີ່ງືດປລາດໃຈຫລາຍທີ່ສຸດກໍຄືໃນຄວາມຕາຍນັ້ນພຣະອົງສາມາດສັ່ງໃຫ້ຊີວິດເປັນຄືນມາໄດ້.

ການຟື້ນຄືນມາຈາກຕາຍຂອງເດັກນ້ອຍຄົນນັ້ນໄດ້ເປັນພາບພົດໃຫ້ເຫັນການຄືນພຣະຊົນຂອງພຣະອົງ. ພຣະເຢຊູຜູ້ຊົງເປັນພຣະບຸດຂອງພຣະຜູ້ເປັນເຈົ້າມີຣິດອຳນາດສັ່ງໃຫ້ຄົນຕາຍຟື້ນຄືນມາຈາກຕາຍອີກໄດ້. ທຸກສິ່ງທຸກຢ່າງທີ່ພຣະອົງຊົງກະທຳນັ້ນກໍເພື່ອຈະນຳໃຫ້ມະນຸດມາເຖິງຄວາມເຊື່ອ ແລະມີປະສົບການກັບການຄືນພຣະຊົນຂອງພຣະອົງເອງ. ອັຄສາວົກໂປໂລໄດ້ກ່າວໄວ້ວ່າ, "ຖ້າພຣະຄຣິດບໍ່ໄດ້ຊົງຄືນພຣະຊົນແລ້ວ ການປະກາດຂອງພວກເຮົາກໍບໍ່ມີປໂຍດແລະຄວາມເຊື່ອຂອງພວກເຈົ້າກໍບໍ່ມີປໂຍດເໝືອນກັນ" (1 ໂກຣິນໂທ 15:14). ອັຄສາວົກໂຢຮັນກໍໄດ້ບັນທຶກຄຳເວົ້າຂອງພຣະເຢຊູເອງວ່າ, "ຝ່າຍເຮົາເປັນຜູ້ຕົ້ນແລະເປັນຜູ້ປາຍ ແລະເປັນຜູ້ມີຊີວິດຢູ່ ເຮົາໄດ້ຕາຍແລ້ວ ແຕ່ເບິ່ງແມ, ເຮົາກໍມີຊີວິດຕລອດໄປເປັນນິດ ແລະເຮົາຖືຂໍກະແຈແຫ່ງຄວາມຕາຍແລະແຫ່ງແດນມໍຣະນາ" (ພຣະນິມິດ 1:18).

## ຄຳຖາມ

1. ໃນກໍຣະນີໃດແດ່ ເມື່ອທ່ານອ່ອນເພັຽໃນຊີວິດຂອງທ່ານ ແຕ່ໃນຂນະດຽວກັນນັ້ນທ່ານໄດ້ຮັບພະລັງກຳລັງໃຈຝ່າຍຈິດວິນຍານ?

2. ເປັນຄວາມຈິງໄດ້ຢ່າງໃດ ພຣະຄຳຂອງພຣະເຈົ້າສາມາດຊ່ອຍເຮົາໄດ້ໃນຂນະທີ່ພວກເຮົາກຳລັງຖືກພາຍຸຊັດໄປຊັດມາໃນຊີວິດຂອງພວກເຮົາ? ເຫດໃດພຣະເຢຊູຈຶ່ງນອນຫລັບຢູ່ໃນຂນະທີ່ພາຍຸກຳລັງລົບກວນ?

3. ພຣະເຢຊູໄດ້ສອນພວກເຮົາຫຍັງແດ່ໃນເຣື່ອງກ່ຽວກັບພະລັງອຳນາດເໜືອທັມມະຊາດໃນທຸກສິ່ງທີ່ຖືກຊົງສ້າງຂຶ້ນໃນຈັກກະວານນີ້?

   ພວກເຮົາຈະສາມາດບັນລະຍາຍປະສົບການເຣື່ອງກ່ຽວກັບພະລັງອຳນາດເໜືອທັມມະຊາດໄດ້ຢ່າງໃດ?

4. ທ່ານມີຄວາມເຫັນຢ່າງໃດໃນຕົວພຣະເຢຊູ ເມື່ອພຣະອົງມີພະລັງອຳນາດເໜືອກວ່າສັພທຸກສິ່ງທີ່ໄດ້ຊົງສ້າງຂຶ້ນ?

5. ມີການອັສຈັນອັນໃດແດ່ທີ່ເກີດຂຶ້ນກັບຊີວິດຂອງທ່ານ?

6. ປະສົບການຂອງຢາຣີໂອຊ່ອຍພວກເຮົາໄດ້ຢ່າງໃດກ່ຽວກັບເຣື່ອງການຟື້ນຄືນມາຈາກຕາຍ?

# ບົດຮຽນທີ 6
# ຄວາມສົງສານຂອງພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ມາຣະໂກ 6:30-52
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 6:1-52
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງສະແດງຄວາມສົງສານຕໍ່ຜູ້ມີຄວາມຂັດສົນ.
**ຄຳຖາມເພື່ອການສຳຫລວດ:** ພວກເຮົາຈະປະຕິບັດຕໍ່ຜູ້ມີຄວາມຂັດສົນຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ຈະຊ່ອຍໃຫ້ຂ້າພະເຈົ້າປະຕິບັດຕໍ່ຜູ້ທີ່ມີຄວາມຂັດສົນຕາມແບບຢ່າງຂອງພຣະເຢຊູ.

## ບົດຮຽນ

### ຄຳນຳ

ຄຣິສຕຽນຄວນຈະເອົາແບບຢ່າງພຣະເຢຊູ ໃຫ້ມີຄວາມສົງສານຕໍ່ຜູ້ຂັດສົນ ແລະຕຽມພ້ອມສເມີທີ່ຈະຊ່ອຍເຫລືອເຂົາ. ຄຳວ່າ "ສົງສານ" ມີຄວາມຮູ້ສຶກຈາກສ່ວນເລິກຂອງຈິດໃຈເຖິງຄວາມທຸກທໍຣະມານຂອງຄົນອື່ນ. ຜູ້ທີ່ມີຄວາມສົງສານຕໍ່ຄົນອື່ນດ້ວຍໃຈບໍຣິສຸດນັ້ນຈະສັງເກດຮູ້ເຖິງຄວາມຕ້ອງການຂອງຄົນອື່ນ, ມີຄວາມຮູ້ສຶກເຫັນອົກເຫັນໃຈຜູ້ຕ້ອງການ, ແລະສະແດງອອກດ້ວຍການຊ່ອຍເຫລືອວິທີໃດວິທີນຶ່ງດ້ວຍຄວາມຮັກ.

ມະນຸດທຸກຄົນຕ້ອງການໃຫ້ຄົນອື່ນມີຄວາມສົງສານຕໍ່ເຂົາ. ມີຄວາມສົງສານຕໍ່ຜູ້ອື່ນເປັນຫົວໃຈຫລັກຄວາມເຊື່ອຂອງຄຣິສຕຽນ. ພຣະເຢຊູຈະເປັນພຣະຄຣິດບໍ່ໄດ້ຖ້າຫາກວ່າພຣະອົງບໍ່ມີຄວາມສົງສານຕໍ່ມະນຸດ. ຜູ້ທີ່ບໍ່ຮູ້ຈັກກັບຄວາມຮັກຂອງພຣະເຈົ້າ ພວກເຂົາຕ້ອງການຄວາມສົງສານຈາກຄຣິສຕຽນທີ່ຢູ່ໃນຄຣິສຕະຈັກ.

### ການພັກຜ່ອນຈາກການຮັບໃຊ້ (6:30-34)

ຫລັງຈາກກັບມາຈາກການປະກາດຂ່າວປະເສີດ, ປິ່ນປົວຄົນເຈັບໃຫ້ຫາຍດີຈາກພຍາດ, ພວກສາວົກຂອງພຣະເຢຊູມີຄວາມອິດເມື່ອຍເຕັມທີ. ແຕ່ໃຫ້ພວກເຮົາມາວາດມະໂນພາບເບິ່ງໃນຂນະທີ່ພວກເຂົາກັບມາ ແລະທູນລາຍງານທັງຫມົດທີ່ພວກເຂົາໄດ້ເຮັດແລະໄດ້ສັ່ງສອນໃຫ້ພຣະອົງຊົງຊາບ. ພວກເຂົາມີຄວາມຕື່ນເຕັ້ນຫລາຍໃນປະສົບການທີ່ໄດ້ຮັບ. ພວກເຂົາເຫັນພຣະອົງເປັນແບບຢ່າງ ແລະພວກເຂົາກໍປະຕິບັດຕາມ.

ພຣະເຢຊູມີຄວາມສົງສານຕໍ່ພວກສາວົກຂອງພຣະອົງ ເພາະວ່າພວກເຂົາມີຄວາມອິດເມື່ອຍຫລາຍຈາກການຮັບໃຊ້, ຄວາມຕຶງຄຽດຈາກການຕອບສນອງຄວາມຮຽກຮ້ອງຂອງຝູງຊົນ, ຈາກຄວາມກົດດັນຂອງເຮໂຣດ, ຈາກຜູ້ນຳຂອງຊາວຢິວ. ພຣະອົງຈຶ່ງໄດ້ນຳພວກເຂົາຫນີຈາກຝູງຊົນ ແລະພາພວກເຂົາຂຶ້ນເຮືອໄປທິດເຫນືອຂອງທະເລຄາລີເລ ໂດຍກ່າວວ່າ, "ພວກເຮົາຈົ່ງພາກັນໄປໃນບ່ອນສງັດ ໃຫ້ພວກທ່ານພັກເຊົາເມື່ອຍຈັກຫນ້ອຍນຶ່ງ" (6:31). ພຣະອົງຊົງຮູ້ວ່າຖ້າພວກສາວົກຈະເປັນຜູ້ສາມາດຊ່ອຍຄົນອື່ນ, ພວກເຂົາຈະຕ້ອງໄດ້ຮັບຄວາມສາມາດ; ຖ້າພວກເຂົາຈະຮັກສາຄົນອື່ນພວກເຂົາຈະຕ້ອງຮູ້ຈັກຮັກສາຕົວເຂົາເອງກ່ອນ; ຖ້າພວກເຂົາຈະນຳພາຄົນອື່ນຝ່າຍຈິດວິນຍານ, ພວກເຂົາຈະຕ້ອງມີອາຫານຝ່າຍຈິດວິນຍານ; ຖ້າພວກເຂົາຈະໃຫ້ຄົນອື່ນ, ພວກເຂົາຈະຕ້ອງໄດ້ຮັບຈາກພຣະຜູ້ເປັນເຈົ້າເສັຽກ່ອນ.

ໃນຫມໍ່ໆມານີ້ ຂ້າພະເຈົ້າໄດ້ຖາມຫາຫມູ່ຜູ້ຮັບໃຊ້ຄົນນຶ່ງ ຊຶ່ງລາວໄດ້ລາອອກຈາກການຮັບໃຊ້. ສະມາຊິກໃນຄຣິສຕະຈັກໄດ້ບອກຂ້າພະເຈົ້າວ່າ ສາຍເຫດທີ່ລາວລາອອກນັ້ນກໍເພາະວ່າລາວໄດ້ຮັບຄວາມຕຶງຄຽດຫລາຍ. ລາວພະຍາຍາມ

ຈະເຮັດທຸກສິ່ງທຸກຢ່າງຕາມຄວາມຮຽກຮ້ອງຂອງຄຣິສຕະຈັກ ແຕ່ລາວເຮັດບໍ່ໄດ້ຕາມຄວາມຕັ້ງໃຈຂອງລາວ. ລາວບໍ່ມີເວລາພັກຜ່ອນ. ລາວບໍ່ໄດ້ຄຳນຶງເຖິງຄວາມຕ້ອງການຂອງຮ່າງກາຍຂອງລາວ. ລາວອ່ອນເພັຽທາງດ້ານຮ່າງກາຍແລະຈິດວິນຍານ. ໃນທີ່ສຸດລາວເສັຽໃຈຫລາຍ ລາວຈຶ່ງລາອອກ. ການຕອບສນອງເຖິງຄວາມຮຽກຮ້ອງຈາກຄວາມຕ້ອງການຂອງຝູງຊົນນັ້ນເປັນພາຣະໜັກທີ່ຈະແບກໄດ້. ເປັນພາຣະທີ່ຕ້ອງຖອກເຫື່ອເທແຮງບໍ່ໜ້ອຍ. ຖ້າພວກເຮົາບໍ່ຮູ້ຈັກກຳນົດຄວາມສາມາດຂອງພວກເຮົາແລ້ວ. ພວກເຮົາຈະອິດເມື່ອຍທາງດ້ານຝ່າຍຮ່າງກາຍ ແລະຈິດວິນຍານຂອງພວກເຮົາດ້ວຍ. ເພາະບໍ່ໄດ້ສງວນເວລາໄວ້ພັກຜ່ອນ ແລະເວລາໄວ້ເຂົ້າເຝົ້າພຣະຜູ້ເປັນເຈົ້າຜູ້ຊົງປະທານເຫື່ອແຮງແລະສະຕິປັນຍາໃຫ້ພວກເຮົາ.

ເວລາພັກຜ່ອນເກືອບຈະຫາບໍ່ໄດ້ເມື່ອຖືກຮຽກຮ້ອງໃຫ້ຊ່ອຍເຫລືອ. ເມື່ອຢືນຢູ່ທິດຕາເວັນຕົກສ່ຽງເໜືອຂອງຝາກທະເລຄາລີເລ ຈະສັງເກດເຫັນວ່າປະຊາຊົນໝູ່ໃຫຽ່ໄດ້ມາຢືນຖ້າຕາມຝັ່ງທະເລ ລໍຖ້າພຣະອົງຈະສະເດັດມາ. ເຖິງມີຄວາມອິດເມື່ອຍປານໃດກໍຕາມເມື່ອພຣະອົງຫລຽວເຫັນພວກເຂົາແລ້ວ ພຣະອົງ "ຊົງສົງສານເຂົາ ເພາະວ່າ ເຂົາເປັນເໝືອນຝູງແກະທີ່ບໍ່ມີຜູ້ລ້ຽງ" (6:34).

**<u>ຂຸມຊັບຂອງການຮັບໃຊ້</u>** (6:35-44)

ເປັນເວລາປະມານສາມໂມງແລງ, ປະຊາຊົນກໍອິດເມື່ອຍ, ຫິວເຂົ້າ, ແລະບໍ່ໄດ້ພັກຜ່ອນ. ພວກເຂົາບໍ່ໄດ້ກິນເຂົ້າຕັ້ງແຕ່ເຊົ້າ. ຄວາມຕື່ນເຕັ້ນຈາກການຕິດຕາມພຣະອົງຈຶ່ງບໍ່ໄດ້ຈັດຕຽມຫາງຫາອາຫານ. ເມື່ອໃກ້ຄ່ຳມາແລ້ວ ພວກສາວົກມາທູນພຣະອົງຂໍໃຫ້ພຣະອົງເລີກສອນ ເພື່ອປະຊາຊົນ "ຈະໄດ້ໄປຫາຊື້ອາຫານຮັບປະທານຕາມບ້ານໄຮ່ບ້ານນາແຖບນັ້ນ" (6:36). ປະຊາຊົນຝູງໃຫຽ່ນັ້ນ ນັບແຕ່ຜູ້ຊາຍມີຫ້າພັນຄົນຍັງບໍ່ທັນໄດ້ນັບຜູ້ຍິງແລະເດັກນ້ອຍ (6:44).

ພວກສາວົກຂອງພຣະອົງບໍ່ຮູ້ຈະແກ້ບັນຫາໄດ້ຢ່າງໃດ ມີທາງດຽວເທົ່ານັ້ນ ຄືສັ່ງໃຫ້ຝູງຊົນໄປຫາຊື້ອາຫານກິນເອງ. ເປັນບັນຫາໃຫຽ່ແທ້ສຳລັບຜູ້ມີຄວາມຄິດຕື້ນ. ແຕ່ພຣະອົງຕອບພວກສາວົກວ່າ, "ພວກທ່ານຈົ່ງລ້ຽງເຂົາສາ" (6:37). ຄຳຕອບຂອງພຣະອົງໄດ້ຊີ້ແນະໃຫ້ພວກສາວົກເຫັນວ່າພວກເຂົານັ້ນບໍ່ມີຊັບ. ໃຫ້ມາສຶກສາຄຳເວົ້າສອງຄຳດັ່ງຕໍ່ໄປນີ້: "ຈົ່ງໃຫ້ເຂົາເລີກໄປເສັຽ" (6:36) ແລະຄຳວ່າ "ຈົ່ງລ້ຽງເຂົາສາ" (6:37) ຄຳເວົ້າສອງຄຳນີ້ມີການປະຕິບັດຕ່າງກັນແຕ່ການປະຕິບັດທັງສອງນີ້ມີເປົ້າໝາຍດຽວກັນ ຄືເພື່ອຕອບສນອງເຖິງຄວາມຕ້ອງການຂອງປະຊາຊົນຝູງໃຫຽ່ດັ່ງກ່າວນັ້ນ. ຄຳວ່າ "ຈົ່ງໃຫ້ເຂົາເລີກໄປເສັຽ" ໝາຍເຖິງ ພວກສາວົກຮັບຮູ້ວ່າຝູງຊົນກຳລັງຫິວເຂົ້າ ແລະຕ້ອງການອາຫານການກິນ ແຕ່ໃນສຖານທີ່ດັ່ງກ່າວບໍ່ມີອາຫານພຽງພໍສຳລັບປະຊາຊົນຝູງໃຫຍ່ ຫລືບໍ່ມີເງິນພຽງພໍທີ່ຈະຊື້ອາຫານລ້ຽງຄົນຈຳນວນຫລາຍປານນີ້. ຄຳວ່າ "ຈົ່ງລ້ຽງເຂົາສາ" ໝາຍເຖິງ ພຣະອົງຮັບຮູ້ວ່າຝູງຊົນກຳລັງຫິວເຂົ້າ ແລະຕ້ອງການອາຫານການກິນແລະພຣະບິດາມີບໍ່ຊັບພຽງພໍທີ່ຈະລ້ຽງຄົນຈຳນວນຫລາຍເທົ່າທີ່ຕ້ອງການ.

ພວກສາວົກຂອງພຣະອົງທູນວ່າ, "ຈະໃຫ້ພວກຂ້ານ້ອຍໄປຊື້ອາຫານເຖິງສອງຮ້ອຍຫລຽນເດນາຣິອົນ ໃຫ້ເຂົາກິນຫລື?" ຄຳຖາມພວກສາວົກກໍຄືວ່າ ຖ້າໃຊ້ເງິນຈຳນວນນີ້ໄປຊື້ອາຫານ ຈະໃຊ້ເງິນປະຊາຊົນ ຫລືເງິນຂອງພວກສາວົກໄປຊື້? ຖ້າຈະໃຊ້ເງິນຈຳນວນນີ້ໄປຊື້ອາຫານ ເງິນຈຳນວນນີ້ເທົ່າກັບຄ່າແຮງງານແປດເດືອນຂອງຄົນງານ. ເມື່ອມີຄວາມຕ້ອງການຍາມໃດກໍຕາມ ກໍຕ້ອງຖິ້ມໃຫ້ຜູ້ໃດຜູ້ນຶ່ງຮັບຜິດຊອບໄປຫາມາ ເພື່ອໄດ້ມາຕອບສນອງຄວາມຕ້ອງການນັ້ນ. ພຣະອົງຊົງປະທານຂຸມຊັບໃຫ້ຜູ້ທີ່ຊ່ອຍເຫລືອຄົນອື່ນ ແລະຜູ້ທີ່ຕ້ອງການຄວາມຊ່ອຍເຫລືອ.

ການອັສຈັນຂອງການຮັບໃຊ້. ພຣະອົງໄດ້ໃຊ້ເຂົ້າຈີ່ຫ້າກ້ອນແລະປາສອງໂຕແກ້ບັນຫາໂດຍຊົງເງີຍພຣະພັກເບິ່ງຟ້າສວັນຂໍພຣະພອນ. ພຣະອົງຊົງຫັກເຂົ້າຈີ່ແລ້ວຍື່ນໃຫ້ພວກສາວົກໄປແຈກໃຫ້ຄົນທັງປວງ ແລະປາສອງໂຕນັ້ນກໍຊົງແບ່ງໃຫ້ທົ່ວເຖິງກັນເໝືອນກັນ (6:41). ຫລັງຈາກກິນອີ່ມແລ້ວ ສ່ວນຕ່ອນຫັກແລະປາທີ່ເຫລືອນັ້ນເກັບໄດ້ເຕັມສິບ

ສອງບຸງ (6:43).
ການຄິດໄລ່ຂອງພວກສາວົກມີຂອບເຂດຈຳກັດເບິ່ງແລ້ວເປັນໄປບໍ່ໄດ້ ແຕ່ວ່າການຄິດໄລ່ຂອງພຣະຄຣິດນັ້ນ ບໍ່ມີຂອບເຂດຈະຈຳກັດພຣະອົງໄດ້ ທຸກສິ່ງທຸກຢ່າງເປັນໄປໄດ້ສຳລັບພຣະອົງ. ພຣະຄຣິດໄດ້ສອນພວກເຮົາວ່າ ບໍ່ວ່າຈະຢູ່ໃນກໍຣະນີໃດກໍຕາມ ພຣະຜູ້ເປັນເຈົ້າມີຂຸມຊັບອັນມະຫາສານຈັດຕຽມໄວ້ຢູ່ສເມີໃນເມື່ອມີຄວາມຕ້ອງການ. ສລຸບແລ້ວ ການອັສຈັນຄັ້ງນີ້ແມ່ນຫຍັງ? "ເຂົາໄດ້ກິນອີ່ມທຸກຄົນ" (6:42).

ບໍ່ມີອັນໃດທີ່ຈະຍາກເກີນໄປສຳລັບພຣະຜູ້ເປັນເຈົ້າ. ຈົ່ງມອບຄວາມຈຳກັດຂອງພວກເຮົາໄວ້ກັບພຣະອົງ. ຈົ່ງໃຫ້ນິມິດຂອງພວກເຮົາເປີດກວ້າງອອກໄປ. ສຳລັບພຣະເຢຊູແລ້ວ ສິ່ງນ້ອຍຈະກັບກາຍເປັນສິ່ງມະຫາສານ.

ເປັນການຍາກຫລາຍທີ່ຈະໃຫ້ຄົນສມັຍນີ້ຮັບຮູ້ວ່າພຣະຄຣິດຊົງເປັນພຣະບຸດຂອງອົງພຣະຜູ້ເປັນເຈົ້າໂດຍປາສຈາກການອັສຈັນທີ່ພຣະອົງໄດ້ຊົງກະທຳ. ພຣະທັມ ມາຣະໂກຈິ່ງໄດ້ກ່າວເຖິງການອັສຈັນທີ່ພຣະເຢຊູໄດ້ກະທຳເພື່ອຈະພິສູດໃຫ້ໂລກຮັບຮູ້ວ່າພຣະອົງຊົງເປັນພຣະຜູ້ຊົງໂຜດໃຫ້ພົ້ນ. ເພື່ອໃຫ້ຄົນເປັນພັນໆເປັນພະຍານຮັບຮູ້ວ່າພຣະອົງໄດ້ກະທຳການອັສຈັນ.

ແທ້ຈິງແລ້ວພວກເຮົາມີພຣະທັມຄັມພີໄດ້ບັນທຶກເປັນພະຍານກ່ຽວກັບພຣະອົງ, ພວກເຮົາບໍ່ຕ້ອງການຈະມີການອັສຈັນກໍໄດ້. ແຕ່ວ່າ ຄຳວ່າການອັສຈັນໃນສມັຍນີ້ເປັນພຽງແຕ່ປຸກໃຫ້ຄົນມີຄວາມຕື່ນເຕັ້ນໃນທາງທີ່ຜິດແລະສວຍໂອກາດແຜ່ເງິນກັບຜູ້ຕິດຕາມ. ມະນຸດເຮົານີ້ສົນໃຈທາງຝ່າຍຮ່າງກາຍວັດຖຸຫລາຍກວ່າຝ່າຍຈິດວິນຍານ. ຝ່າຍພຣະຄຣິດຈະຫລີກລ້ຽງການສະແດງໃຫ້ຜູ້ຊົມຕື່ນເຕັ້ນຫລາຍກວ່າ( 5:43). ພຣະປະສົງຂອງການອັສຈັນຄືການອັສຈັນໃຫ້ຈິດວິນຍານໄດ້ຮັບຄວາມລອດພົ້ນ. "ດ້ວຍວ່າບຸດມະນຸດໄດ້ມາເພື່ອຈະຊອກຫາແລະໂຜດເອົາຜູ້ຫລົງເສັຽໄປແລ້ວນັ້ນໃຫ້ລອດພົ້ນ" (ລູກາ 19:10).

**<u>ຕຽມພ້ອມໃນການຮັບໃຊ້</u>** (6:45-52)
ຫລັງຈາກພຣະອົງໄດ້ສະແດງການອັສຈັນຄັ້ງນີ້, ພຣະອົງຊົງສັ່ງໃຫ້ພວກສາວົກລົງເຮືອຂ້າມຟາກໄປຍັງເມືອງເບຊາອີດາກ່ອນໜ້າພຣະອົງ. ພຣະອົງຊົງລາຈາກຝູງຊົນແລ້ວກໍສະເດັດຂຶ້ນເນີນພູເພື່ອການໄຫວ້ວອນ. ພວກເຮົາບໍ່ຮູ້ວ່າເປັນຫຍັງພຣະອົງຈິ່ງໃຫ້ພວກສາວົກໄປກ່ອນໜ້າພຣະອົງ. ແຕ່ພວກເຮົາຮູ້ວ່າພຣະອົງຕ້ອງການໄຫວ້ວອນ. ຫລັງຈາກການຮັບໃຊ້ພຣະອົງຈະເຂົ້າເຝົ້າພຣະຜູ້ເປັນເຈົ້າ.

ໃນຂນະທີ່ພວກສາວົກພາຍເຮືອໄປທີ່ຈຸດໝາຍປາຍທາງຂອງເຂົາ ລົມໄດ້ພັດຕ້ານເຮືອຂອງພວກເຂົາ. ພຣະອົງຊົງຢືນເທິງບົກແຕ່ຜູ້ດຽວ ແລະ "ທອດພຣະເນດເຫັນພວກສາວົກກຳລັງແຈວເຮືອດ້ວຍຄວາມລຳບາກຫລາຍ ເພາະເຮືອຕ້ານທວນລົມຢູ່" (6:48). "ຄັນປະມານຍາມສີ່ກາງຄືນ" (6:48), ປະມານສາມຫາຫົກໂມງຂ້ອນແຈ້ງ, ພຣະອົງຈິ່ງຊົງຍາງເທິງນ້ຳໄປຫາພວກສາວົກ. ພວກສາວົກຢູ່ໃນເຮືອເມື່ອຫລຽວເຫັນພຣະອົງຄິດວ່າແມ່ນຜີ. ພວກເຂົາຕົກໃຈຈິ່ງພາກັນຮ້ອງຂຶ້ນ. ໃນທັນໃດນັ້ນພຣະອົງຈິ່ງຊົງກ່າວແກ່ເຂົາວ່າ, "ຢ່ານ້ອຍໃຈເທາະ ແມ່ນເຮົາເອງ ຢ່າຊູ່ຢ້ານ" (6:50). ເມື່ອພຣະອົງຂຶ້ນໄປເທິງເຮືອລົມກໍສງົບລົງ.

ໃນມາຣະໂກ 4:35-41, ພວກສາວົກໄດ້ເຫັນພຣະເຢຊູຫ້າມລົມພະຍຸ. ພວກເຂົາກໍປລາດອັສຈັນໃຈ ແລະ ເທື່ອນີ້ກໍເຊັ່ນດຽວກັນ. ມາຣະໂກໄດ້ບັນທຶກໄວ້ວ່າ, "ເຣື່ອງເຂົ້າຈີ່ນັ້ນເຂົາຍັງບໍ່ໄດ້ເຂົ້າໃຈ ແຕ່ໃຈຂອງເຂົາຍັງແຂງກະດ້າງປົກຕັນຢູ່" (6:52). ການຮັບຮູ້ຂອງພວກສາວົກຊ້າ. ປະສົບການທີ່ພວກເຂົາເຫັນນັ້ນເປັນທີ່ອັສຈັນໃຈແລະຕົກໃຈດ້ວຍ. ພວກເຂົາ

ຍັງບໍ່ທັນສາມາດຮັບຮູ້ຄວາມຈິງອັນໃຫມ່ໄດ້ເທື່ອເພາະເປັນສິ່ງທີ່ເຫນືອຄວາມເຂົ້າໃຈໄດ້.

ຖ້າຫາກພວກສາວົກຂອງພຣະອົງຍັງມີອຸປສັກທີ່ຈະຮັບຮູ້ພຣະອົງແລ້ວ ແຫ່ງເປັນການຍາກສຳລັບປະຊາຊົນຝູງໃຫຍ່ທີ່ຕິດຕາມພຣະອົງໄປ. ພວກເຂົາສາມາດຮັບຮູ້ໃນສິ່ງທີ່ພວກເຂົາເຫັນບໍ່? ຊາຍທີ່ມາຈາກນາຊາເຣັດນີ້ແມ່ນໃຜຄືມີສະຕິປັນຍາຄວາມຮູ້ເຫນືອທັມມະດາ ແລະມີພະລັງອຳນາດເຫນືອທັມມະຊາດ?

ພວກສາວົກຂອງພຣະອົງກໍເຫມືອນກັນກັບພວກເຮົາ, ພວກເຮົາຄຸ້ນເຄີຍກັບສິ່ງທີ່ຢູ່ຝ່າຍໂລກ. ເມື່ອໃຫ້ພວກເຮົາເບິ່ງດ້ວຍໃຈແລ້ວ ກໍເຫມືອນເບິ່ງຜ່ານຜ້າກັ້ງຈຶ່ງເຮັດໃຫ້ສິ່ງທີ່ເຫັນນັ້ນບໍ່ແຈ່ມແຈ້ງ. ເຖິງແມ່ນວ່າພວກເຂົາອາດຈະຜິດພາດໄປ, ແຕ່ຄວາມສົງສານຈາກພຣະອົງຈະຢູ່ກັບພວກເຂົາສເມີ. ດ້ວຍອຳນາດຂອງພຣະອົງ ພຣະອົງຈະເອົາຄວາມກັງວົນຂອງພວກເຂົາໄວ້ໃຕ້ພຣະບາດຂອງພຣະອົງ.

ບໍ່ວ່າໃຜກໍຕາມ ເມື່ອເຂົາມາຮູ້ຈັກພຣະເຢຊູແລ້ວເປັນຫຍັງເຂົາພາກັນຢ້ານພຣະອົງ? ພຣະອົງຊົງຢູ່ກັບພວກເຮົາໃນຄາວມີຄວາມທຸກໃຈ, ພຣະອົງຊົງຢູ່ນຳພວກເຮົາໃນຍາມຫວຸ້ນວາຍຫົວໃຈ, ພຣະອົງຈະທຳໃຫ້ທຸກສິ່ງທີ່ເປັນໄປບໍ່ໄດ້ໃຫ້ມາເປັນໄປໄດ້. ພຣະອົງຊົງຢ່າງດັ່ງຈະກາຍໄປ (6:48) ເມື່ອພວກເຮົາເຫັນພຣະອົງແລະຮ້ອງຂໍພຣະອົງໃຫ້ຊ່ອຍ. ໃນຖ້າມກາງມໍຣະສຸມຂອງພາຍຸ ພຣະອົງຈະກ່າວວ່າ, "ຢ່ານ້ອຍໃຈເທາະ ແມ່ນເຮົາເອງ ຢ່າຊູ່ຢ້ານ" (6:50).

**<u>ຄຳຖາມ</u>**

1. ທ່ານຈະສະແດງຄວາມສົງສານຕໍ່ຄົນອື່ນດ້ວຍໃຈບໍຣິສຸດແບບຄຣິສຕຽນຢ່າງໃດ? ຕໍ່ຄົນນອກຄອບຄົວ ແລະຍາດມິດຂອງທ່ານ? ຕໍ່ຜູ້ທີ່ເປັນສັດຕູຂອງທ່ານດ້ວຍ?

2. ຄຳເວົ້າສອງຄຳນີ້ໃຫ້ຄຳຕອບແຕກຕ່າງກັນຢ່າງໃດ, "ໃຫ້ເຂົາໄປຫາຊອກກິນເອງເສັຽ" ແລະ "ຈົ່ງລ້ຽງເຂົາສາ" ໃນລັກສະນະຂອງການເປັນສາວົກຂອງທ່ານ? ຄຣິສຕະຈັກຂອງທ່ານ? ມີອັນໃດແດ່ທີ່ຈະພິສູດໄດ້ວ່າພວກສາວົກມີຄວາມສົງສານຕໍ່ຝູງຊົນທີ່ມານັ້ນ?

3. ພຣະຜູ້ເປັນເຈົ້າຍັງສະແດງການອັສຈັນຢູ່ບໍ່ໃນສມັຍນີ້? ແບ່ງປັນໃຫ້ຫມູ່ໃນຫ້ອງຮຽນຟັງເບິ່ງວ່າທ່ານເຫັນການອັສຈັນເກີດຂຶ້ນໃນຫມໍ່ໆນີ້. ແບ່ງປັນໃຫ້ຫມູ່ຟັງປະສົບການທີ່ທ່ານໄດ້ຮັບກ່ຽວກັບການຊ່ອຍເຫລືອຄົນອື່ນໃນເມື່ອເຂົາມາຫາໂດຍທີ່ບໍ່ໄດ້ຕຽມພ້ອມ.

4. ພຣະຄຣິດໄດ້ສືບທົບການຮັບໃຊ້ສັງຄົມແລະຄຳສອນຂອງພຣະອົງໄປນຳກັນຢ່າງໃດ? ທ່ານມີຄວາມຄິດຢ່າງໃດກ່ຽວກັບການຈັດຕັ້ງກອງປະກາດຂ່າວປະເສີດ? ການຈັດຕັ້ງກອງປະກາດຂ່າວປະເສີດ ຄຣິສຕຽນຈະຕ້ອງສ້າງໂຮງພະຍາບານ, ໂຮງລ້ຽງເດັກກຳພ້າ, ແລະສະຖາບັນຕ່າງໆ ແລະກະສິກັມປູກຝັງ?

5. ຄຣິສຕະຈັກຂອງທ່ານເຮັດຫຍັງແດ່ທີ່ມີການຊ່ອຍເຫລືອຄົນອື່ນ? ຄຣິສຕະຈັກຂອງທ່ານໃຫ້ໂອກາດເພື່ອມີພາກສ່ວນພົວພັນກັບການຮັບໃຊ້ບໍ່? ຈຳເປັນບໍ່ທີ່ຈະອາສັຍແຕ່ຄຣິສຕະຈັກປະກາດໃຫ້ທ່ານຊາບເຖິງຄວາມຕ້ອງການ?

6. ທ່ານໄດ້ໃຫ້ເງິນຊ່ອຍເຫລືອຄົນອື່ນທີ່ມີຄວາມຕ້ອງການໃນເດືອນທີ່ຜ່ານມານີ້ຫລາຍປານໃດ?

# ບົດຮຽນທີ 7
# ພຣະເຢຊູຂະຫຍາຍວົງການຮັບໃຊ້

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ມາຣະໂກ 7:1-8, 14-30
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 6:53-8:10
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງຍົກເລີກເຣື່ອງຮີດຄອງ, ເຊື້ອຊາດ, ສັງຄົມ, ແລະວັທນະທັມເພື່ອທຸກຄົນຈະໄດ້ມາສູ່ຄວາມລອດພົ້ນ.
**ຄຳຖາມເພື່ອການສຳຫລວດ:** ຖ້າມີສິ່ງທີ່ກີດກັ້ນບໍ່ໃຫ້ຄົນໄດ້ຮັບຄວາມລອດພົ້ນພວກເຮົາຈະເຮັດຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ຈະຊ່ອຍໃຫ້ພວກເຮົາເຫັນວ່າມີອັນໃດແດ່ທີ່ກີດກັ້ນບໍ່ໃຫ້ຄົນໄດ້ຮັບຄວາມລອດພົ້ນຈາກພຣະເຈົ້າ.

## ບົດຮຽນ

### ຄຳນຳ

ພຣະເຢຊູຈະບໍ່ໃຫ້ສິ່ງໃດມາກີດກັ້ນພຣະອົງໄດ້. ພຣະອົງມີຄວາມເຊື່ອຟັງ, ມີຄວາມກ້າຫານ, ແລະຕັດສິນໃຈຢ່າງເດັດຂາດຈະຍົກເລີກຄວາມກີດກັ້ນເນື່ອງຈາກຮີດຄອງ, ເຊື້ອຊາດ, ສັງຄົມ, ແລະວັທນະທັມ ເພື່ອທຸກຄົນຈະໄດ້ມາສູ່ຄວາມລອດພົ້ນ.

### ການກີດກັ້ນຈາກຮີດຄອງທີ່ໄຮ້ປໂຍດ (7:1-5)

ພວກຟາຣີຊາຍແລະພວກນັກທັມຕໍ່ຕ້ານພຣະເຢຊູ. ພວກເຂົາໄດ້ເດີນທາງມາຈາກກຸງເຢຣູຊາເລັມເພື່ອສັງເກດການແລະຈັບຜິດໃນຫລັກຄຳສອນຂອງພຣະອົງ. ພວກເຂົາກ່າວຫາວ່າພວກສາວົກຂອງພຣະອົງບໍ່ຕິດຕາມຄຳສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານ. ເປັນຫຍັງພຣະອົງຈຶ່ງບໍ່ປະຕິບັດຕາມ "ຄຳສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານ" (7:3)? ຄວາມແຕກຕ່າງລະວ່າງຄຳສອນຂອງພຣະອົງແລະຄຳສອນຂອງເຖົ້າເກົ່າບູຮານນັ້ນກໍເຫັນຢ່າງແຈ່ມແຈ້ງ. ພຣະອົງອ້າງເຫດຜົນວ່າຫລັກຄຳສອນຂອງເຖົ້າເກົ່າບູຮານນັ້ນເປັນກົດລະບຽບຫລືວ່າກົດບັນຍັດທີ່ພວກເຖົ້າເກົ່າບູຮານໄດ້ຕັ້ງຂຶ້ນມາເອງ.

ເມື່ອກ່າວເຖິງພຣະບັດຍັດຂອງຊາວຢິວນັ້ນແມ່ນພຣະທັມຫ້າເຫລັ້ມທຳອິດຂອງພຣະສັນຍາເດີມ(ປະຖົມມະການ, ອົບພະຍົບ, ລະບຽບຊາວເລວີ, ຈົດເຊັນບັນຊີ, ແລະພຣະບັນຍັດສອງ). ຫລັງຈາກນັ້ນ ກໍມີຄຳສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານຊຶ່ງກາຍມາເປັນພິທີຕາມຮີດຄອງ. ຫລັງຈາກສັຕວັດທີສາມກໍໄດ້ຂຽນຂຶ້ນມາເປັນລາຍລັກອັກສອນຢ່າງຄັກແນ່ເພື່ອໃຫ້ຊາວຢິວປະຕິດບັດຕາມທີ່ເອີ້ນກັນວ່າ ມິສນາ (Mishnah). ຫລັກຄຳສອນດັ່ງກ່າວໄດ້ສອນໃຫ້ມີພິທີລ້າງມື, ລ້າງຈອກ, ໂຖໃສ່ນ້ຳ, ເຕົ້າກາ, ແລະເຄື່ອງໃຊ້ອື່ນໆ (7:4).

ຜູ້ນຳຊາວຢິວສັງເກດເຫັນວ່າສາວົກຂອງພຣະອົງບໍ່ໄດ້ລ້າງມືກ່ອນກິນເຂົ້າຈຶ່ງຖືວ່າເປັນມົນທິນ (ບໍ່ສະອາດ) ຕາມພິທີທາງສາສນາ (7:2). ຄຳວ່າ ເປັນມົນທິນ ຫລືວ່າບໍ່ສະອາດ ບໍ່ໄດ້ໝາຍເຖິງທາງດ້ານອະນາມັຍ. ແຕ່ມີຄວາມໝາຍວ່າ ເປັນມົນທິນທາງດ້ານສາສນາ. ມືຂອງພວກສາວົກຖືວ່າເປັນມົນທິນໃນສາຍພຣະເນດຂອງພຣະເຈົ້າ.

ຫລັກຄຳສອນພວກເຖົ້າເກົ່າບູຮານໄດ້ກາຍມາເປັນຮີດຄອງແລະກາຍມາເປັນກົດບັນຍັດຖັດຈາກພຣະບັນຍັດແລ້ວ. ພຣະເຢຊູຈຶ່ງປະຕິເສດຫລັກຄຳສອນ ຫລືວ່າຮີດຄອງດັ່ງກ່າວ ເພາະວ່າຮີດຄອງບໍ່ໄດ້ມາຈາກອົງພຣະຜູ້ເປັນເຈົ້າ. ແຕ່ມາຈາກມະນຸດນັ້ນເອງ. ພວກຟາຣີຊາຍແລະພວກນັກທັມເຫັນວ່າຖືຕາມຮີດຄອງນັ້ນເປັນຫລັກຂອງສາສນາອັນແທ້ຈິງ. ຖ້າຫາກວ່າບໍ່ປະຕິບັດຕາມພິທີຂອງຮີດຄອງຖືວ່າເປັນການເຮັດບາບ. ພວກເຂົາຖືວ່າການປະຕິບັດຕາມຮີດຄອງທີ່ສະແດງອອກພາຍນອກໃຫ້ຄົນເຫັນຈຶ່ງຖືວ່າສັກສິດແລະເປັນຜູ້ມີສິນທັມ.

ພວກເຮົາອາດຈະເວົ້າວ່າພວກເຂົາບໍ່ມີເຫດຜົນ. ແຕ່ວ່າພວກເຮົາ ແບັບຕິສອາດຈະປ່ອຍປະໃຫ້ຮີດຄອງປະເພນີເຂົ້າໄປແຊກຊຶມຢູ່ໃນຄຣິສຕະຈັກກໍໄດ້.

**<u>ການກົດກັ້ນຈາກຄົນໜ້າຊື່ໃຈຄົດ</u>** (7:6-8)
ພຣະເຢຊູໄດ້ໃຊ້ຄຳເວົ້າຂອງຜູ້ປະກາດພຣະທັມທີ່ພວກຟາຣີຊາຍນັບຖື ຄືເອຊາຢາອອກມາໃຫ້ພວກເຂົາຟັງ. ເພື່ອຈະຕອບຄຳຖາມທີ່ສາຍເຫດພວກສາວົກຂອງພຣະອົງໄດ້ປະຕິເສດຮີດຄອງພິທີລ້າງມື. ພຣະອົງໄດ້ກ່າວຕໍ່ພວກເຂົາດ້ວຍຄວາມກ້າຫານວ່າ, "ເອຊາຢາໄດ້ທຳນວາຍຄັກແນ່ເຖິງພວກເຈົ້າຜູ້ເປັນຄົນໜ້າຊື່ໃຈຄົດ" (7:6). ພຣະອົງໃຊ້ພຣະທັມເອຊາຢາ 29:13. ພຣະຜູ້ເປັນເຈົ້າໄດ້ກ່າວໂທດຊາວອິສຣາເອັນວ່າ, "ພົລເມືອງເຫລົ່ານີ້ໃຫ້ກຽດເຮົາແຕ່ປາກ, ແຕ່ສ່ວນໃຈຂອງພວກເຂົາຮ່າງໄກຈາກເຮົາ" (7:6).

ພຣະເຢຊູບໍ່ຮັບຮູ້ກົດບັນຍັດຫລືເອີ້ນກັນວ່າຮີດຄອງທີ່ພວກຟາຣີຊາຍປະຕິດບັດ "ດ້ວຍເອົາບົດບັນຍັດຂອງມະນຸດມາຕູ່ວ່າ ເປັນພຣະໂອວາດ" (7:7). "ຮີດສິບສອງຄອງສິບສີ່" ພວກເຮົາເຄີຍໄດ້ຍິນກັນມາ. ມະນຸດໄດ້ "ປະລະພຣະບັນຍັດຂອງພຣະເຈົ້າ ແລະກັບໄປຖືຕາມຄຳສອນຕົກທອດມາຈາກມະນຸດ" (7:8). ຜູ້ກ່າວຫາພຣະອົງຈຶ່ງບໍ່ມີຄຳເວົ້າໂຕ້ຕອບພຣະອົງໄດ້.

ພຣະອົງບໍ່ໄດ້ຢຸດຢູ່ເທົ່ານັ້ນ ແຕ່ພຣະອົງເອົາພວກເຂົາໜັກເຂົ້າໄປກວ່ານັ້ນອີກ. ເພື່ອເຈາະຈົ້ມໃຫ້ເຫັນວ່າພວກເຂົາໜ້າຊື່ໃຈຄົດຫລາຍປານໃດ. ເຊັ່ນຕົວຢ່າງໃນບົດທີ 7:9 ພຣະອົງຊີ້ໃຫ້ພວກເຂົາເຫັນຢ່າງຄັກ "ເກີນວ່າດີແທ້ຫນໍ ທີ່ເຈົ້າທັງຫລາຍໄດ້ລະຖິ້ມພຣະບັນຍັດຂອງພຣະເຈົ້າ ໄປຖືຕາມຄຳສອນທີ່ສືບຕໍ່ມາຈາກເຖົ້າເກົ່າບູຮານ". ໂມເຊໄດ້ຮັບພຣະບັນຍັດມາຈາກພຣະເຈົ້າ ແລະໄດ້ສັ່ງໄວ້ວ່າ, "ຈົ່ງນັບຖືບິດາມານດາຂອງເຈົ້າ ແລະ ຜູ້ໃດໝິ່ນປມາດບິດາມານດາຈະຕ້ອງມີໂທດເຖິງຕາຍ" (7:10). ແຕ່ພວກເຂົາກັບມາສອນດັ່ງນີ້ ຖ້າຜູ້ໃດຈະເວົ້າກັບບິດາມານດາວ່າ," ສິ່ງຂອງຂ້ອຍທີ່ອາດຈະຊ່ອຍເຫລືອເຈົ້າໄດ້ ສິ່ງນັ້ນເປັນໂກຣະບານ" (ຄືເປັນຂອງຖວາຍໄວ້ແລ້ວ) ຈະເອົາໄປໃຊ້ໃນທາງອື່ນບໍ່ໄດ້ (7:11). ລັກຄຳສອນຂອງເຖົ້າເກົ່າບູຮານໄດ້ອະນຸຍາດໃຫ້ຜູ້ເປັນລູກປະລະການຊ່ອຍເຫລືອພໍ່ແມ່ໂດຍປະກາດວ່າສິ່ງຂອງຄວນທີ່ຈະເອົາໄປຊ່ອຍເຫລືອພໍ່ແມ່ວ່າເປັນສິ່ງຂອງທີ່ໄປຖວາຍໄວ້ໃຫ້ພຣະເຈົ້າ. ເປັນຫລັກຄຳສອນຫລອກລວງຈາກມານທີ່ປົກປິດຕາມະນຸດ ແຕ່ວ່າພຣະຄຣິດມີພຣະສະຕິປັນຍາເປີດໃຫ້ຮູ້ແຈ້ງເຫັນຈິງ.

ພຣະອົງໄດ້ເປີດເຜີຍຄວາມບາບຂອງຜູ້ນຳຂອງສາສນາ, ໃຫ້ພວກປະຊາຊົນເຫັນຄວາມໜ້າຊື່ໃຈຄົດຂອງພວກຟາຣີຊາຍແລະພວກນັກທັມ. ເພື່ອຝູງຊົນຟັງພຣະອົງແລ້ວຈະເຂົ້າໃຈໃນບົດຮຽນທີ່ພວກເຂົາໄດ້ຮຽນຈາກພຣະອົງ. ຄວາມບາບປະເພດໜ້າຊື່ໃຈຄົດຍັງຕິດຢູ່ກັບພວກເຮົາໃນຮູບແບບຕ່າງໆ. ຄວາມດີເຮັດໃຫ້ພວກເຮົາເປັນປະຊາຊົນດີ, ຜົວທີ່ດີ, ແລະພໍ່ທີ່ດີ. ການຮັບໃຊ້ພຣະຜູ້ເປັນເຈົ້າທີ່ເຫັນກັນ ເຊັ່ນການໄປຄຣິສຕະຈັກ, ການສຶກສາພຣະຄັມພີ, ການຮັບໃຊ້, ການຖວາຍເງິນ, ການສອນພຣະຄັມພີ, ແລະການເທສນາ. ການກະທຳດັ່ງກ່າວມານີ້ ຈະເປັນພຽງພິທີທາງສາສນາເປົ່າໆເທົ່ານັ້ນ ຖ້າຈິດໃຈຂອງພວກເຮົາຍັງເຕັມໄປດ້ວຍຄວາມກຽດຊັງຄົນອື່ນແລະມີການບໍ່ເຊື່ອຟັງຢ່າງລີ້ລັບ. ບາງ

ຄັ້ງບາງຄາວ ຜູ້ໃດຜູ້ນຶ່ງເປັນຄົນໜ້າຊື່ໃຈຄົດ. ການເປັນຄົນໜ້າຊື່ໃຈຄົດນັ້ນເປັນໄດ້ງ່າຍ ຕ່າງກໍມີເຫດຜົນຂອງການເປັນມາ ແຕ່ເຫດຜົນນັ້ນກໍເປັນພຽງຜູ້ຮັບໃຊ້ໃນທາງສາສນາເປົ່າໆເທົ່ານັ້ນ.

**<u>ສຳຄັນຢູ່ທີ່ໃຈ</u>** (7:14-23)

ສາສນາຈານ ບາຄເລ 70ຣສສຣັທ້ພແສ8 ໄດ້ປະກາດວ່າ ພຣະຄຳຕ່ອນນີ້ເປັນພຣະຄຳພີກປີ້ນປະວັດສາດໃນພຣະສັນຍາໃຫມ່. ພຣະເຢຊູໄດ້ທຳລາຍແລະຝັງກົດບັນຍັດສຳຄັນທີ່ສຸດໃນຊີວິດຂອງຊາວຢິວ. ຊາວຢິວທີ່ເຄັ່ງຄັດທາງດ້ານສາສນາ ສ່ຳພະັນກນປ່ຳາໄ8ປະຈຸບັນນີ້ຍັງປະຕິບັດກັນຢູ່ກ່ຽວກັບເຣື່ອງການກິນຊີ້ນສັດ. ຊີ້ນສັດບາງຈຳພວກ ພວກເຂົາຈະບໍ່ກິນເພາະວ່າກົດບັນຍັດ "ລະບຽບພວກເລວີ ບົດທີ11" ສັ່ງຫ້າມບໍ່ໃຫ້ກິນສັດບາງຈຳພວກທີ່ບໍ່ສະອາດ. ໃນສມັຍລະຫວ່າງພຣະສັນຍາເກົ່າແລະພຣະສັນຍາໃຫມ່ ກະສັດຊີເຣັຽ ແອນຕີໂອກັດ ເອພີເຟີນີສ ຈັ້ະຣນແ໊ຫ້າຍຣຍ້ຳທ8 ເຄັ່ນຂ້າຊາວຢິວ ບັງຄັບໃຫ້ພວກເຂົາກິນຊີ້ນໝູ. ພວກເຂົາຍອມຕາຍແທນທີ່ຈະກິນຊີ້ນໝູນັ້ນ. ໃນຄຳອຸປມາເຣື່ອງລູກທີ່ເສັຽ (ລູກາ15:11-32) ລູກຜູ້ນັ້ນໄດ້ກະທຳໃນສິ່ງທີ່ຕ່ຳຊ້າຄືໄປກິນຝັກຖົ່ວທີ່ໝູກິນ. ຄຳສອນຂອງພຣະເຢຊູໃນພຣະທັມມາຣະໂກ 7:14-23 ໄດ້ບອກເຫດການລ່ວງໜ້າເຖິງນິມິດທີ່ອັຄສາວົກເປໂຕຈະໄດ້ເຫັນຢູ່ຫລັງຄາຕຶກໃນຂນະທີ່ລາວລືມຄິງໄປ. ມີພຣະສຸຣະສຽງມາວ່າ, "ເປໂຕເອີຍ, ຈົ່ງລຸກຂຶ້ນຂ້າກິນເສັຽ". ຝ່າຍເປໂຕຈຶ່ງທູນວ່າ, "ບໍ່ໄດ້ແທ້ພຣະອົງເຈົ້າເອີຍ ສິ່ງທີ່ເປັນຂອງຕ້ອງຫ້າມ ຫລືສິ່ງທີ່ບໍ່ທັນຊຳຣະໃຫ້ສະອາດ ຂ້າພະອົງບໍ່ໄດ້ຮັບປະທານຈັກເທື່ອ" (ກິຈການ 10:13-14). ຝູງຊົນຄົງຈະຕົກສະເງີ້ ເມື່ອພຣະອົງກ່າວວ່າ, "ບໍ່ມີສິ່ງໃດຢູ່ພາຍນອກ ເມື່ອເຂົ້າພາຍໃນມະນຸດຈະເຮັດໃຫ້ມະນຸດຊົ່ວມົວໝອງໄດ້" (7:15). ພຣະອົງເນັ້ນໃສ່ປະສາດສ່ວນສຳຄັນຂອງກົດບັນຍັດຂອງພວກເຂົາອີກ.

ພຣະເຢຊູສເນີຫລັກຖານຂອງພຣະອົງເຫມືອນກັບທະນາຍທີ່ມີຄວາມສລາດ. ພຣະອົງໄດ້ເປີດເຜີຍພິທີລ້າງມືເປັນພິທີທີ່ບໍ່ມີແກ່ນສານ, ພຣະອົງໄດ້ກ່າວໂທດໃສ່ພວກເຂົາໃນກົດບັນຍັດກ່ຽວກັບ<u>ໂກຣະບານ</u>ຊຶ່ງເປັນພິທີຂອງມະນຸດໄດ້ປັ້ນແຕ່ງຂຶ້ນມາ. ພິທີນີ້ໄດ້ຕໍ່ຕ້ານກັບພຣະຄຳຂອງພຣະຜູ້ເປັນເຈົ້າ ແລະ ພຣະອົງປະກາດວ່າພິທີຂອງມະນຸດແຕ່ງຂຶ້ນມານັ້ນໃຊ້ການບໍ່ໄດ້ ເພາະວ່າ "ສາຣະພັດການຊົ່ວເຫລົ່ານີ້ເກີດມາຈາກພາຍໃນ ແລະເຮັດໃຫ້ມະນຸດຊົ່ວມົວໝອງ" (7:23). ພວກສາວົກບໍ່ເຂົ້າໃຈຄຳສອນຂອງພຣະອົງ. ພວກເຂົາຄິດເຖິງແຕ່ອາຫານທີ່ມີມົນທິນ ຫລືບໍ່ສະອາດ. ພວກເຂົາເບິ່ງແຕ່ຂອງພາຍນອກ ແຕ່ພວກເຂົາບໍ່ສາມາດສັງເກດຢັ່ງຮູ້ໄປເຖິງພາຍໃນໃຈ. ແຕ່ວ່າພຣະອົງນັ້ນ ເນັ້ນໃສ່ເຂົ້າໄປໃນຈິດໃຈຂອງມະນຸດຊຶ່ງເປັນບໍ່ເກີດຂອງຄວາມບາບ. ພຣະອົງອະທິບາຍໃຫ້ພວກສາວົກຟັງເປັນຄັ້ງທີສອງໃນບົດທີ 7:17-19, ແລະໄດ້ຍົກຕົວຢ່າງໃຫ້ພວກເຂົາເຫັນອີກໃນບົດທີ 7:20-23. ພຣະອົງກ່າວວ່າ, "ເພາະວ່າຈາກພາຍໃນຄືຈາກຈິດໃຈມະນຸດມີຄວາມຄຶດຊົ່ວບໍ່ດີ, ການຜິດຊາຍຍິງ, ການລັກຊັບ, ການຂ້າຄົນ, ການຫລິ້ນຊູ້ຈາກຜົວເມັຽ, ການໂລບ, ການອະທັມ, ການລໍ້ລວງ, ຣາຄະຕັນຫາ, ການອິດສາ, ການນິນທາ, ຄວາມຈອງຫອງ, ຄວາມໂງ່ທີ່ປ່ອຍຕົວໄປຕາມລຳພັງໃຈ" (7:21-22). ຄວາມສຳພັນອັນບໍຣິສຸດກັບພຣະເຈົ້ານັ້ນບໍ່ແມ່ນການເຮັດໃຫ້ຖືກຕ້ອງຕາມພິທີທາງສາສນາຫລືຮີດຄອງ, ແຕ່ແມ່ນການຖິ້ມໃຈເກົ່າ ແລະຮັບເອົາໃຈໃຫມ່ຫລາຍກວ່າ. ການກັບໃຈມາຫາພຣະເຈົ້າໄດ້ນຳການປ່ຽນແປງພາຍໃນດ້ວຍຈິດໃຈທີ່ຂາວສະອາດບໍຣິສຸດຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ.

ຄຳສອນທີ່ພຣະອົງໄດ້ສອນພວກເຂົານັ້ນເປັນຄຳສອນໃຫມ່ທີ່ພວກເຂົາຈະໄດ້ເອົາໄປປະຕິບັດ. ພວກເຂົາຍັງຮັບເອົາໄປປະຕິບັດບໍ່ໄດ້ທັນທີ. ເປັນຄຳສອນທີ່ຈະນຳໄປໃຫ້ເຂົ້າໃຈເຖິງຣາຊອານາຈັກຂອງພຣະອົງ. ພຣະເຢຊູໄດ້ມາໂຜດໃຫ້ມະນຸດໃຫ້ພົ້ນຈາກບາບແລະການປະຕິບັດຕາມພິທີຮີດຄອງທາງສາສນາທີ່ບໍ່ໄດ້ມາຈາກພຣະເຈົ້າ. ພຣະອົງກໍຮັບຮູ້ວ່າຈະເອົາຫລັກຄຳສອນໃຫມ່ມາສອນຄົນເກົ່ານັ້ນກໍຍາກຫລາຍ.

**<u>ການກີດກັ້ນຈາກການຖືໂຕ</u>** (7:24-30)

ຫລັງຈາກພຣະເຢຊູໄດ້ປະເຊີນກັບຊາວຢິວທີ່ປະຕິບັດຕາມຮີດຄອງປະເພນີ ແລະພວກຟາຣີຊາຍແລະນັກທັມໜ້າຊື່ໃຈຄົດແລ້ວ ພຣະອົງໄດ້ສະເດັດໄປຍັງເຂດແດນເມືອງຕີໂຣ ມີຄວາມຈັ້ງໃຈຈະບໍ່ໃຫ້ຜູ້ໃດຮູ້ເພື່ອຈະໄດ້ພັກຜ່ອນ (7:24). ມີຍິງຄົນນື່ງຊຶ່ງເປັນຄົນຕ່າງຊາດໄດ້ມາຫາພຣະອົງຈຶ່ງເປັນທາງນຳຂ່າວປະເສີດ ແລະວົງການຮັບໃຊ້ຂອງພຣະອົງໄປສູ່ຄົນຕ່າງຊາດ. ເຫດການນີ້ຈະເປັນບັງເອີນ ຫລືຕັ້ງໃຈກໍຕາມ ພຣະອົງຊົງໃຊ້ໂອກາດຢ່າງນີ້ສອນສາວົກຂອງພຣະອົງໄປໃນຕົວສເມີ. ມາຣະໂກໄດ້ບັນທຶກເຫດການນີ້ໄວ້ກໍເພື່ອສະແດງໃຫ້ຮູ້ວ່າພຣະອົງຊົງມີຄວາມເມດຕາຕໍ່ທຸກຄົນບໍ່ວ່າຈະເປັນຄົນຊົນຊາດໃດເຊື້ອຊາດໃດກໍຕາມ.

ຍິງຄົນນີ້ເປັນຊາວກຣີກ ເກີດໃນແຂວງຊີເຣັຽຟອຍນີເກ ຊຶ່ງມີບັນພະບຸຣຸດເປັນຊາວການາອານທີ່ຢູ່ໃນແຜ່ນດິນອິສຣາເອັນມາກ່ອນ. ສ່ວນໃຫຍ່ແລ້ວ ຄົນກຸ່ມນີ້ຖືສາສນາກຣີກ ແລະເວົ້າພາສາຊີເຣັຽ. ຄົນຢິວຈະລັງກຽດຄົນຕ່າງຊາດເພາະວ່າຄົນຢິວຖືວ່າຊາດຂອງຕົນນັ້ນດີກວ່າຊາດອື່ນ. ເຖິງຢ່າງໃດກໍຕາມ ຍິງຄົນນີ້ກໍໄດ້ຮັບຄວາມເມດຕາຈາກພຣະຄຣິດເໝືອນກັບຄົນຊົນຊາດຢິວຄືກັນ. ພຣະເຢຊູຈະປະທານພະລັງອຳນາດຂອງພຣະອົງໃຫ້ທຸກຄົນທີ່ຕ້ອງການບໍ່ວ່າຄົນນັ້ນຈະເປັນຄົນຊົນຊາດໃດກໍຕາມ.

ເມື່ອຍິງຄົນນັ້ນຮູ້ວ່າພຣະອົງສະເດັດມາ ນາງໄດ້ຜ່ານຜ່າຄວາມກີດກັ້ນລະຫວ່າງເຊື້ອຊາດໄປຫາພຣະອົງທັນທີ. "ນາງກໍມາຂາບລົງທີ່ພຣະບາດຂອງພຣະອົງ" (7:25). "ນາງໄດ້ທູນອ້ອນວອນຂໍໃຫ້ພຣະອົງຂັບໄລ່ຜີອອກຈາກລູກສາວຂອງຕົນ" (7:26). ນາງເປັນແມ່ທີ່ມີຄວາມທຸກໂສກເພາະລູກສາວຂອງນາງໄດ້ຮັບຄວາມທໍຣະມານ. ເໝືອນດັ່ງຢາຣີໂອ ລາວບໍ່ໄດ້ເປັນຫ່ວງໜ້າທີ່ຕຳແໜ່ງຂອງລາວຢູ່ໃນໂຮງທັມມະເທສນາ ລາວໄດ້ມາຫາພຣະອົງເພື່ອລູກສາວຂອງລາວຈະໄດ້ເປັນຄືນມາ. ຍິງຄົນນີ້ກໍເຊັ່ນດຽວກັນ ນາງຈະບໍ່ໃຫ້ການແບ່ງແຍກລະຫວ່າງເຊື້ອຊາດມາເປັນສິ່ງທີ່ກີດກັ້ນ. ນາງໄດ້ມາຮ້ອງຂໍພຣະອົງປິ່ນປົວຮັກສາລູກສາວຂອງລາວໃຫ້ດີຈາກຄວາມເຈັບປ່ວຍ.

ຄຳຕອບຂອງພຣະອົງໃນບົດທີ 7:27 ເປັນຄຳຕອບທີ່ແປກປລາດແລະສັບສົນສຳລັບພວກເຮົາ. ແຕ່ນາງມີຄວາມເຊົ້າໃຈພຣະອົງ ເພາະວ່ານາງຢູ່ໃນສະພາບລະຫວ່າງຄວາມແຕກຕ່າງຂອງຊົນຊາດທັງສອງ. ຄຳຕອບຂອງພຣະຄຣິດນັ້ນເປັນຄຳຕອບທີ່ໜ້າສົນໃຈ. ເປັນຫຍັງພຣະອົງຈຶ່ງຕອບນາງຢ່າງນັ້ນ? ພຣະອົງໃຊ້ຄຳເວົ້າແຮງຢ່າງນີ້ ເພາະວ່ານາງມາລົບກວນພຣະອົງບໍ? ຫລືພຣະອົງທົດສອບຄວາມເຊື່ອຂອງນາງບໍ? ພຣະອົງກ່າວຕໍ່ນາງວ່າ, "ໃຫ້ລູກກິນອີ່ມເສັຽກ່ອນເພາະວ່າບໍ່ສົມຄວນຈະເອົາອາຫານຂອງລູກໂຍນໃຫ້ໝານ້ອຍກິນ" (7:27). ພຣະອົງໃຊ້ຄຳວ່າໝານ້ອຍດີກວ່າທີ່ຈະວ່າໝາໃຫຍ່. ເຖິງຢ່າງໃດກໍຕາມ ນາງຕອບພຣະອົງດ້ວຍຄຳເວົ້າສລາດຫລັກແຫລມວ່າ, "ຈິງຢູ່ຂ້ານ້ອຍ ແຕ່ເຖິງແມ່ນໝານ້ອຍທີ່ຢູ່ໃຕ້ໂຕະ ກໍເຄີຍກິນເສດອາຫານຂອງເດັກນ້ອຍນັ້ນ" (7:28).

ໃນພຣະທັມຕອນນີ້ ເປັນໄປໄດ້ບໍ່ວ່າກ່ອນອື່ນຂ່າວປະເສີດໄດ້ນຳໄປສູ່ຊາວອິສຣາເອນ, ແຕ່ດ້ວຍຖ້ອຍຄຳທີ່ສລາດຫລັກແຫລມຂອງຍິງຄົນນີ້ຂ່າວປະເສີດຈຶ່ງໄດ້ນຳໄປສູ່ຄົນຕ່າງຊາດ? ຍິງຄົນນີ້ໃຊ້ຄຳວ່າໝານ້ອຍປຽບເໝືອນກັບລູກສາວຂອງລາວແລະຄົນຕ່າງຊາດດ້ວຍ ແລະອາຫານປຽບເໝືອນກັນກັບຂ່າວປະເສີດບໍ? ພຣະເຢຊູໄດ້ສະແດງອອກໃຫ້ເຫັນວ່າຊາວຢິວມີອຸປນິສັຍຕໍ່ຄົນຕ່າງຊາດຢ່າງນີ້ບໍ ເພື່ອເປັນບົດຮຽນຄະຕິເຕືອນໃຈໃຫ້ສາວົກຂອງພຣະອົງ? ບາງທີພຣະອົງຢາກຈະສະແດງອອກໃຫ້ເຫັນຄວາມຮູ້ສຶກວ່າບາງຄົນນັ້ນເຫັນວ່າຕົນດີກວ່າຄົນອື່ນເພື່ອສາວົກຂອງພຣະອົງຈະໄດ້ມີໃຈອ່ອນນ້ອມຕໍ່ຄວາມຮ້ອງຂໍຂອງຍິງຄົນນັ້ນ?

ເປັນຄຳຖາມທີ່ໄດ້ຕັ້ງຂຶ້ນມາຫລາຍກວ່າທີ່ຈະສາມາດຕອບໄດ້. ເຖິງຢ່າງໃດກໍຕາມບົດຮຽນອັນສຳຄັນນັ້ນກໍຄືວ່າ ບໍ່ວ່າຈະເອົາເຊື້ອຊາດໃດ, ຊົນຊາດ,ຮີດຄອງປະເພນີຫລືພາສາສາມາກີດກັ້ນການທີ່ຈະນຳຂ່າວປະເສີດໄປຮອດຜູ້ນຶ່ງຜູ້ໃດໃນໂລກນີ້. ຍິງຄົນນີ້ລາວສ່ຽງຕໍ່ຄຳວິພາກວິຈານຂອງຄົນອື່ນໄດ້ຍອມຮັບວ່າພຣະເຢຊູຊົງເປັນພຣະເຈົ້າຂອງລາວ. ຄວາມ

ໄວ້ວາງໃຈເຊື່ອມີລາວມີໃນພຣະອົງ ນາງຈຶ່ງໄດ້ຮັບຄໍາຕອບຈາກການທູນຂໍຂອງນາງ. "ຝ່າຍຍິງນັ້ນໄດ້ກັບເມືອເຮືອນຂອງຕົນ ກໍເຫັນລູກນອນຢູ່ເທິງຕຽງແລະຜີຮ້າຍນັ້ນໄດ້ອອກແລ້ວ" (7:30).

**<u>ຄໍາຖາມ</u>**

1. ເວລາໃດຮີດຄອງຈຶ່ງກາຍເປັນພຽງແຕ່ພິທີທີ່ບໍ່ມີຄວາມໝາຍ? ຄວາມດີຂອງຮີດຄອງປະເພນີມີດີບໍ?

2. ມີຮີດຄອງປະເພນີອັນໃດແດ່ຢູ່ໃນຄຣິສຕະຈັກຂອງທ່ານໄດ້ສ້າງຄວາມກີດກັ້ນໃຫ້ກັບການປະກາດຂ່າວປະເສີດ?

3. ມີກົດໝາຍຂໍ້ບັງຄັບອັນໃດແດ່ທີ່ບໍ່ໄດ້ຮັບອໍານາດ? ມີຂໍ້ໃດແດ່ຢູ່ໃນຄຣິສຕະຈັກຂອງທ່ານ?

4. ໃຫ້ອະທິບາຍແລະຍົກຕົວຢ່າງຄໍາວ່າ ໜ້າຊື່ໃຈຄົດທີ່ທ່ານໄດ້ເຫັນໃນຄຣິສຕະຈັກຂອງທ່ານ, ໃນຊີວິດຂອງທ່ານ. ໜ້າຊື່ໃຈຄົດເປັນອຸປສັກໃນການນໍາຄົນຫລົງເສັຽມາເຊື່ອໃນພຣະເຈົ້າບໍ່? ທ່ານຈະເຮັດຢ່າງໃດ?

5. ຈົ່ງອະທິບາຍເຖິງຄວາມສໍາຄັນຂອງຄວາມເຊື່ອທີ່ມີການພົວພັນກັບຮີດຄອງປະເພນີທີ່ບໍ່ໄດ້ຮັບອໍານາດຈາກພຣະເຈົ້າ, ເຣື່ອງໜ້າຊື່ໃຈຄົດ, ແລະການເຫັນວ່າຕົນດີກວ່າຄົນອື່ນ.

6. ເມື່ອຄົນທີ່ບໍ່ເຊື່ອພຣະເຈົ້າໄດ້ຟັງຂ່າວປະເສີດແລ້ວ ລາວຕອບວ່າ, "ຂ້ອຍເປັນຄົນດີຢູ່ແລ້ວ." ຄໍາເວົ້າຢ່າງນີ້ເປັນຄົນໜ້າຊື່ໃຈຄົດໄດ້ຢ່າງໃດ? ທ່ານຈະທໍາຢ່າງໃດຈຶ່ງຈະເອົາຊະນະການກີດກັ້ນເຊັ່ນນີ້ໄດ້?

# ບົດຮຽນທີ 8
# ພຣະເຢຊູຮຽກຮ້ອງໃຫ້ຕັດສິນໃຈ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ມາຣະໂກ 8:27-38
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 8:11-38
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງຮຽກຮ້ອງໃຫ້ທຸກຄົນມອບກາຍຖວາຍໃຈໃຫ້ກັບພຣະອົງ.
**ຄຳຖາມເພື່ອການສຳຫລວດ:** ພຣະເຢຊູແມ່ນໃຜ?
**ຈຸດປະສົງຂອງບົດຮຽນນີ້:** ຈະຊ່ອຍໃຫ້ພວກເຮົາມອບກາຍຖວາຍໃຈໃຫ້ກັບພຣະເຢຊູ.

## ບົດຮຽນ

### ຄຳນຳ

ເມື່ອພວກເຮົາຍອມຮັບວ່າພຣະເຢຊູຊົງເປັນພຣະບຸດຂອງພຣະຜູ້ເປັນເຈົ້າແລ້ວ. ພຣະອົງຮຽກຮ້ອງໃຫ້ພວກເຮົາຕິດຕາມພຣະອົງ ເຖິງແມ່ນວ່າພວກເຮົາຈະໄດ້ຮັບຄວາມອັບອາຍເພາະພຣະອົງ, ຖືກປະຕິເສດຈາກໝູ່ກອງ, ເສັຽສລະເພາະພຣະອົງ, ປະເຊີນກັບຄວາມລຳບາກ, ຫລືວ່າຖືກຂົ່ມເຫງກໍເປັນໄດ້.

U.S. News and World Report ຫນັງສືພິມສະຫາຣັຖ ແລະ ລາຍງານຂ່າວຕ່າງປະເທດໄດ້ຖແລງວ່າຣັຖບານສັງຄົມນິຍົມຈີນມີຄວາມຮຸນແຮງຕໍ່ຄຣິສຕຽນໃຕ້ດິນ (ຄຣິສຕຽນທີ່ບໍ່ໄດ້ຂື້ນຢູ່ກັບການຄວບຄຸມຂອງຣັຖ). ເຖິງແມ່ນວ່າຊີວິດຂອງພວກເຂົາໄດ້ຮັບອັນຕະຣາຍ ພວກເຂົາກໍບໍ່ປະການມະມັສການພຣະຜູ້ເປັນເຈົ້າ, ສ້າງສາວົກແລະໜູນຈິດໃຈຊຶ່ງກັນແລະກັນ.

ຄຣິສຕຽນກຸ່ມນີ້ຍອມເອົາຊີວິດຂອງພວກເຂົາໄປແລກເອົາການຖືກຂົ່ມເຫງ, ຖືກຄວາມທຸກທໍຣະມານ, ແລະຄວາມຕາຍກໍໄດ້. ສຳລັບພວກເຂົາແລ້ວ ພວກເຂົາບໍ່ຢ້ານການຂູ່ເຂັນຈາກຣັຖບານສັງຄົມນິຍົມ. ພວກເຂົາຈົ່ງຮັກພັກດີຕໍ່ພຣະຄຣິດເທົ່ານັ້ນ. ຍອມທົນທຸກທໍຣະມານເພາະພຣະຄຣິດນັ້ນຄືການທົດສອບຄວາມເຊື່ອແລະຄວາມຮັກທີ່ມີຕໍ່ພຣະອົງ.

### ການເປີດເຜີຍເຖິງພຣະຄຣິດ (8:27-30)

ພວກສາວົກໄດ້ຟັງຄຳສັ່ງສອນຈາກພຣະເຢຊູ, ໄດ້ເຫັນການອັສຈັນຕ່າງໆ, ແລະມີຄວາມໃກ້ຊິດກັບພຣະອົງ. ຫລັງຈາກພວກສາວົກຂອງພຣະອົງໄດ້ຕິດຕາມພຣະອົງເປັນເວລາດົນພໍສົມຄວນ ເວລາທົດສອບກໍໄດ້ມາເຖິງ. ພຣະອົງຕ້ອງການໃຫ້ພວກເຂົາເຂົ້າໃຈແລະຮັບຮູ້ວ່າພຣະອົງນັ້ນແມ່ນໃຜ, ພວກເຂົ້າໄດ້ຮຽນຮູ້ອັນໃດແດ່ກ່ຽວກັບພຣະອົງ ແລະເສັ້ນທາງທີ່ຈະກ້າວຕໍ່ໄປ. ພຣະອົງຖາມຄຳຖາມສອງຄຳຈາກຄວາມເຫັນຂອງຄົນທົ່ວໄປແລ້ວກໍເຈາະຈົງເຂົ້າມາຫາພວກສາວົກ. ເມື່ອມາເຖິງຈຸດນີ້ ເປັນຈຸດທີ່ພວກເຂົາຕ້ອງມີການປ່ຽນແປງໃນການຮັບໃຊ້ຂອງອົງພຣະເຢຊູຄຣິດ.

ເປັນຄຳຖາມທີ່ຈະຕ້ອງໄດ້ຖືກຖາມໝົດທຸກຄົນມາທຸກທົ່ວສມັຍ. ເມື່ອພວກເຮົາຖືກຖາມຫລືຖືກທົດສອບ, ພວກເຮົາຈຳເປັນຈະຕ້ອງມີການຕັດສິນໃຈ. ເລືອກທາງທີ່ຈະເດີນຕາມພຣະອົງນັ້ນເປັນສິ່ງສຳຄັນທີ່ສຸດ.

ອອກຈາກເບດຊາອີດາແລະມຸ້ງໜ້າໄປ25 ໄມລ໌ສູ່ທິດຕາເວັນອອກສ່ຽງເໜືອ, ພຣະອົງໄດ້ພາພວກເຂົາໄປເຂດເມືອງ

ກາຍຊາເຣັຽ ຟີລິບປອຍ, ທິດເໜືອຂອງແຜ່ນດິນອິສຣາເອນ, ຢູ່ຕີນພູສູງບ່ອນພຣະອົງຊົງປ່ຽນລັກສນະພຣະກາຍ (9:1-8). ກາຍຊາເຣັຽແປວ່າບ້ານຂອງກາຍຊາ, ເປັນດິນແດນທີ່ກະສັດເຮໂຣດ (Herod the Great) ໄດ້ສ້າງວິຫານໃຫ້ປະຊາຊົນນະມັສການກາຍຊາ (ຈັກກະພັດ ກາຍຊາ ໂອຄຸໂຕ Caesar Augustus), ເປັນວິຫານມີສລັກດ້ວຍຫີນອ່ອນສີຂາວ. ຕໍ່ມາລູກຊາຍຂອງກະສັດເຮໂຣດ ຊື່ວ່າ ເຮໂຣດ ຟີລິບໄດ້ຂຍາຍເມືອງກາຍຊາເຣັຽອອກແລະຈຶ່ງໄດ້ຕັ້ງຊື່ເມືອງນີ້ວ່າ ກາຍຊາເຣັຽ ຟີລິບປອຍ. ປະຊາຊົນຢູ່ໃນເມືອງນີ້ນະມັສການຈັກກະພັດແທນທີ່ຈະນະມັສການພຣະເຈົ້າ. ສະນັ້ນ ຄຳທຳອິດທີ່ພຣະເຢຊູຖາມວ່າ, "ຄົນທັງຫລາຍເວົ້າກັນວ່າເຮົາແມ່ນຜູ້ໃດ" (8:27). ຄຳຖາມທີ່ຢາກຮູ້ຄຳຕອບອັນຈະແຈ້ງ. ພວກສາວົກທູນຕອບວ່າ, "ຜູ້ລາງຄົນວ່າແມ່ນໂຢຮັນບັບຕິສະໂຕ ແຕ່ຄົນອື່ນວ່າແມ່ນເອລີຢາ ແລະຄົນອື່ນອີກວ່າແມ່ນຜູ້ນຶ່ງໃນພວກຜູ້ປະກາດພຣະທັມ" (8:28; ໃຫ້ອ່ານ 6:14-15). ບາງຄົນຄິດວ່າພຣະອົງແມ່ນເອລີຢາ ເພາະວ່າໃນພຣະທັມ ມາລະກີ 4:5-6 ໄດ້ກ່າວໄວ້. ຄວາມຄິດຂອງຝູງຊົນບໍ່ປ່ຽນແປງ ພວກເຂົາຄິດສເມີວ່າພຣະອົງນັ້ນແມ່ນຜູ້ນຶ່ງໃນຈຳນວນພວກຜູ້ປະກາດພຣະທັມຂອງພວກເຂົາ. ຕໍ່ມາຢູ່ເທິງພູສູງ ພຣະອົງໄດ້ປ່ຽນລັກສນະພຣະກາຍຂອງພຣະອົງ. ເອລີຢາແລະໂມເຊໄດ້ມາລົມກັບພຣະອົງ (9:4-5). ພຣະບິດາໄດ້ຕັດມີພຣະສຸຣະສຽງອອກມາຈາກເມກນັ້ນວ່າ, "ທ່ານຜູ້ນີ້ແຫລະ, ເປັນບຸດທີ່ຮັກຂອງເຮົາ ພວກເຈົ້າຈົ່ງເຊື່ອຟັງເພິ່ນ" (9:7). ການປ່ຽນລັກສນະພຣະກາຍໄດ້ຊີ້ໃຫ້ເຫັນການຊົງປາກົດຂອງພຣະຄຣິດ.

ພຣະອົງຖາມເປັນຄັ້ງທີສອງເປັນຄຳຖາມເຈາະຈົງເຖິງພວກສາວົກເອງວ່າ, "ພວກທ່ານເດ ວ່າເຮົາແມ່ນໃຜ?" (8:29). ໝາຍຄວາມວ່າພວກເຈົ້າເດ. ຖາມເຖິງຄວາມຄິດການຮັບຮູ້ຂອງສ່ວນບຸກຄົນ. ອັຄສາວົກເປໂຕທູນຕອບວ່າ, "ທ່ານແມ່ນພຣະຄຣິດ" (8:29). ພາສາກຣີກໃຊ້ຄຳວ່າ <u>ພຣະຄຣິດ</u> ແລະພາສາເຮັບເຣີໃຊ້ຄຳວ່າ <u>ພຣະເມຊີອາ</u> ຄືເປັນຜູ້ທີ່ຖືກຫົດສົງຈາກພຣະຜູ້ເປັນເຈົ້າ. ໃນຕຳແໜ່ງເປັນພຣະຄຣິດ, ພຣະເຢຊູຊົງເປັນກະສັດ, ປະໂລຫິດ, ຜູ້ປະກາດພຣະທັມ, ແລະພຣະຜູ້ໂຜດໃຫ້ພົ້ນ.

ຢ່າງໜ້ອຍໃນຈຳນວນພວກສາວົກເປໂຕໄດ້ຮັບຮູ້ວ່າພຣະເຢຊູຊົງເປັນພຣະຄຣິດ. ພຣະອົງບໍ່ແມ່ນເຢເຣມີຢາ, ບໍ່ແມ່ນເອຊາຢາ, ແລະບໍ່ແມ່ນເອລີຢາ. ພຣະອົງຊົງແມ່ນພຣະຄຣິດ. ພວກສາວົກເຫັນພຣະອົງເໝືອນດັ່ງກະສັດທີ່ຖືກຫົດສົງແຕ່ພວກເຂົາບໍ່ເຂົ້າໃຈການລີ້ລັບຂອງພຣະສງ່າຣາສີ ແລະຣາຊອານາຈັກຂອງພຣະອົງ (8:31-33). ພຣະອົງໄດ້ສັ່ງຫ້າມພວກສາວົກບໍ່ໃຫ້ບອກຄົນອື່ນ ແລະໄດ້ກ່າວເຖິງການສິ້ນພຣະຊົນຂອງພຣະອົງ.

**<u>ການເປີດເຜີຍເຖິງໄມ້ກາງແຂນ</u>** (8:31-33)
ພຣະອົງຊົງຕັ້ງຕົ້ນກ່າວສອນພວກສາວົກກ່ຽວກັບເຣື່ອງການທໍຣະມານຢູ່ເທິງໄມ້ກາງແຂນແລະການຄືນພຣະຊົນຂອງພຣະອົງ. "ຄຳເຫລົ່ານີ້ພຣະອົງຊົງກ່າວໂດຍເປີດເຜີຍ" (8:32). ເພື່ອໃຫ້ພວກສາວົກເຂົ້າໃຈຢ່າງແຈ່ມແຈ້ງ. ພຣະອົງສອນພວກເຂົາວ່າ, "ບຸດມະນຸດຈະຕ້ອງທົນທຸກທໍຣະມານຫລາຍປະການ" (8:31). ຄຳວ່າຈະຕ້ອງໝາຍຄວາມວ່າຫລີກລ້ຽງບໍ່ໄດ້ຢ່າງເດັດຂາດ. ຈະຕ້ອງຖືກປະຕິເສດບໍ່ຮັບຮູ້, ຈະຕ້ອງຖືກຂ້າເສັຽແລະຈະຕ້ອງຄືນພຣະຊົນໃນວັນຖ້ວນສາມ. ພວກເຖົ້າແກ່, ພວກປະໂຣຫິດຕົນໃຫຍ່, ແລະພວກນັກທັມຈະສອບສວນພຣະອົງແລະຈະບໍ່ຮັບຮູ້ພຣະອົງວ່າເປັນພຣະຄຣິດ. ພຣະອົງບໍ່ແມ່ນພຣະຄຣິດທີ່ປະເພດພວກເຂົາຢາກໄດ້.

ເປໂຕໄດ້ຍິນເຣື່ອງຄວາມເຈັບປວດຂອງພຣະອົງ ຖືກປະຕິເສດຈົນເຖິງແກ່ຄວາມຕາຍ. ເປໂຕໄດ້ຍິນຫລາຍໂພດລາວຈຶ່ງພາພຣະອົງໄປຕ່າງຫາກແລະຫ້າມພຣະອົງ. ເປໂຕຫ້າມພຣະອົງດ້ວຍຄວາມຫ່ວງໃຍ ແຕ່ເປໂຕກັບໄດ້ຮັບຄຳຕອບຈາກພຣະອົງເປັນຄຳເວົ້າແຂງແຮງຢ່າງບໍ່ໜ້າເຊື່ອ. ເປໂຕຍັງບໍ່ເຂົ້າໃຈເນື້ອໃນໃຈຄວາມຂອງພຣະອົງເທື່ອ. ຖ້າຫາກພຣະອົງສິ້ນພຣະຊົນ, ພຣະອົງຈະເຮັດໃຫ້ເປົ້າໝາຍຂອງພຣະອົງສຳເຣັດໄດ້ຢ່າງໃດ?

ພຣະອົງຊົງຕິເປໂຕຢ່າງແຂງແຮງວ່າ, "ອ້າຍຊາຕານເຮີຍ, ຈົ່ງຖອຍໜີຈາກເຮົາເສັຽ " (8:33). ພຣະອົງຈຳໄດ້ວ່າຊາຕານເຄີຍທົດລອງພຣະອົງມາກ່ອນ (1:12-13). ເໝືອນກັບວ່າເປໂຕໄດ້ຖືກຊາຕານໃຊ້ມາທົດລອງພຣະອົງ. ພຣະອົງຮູ້ບໍ່ເກີດຂອງການທົດລອງຈຶ່ງໄດ້ກ່າວຕໍ່ເປໂຕອີກວ່າ "ເພາະເຈົ້າຄຶດຢ່າງມະນຸດ ບໍ່ຄຶດຢ່າງພຣະເຈົ້າ" (8:33). ທີ່ພຣະອົງໄດ້ກ່າວຕໍ່ເປໂຕຢ່າງນັ້ນ, ຄວາມໝາຍຂອງພຣະອົງກໍຄືວ່າ ເປໂຕເອີຍ ເຈົ້າເຈຕນາດີຢູ່ແຕ່ວ່າມັນບໍ່ແມ່ນພຣະປະສົງຂອງພຣະເຈົ້າ ເຈົ້າຍັງຕ້ອງໄດ້ຮຽນຮູ້ຫລາຍຢ່າງເຖິງຄວາມໝາຍອັນເລິກກ່ຽວກັບວ່າພຣະເຢຊູນັ້ນແມ່ນໃຜແລະການກະທຳຂອງພຣະອົງ.

**ການເປີດເຜີຍເຖິງການມອບກາຍຖວາຍໃຈ**(8:34)
ສາວົກຂອງພຣະອົງບໍ່ພຽງແຕ່ຮັບຮູ້ວ່າພຣະອົງຈະຕ້ອງຖືກຄຶງຢູ່ທີ່ໄມ້ກາງແຂນເທົ່ານັ້ນ. ພວກເຂົາຕ້ອງຕຽມພ້ອມທີ່ຈະຕ້ອງແບກໄມ້ກາງແຂນຂອງພວກເຂົາເອງດ້ວຍ. ເປໂຕປະຕິເສດໄມ້ກາງແຂນຂອງພຣະອົງ, ແຕ່ດຽວນີ້ລາວຕ້ອງຮັບເອົາໄມ້ກາງແຂນຂອງລາວເອງ. ບໍ່ພຽງແຕ່ພວກສາວົກເທົ່ານັ້ນ. ພຣະອົງໄດ້ເອີ້ນເອົາປະຊາຊົນມາຮ່ວມດ້ວຍ, "ຖ້າຜູ້ໃດຢາກຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເສັຽແລະຮັບແບກໄມ້ກາງແຂນຂອງຕົນຕິດຕາມເຮົາມາ" (8:34).

"ຕັດສິດ" ແລະ "ຮັບແບກ" ສອງປະການນີ້ຈະຕ້ອງປະຕິບັດໄປພ້ອມກັນ. ຄຳວ່າ "ຕິດຕາມ" ນັ້ນຈະຕ້ອງປະຕິບັດໃຫ້ເປັນນິສັຍໄປຢູ່ເລື້ອຍໆ. ຄຣິສຕຽນຈະຕ້ອງຕັດສິດຂອງຕົນເສັຽ ແລະຮັບແບກໄມ້ກາງແຂນຂອງຕົນ ເປັນການຕັດສິນໃຈໃຫ້ເປັນວິທີທາງດຳເນີນຊີວິດ ແລະຕິດຕາມພຣະອົງໄປ.

**ການເປີດເຜີຍເຖິງຄວາມເສັຽສລະ** (8:35-37)
ພຣະອົງໃຊ້ຄຳຜຍາ, "ເພາະວ່າຜູ້ໃດຢາກຊ່ອຍຊີວິດຂອງຕົນໃຫ້ພົ້ນ ຜູ້ນັ້ນຈະເສັຽຊີວິດ ແຕ່ຜູ້ໃດຈະເສັຽຊີວິດຂອງຕົນເພາະເຫັນແກ່ເຮົາແລະເຫັນແກ່ຂ່າວປະເສີດ ຜູ້ນັ້ນກໍຈະຊ່ອຍຊີວິດໃຫ້ພົ້ນ" (8:35). ນີ້ຄືຫົວໃຈສຳຄັນຂອງຫລັກຄວາມເຊື່ອຂອງຄຣິສຕຽນ.

ສິ່ງທີ່ມະນຸດຕ້ອງການຫລາຍທີ່ສຸດກໍຄື "ຢາກຈະຊ່ອຍຊີວິດຂອງຕົນໃຫ້ພົ້ນ". ແຕ່ມີທາງດຽວເທົ່ານັ້ນກໍຄືວ່າເຂົາຈະຕ້ອງສລະຊີວິດຂອງເຂົາເພາະຂ່າວປະເສີດ, ຖ້າບໍ່ດັ່ງນັ້ນເຂົາກໍຈະເສັຽຊີວິດຂອງເຂົາ. ການສລະຊີວິດຂອງເຂົາເພາະຂ່າວປະເສີດຄືສະລະຄວາມເຫັນແກ່ຕົວຂອງເຂົາ. ຖ້າເຂົາສລະໄດ້ເຂົາກໍຈະໄດ້ຮັບຜົນກຳໄລຄືຊີວິດອັນຕລອດໄປເປັນນິດ. ເຂົາກ້າສລະສ່ວນໜ້ອຍ ແລະ ເຂົາຈະໄດ້ຮັບຜົນຕອບແທນເປັນຈຳນວນຫລາຍ. ຜົນທີ່ໄດ້ຮັບຈາກໂລກນີ້ຈະບໍ່ພຽງພໍຈັກເທື່ອ. ສະນັ້ນແຫລະ, ສິ່ງສຳຄັນທີ່ສຸດກໍຄືຮັບເອົາການຮຽກຮ້ອງຈາກພຣະເຢຊູ. ໃຫ້ຊີວິດນີ້ ຢູ່ເພາະພຣະອົງແລະເພາະຂ່າວປະເສີດ.

ເພື່ອຊ່ອຍໃຫ້ພວກສາວົກແລະປະຊາຊົນເຂົ້າໃຈເລິກໄປກວ່ານັ້ນອີກ ພຣະອົງຊົງກ່າວອີກວ່າ, "ເພາະຖ້າຜູ້ໃດຈະໄດ້ສິ່ງຂອງໝົດທັງໂລກ ແຕ່ຕ້ອງເສັຽຊີວິດອັນແທ້ຈິງຂອງຕົນ ຜູ້ນັ້ນຈະໄດ້ປໂຍດອັນໃດ? ຫລືຜູ້ນັ້ນຈະນຳເອົາສິ່ງໃດໄປແລກເອົາຊີວິດອັນແທ້ຈິງຂອງຕົນກັບຄືນມາ" (8:36-37). ພຣະອົງສະແດງໃຫ້ເຫັນວ່າພຣະອົງນັ້ນເຂົ້າໃຈແລະເຫັນໃຈມະນຸດຈຶ່ງໄດ້ຕັ້ງຄຳຖາມດັ່ງກ່າວ. ຫລາຍຄົນມອບຄຸນຄ່າຊີວິດຂອງຕົນໄວ້ກັບຄວາມສນຸກສນານ, ໜ້າທີ່ຕຳແໜ່ງ, ຜົນງານ, ກຳໄລ,ຫລື ຊື່ສຽງ. ສິ່ງດັ່ງກ່າວມານີ້ມັນມີຄຸນຄ່າແທ້ບໍ່ໃນຊີວິດຂອງເຂົາ? ສິ່ງຂອງໝົດທັງໂລກຈະບໍ່ມີຄຸນຄ່າເທົ່າກັບຈິດວິນຍານດວງດຽວ.

**<u>ຄຳທ້າທາຍຂອງພຣະອົງ</u>** (8:38)
ພຣະເຢຊູໄດ້ທ້າທ້າຍໃຫ້ພວກສາວົກແລະປະຊາຊົນເລືອກລະຫວ່າງການໄດ້ແລະການເສັຽຂອງຊີວິດ. "ດ້ວຍວ່າຖ້າຜູ້ໃດມີຄວາມອາຍເພາະເຮົາແລະຖ້ອຍຄຳຂອງເຮົາໃນຊົ່ວຊີວິດນີ້ ຊຶ່ງປະກອບດ້ວຍການບໍ່ສັດຊື່ແລະຊົ່ວຮ້າຍ ບຸດມະນຸດກໍຈະມີຄວາມອາຍເພາະຜູ້ນັ້ນ ໃນເມື່ອເພິ່ນມາດ້ວຍສງ່າຣາສີແຫ່ງພຣະບິດາແລະດ້ວຍຝູງເທວະດາຕົນບໍຣິສຸດ" (8:38) ພຣະອົງຊົງຄາດໝາຍໄວ້ວ່າປະຊາຊົນຈະມີຄວາມອາຍເພາະພຣະອົງ, ຖ້ອຍຄຳຂອງພຣະອົງ, ແລະການສິ້ນພຣະຊົນ.

ຄວາມອາຍນັ້ນມີອຳນາດ ມັນມີທາງຜົນໄດ້ກັບຜົນເສັຽດ້ວຍ. ຜົນໄດ້ຂອງຄວາມອາຍກໍຄືຈະຊ່ອຍໃຫ້ຜູ້ກ່ຽວເຂົ້າສນິດກັບພຣະຜູ້ເປັນເຈົ້າໃຫມ່ ໃນເມື່ອຜູ້ກ່ຽວຮູ້ສຶກວ່າມີຄວາມອາຍເພາະວ່າໄດ້ຫ່າງເຫີນຈາກພຣະອົງ. ຜົນເສັຽຂອງຄວາມອາຍກໍຄືຈະເຮັດໃຫ້ຜູ້ກ່ຽວນັ້ນແຫ່ງຫນີໄປໄກເພາະວ່າເກີດມີຄວາມອາຍ. ການຍອມຮັບຊຶ່ງກັນແລະກັນນັ້ນແມ່ນສິ່ງທີ່ມະນຸດຕ້ອງການ. ເມື່ອມີການຍອມຮັບຊຶ່ງກັນແລະກັນຄວາມອາຍກໍຈະບໍ່ມີອີກຕໍ່ໄປ. ຫລາຍຄັ້ງຫລາຍຄາວເມື່ອຄົນທັງຫລາຍໄດ້ຟັງຂ່າວປະເສີດ, ກໍເກີດມີການຕັດສິນໃຈຢາກຈະຮັບເຊື່ອ, ແຕ່ແລ້ວກໍປະຕິເສດການເຊື່ອເຊີນເສັຽ ເພາະວ່າມີຄວາມອາຍທີ່ຈະຍ່າງອອກໄປສເນີຕົວ, ມີຄວາມອາຍເພາະຮັບສິນບັບຕິສະມາ, ຫລືວ່າຢ້ານຫມູ່ຮູ້ວ່າຕົນນັ້ນໄດ້ຕິດຕາມພຣະເຢຊູ. ຄວາມອາຍນີ້ແມ່ນການຫລອກລໍ້ຂອງມານເພາະວ່າມັນບໍ່ຢາກໃຫ້ຈິດວິນຍານນັ້ນໄດ້ຮັບຄວາມລອດພົ້ນ.

ມີຄວາມຮູ້ສຶກອັບອາຍເພາະພຣະຄຣິດຈະເປັນສິ່ງກີດກັ້ນພາຣະກິດຂອງພຣະອົງແລະກໍ່ໃຫ້ເກີດຄວາມສົງສັຍແລະມີຈິດໃຈບໍ່ແນ່ບໍ່ນອນ. ຊາຕານຈະໃຊ້ຄວາມອາຍນີ້ເປັນສິ່ງຍັບຍັ້ງບໍ່ໃຫ້ຄົນມາເປັນສາວົກຂອງພຣະອົງ. ພຣະອົງເຫັນວ່າຄວາມອາຍເປັນອຸປສັກຂອງມະນຸດທີ່ຈະຕ້ອງເອົາຊັຍຊະນະ. ອັຄສາວົກໂປໂລກ່າວວ່າ, "ເພາະວ່າເຮົາບໍ່ມີຄວາມລະອາຍໃນຂ່າວປະເສີດ ດ້ວຍວ່າຂ່າວປະເສີດນັ້ນເປັນຣິດເດດຂອງພຣະເຈົ້າ ເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຮັບຄວາມພົ້ນພວກຢິວກ່ອນແລະພວກຕ່າງຊາດດ້ວຍ" (ໂຣມ 1:16).

**<u>ຄຳຖາມ</u>**

1. ການເປັນພຣະເມຊີອາແລະການເປັນສາວົກມີຄວາມສຳພັນຕໍ່ກັນຢ່າງໃດ?

2. ເປັນຫຍັງອັຄສາວົກເປໂຕຈຶ່ງຮູ້ວ່າພຣະເຢຊູເປັນພຣະຄຣິດ ແຕ່ລາວບໍ່ເຂົ້າໃຈເຖິງເຣື່ອງໄມ້ກາງແຂນ?

3. ຖ້າຫາກທ່ານຕິດຕາມພຣະຄຣິດ ທ່ານບໍ່ຈຳເປັນຕ້ອງສລະຫຍັງຫມົດ ມັນຈະມີຄຸນຄ່າຫຍັງບໍ່?
   ທ່ານໄດ້ສລະຫຍັງແດ່ຕັ້ງແຕ່ທ່ານໄດ້ຕິດຕາມພຣະຄຣິດມາ?

4. ຄວາມເຊື່ອຂອງທ່ານໄດ້ຖືກທົດສອບບໍ່ໃນຫມໍ່ໆມານີ້? ການທົດສອບມີອຳນາດບໍ່?

5. ເປັນຫຍັງປະສົບການຂອງການຖືກທົດສອບຈຶ່ງເປັນຈຸດທີ່ມີການປ່ຽນແປງໃນຊີວິດຂອງພຣະເຢຊູ?
   ທ່ານມີຄວາມຄິດເຫັນຢ່າງໃດເຖິງ ຄຳຖາມທີ່ຖາມກ່ຽວກັບພຣະເຢຊູນັ້ນ ເປັນການບາງເອີນ ຫລືວ່າພຣະອົງມີພຣະປະສົງຈະຖາມຢູ່ແລ້ວ?

6. ທ່ານຮູ້ຈັກໃຜແດ່ທີ່ພວກເຂົາມີອຸປສັກຍອມຮັບວ່າພຣະເຢຊູເປັນພຣະຄຣິດ? ເປັນຫຍັງ?

# <u>ບົດຮຽນທີ 9</u>
# <u>ພຣະເຢຊູຊົງສອນເຣື່ອງການຮັບໃຊ້</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 9:30-37; 10:35-45
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ມາຣະໂກ 9:1-10:52
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຢຊູຊົງສອນສາວົກຂອງພຣະອົງວ່າ ຄວາມຍິ່ງໃຫຍ່ເກີດມາຈາກການຮັບໃຊ້ແບບຖ່ອມຕົວຊຶ່ງພຣະອົງໄດ້ຊົງເປັນຕົວຢ່າງ.
<u>ຄຳຖາມເພື່ອການສຳຣວດ:</u> ແມ່ນຫຍັງເຮັດໃຫ້ຄົນກາຍເປັນຜູ້ຍິ່ງໃຫຍ່ຢ່າງແທ້ຈິງ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສຳຣວດເບິ່ງຊີວິດຂອງທ່ານເອງ ແລະມາຕະຖານທີ່ພຣະເຢຊູຊົງຕັ້ງໄວ້.

<u>ເຣື່ອງທີ່ຈະເນັ້ນໃນການສຶກສາຄັ້ງນີ້:</u>

- ຮັບໃຊ້ເພື່ອນມະນຸດໃນພຣະນາມພຣະເຢຊູ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
- ເສີມສ້າງຄອບຄົວຄຣິສຕຽນ
- ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ່ມຂຶ້ນ

<u>ຄຳນຳ</u>

ມາເຖິງຕອນນີ້, ພຣະເຢຊູພຍາຍາມຫລີກໜີຈາກກຸ່ມຊົນທັງຫລາຍ; ພຣະອົງມີພຣະປະສົງທີ່ຈະໃຊ້ເວລາຢູ່ກັບພວກສາວົກເພື່ອສັ່ງສອນພວກເຂົາໃຫ້ຫລາຍຂຶ້ນ. ພຣະເຢຊູຊົງຫລິງເຫັນຄວາມສຳຄັນຂອງການສອນພວກສາວົກໃຫ້ເຂັ້ມແຂງເພາະພວກເຂົາຈະເປັນຜູ້ສັ່ງສອນເຣື່ອງແຜ່ນດິນສວັນຂອງພຣະເຈົ້າຕໍ່ໄປເມື່ອພຣະອົງສະເດັດສູ່ຟ້າສວັນ. ການຮຽນທຸກຢ່າງຕ້ອງໃຊ້ເວລາ; ແມ່ນແຕ່ພວກສາວົກກໍຕ້ອງໄດ້ຖືມວຽກໃນລະຍະຊົ່ວຄາວເພື່ອຈະໄດ້ຮຽນຈາກ "ພຣະອາຈານຜູ້ຍິ່ງໃຫຍ່.

ກ. ການເດີນທາງໄປສູ່ ກາເປນາອູມ (9:30-37)

<u>ພຣະເຢຊູຊົງຮັກຄົນບາບ (9:30-32)</u>
ພຣະເຢຊູຊົງກ່າວລ່ວງໜ້າເປັນຄັ້ງທີສອງກ່ຽວກັບເຣື່ອງທີ່ພຣະອົງຈະຖືກທໍຣະມານ, ຖືກຂ້າ, ແລະຈະຖືກຊົງບັນດານໃຫ້ເປັນຄືນມາ ກັບພວກສາວົກ (9:30-32). ພຣະເຢຊູຊົງກ່າວວ່າ "ບຸດມະນຸດຈະຖືກມອບໄວ້ໃນມືມະນຸດ." ຄຳວ່າ "ຖືກມອບ" ສະແດງໃຫ້ພວກເຮົາເຫັນວ່າ ການຕາຍຂອງພຣະເຢຊູບໍ່ແມ່ນສິ່ງທີ່ເກີດຂຶ້ນໂດຍບັງເອີນ. ແຕ່ທຸກຢ່າງໄດ້ເປັນໄປຕາມແຜນທີ່ພຣະເຈົ້າໄດ້ຊົງວາງໄວ້ກ່ອນແລ້ວ(ໂຣມ 4:25; 8:32).ພຣະເຢຊູຊົງສະເດັດມາຕາຍແທນຄົນບາບ.

<u>ພຣະເຢຊູຊົງສອນພວກສາວົກ(9:33-37)</u>
ພຣະເຢຊູຊົງບອກພວກສາວົກເຣື່ອງການຈະຖືກທໍຣະມານແລະການຕາຍ, ແຕ່ສາວົກສິບສອງຄົນຖົກຖຽງກັນວ່າແມ່ນໃຜຈະເປັນໃຫຍ່ກວ່າໝູ່. ພວກເຂົາບໍ່ເຂົ້າໃຈຄຳສອນຂອງພຣະອົງ. ພວກສາວົກໄດ້ເຫັນເຣື່ອງສິດອຳນາດໃນສັງຄົມທີ່ພວກເຂົາເຈົ້າເຄີຍຢູ່ມາ; ເຂົາເຈົ້າພາກັນຄິດວ່າຊີວິດຄຣິສຕຽນກໍຄືຈະດຳເນີນໄປໃນທຳນອງດຽວກັນ. ແມ່ນແຕ່ເວລາ

ຢູ່ຫ້ອງໃຫຍ່ຊັ້ນເທິງກ່ອນທີ່ພຣະເຢຊູຈະຖືກຂ້າທີ່ເທິງໄມ້ກາງແຂນ, ພວກສາວົກກໍຍັງມີການຖົກຖຽງກັນວ່າໃຜໃນລະຫວ່າງພວກເຂົາຈະເປັນຜູ້ໃຫຍ່ກວ່າໝູ່ (ລູກາ 22:24-30). ພຣະເຈົ້າຊົງປາຖນາໃຫ້ພວກເຮົາເປັນເໝືອນເດັກນ້ອຍເພື່ອພວກເຮົາຈະໄດ້ເຊື່ອຟັງພຣະອົງ; ແຕ່ພຣະອົງບໍ່ຊົງປະສົງໃຫ້ພວກເຮົາປະພຶດເໝືອນເດັກນ້ອຍທີ່ບໍ່ຮູ້ຫຍັງ. ພຣະເຢຊູຊົງໃຊ້ຄຳເວົ້າຄຳດຽວກັນເວລາພຣະອົງກ່າວເຖິງ "ເດັກນ້ອຍ" ແລະ "ຜູ້ຮັບໃຊ້." ພຣະອົງຊົງສອນພວກສາວົກວ່າຄວາມຍິ່ງໃຫຍ່ທີ່ແທ້ບໍ່ໄດ້ຢູ່ທີ່ຕຳແໜ່ງ ຫລືຊັບສົມບັດ ແຕ່ຢູ່ທີ່ອຸປນິສັຍແລະການຮັບໃຊ້(ຟີລິບປອຍ 2:1-13). ພຣະອົງຊົງກ່າວກັບພວກສາວົກວ່າ "ຖ້າຜູ້ໃດຢາກເປັນຜູ້ຕົ້ນ ກໍໃຫ້ຜູ້ນັ້ນເປັນຜູ້ປາຍແລະເປັນຜູ້ຮັບໃຊ້ຂອງຄົນທັງປວງ" (9:35). ພຣະເຢຊູຊົງສອນພວກສາວົກໃຫ້ຕ້ອນຮັບພວກເດັກນ້ອຍ. ຄຳສອນນີ້ເປັນຄຳສອນແບບໃໝ່ສຳລັບພວກສາວົກເພາະຕາມປະເພນີຂອງພວກເຂົາແລ້ວເດັກນ້ອຍບໍ່ເຄີຍຖືວ່າສຳຄັນ. ພວກເຮົາຄວນຈະເຫັນເດັກນ້ອຍເປັນຜູ້ສຳຄັນແລະຄວນສັ່ງສອນພວກເຂົາເຣື່ອງອົງພຣະເຢຊູຄຣິດ. ພວກເຮົາຄວນຈະຖືວ່າການຮັບໃຊ້ເດັກນ້ອຍໃນຄຣິສຕະຈັກກໍມີຄວາມສຳຄັນເທົ່າທຽມກັບການຮັບໃຊ້ຜູ້ໃຫຍ່.

ຂ. ການເດີນທາງໄປກຸງເຢຣູຊາເລັມ (10:32-45)

<u>ພຣະເຢຊູຊົງກ່າວລ່ວງໜ້າວ່າຈະຖືກຂ້າ(10:30-34)</u>

ພຣະເຢຊູແລະສາວົກເດີນທາງໄປສູ່ກຸງເຢຣູຊາເລັມເປັນຄັ້ງສຸດທ້າຍ. ເມື່ອກຳລັງເດີນທາງຢູ່ນັ້ນພຣະເຢຊູກໍໄດ້ຊົງສອນພວກສາວົກອີກເປັນເທື່ອທີສາມກຽ່ວກັບການຕາຍທີ່ຈະມາເຖິງພຣະອົງ. ພຣະເຢຊູຊົງບອກພວກເຂົາວ່າພຣະອົງຈະຖືກປະຫານຊີວິດທີ່ເທິງໄມ້ກາງແຂນທີ່ກຸງເຢຣູຊາເລັມ (ມັດທາຍ 20:19). ທ່ານຄົງຈະຄິດວ່າພວກສາວົກທັງສິບສອງຄົນຄົງເຂົ້າໃຈດີໃນເຣື່ອງນີ້ເພາະພຣະອົງໄດ້ບອກພວກເຂົາເຖິງສາມຄັ້ງແລ້ວ; ແຕ່ຕົງກັນຂ້າມ, ຢາໂກໂບ,ໂຢຮັນ,ແລະແມ່ຂອງພວກເຂົາ (ມັດທາຍ 20:20)ໄດ້ເຂົ້າມາທູນຂໍຕຳແໜ່ງຈາກພຣະອົງ. ພວກເຂົາບໍ່ໄດ້ເຂົ້າໃຈຄຳສອນທີ່ວ່າ "ໄມ້ກາງແຂນຈະມາກ່ອນບັນລັງ ແລະຄວາມທໍຣະມານຈະມາກ່ອນຄວາມສະງ່າຣາສີ."

<u>ຄຳທູນຂໍຂອງຢາໂກໂບແລະໂຢຮັນ(10:35-37)</u>

ຢາໂກໂບແລະໂຢຮັນທູນຂໍຕຳແໜ່ງຈາກພຣະເຢຊູ. ພຣະເຢຊູຊົງຖາມພວກເຂົາວ່າ "ຈອກທີ່ເຮົາດື່ມນີ້ທ່ານຈະດື່ມໄດ້ຫລື ແລະບັບຕິສະມາທີ່ເຮົາຮັບນັ້ນ ທ່ານຈະຮັບໄດ້ຫລື" (10:38). ຄຳວ່າ "ຈອກ" ໃນຕອນນີ້ພຣະເຢຊູໝາຍເຖິງການທີ່ພຣະອົງຍອມຮັບແລະເຮັດຕາມພຣະປະສົງຂອງ ພຣະບິດາໂດຍຍອມລົງມາໂລກມະນຸດເພື່ອຮັບເອົາຄວາມຜິດບາບຂອງພວກເຮົາ (14:36; ໂຢຮັນ 18:11). ຄຳວ່າ "ບັບຕິສະມາ" ບອກເຖິງການທໍຣະມານຂອງພຣະເຢຊູຄຣິດທີ່ໄມ້ກາງແຂນເພື່ອຄວາມຜິດບາບໃນໂລກນີ້ (ລູກາ 12:50; ພສສ 41:7 ແລະ 69:2, 15). ບໍ່ມີມະນຸດຄົນໃດໃນໂລກນີ້ (ຮວມທັງ ຢາໂກໂບ ແລະໂຢຮັນ) ສາມາດທີ່ຈະດື່ມຈອກຂອງພຣະເຢຊູ ແລະຮັບບັບຕິສະມາທີ່ພຣະເຢຊູຊົງຮັບ. ຢາໂກໂບເປັນຄົນແລກໃນຈຳນວນພວກສາວົກສິບສອງຄົນທີ່ໄດ້ຖືກປະຫານຊີວິດເພາະຄວາມເຊື່ອໃນອົງພຣະຄຣິດ (ກິຈການ 12:2) ແລະ ໂຢຮັນໄດ້ຖືກການຂົ່ມເຫັງຈາກພວກໂຣມໃນບັ້ນປາຍຂອງຊີວິດ (ພຣະນິມິດ 1:9). ສນັ້ນພວກເຮົາຄວນລະວັງເວລາພວກເຮົາອ້ອນວອນຂໍສິ່ງໃດສິ່ງນຶ່ງ ເພາະພຣະເຈົ້າອາດຈະປະທານສິ່ງທີ່ຂໍນັ້ນໃຫ້ກັບທ່ານ.

ພຣະເຢຊູຊົງໃຊ້ໂອກາດນີ້ສອນພວກສາວົກສິບສອງຄົນອີກເທື່ອນຶ່ງເຣື່ອງຄວາມສຳຄັນຂອງການຮັບໃຊ້ແບບຖ່ອມຕົວໃນພຣະນາມຂອງພຣະອົງ. ພຣະທັມມາຣະໂກ 10:45 ເປັນຂໍ້ສລຸບສຳຄັນທີ່ສຸດຂອງປຶ້ມພຣະທັມມາຣະໂກ: ພຣະເຢຊູຊົງມາ (ມຣກ ບົດທີ 1), ເພື່ອປະຕິບັດຄົນອື່ນ (ມຣກ ບົດທີ 2-13), ແລະປະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ (ມຣກ ບົດທີ 14-16).

<u>ຄຳສລຸບ:</u>
ອີງຕາມຄຳສອນຂອງອົງພຣະເຢຊູຄຣິດ, ຖ້າບຸກຄົນໃດຕ້ອງການທີ່ຈະເປັນຜູ້ຍິ່ງໃຫຍ່ທີ່ແທ້ຈິງ ເຂົາຈະຕ້ອງເຮັດສາມຢ່າງດັ່ງຕໍ່ໄປນີ້:

(1). ປະຕິບັດຮັບໃຊ້ຄົນອື່ນເໝືອນເປັນຂ້ອຍຂ້າ.

(2). ຖວາຍຕົວເພື່ອເປັນຂ້ອຍຂ້າຂອງພຣະເຈົ້າ.

(3). ສລະຊີວິດຂອງຕົນເພື່ອເປັນເຄື່ອງຖວາຍບູຊາ.

ພຣະເຢຊູຄຣິດຊົງສອນພວກສາວົກແລະຊົງໃຫ້ຕົວຢ່າງໂດຍ:

(1). ເປັນຜູ້ຮັບໃຊ້ຄົນອື່ນ--ບໍ່ໄດ້ມາໃຫ້ຄົນອື່ນປະຕິບັດແຕ່ປະຕິບັດຄົນອື່ນ (ພຣະອົງຊົງລ້າງຕີນພວກສາວົກໃນໂຢຮັນ 13:1-5).

(2). ເປັນຂ້າທາດ--ເຮັດຕາມນ້ຳພຣະທັຍຂອງພຣະບິດາ (ອັບບາບິດາເອີຍ...ຂໍຢ່າໃຫ້ເປັນໄປຕາມໃຈປາຖນາຂອງລູກ ແຕ່ໃຫ້ເປັນໄປຕາມພຣະທັຍຂອງພຣະອົງເທີນ. ເບິ່ງ ມາຣະໂກ 14:36).

(3). ເປັນຄ່າໄຖ່--ປະທານຊີວິດເພື່ອເປັນຄ່າໄຖ່ສຳລັບຄົນບາບ (ຄຳອະທິບາຍຂອງມາຣະໂກກ່ຽວກັບການຕາຍຂອງພຣະເຢຊູ. ເບິ່ງ ມາຣະໂກ 10:45).

ເພາະພຣະເຢຊູໄດ້ຊົງເຮັດທຸກຢ່າງທີ່ກ່າວມານັ້ນ, ພຣະອົງຈຶ່ງໄດ້ກາຍເປັນຜູ້ຍິ່ງໃຫຍ່ທີ່ແທ້ຈິງ-ພຣະອົງຄືກະສັດທີ່ເໜືອກວ່າພວກກະສັດທັງຫລາຍ ແລະ ເຈົ້ານາຍເໜືອກວ່າພວກເຈົ້ານາຍທັງຫລາຍ. ທ່ານຢາກຈະເປັນຄຣິສຕຽນຜູ້ຍິ່ງໃຫຍ່ກວ່າທຸກໆຄົນບໍ່? ຈົ່ງຍອມເປັນ ຜູ້ຮັບໃຊ້, ເປັນຂ້າທາດ, ແລະເປັນເຄື່ອງຖວາຍບູຊາແລ້ວພຣະເຈົ້າຈະຖືວ່າທ່ານເປັນຜູ້ຍິ່ງໃຫຍ່ທີ່ແທ້ຈິງ.

<u>ຄຳຖາມ:</u>

1. ຄຣິສຕຽນສົມຄວນທີ່ຈະສແວງຫາຄວາມຍິ່ງໃຫຍ່ໃນການຮັບໃຊ້ພຣະຄຣິດບໍ່?

2. ຄຳສອນຂອງພຣະເຢຊູເຣື່ອງ "ຖ້າຜູ້ໃດຢາກເປັນຕົ້ນ ກໍໃຫ້ຜູ້ນັ້ນເປັນປາຍ" ຍັງໃຊ້ໄດ້ບໍ່ໃນສມັຍນີ້?

3. ເປັນຫຍັງພຣະເຢຊູຄຣິດຈຶ່ງມັກໃຊ້ "ເດັກນ້ອຍ" ເປັນຕົວຢ່າງໃນການສອນຂອງພຣະອົງ? ເດັກນ້ອຍມີຄວາມສຳຄັນແນວໃດ?

4. ເປັນຫຍັງພວກສາວົກສິບສອງຄົນບໍ່ເຂົ້າໃຈເວລາພຣະເຢຊູຄຣິດຊົງບອກລ່ວງໜ້າເຣື່ອງການຕາຍຂອງພຣະອົງ?

# ບົດຮຽນທີ 10
# ພຣະເຢຊູຊົງໃຊ້ສິດອຳນາດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມາຣະໂກ 11:15-18, 27--12:12
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ມາຣະໂກ 11:1--12:44
ຈຸດສຳຄັນຂອງບົດຮຽນນີ້: ການກະທຳແລະຄຳສັ່ງສອນຂອງພຣະເຢຊູໄດ້ສແດງເຖິງສິດອຳນາດຂອງພຣະອົງໃນຖານະພຣະບຸດຂອງພຣະເຈົ້າ.
ຄຳຖາມເພື່ອການສຳຣວດ: ໃຜເປັນຄົນຮັບຜິດຊອບໃນຊົ່ວເຂດນີ້?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະຮູ້ຄວາມໝາຍຕ່າງໆຈາກຊີວິດຂອງພຣະເຢຊູທີ່ໄດ້ຊົງສະແດງສິດອຳນາດໃຫ້ເຫັນຜ່ານການກະທຳແລະຄຳສັ່ງສອນຂອງພຣະອົງ.

ເຣື່ອງທີ່ຈະເນັ້ນໃນການສຶກສາຄັ້ງນີ້:

- ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັສ, ໃນສະຫະຣັຖ, ແລະໃນທົ່ວໂລກ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ

## ຄຳນຳ

ພຣະເຢຊູແລະພວກສາວົກໄດ້ເດີນທາງມາເຖິງກຸງເຢຣູຊາເລັມນຶ່ງອາທິດກ່ອນທີ່ພຣະເຢຊູຈະຖືກປະຫານຊີວິດ. ໃນເວລານັ້ນຄົນຍິວຈາກເມືອງຕ່າງໆໃນເຂດປົກຄອງຂອງໂຣມກໍໄດ້ເດີນທາງມາກຸງເຢຣູຊາເລັມເພື່ອຈະສລອງວັນປັສຄາຊຶ່ງເປັນວັນລະນຶກເຖິງການປົດປ່ອຍອອກຈາກປະເທດອີຢິບຂອງຄົນເຮັບເຣີ (ອພຍ 12:37-51). ຄົນສ່ວນຫລາຍເຄີຍໄດ້ຟັງພຣະເຢຊູແລະເຄີຍໄດ້ເຫັນພຣະອົງ. ພວກເຂົາມີຄວາມຫວັງວ່າຈະໄດ້ເຫັນພຣະອົງທີ່ພຣະວິຫານ. ໃນບົດຮຽນພາກຕໍ່ໄປນີ້ພວກເຮົາຈະໄດ້ເຫັນພຣະເຢຊູໃຊ້ສິດອຳນາດຂອງພຣະອົງໃນການປ້ອຍຕົ້ນເດື່ອ, ການຊຳຣະພຣະວິຫານ, ການໂຕ້ຕອບຜູ້ທີ່ຕິຕຽນພຣະອົງ, ແລະ ການຫລີກເວັ້ນການຈັບກຸມ.

### ພຣະເຢຊູຊົງປ້ອຍຕົ້ນເດື່ອເທດ (11:12-14, 20-26)

ການອັສຈັນກ່ຽວກັບຕົ້ນເດື່ອເທດເປັນເຣື່ອງທີ່ເຮັດໃຫ້ຫລາຍຄົນມີຄວາມສົງສັຍ; ເພາະວັນປັສຄາບໍ່ແມ່ນຣະດູສຳລັບການເກັບກ່ຽວໝາກເດື່ອເທດ. ຕາມປົກຕິແລ້ວຕົ້ນເດື່ອເທດຈະອອກໝາກປີນຶ່ງສອງເທື່ອ, ເທື່ອນຶ່ງໃນຣະດູໃບໄມ້ປົ່ງແລະອີກເທື່ອນຶ່ງໃນຣະດູໃບໄມ້ລົ່ນ. ເຫດການຕອນນີ້ເກີດຂຶ້ນໃນຕົ້ນຣະດູຊຶ່ງເປັນເວລາ ທີ່ຕົ້ນເດື່ອກຳລັງອອກໃບ. ຕົ້ນເດື່ອຕົ້ນນີ້ໄດ້ເຕັມໄປດ້ວຍໃບອັນສວຍງາມ. ບຸດມະນຸດຫວັງຈະໄດ້ກິນໝາກເດື່ອເທດ ແຕ່ປາກົດວ່າຕົ້ນໄມ້ທີ່ສວຍງາມຕົ້ນນີ້ບໍ່ມີໝາກເດື່ອແຕ່ພຽງໜ່ວຍດຽວ. ຫລາຍຄົນພາກັນຖາມວ່າເປັນຫຍັງອົງພຣະເຢຊູຄຣິດຈຶ່ງຊົງໃຊ້ຣິດອຳນາດຂອງພຣະອົງເພື່ອທຳລາຍຕົ້ນເດື່ອ; ເປັນຫຍັງພຣະອົງບໍ່ໃຫ້ພອນຕົ້ນໄມ້ນັ້ນໃຫ້ມີໝາກຫລາຍຂຶ້ນ. ຄວາມຈິງແລ້ວການກະທຳຂອງພຣະເຢຊູຄຣິດໃນຄັ້ງນີ້ມີບົດຮຽນສຳຄັນສຳລັບທຸກຄົນ. ຕົ້ນເດື່ອເທດແມ່ນຊົນຊາດອິສຣາເອັນ (ໂຮເຊອາ 9:10, 16; ນາອູມ 3:12) ທີ່ບໍ່ໄດ້ເກີດດອກອອກຜົນເພື່ອຄວາມສະງ່າຣາສີຂອງພຣະເຈົ້າ. ກົກຮາກທາງຈິດວິນຍານຂອງພວກເຂົາໄດ້ຕາຍແລ້ວ ແລະບໍ່ສາມາດທີ່ຈະເກີດຜົນໄດ້.

ພຣະເຢຊູໃຊ້ການອັສຈັນນີ້ເພື່ອສອນພວກສາວົກເຣື່ອງຄວາມເຊື່ອແລະການອະທິຖານ. ພູຄືຄວາມຍາກລຳບາກທີ່ພວກເຮົາຈະຕ້ອງຍົກອອກຈາກຊີວິດ (ຊາກາຣິອາ 4:7), ແລະຄວາມເຊື່ອໃນພຣະເຈົ້າຈະຊ່ວຍພວກເຮົາໃຫ້ໄດ້ຊັຍຊະນະ. ແຕ່ຄວາມເຊື່ອໃນພຣະເຈົ້າເທົ່ານັ້ນກໍບໍ່ພຽງພໍ; ພວກເຮົາຈະຕ້ອງມີການໃຫ້ອະພັຍກັບຄົນອື່ນໆດ້ວຍ (11: 25-26). ທີ່ຈິງແລ້ວພວກເຮົາບໍ່ໄດ້ຮັບການໃຫ້ອະພັຍເພາະເຮົາໃຫ້ອະພັຍຄົນອື່ນ ແຕ່ການໃຫ້ອະພັຍຄົນອື່ນສະແດງ ເຖິງການຖ່ອມໃຈຂອງພວກເຮົາຕໍ່ພຣະພັກພຣະເຈົ້າ.

<u>ພຣະເຢຊູຊົງຊຳຣະພຣະວິຫານ (11:11, 15-19)</u>

ພຣະເຢຊູຊົງໄປສຳຣວດເບິ່ງສິ່ງຕ່າງໆທີ່ເກີດຂື້ນໃນບໍຣິເວນພຣະວິຫານແລ້ວພຣະອົງກໍຊົງສະເດັດກັບມາໃໝ່ໃນມື້ ຕໍ່ໄປເພື່ອຈະຊົງຊຳຣະພຣະວິຫານນັ້ນ. ພຣະເຢຊູໄດ້ຊົງຊຳຣະພຣະວິຫານຄັ້ງນຶ່ງແລ້ວ (ໂຢຮັນ2:13-22), ແຕ່ຕໍ່ມາບໍ່ນານ ພວກພໍ່ຄ້າຂາຍສາສນາໄດ້ພາກັນກັບມາອີກ. ການປ່ຽນແປງພາຍນອກຢູ່ໄດ້ແບບບໍ່ຍາວນານ ເວັ້ນເສັຽແຕ່ພວກເຮົາຈະມີການປ່ຽນແປງພາຍໃນຈິດໃຈ. ໃນຕອນແລກ ເຈົ້າໜ້າທີ່ໄດ້ອະນຸຍາດໃຫ້ມີການແລກເງິນ ແລະການຂາຍນົກໃນບໍຣິເວນພຣະວິຫານເພື່ອໃຫ້ຄວາມສະດວກກັບຊາວຢິວທີ່ມາຈາກຕ່າງເມືອງ. ແຕ່ພາຍຫລັງມາພວກພໍ່ຄ້າໄດ້ໃຊ້ບໍຣິເວນພຣະວິຫານເພື່ອປະກອບການທຸຣະກິດທົ່ວໆໄປຊຶ່ງເປັນການບໍ່ສົມຄວນ.

ພຣະເຢຊູຊົງບອກພວກຄົນທັງຫລາຍວ່າ, "ວິຫານ...ເປັນສະຖານທີ່ໄຫວ້ວອນຂອງຄົນທຸກຊາດ ແຕ່ຝ່າຍພວກເຈົ້າໄດ້ເຮັດໃຫ້ ເປັນຖ້ຳຂອງໂຈນ" (11: 17). ພຣະເຢຊູຄຣິດຊົງອ້າງເຖິງພຣະທັມເອຊາຍາ 56:7 ແລະ ພຣະທັມເຢຣະ ມີຢາ 7:11. ຜູ້ປະກາດພຣະທັມທັງສອງຄົນໄດ້ປະນາມປະເທດອິສຣາເອັນສຳລັບຄວາມບາບໃນພຣະວິຫານໃນສມັຍຂອງພວກເຂົາເຈົ້າ (ອຊຍ 1; ຢຣມ 7). "ຖ້ຳຂອງໂຈນ" ເປັນບ່ອນທີ່ພວກຜູ້ຮ້າຍອ້າຍຂະໂມຍພາກັນໄປລີ້ຕົວ ຫລັງຈາກພວກເຂົາໄດ້ທຳການຂ້າເຈົ້າເອົາຂອງແລ້ວ. ພວກຜູ້ນຳທາງສາສນາໃນສມັຍຂອງພຣະເຢຊູພາກັນໃຊ ການນະມັສການພຣະເຈົ້າເປັນສາກບັງໜ້າເພື່ອປິດບັງຄວາມຜິດບາບຂອງພວກເຂົາ.

<u>ການທ້າທາຍເຣື່ອງສິດອຳນາດ (11:27-33)</u>

ພວກຜູ້ນຳສາສນາເກີດຄວາມເດືອດຮ້ອນເພາະການກະທຳແລະພຣະຄຳຂອງພຣະເຢຊູ; ຄວາມຈິງແລ້ວພວກເຂົາມີຄວາມຕັ້ງໃຈທີ່ຈະທຳລາຍພຣະອົງ (11:18), ແຕ່ພວກເຂົາຍັງບໍ່ມີຂໍ້ຫາພຽງພໍ. ພວກເຂົາໄດ້ຖາມພຣະອົງວ່າ, "ເຈົ້າມີສິດອັນໃດເຮັດການເຫລົ່ານີ້ ໃຜໃຫ້ສິດນີ້ແກ່ເຈົ້າ? " (ຂໍ້ 28-29, 33). ພວກເຂົາສົນໃຈວ່າ ພຣະເຢຊູໄດ້ສິດມາຈາກໃຜໃນການ ຊົງຊຳຣະພຣະວິຫານ ແລະຊົງປະກາດວ່າ ພຣະວິຫານເປັນຂອງພຣະອົງ? ພຣະເຢຊູໄດ້ຊົງປະກາດວ່າພຣະອົງຄືພຣະເຈົ້າໃນ 11:17.

ພຣະເຢຊູຊົງຕອບພວກນັກສາສນາທັງຫລາຍໂດຍກ່າວເຖິງການຮັບໃຊ້ຂອງໂຢຮັນບັບຕິສະໂຕ; ພຣະອົງຊົງຖາມພວກເຂົາວ່າ ໂຢຮັນໄດ້ສິດມາຈາກໃຜໃນການບັບຕິສະມາຂອງເຂົາ? ພຣະອົງຖາມຕໍ່ໄປວ່າ "ມາຈາກສວັນຫລືມາຈາກມະນຸດ?" (ຂໍ້ 30). ພວກນັກທັມແລະເຖົ້າແກ່ບໍ່ສາມາດທີ່ຈະຕອບຄຳຖາມຂອງພຣະອົງ; ພວກເຂົາຮູ້ຕົວເອງວ່າພວກຕົນກຳລັງພົບກັບບັນຫາທີ່ແກ້ບໍ່ໄດ້. ເພາະຖ້າພວກເຂົາບອກວ່າການຮັບໃຊ້ຂອງໂຢຮັນມາຈາກສວັນ, ປະຊາຊົນທັງຫລາຍກໍຈະກຽດຊັງພວກນັກສາສນາເພາະພວກເຂົາໄດ້ປະຕິເສດໂຢຮັນ. ແລະຖ້າຕອບວ່າການຮັບໃຊ້ຂອງໂຢຮັນມາຈາກມະນຸດ, ປະຊາຊົນກໍຈະກຽດຊັງພວກເຂົາເຊັ່ນດຽວກັນເພາະປະຊາຊົນທັງຫລາຍເຊື່ອວ່າໂຢຮັນເປັນຜູ້ປະກາດພຣະທັມທີ່ມາຈາກພຣະເຈົ້າແທ້ໆ (11:32). ໃນທາງສ່ວນຕົວແລ້ວ ພວກປະໂຣຫິດໃຫຍ່ໄດ້ປະຕິເສດໂຢຮັນ (ລູກາ 7:29-30); ພວກເຂົາຍອມປ່ອຍໃຫ້ ກະສັດເຮໂຣດປະຫານຊີວິດໂຢຮັນບັບຕິສະໂຕ. ພວກເຂົາຮູ້ວ່າອີກບໍ່ດົນພວກເຂົາກໍຈະມອບພຣະເຢຊູຄຣິດໃຫ້ ປີລາດເພື່ອປະຫານຊີວິດເຊັ່ນກັນ.

ຄວາມເຫັນແກ່ຕົວຂອງພວກນັກທັມ (12:1-12)
ພຣະເຢຊູຊົງຮູ້ດີວ່າພວກຜູ້ນຳທາງສາສນາຕ້ອງການທີ່ຈະຂ້າພຣະອົງ; ໃນຄຳອຸປມາຕໍ່ໄປນີ້ພຣະອົງໄດ້ເປີດເຜີຍເຈຕນາຂອງພວກເຂົາ. ພວກປະໂຣຫິດຕ້ອງການຂ້າພຣະເຢຊູເພື່ອຈະຮັກສານໍຣະດົກໄວ້ໃຫ້ກັບຕົວເອງ (ໂຢຮັນ 11:45-53). ໃນເຣື່ອງອຸປມານີ້ພວກເຮົາຮູ້ວ່າ ສວນອະງຸ່ນໝາຍເຖິງປະເທດອິສຣາເອັນ (ອຊຢ 5:1-7; ພສສ 80: 8-16; ຢຣມ 2:21), ຄົນເຊົ່າສວນໝາຍເຖິງພວກຜູ້ນຳປະເທດ (ມຣກ 12:10; ກຈກ 4:11).

ພຣະທັມ ລະບຽບພວກເລວີ ບົດທີ 19:23-25 ໄດ້ບອກກົດລະບຽບກ່ຽວກັບການເກັບກ່ຽວສຳລັບຄົນເຊົ່າສວນ. ເຈົ້າຂອງສວນມີສິດໄດ້ຮັບພາກສ່ວນຂອງຜົນປູກ ເພື່ອເປັນການຮັກສາສິດທີໃນການເປັນເຈົ້າຂອງທີ່ດິນ. ການທີ່ຜູ້ເຊົ່າສວນບໍ່ຍອມຈ່າຍຄ່າເຊົ່ານັ້ນ ກໍຄືການບໍ່ຖືສິດຂອງເຈົ້າຂອງສວນ. ນອກຈາກນັ້ນ, ຖ້າຜູ້ສືບນໍຣະດົກຕາຍໄປ ນໍຣະດົກທັງໝົດກໍຈະຕົກເປັນຂອງພວກຜູ້ເຊົ່າ.

ພຣະເຢຊູຊົງອີງໃສ່ ບົດເພັງສັຣເສີນ 118 (ອ່ານ ພສສ 118:22-23; ປຽບທຽບ ມຣກ 11:9 ແລະ ພສສ 118: 25-26); ແລະພຣະອົງຊົງປ່ອຍໃຫ້ພວກຜູ້ຟັງທັງຫລາຍຕັດສິນຕົນເອງ (ມັດທາຍ 21:41). ພຣະເຢຊູຊົງປຽບທຽບພຣະອົງເອງໃສ່ຫີນເສົາເອກເພື່ອທຸກຄົນຈະໄດ້ຮູ້ວ່າພຣະອົງຄືພຣະຜູ້ໂຜດໃຫ້ພົ້ນ (ກຈກ 4:11; 1 ເປໂຕ 2: 7). ແຕ່ສຳລັບພວກນັກທັມແລະພວກປະໂຣຫິດແລ້ວພວກເຂົາຖືວ່າພຣະເຢຊູຫມິ່ນປມາດພຣະເຈົ້າ; ແລະພວກເຂົາກໍໄດ້ຫລັກຖານເພີ້ມເຕີມເພື່ອຈະຈັບພຣະອົງໂດຍບໍ່ຢ້ານການຕໍ່ຕ້ານຂອງປະຊາຊົນອີກຕໍ່ໄປ.

ຄຳຖາມ:

1. ພຣະເຢຊູຊົງຕຳໜິການນະມັສການໃນພຣະວິຫານ. ຄຳຕຳໜິນີ້ມີຄວາມໝາຍແນວໃດສຳລັບການນະມັສການໃນສມັຍນີ້?

2. ມັດທາຍໃຊ້ຄຳວ່າ "ຜູ້ໃຈອ່ອນສຸພາບແລະຖ່ອມລົງ" ເມື່ອເຂົາເວົ້າເຖິງພຣະເຢຊູຄຣິດ (ມັດທາຍ 11:29). ທ່ານຈະອະທິບາຍການຊົງປ້ອຍຕົ້ນເຄື່ອເທດ ແລະການຊົງຊຳຣະພຣະວິຫານຂອງພຣະເຢຊູຄຣິດແນວໃດ?

3. ທ່ານໄດ້ເຫັນຄົນສລາດໃນສມັຍນີ້ທ້າທາຍສິດອຳນາດຂອງພຣະເຢຊູແນວໃດແດ່?

4. ຄຳອຸປມາເຣື່ອງສວນອະງຸ່ນແລະຄົນເຊົ່າມີຄຳສອນແນວໃດແດ່ສຳລັບຄຣິສຕະຈັກໃນສມັຍນີ້?

# ບົດຮຽນທີ 11
# ພຣະເຢຊູຖວາຍຊີວິດຂອງພຣະອົງເອງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 14: 12-26; 32-42

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 14:1-42

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູສະມັກໃຈທີ່ຈະຖວາຍຊີວິດຂອງຕົນດ້ວຍຄວາມເຊື່ອ ໃນພຣະເຈົ້າ ພຣະບິດາ ຜູ້ຊົງສິ່ງພຣະອົງລົງມາ.

**ຄຳຖາມເພື່ອສຳຣວດ:** ແມ່ນຫຍັງທີ່ມີຄຸນຄ່າຫລາຍກວ່າຫມູ່ໃນຊີວິດຂອງຄົນໆນຶ່ງ?

**ຈຸດປະສົງຂອງບົດຮຽນ:** ເພື່ອຊ່ວຍໃຫ້ນັກຮຽນ ເຂົ້າໃຈໃນການຮູ້ບຸນຄຸນທີ່ພຣະເຢຊູໄດ້ສະລະຊີວິດ ຫລືການຖວາຍຕົວ ຂອງພຣະອົງ.

## ຄຳນຳ

ນິທານເກົ່າຂອງຊາວຍິວເຣື່ອງນຶ່ງ ທີ່ເລົ່າກັນສືບມາເປັນເວລານານ. ມີຄົນລ້ຽງແກະຄົນນຶ່ງ ໄດ້ນຳແກະຂອງຕົນອອກໄປລ້ຽງທີ່ທົ່ງຫຍ້າທຸກໆວັນ. ເມື່ອຫມົດຫຍ້າບ່ອນນຶ່ງລາວກໍຈະຍ້າຍຝູງແກະ ໄປຫາອີກທີ່ອື່ນ ເຮັດຢ່າງນັ້ນເປັນປະຈຳ. ບໍ່ວ່າຈະມີສັດຮ້າຍປານໃດກໍຕາມລາວກໍຈະພະຍາຍາມ ຕໍ່ສູ້ສັດຮ້າຍນັ້ນ ເພື່ອປ້ອງກັນແກະຂອງລາວ. ມີວັນນຶ່ງ ສິງຮ້າຍໂຕນຶ່ງທີ່ໃຫຍ່ ແລະແຂງແຮງ ອອກຈາກປ່າອັນຕຶບຫນາມາ ຫວັງຈະມາກິນແກະຂອງລາວ. ເມື່ອລາວແນມເຫັນລາວກໍຕຽມຕົວຈະໄປສູ້ກັບສິງຮ້າຍນັ້ນ ແຕ່ພໍສູ້ໄປເປັນເວລາອັນຍາວນານ ລາວກໍອ່ອນແຮງ ແລະແລ້ວລາວກໍເສັຍເສັຽຊີວິດ. ເຫດການນີ້ ພວກເຮົາຈະເຫັນວ່າ ລາວໄດ້ສລະຊີວິດຂອງລາວເພື່ອແກະຂອງລາວ.

ຕົວຢ່າງນີ້ ຖ້າເຮົາຈະເບິ່ງໃນພຣະເຢຊູ ພວກເຮົາກໍຈະເຫັນການສລະພຣະຊົນຂອງພຣະອົງເອງ ດັ່ງຈະເຫັນໃນພຣະທັມຄັມພີ ໂຣມ 5:7. ຢ່າງໃດກໍຕາມ ບົດຮຽນນີ້ຈະສອນພວກເຮົາເຖິງການ ສມັກໃຈ ທີ່ຈະຊ ່ວຍທຸກຄົນ ບໍ່ແມ່ນແຕ່ຄົນດີ ແລະ ຄົນຊອບທັມເທົ່ານັ້ນ. ແຕ່ຄົນບາບຢ່າງທ່ານແລະຂ້າພະເຈົ້າດ້ວຍ.

## ພຣະເຢຊູໄດ້ສ້າງຄວາມຊົງຈຳໃນການສິ້ນພຣະຊົນຂອງພຣະອົງ (14:12-26)

ການສເລີມສລອງເທສການປັສຄາ ຂອງຊາວອິສຣາເອນ ແມ່ນຍາມທີ່ລູກໂຕປີຂອງຊາວຍິວຖືກຂ້າ ແລະກໍແມ່ນການກິນອາຫານຄາບແລງ ຂອງວັນທີ ສິບຫ້າ ເດືອນນີສານ ຂອງຍິວ (ຖ້າເປັນປະຕິທິນປັດຈຸບັນກໍແມ່ນ ລະຫວ່າງເດືອນ ມີນາ ແລະເມສາ). ແລະກໍແມ່ນ ເທສການນີ້ ແມ່ນການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ລວມທັງເປັນລະດູເກັບກ່ຽວເຂົ້າບາລີ. ແລະກໍຍັງເປັນການລະນຶກເຖິງການອອກຈາກ ອີຢິບຂອງຄົນອິສຣາເອນ .

ຫົວຫນ້າຄອບຄົວແຕ່ລະເຮືອນຕ້ອງໄດ້ນຳແກະມາວິຫານ ໃນຕອນແລງຂອງວັນທີ ສິບສີ່ ຂອງເດືອນນີສານ. ເມື່ອນຳມາເຖິງວິຫານແລ້ວ ຫົວຫນ້າທີ່ຢູ່ໃນໂບດຈະເປັນຜູ້ຂ້າແລະເອົາເລືອດພົມ ສະຖານທີ່ບູຊາ. ສ່ວນເນື້ອຊີ້ນ ແລະເຄື່ອງໃນຕ່າງໆນັ້ນແມ່ນນຳໄປຄົວກິນ ເພື່ອຈະກິນໃນແລງວັນນັ້ນ.

ໃນສມັຍນັ້ນຄົນຂ້າແກະເປັນຈຳນວນຫລວງຫລາຍ ຖ້າຈະປະມານເບິ່ງແລ້ວ ປີນຶ່ງເຖິງ ສອງແສນຫ້າ ຫາ ສາມລ້ານຕົວ. ເທສການນີ້ກໍມີການວຸ້ນວາຍ ແລະຈາລະຈົນ ເລື້ອຍໆ. ດັ່ງນັ້ນ ຣັຖບານກຸງໂຣມ ຈຶ່ງຍົກຍ້າຍຈາກເຢຣູຊາເລັມ ມາເຮັດທີ່ກາຍຊາເຣັຽ ເພື່ອຈະໄດ້ຄວບຄຸມສະຖານະການໄດ້ດີ.

**1. ການຕຽມປັສຄາ** (14:12-16)

ເມື່ອພຣະເຢຊູ ແລະ ພວກສາວົກຍັງຢູ່ບ້ານເບັດທານີ, ພວກເຂົາເຈົ້າຕ້ອງໄດ້ໄປກຸງເຢຣູຊາເລັມ ເພື່ອ ໄປຊື້ສິ່ງຂອງບາງຢ່າງທີ່ຈຳເປັນ. ພຣະເຢຊູສົ່ງສອງຄົນ (ໂຢຮັນ ແລະ ເປໂຕ ລກ 22:8). ແລະສັ່ງພວກເຂົາ ວ່າ ໃຫ້ຕິດຕາມຄົນນຶ່ງທີ່ທູນຫມໍ້ນ້ຳ ແລ້ວລາວຈະບອກບ່ອນທີ່ຈະກິນປັສຄາ.

ເຮືອນທີ່ ເຢຣູຊາເລັມ ຈະມີ ນຶ່ງ ຫາ ສີ່ຫ້ອງໃນຊັ້ນດຽວກັນ. ແຕ່ຖ້າເຮືອນຫລັງໃດຫາກມີ ຫ້ອງຊັ້ນ ເທິງ ກໍຫມາຍຄວາມວ່າເຮືອນນັ້ນຈະເປັນຄົນຮັ່ງມີແດ່. ໃນຮູບພາບເຊັ່ນນີ້ ພວກເຮົາຈະເຫັນວ່າພຣະເຢຊູກຳລັງຢູ່ໃນການນຳພາໃນການເດີນໄປສູ່ການຖວາຍຕົວ. ບໍ່ແມ່ນວ່າບໍ່ມີໃຜຊ່ວຍພຣະອົງ ຫລືກຳລັງຖືກການວາງແຜນສັງຫານແຕ່ຢ່າງໃດ. ແຕ່ພຣະເຈົ້າຊົງຄວບຄຸມທຸກພຶດຕິກັມ, ພຣະເຢຊູເປັນອິສລະພາບ, ພຣະອົງຢູ່ໃນແຜນການທຸກຢ່າງ ທີ່ຈະນຳຕົວເອງໄປສູ່ການໄຖ່ບາບຂອງມະນຸດ.

**2. ການກິນປັສຄາ** (14: 17-21)

ໂຕະກິນເຂົ້າອາດຈະຕ່ຳໄປແດ່ ພວກສາວົກກໍນັ່ງອ້ອມເທິງໄປທາງຊ້າຍແລະໃຊ້ມືຂວາກິນເຂົ້າ. ພຣະເຢຊູ ເລີ້ມກ່າວຂຶ້ນວ່າ ພວກທ່ານໃນທີ່ນີ້ຈະມີຄົນນຶ່ງທໍຣະຍົດຕໍ່ເຮົາ (14:18) ການຮັປທານອາຫານຮ່ວມກັນແມ່ນການຜູກສັມພັນ ແຕ່ໃນທີ່ນີ້ເປັນຫຍັງພຣະອົງຈຶ່ງກ່າວດັ່ງນັ້ນ. ພວກສາວົກກໍພາກັນສະທ້ານໃຈ. ທຸກຄົນກໍພາກັນຕອບວ່າ ບໍ່ແມ່ນຂ້ານ້ອຍຕີ້. (14:19) ການຮັປທານກໍຜ່ານໄປ.

**3. ສເລີມສລອງການລະນຶກໃຫມ່** (14:22-26)

ຫລັງຈາກນັ້ນ ພຣະເຢຊູ ກໍໄດ້ເລີ້ມການຖືສີນລະນຶກຄັ້ງທຳອິດ (14:22) ພຣະເຢຊູຊົງຮັບເຂົ້າຈີ່ແລະຮັບຈອກແລ້ວສົ່ງໃຫ້ສາວົກຕໍ່ໆໄປ. ການລະນຶກຄັ້ງນີ້ ມີການສັງເກດຫລາຍຢ່າງ : ການເບິ່ງ, ການສັມພັດ, ການຊີມຣົດ, ການສືບກິ່ນ, ການຟັງ. ຕັ້ງແຕ່ນັ້ນມາ ທົ່ວໂລກກໍພາກັນເຮັດສືບຕໍ່ກັນມາ.

ໃນມາຣະໂກ 14:24 ພຣະເຢຊູກ່າວວ່າ ນີ້ຄືພັນທະສັນຍາທີ່ຖອກອອກມາເພື່ອຫລາຍຄົນ. ສັນຍາເກົ່າທີ່ ມີການຖວາຍສັດນັ້ນແມ່ນໄດ້ຜ່ານພົ້ນໄປແລ້ວ. ພຣະເຢຊູຊົງກ່າວຢ່າງຈະແຈ້ງວ່າພຣະອົງຊົງເປັນແກະ ແລະຍັງກ່າວວ່າ ນີ້ຄືເລືອດຂອງເຮົາ. ນ້ຳຜົນອະງຸ່ນ ທີ່ພຣະເຢຊູກ່າວນັ້ນ ຕ້ອງແມ່ນນ້ຳອະງຸ່ນທີ່ຖືກມັກ ໄວ້ ແລະນຳມາປະສົມກັບນ້ຳ ເພື່ອໃຫ້ ແອນກໍຮໍທີ່ມີໃນນັ້ນ ຈືດຈາງອອກ. (14:25)

## <u>ພຣະເຢຊູ ອ້ອນວອນດ້ວຍຄວາມທຸກໃຈແລະຖວາຍຕົວ (14:32-42)</u>

ໃນແຜ່ນດິນຕອນທີ່ຊື່ວ່າ ເຄັດເຊມະເນນີ້ ພວກເຮົາຈະເຫັນພຣະເຢຊູຫນັກໃຈຫລາຍສ່ຳໃດ, ພຣະອົງໄດ້ຊວນເອົາ ເປໂຕ, ຢາໂກໂບ ແລະ ໂຢຮັນ ອອກໄປນຳເພື່ອວ່າຈະມີຫຍັງເກີດຂຶ້ນ. ລູກາກ່າວວ່າ ສວນນີ້ແມ່ນສວນຫມາກກອກເທດ (ລກ 23:39) ສ່ວນໂຢຮັນ ເວົ້າວ່າ ສວນ (ຢຮ 18:1) ເຖິງຈະເວົ້າຢ່າງໃດກໍຕາມ ສວນນັ້ນກໍແມ່ນບ່ອນທີ່ພຣະເຢຊູຊົງເປັນທຸກໃຈຫລາຍທີ່ສຸດ. ຄິດນຳກັນຫນ້ອຍນຶ່ງ ເປັນຫຍັງພຣະເຢຊູຈຶ່ງຊັກຊວນ ເອົາ ສາມຄົນນີ້:

ເປໂຕ: ເປັນຄົນມັກສເນີຫນ້າ " ເຖິງແມ່ນວ່າທຸກຄົນຈະສະດຸດໃຈ ສ່ວນຂ້ານ້ອຍບໍ່ສະດຸດໃຈ" ແລະ " ເຖິງແມ່ນຂ້ານ້ອຍຈະຕ້ອງຕາຍກັບທ່ານ ຂ້ານ້ອຍຈະບໍ່ປະຕິເສດທ່ານ" ມກ 14:29; 31

ຢາໂກໂບແລະໂຢຮັນ: ເປັນຄົນມັກໄດ້, ຢາກໄດ້ຕຳແໜ່ງ. "ຂໍໂຜດໃຫ້ຂ້ານ້ອຍນັ່ງທີ່ເບື້ອງຂວາທ່ານຄົນນຶ່ງ ແລະເບື້ອງຊ້າຍຄົນນຶ່ງ." ມກ 10:35-40

ພຣະເຢຊູໄດ້ໃຫ້ໂອກາດເຂົາ ແຕ່ແລ້ວເຂົາກໍລົ້ມເຫລວ.

**ການອ້ອນວອນຂອງພຣະເຢຊູໃນສວນເຄັດເຊມະເນ ສຳແດງອອກເຖິງສາມຢ່າງທີ່ສຳຄັນຄື:**

**1. ພຣະເຢຊູຊົງຮູ້ຈັກຄວາມຮັກຂອງພຣະບິດາດີ** (14:36) "ອັບບາ ບິດາເອີຍ ພຣະອົງຊົງກະທຳສິ່ງທັງປວງໄດ້" ແທ້ຈິງແລ້ວ ຫລາຍສັດຕະວັດຜ່ານມາ ຄົນຢິວສ່ວນຫລາຍກໍໃຊ້ຄຳວ່າ ພຣະບິດາ. ການທີ່ພຣະເຢຊູ ໃຊ້ຄຳວ່າອັບບາ ກໍຄ້າຍໆກັບລູກຂອງພວກເຮົາ ມັກຮ້ອງພໍ່ວ່າ ແດ້ດີ ຊຶ່ງເປັນຄຳເວົ້າທີ່ໃກ້ຊິດຂຶ້ນ. ພຣະອົງຍັງຮູ້ວ່າ ພຣະບິດາມີອຳນາດຫລາຍປານໃດ. ພຣະອົງຊົງເຊື່ອເຫມືອນເດັກໆ ທີ່ຮັກພໍ່ຂອງຕົນເອງ.

**2. ພຣະເຢຊູບໍ່ຢາກທໍຣະມານ ແລະ ບໍ່ຢາກຕາຍ** (14:36) ພຣະເຢຊູອ້ອນວອນ " ຂໍໃຫ້ຈອກນີ້ເລື່ອນພົ້ນໄປຈາກລູກທ້ອນ " ໃນພຣະກິດຕິຄຸນ ທັງສີ່ເຫລັ້ມ ບໍ່ໄດ້ມີການເນັ້ນຫນັກຄວາມນຶກຄິດຂອງພຣະເຢຊູຫລາຍປານໃດ ແຕ່ໃນນີ້ ມີການສຳແດງຄວາມຮູ້ສຶກຂອງພຣະອົງຫລາຍ. ພຣະອົງທຸກຣະທົມແລະອ່ອນເພັຽໄປທັງ ກາຍ (14:33) ພຣະອົງສິ້ນເນື້ອປະດາຕົວ, ຮູ້ສຶກໂດດດ່ຽວ, ຮູ້ສຶກຫວ່າງເປົ່າ ເພາະໃນເວລານີ້ ພຣະເຢຊູບໍ່ໄດ້ຍິນສຽງຂອງພຣະບິດາ ວ່າ "ເຈົ້າເປັນບຸດທີ່ຮັກຂອງເຮົາ" ແລະບໍ່ມີນົກພິລາບບິນລົງມາຫາພຣະອົງ. ບໍ່ມີທູດສວັນ ແລະບໍ່ມີເພື່ອນທີ່ໃກ້ຊິດ. ສາວົກຂອງພຣະອົງກໍພາກັນຫາຍຫນ້າຫມົດເລີຍ.

ໃນສະພາບຂອງມະນຸດແລ້ວ ພຣະເຢຊູບໍ່ຢາກຕາຍ. ພຣະອົງຍັງຫນຸ່ມນ້ອຍຫລາຍ ພຽງແຕ່ 33 ປີເທົ່ານັ້ນ. ແຕ່ພຣະອົງຊົງຊາບດີວ່າຈະຕ້ອງມີການຖວາຍຕົວ ພຣະອົງຕົວສັ່ນ ແລະຢ້ານກົວຫລາຍແທ້ໆ. ໂດຍສະເພາະຢ່າງຍິ່ງແລ້ວ ພຣະອົງຜູ້ບໍ່ເຄີຍມີບາບ ຈະມາແບກບາບຂອງມະນຸດທັ້ງໂລກ.

ພວກເຮົາໄດ້ຮັບການຫນູນໃຈໃນຂໍ້ນີ້ ກໍຄືວ່າ ພຣະເຢຊູຍອມເຮັດຕາມພຣະບິດາ, ພຣະເຢຊູເຊື່ອໃນການອະທິຖານ. ພຣະເຢຊູເຊື່ອວ່າພຣະອົງຊົງຮັບຟັງຄຳອະທິຖານ ແລະພຣະອົງຊົງຈັດຕຽມທຸກຢ່າງ. ພວກເຮົາບໍ່ຄວນລັງເລໃຈ ອະທິຖານຕໍ່ພຣະອົງວັນນີ້.

**3. ເມື່ອທຸກໃຈຫລາຍເຊັ່ນນັ້ນ, ພຣະເຢຊູກໍຊົງມອບໃຫ້ເປັນພາຣະຂອງພຣະບິດາ** (14:36) ພຣະເຢຊູອ້ອນວອນ "ຂໍຢ່າໃຫ້ເປັນໄປຕາມຄວາມປາຖນາຂອງລູກ ແຕ່ໃຫ້ເປັນໄປຕາມພຣະທັຍຂອງພຣະອົງເຖີ້ນ." 30 ປີກ່ອນທີ່ພຣະເຢຊູຈະມາບັງເກີດ, ມາຣີອາ ມານດາຂອງພຣະອົງກໍໄດ້ອ້ອນວອນຄ້າຍຄືກັນ. ໃນເວລາທີ່ພຣະເຈົ້າຊົງເລືອກເອົາເພິ່ນ ໃຫ້ເປັນຄົນຖືພາ. ລາວຢ້ານແລະສັ່ນສາຍ. ແລະແລ້ວໃນທີ່ສຸດລາວກໍຕອບວ່າ " ຂ້ານ້ອຍນີ້ລະ ເປັນຂ້ອຍຍິງຂອງອົງພຣະຜູ້ເປັນເຈົ້າ ຂໍໃຫ້ບັງເກີດແກ່ຂ້ານ້ອຍ ຕາມຄຳຂອງເຈົ້າກູເຖີ້ນ." ລກ 1:38 ເຖິງແມ່ນວ່າ ຄຳເວົ້າຈະບໍ່ແມ່ນຄຳດຽວກັນ ແຕ່ກໍຄ້າຍຄືກັນ.

ແປກປລາດຫລາຍ ເຫດການຮ້າຍແຮງຈະເກີດຂຶ້ນ ແຕ່ສາວົກ ຊ້ຳພັດພາກັນນອນຫລັບ. ແທນທີ່ຈະເປັນຜູ້ຊ່ວຍໃນການອະທິຖານ ແລະເປັນຜູ້ຢືນຢູ່ຄຽງຂ້າງ. ເປໂຕຜູ້ບອກວ່າຈະບໍ່ຕິເສດເຖິງສາມເທື່ອ ກໍຍັງນອນຫລັບເຖິງສາມເທື່ອ. ພວກເຂົາຄົງຈະເສັຽໃຈຫລາຍທີ່ບໍ່ຮັບເອົາປະສົບການຈາກພຣະອົງໃນເວລານັ້ນ.

ຍິງຄົນດຽວ (ຜູ້ທີ່ເອົາກະອອມທີ່ນນ້ຳຫອມ ໄປທົດສົງພຣະເຢຊູ) ຢູ່ໃກ້ພຣະອົງ ໃນຂນະທີ່ສາວົກທີ່ໃກ້ຊິດ ແຕກກະຈັດກະຈາຍກັນໄປ. ພວກຜູ້ຍິງທີ່ມີຄວາມເຊື່ອ ຢືນເຝົ້າເບິ່ງພຣະເຢຊູ ແລະ ຕໍ່ມາ ກໍນຳນ້ຳຫອມ ໄປທົດສົບຂອງພຣະອົງ.

**ຄຳຖາມ:**

1. ທ່ານຄິດບໍ່ວ່າ ຊາຍຄົນທີ່ຫູບຫມໍ້ນ້ຳ ແມ່ນຫມາຍຂອງການຕຽມປັສຄາ ຫລືທ່ານຄິດວ່າຢ່າງໃດ?

2. ເປັນຫຍັງພຣະເຢຊູຈຶ່ງຊົງເລືອກ ເອົາເທສການປັສຄານີ້ ເປັນການຖືສິນລະນຶກ?

3. ເປັນຫຍັງພຣະເຢຊູຈຶ່ງ ຖືວ່າສຳຄັນໃນການທີ່ພຣະອົງຊົງຖວາຍຕົວເພື່ອໄຖ່ບາບໃຫ້ຊາວໂລກ?

4. ທ່ານຄວນຈະມີຫນ້າທີ່ຮັບຜິດຊອບຫຍັງແດ່ບໍ່ ທີ່ພຣະເຢຊູ ຖວາຍຕົວຂອງພຣະອົງ?

## <u>ບົດຮຽນທີ 12</u>
## <u>ພຣະເຢຊູຖືກຕັດສິນລົງໂທດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 14: 53 -- 15:20

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ມາຣະໂກ 14:43--15:20

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຫລາຍຄົນມີສ່ວນຮ່ວມ ໃນການສອບສວນ, ພຣະເຢຊູໂຕ້ຕອບດ້ວຍການມິດງຽບ ແລະ ວາງເສີຍ.

**<u>ຄຳຖາມເພື່ອສຳຣວດ:</u>** ທ່ານຈະເຮັດຢ່າງໃດ ໃນເມື່ອຖືກທ້າທາຍໃນຄວາມເຊື່ອ?

**<u>ຈຸດປະສົງຂອງບົດຮຽນ:</u>** ໃນການທົດລອງນີ້ ພຣະເຢຊູຊົງ ໂຕ້ຕອບຜູ້ທີ່ມາສອບສວນພຣະອົງຢ່າງໃດ.

### <u>ຄຳນຳ</u>

ໃນປີ 1805, ທ່ານ ແຟຣນຊິສ ໂບຟອດ ໄດ້ຄົ້ນພົບເຄື່ອງວັດແທກອາກາດ ຊຶ່ງພວກເຮົາໃຊ້ກັນຢູ່ທຸກວັນນີ້. ເຄື່ອງນີ້ສາມາດແທກ ອາກາດ ຕັ້ງແຕ່ (ລົມພັດຄ່ອຍໆ) 1 ຫາ 3 ໄມລ ຕໍ່ຊົ່ວໂມງ -- (ພາຍຸ) 73 ຫາ 136 ໄມລ ຕໍ່ຊົ່ວໂມງ. ຖ້າຫາກລົມພັດ ຕໍ່າກ່ວາ 1 ໄມລຕໍ່ຊົ່ວໂມງ ຮ້ອງວ່າ ລົມສງົບງຽບ ຖ້າປຽບໃສ່ການກະທຳຂອງຄົນ ກໍອາດຈະເວົ້າໄດ້ວ່າ ເປັນຄົນສຸຂຸມ ຮຽບໆ. ການສງົບງຽບຂອງຄຣິສຕຽນ ແມ່ນການທີ່ເຫັນວ່າ ທຸກສິ່ງຢູ່ໃນສາຍພຣະເນດຂອງພຣະເຈົ້າ, ເຮັດໃຫ້ເຮົາເຫັນຄວາມກ້າຫານ, ການມີກຳລັງ ແລະມີຄວາມເຊື່ອຫມັ້ນໃນຕົວເອງ.

ການວາງຕົວສງົບງຽບຂອງພຣະເຢຊູ ໃນເວລາຊົ່ວໂມງສຸດທ້າຍ ກ່ອນຈະກ້າວໄປສູ່ຫລັກປະຫານນັ້ນ ສະແດງເຖິງຄວາມສລາດ ເດັດດ່ຽວ ຕໍ່ສູ້ກັບຄວາມໂຫດຮ້າຍ ອາລົມຮຸນແຮງທີ່ຢູ່ອ້ອມໆ ພຣະອົງ ໃນເວລານັ້ນ. ວັນນີ້ ພວກເຮົາຈະມາສຶກສາ ເຖິງຄວາມສງົບງຽບຂອງ ພຣະເຢຊູ ຕໍ່ການກະທຳຂອງຢູດາ, ຂອງພວກນັກທັມ, ຂອງຊີໂມນເປໂຕ, ຂອງຝູງຊົນໃນສະພາແຊນຮິດຣິນ, ຂອງ ປີລາດ ແລະຂອງທະຫານໂຣມັນ.

**ຢູດາ ອິສກາຣີອົດ** (14:43-52)

ວັນນຶ່ງ ປະມານປີ ທີ 4 ກ່ອນຄຣິສຕະການ, ໃນຫມູ່ບ້ານເຄຣີອົດ ມີເດັກນ້ອຍຄົນນຶ່ງເກີດຂຶ້ນມາ. ພໍ່ ແມ່ຂອງລາວດີໃຈ ເພາະມີລູກຊາຍ, ໃສ່ຊື່ໃຫ້ລາວວ່າ ສັຣເສີນ. ຍາດພີ່ນ້ອງກໍນຳຂອງຂວັນມາມອບໃຫ້.

ປະມານເວລາໃກ້ໆກັນ, ທີ່ບ້ານເບັດເລເຮັມ ກໍມີເດັກນ້ອຍຄົນນຶ່ງເກີດມາ. ພໍ່ ແມ່ ຂອງລາວ ກໍດີໃຈເພາະມີລູກຊາຍເຫມືອນກັນ, ໃສ່ຊື່ໃຫ້ລາວວ່າ ຜູ້ຊ່ວຍ. ພວກລ້ຽງແກະ ແລະໂຫຣາຈານກໍນຳຂອງຂັວນມາມອບໃຫ້ລາວ.

ສາມສິບປີຕໍ່ມາ, ເດັກນ້ອຍທີ່ເກີດຈາກບ້ານ ເຄຣີອົດ ກໍມີຊື່ອີກວ່າ ຢູດາ(ສັຣເສີນ) ແລະເດັກນ້ອຍຜູ້ທີ່ເກີດ ຈາກເບັດເລເຮັມ ກໍມີຊື່ອີກວ່າ ເຢຊູ (ຜູ້ຊ່ວຍ) ໄດ້ມາພົບພໍ້ກັນ ແລະຢູດາ ກໍໄດ້ຕິດຕາມພຣະເຢຊູວ່າເປັນພຣະເມຊີອາ. ເມື່ອຢູດາຮູ້ດີວ່າພຣະເຢຊູຈະບໍ່ນຳພາໃນການປະຕິວັດ ລາວຈຶ່ງຂາຍພຣະເຢຊູ. (14:10)

ມກ 14:43 ຢູດາຄົງຮູ້ດີວ່າພຣະເຢຊູ ຢູ່ໃນສວນເຄັດເຊມະເນ ຈຶ່ງນຳທະຫານແລະຝູງຊົນ ຖືດາບແລະໄມ້

ຄ້ອນໄປຈັບພຣະອົງ. ເວລານັ້ນອາດຈະຍັງເດິກຢູ່ ຢູດາຈຶ່ງມອບພຣະເຢຊູດ້ວຍການຈູບ. ທຸກວັນນີ້ຈຶ່ງບໍ່ມີໃຜຢາກໃສ່ຊື່ລູກຫລານຂອງຕົນວ່າ ຢູດາ ເພາະເປັນຄົນຂາຍຄົນທັງເປັນ.

ເປໂຕພະຍາຍາມຈະຕໍ່ສູ້ ແຕ່ພຣະເຢຊູຊົງຫ້າມປາມໄວ້. ເພາະວ່າ:

(1) ຜູ້ຖືດາບຈະຖືກທຳລາຍດ້ວຍດາບ ມທ 26:52

(2) ພຣະອົງວາງໃຈໃນການປົກປ້ອງຂອງພຣະບິດາ ມທ 26:53

(3) ພຣະອົງຮູ້ວ່າພຣະປະສົງຂອງພຣະບິດາຢູ່ນຳພຣະອົງ ມທ 26:54

ຄຣິສຕຽນບັບຕິສ ເມື່ອມີການຂັດແຍ້ງຜິດຖຽງກັນ, ພາກັນຂຶ້ນກ້ອນ ຂຶ້ນສານຟ້ອງຮ້ອງກັນ ບອກວ່າເປັນເຣື່ອງຂອງກົດໝາຍ. ເປັນຫຍັງຈຶ່ງເຮັດຢ່າງນັ້ນ ທ່ານຍັງຈຳໄດ້ບໍ່ ຄຳເຕືອນຂອງພຣະເຢຊູວ່າ ເຖິງແມ່ນວ່າເຮົາຢູ່ໃນໂລກນີ້ກໍຈິງ ເຮົາກໍບໍ່ໄດ້ສູ້ຮົບຕາມທັມມະດາຂອງມະນຸດ ເພາະວ່າເຄື່ອງອາວຸດຂອງເຮົາບໍ່ເປັນຝ່າຍໂລກ ແຕ່ມີຣິດອຳນາດຈາກພຣະເຈົ້າ ອາດທຳລາຍ ຄ້າຍອັນເຂັ້ມແຂງໄດ້ ຄືທຳລາຍຄວາມຄິດທີ່ມີເຫດຜົນອັນບໍ່ຈິງ. 2ກທ 10:3-4

ການຕໍ່ສູ້ ຢູດາ, ພຣະເຢຊູສັດຊື່ຕໍ່ພຣະບິດາ ຕິດຕາມພຣະປະສົງຂອງພຣະເຈົ້າ. ພຣະເຢຊູປຽບເໝືອນບໍ່ນ້ຳພຣະອົງສງົບງຽບດ້ວຍຄວາມໝັ້ນໃຈ ເພື່ອເອົາຊະນະຕໍ່ຄວາມຢ້ານກົວ.

## ພວກມະຫາປະໂຣຫິດ (14:53-64)

ມາຣະໂກ ກ່າວວ່າ ພວກທຳອິດ ທີ່ເຂົາຈັບພຣະເຢຊູໄປຫາກໍຄື ພວກປະໂຣຫິດ ຊຶ່ງໃນນັ້ນກໍມີພວກປະໂຣຫິດ, ພວກນັກທັມ, ພວກເຖົ້າແກ່, ທີ່ຊຸມນຸມກັນຢູ່ແລ້ວ ຫລືອີກຄວາມນຶ່ງກໍເວົ້າວ່າສະພາແຊນຮິດຣິນ. ສະພານີ້ມີອຳນາດຕ່ຳກວ່າ ອຳນາດຂອງໂຣມັນ. ພວກນີ້ຕຽມຈັບພຣະເຢຊູແຕ່ນານແລ້ວ, ບັດນີ້ພວກເຂົາ ກໍກຳລັງຈະຊອກຂໍ້ກ່າວຫາໃຫ້ໜັກຂຶ້ນ.

ພວກເຂົາມີພະຍານຫລາຍປາກ: ຄົນນີ້ ປິ່ນປົວພະຍາດຂ້ອຍ, ຄົນນີ້ ເຮັດໃຫ້ລູກສາວຂ້ອຍຟື້ນຂຶ້ນຈາກຕາຍ ແຕ່ວ່ານັ້ນບໍ່ແມ່ນຂໍ້ກ່າວຫາທີ່ເຂົາຊອກຫາ. ພວກເຂົາຈຶ່ງຊອກຫາພະຍານເທັດເພື່ອປັກປຳ ພຣະອົງ ເມື່ອເຂົາໃຫ້ພະຍານເທັດແລ້ວ ເຂົາຈຶ່ງຖາມພຣະເຢຊູ. ພຣະອົງບໍ່ໃຫ້ຄຳຕອບແຕ່ຢ່າງໃດ (ມິດຢູ່) ພວກເຂົາຈຶ່ງຈີ້ຈ້ຳພຣະອົງ. "ເຈົ້າເປັນພຣະຄຣິດພຣະບຸດຂອງພຣະເຈົ້າຫລື" ພຣະອົງຈຶ່ງຕອບວ່າ "ເຮົາເປັນຜູ້ນັ້ນແຫລະ" ພວກເຂົາຈຶ່ງຄຽດແຄ້ນຫາຂໍ້ວ່າພຣະອົງໝິ່ນປມາດພຣະເຈົ້າ. ແລະທີມດທຸກຄົນກໍກ່າວວ່າຕ້ອງລົງໂທດເຖິງຄວາມຕາຍ. ພຣະເຢຊູຮູ້ດີວ່າຖ້າເວົ້າຄວາມຈິງຈະຕ້ອງມີໂທດເຖິງຕາຍ, ແຕ່ພຣະອົງກໍເຊື່ອວ່າເຖິງຢ່າງໃດກໍຕ້ອງເຊື່ອ ແລະຖວາຍກຽດໃຫ້ແກ່ພຣະເຈົ້າ.

## ຊີໂມນ ເປໂຕ (14:54,66-72)

ພຣະທັມມາຣະໂກ ແມ່ນຈາກການບັນທຶກການເປັນພະຍານຂອງ ຊີໂມນ ເປໂຕ. ໃນການສອນ ເປໂຕອາດຈະກ່າວຄຳພະຍານນີ້ຊ້ຳແລ້ວຊ້ຳອີກ. ນີ້ລະ ຄືຊີວິດທີ່ຂ້າພະເຈົ້າປະຕິເສດພຣະເຢຊູ ແຕ່ພຣະອົງກໍຍັງຮັກຂ້າພະເຈົ້າຢູ່ຕລອດມາ. ພຣະອົງຊົງອະພັຍໃຫ້ຂ້າພະເຈົ້າດ້ວຍພຣະຄຸນ. ບໍ່ວ່າ ທ່ານຈະກະທຳສິ່ງໃດ ພຣະອົງຈະໃຫ້ອະພັຍ,ແລະໃຫ້ຄວາມລອດແກ່ທ່ານ.

ເປໂຕປະຕິເສດພຣະເຢຊູໃນຂນະທີ່ຍິງຄົນໃຊ້ຄົນນຶ່ງທັກທ້ວງລາວ. (14:67) ບໍ່ແມ່ນແຕ່ຄັ້ງດຽວເທົ່ານັ້ນ, ລາວປະຕິເສດເຖິງສາມຄັ້ງ. ຢ່າງນີ່ງທີ່ເປໂຕກະທໍາ ແລະຫລາຍຄົນຄວນຈະເອົາເປັນແບບຢ່າງຄືລາວບໍ່ຍອມປະລະພຣະເຢຊູ. ລາວຕິດຕາມຕລອດເວລາ ແລະຕິດຕາມໄປຈົນເຖິງເວລາສຸດທ້າຍຂອງລາວ. ເຖິງແມ່ນຈະຕາມໄປຫ່າງໆ ກໍຍັງດີກວ່າບໍ່ຕາມເລີຍ.

**ຝູງຊົນໃນສະພາແຊນຮິດຣິນ** (14:65)

ຖ້າຈະເວົ້າແລ້ວ ຫລາຍຄົນມີຖານະດີຈົນເຖິງເປັນຜູ້ນັ່ງໃນສະພາ ແຕ່ການກະທໍານັ້ນຊ່າງເປັນໜ້າລັງກຽດຫລາຍ: ບາງຄົນຖົ່ມນໍ້າລາຍ, ເອົາຜ້າມັດຕາ ໃຫ້ທວາຍ, ຂ້ຽນຕີແບບບໍ່ມີຄວາມເປັນມະນຸດ.

ຕໍ່ສູ້ກັບຄວາມໂຫດຮ້າຍນີ້ ພຣະເຢຊູ ຕ້ອງໄດ້ໃຊ້ຄວາມອົດທົນແລະມິດງຽບຢູ່. ເຖິງແມ່ນເຂົາເອົາຜ້າມັດຕາແຕ່ພຣະອົງກໍຮູ້ວ່າ ຜູ້ໃດເຮັດອັນໃດ. ພຣະອົງພ້ອມແລ້ວທີ່ຈະໃຫ້ອະພັຍແກ່ເຂົາ. ພຣະອົງມີຄວາມຮັກໄຄ່ມະນຸດຫລາຍກວ່າສິ່ງໃດທັງຫມົດ.

**ປີລາດ** (15:1-15)

ຜູ້ທີສອງທີ່ພວກເຂົານໍາໄປຫາ ກໍຄືປີລາດ. ສະພາແຊນຮິດຣິນ ກ່າວຫາວ່າພຣະເຢຊູດູຫມິ່ນພຣະເຈົ້າ. ແຕ່ວ່າເວລານໍາມາຫາປີລາດ ແມ່ນຫາວ່າເປັນນັກໂທດການເມືອງ, ນໍາການຊຸມນຸມ, ຕໍ່ຕ້ານອໍານາດຂອງກາຍຊາແລະເອີ້ນຕົວເອງວ່າເປັນກະສັດ. (ລກ 23:1-5) ປີລາດກໍພະຍາຍາມຊັກໃຊ້ໄລ່ຖາມ ແຕ່ພຣະອົງຊົງຊາບດີວ່າ ການຕອບໄປກໍຄົງຈະບໍ່ມີປໂຍດຫຍັງ. ສິ່ງທັງຫມົດນີ້ເຮັດໃຫ້ປີລາດປລາດໃຈ.

ໃນທີ່ສຸດປີລາດກໍບໍ່ຮູ້ຈະເຮັດຢ່າງໃດ. ລາວຈຶ່ງຍົກເອົາຊື່ສອງຄົນຂຶ້ນມາ ຄືບາຣະບາແລະພຣະເຢຊູ. (27:16) ບາຣະບາ ແປວ່າ ລູກຂອງພໍ່ ແລະ ເຢຊູ ພຣະບຸດອົງດຽວຂອງພຣະບິດາ. ພວກສະພາແຊນຮິດຣິນ ໄດ້ໄປຍຸຍົງຝູງຊົນໃຫ້ຮ້ອງໂຮຂຶ້ນ "ປະຫານພຣະເຢຊູ, ປະຫານພຣະເຢຊູ" ປີລາດເລືອກເອົາການເມືອງ, ຄິດວ່າຕົວເອງສລາດເອົາຕົວລອດເປັນຍອດດີ ເຮັດໃຫ້ປະຊາຊົນພໍໃຈ. ພວກເຮົາທັງຫລາຍກໍມັກເປັນເຫມືອນປີລາດ, ມັກເອົາຕາມຝູງຊົນ. ນັກເທດບາງຄົນກໍຍັງເອົາຕາມຝູງຊົນເພາະເຂົາຈ່າຍຄ່າໂບດ ແລະເຂົາກໍຊື້ໂບດໃຫ້.

**ທະຫານໂຣມັນ** (15:16-20)

ສູນກາງການປົກຄອງຂອງທະຫານໂຣມັນ ແມ່ນບ່ອນທີ່ມີຫົວໜ້າສູງສຸດປະຈໍາການຢູ່. (15:16) ທະຫານເປັນຝູງປະມານ 400 ຫາ 600, ທຸກຄົນມາຮ່ວມກັນເຍາະເຍີ້ຍພຣະອົງ. ພວກເຂົາເອົາເສື້ອສີມ່ວງ ມາຄຸມໃຫ້ພຣະອົງ ເຮັດມົງກຸດດ້ວຍຫນອກຫນາມ ແລະກໍດູຖູກວ່າເປັນກະສັດຂອງຊາດຍິວ. ພຣະເຢຊູບໍ່ຍອມເອີ່ຍປາກແມ້ແຕ່ຄໍາດຽວ.

ແຕ່ກ່ອນພຣະເຢຊູເຄີຍເປັນພະເອກ ສາມາດປົວຄົນ ຫ້າມພະຍຸ, ລ້ຽງເກືອຝູງຊົນ ແຕ່ບັດນີ້ພຣະເຢຊູຊົງຢູ່ເສີຍໆງຽບສງົບ ພຣະອົງຊົງກະທໍາດັ່ງນີ້ສອນພວກເຮົາວ່າ ໃຫ້ມີຄວາມອົດທົນ, ບໍ່ວ່າຈະທຸກໂສກປານໃດກໍຕາມ

ຈົ່ງຕໍ່ສູ້ດ້ວຍສັນຕິວິທີ ແລະດ້ວຍພຣະຄຸນຂອງພຣະເຈົ້າ ວາງໃຈວ່າພຣະອົງຈະຊົງນຳເຮົາອອກຈາກການທໍຣະມານນັ້ນໄດ້.

**<u>ຄຳຖາມ:</u>**

1. ແມ່ນໃຜເປັນຜູ້ຂ້າພຣະເຢຊູແທ້? ພວກນັກທັນ, ອຳນາດຂອງໂຣມັນ, ຝູງຊົນ? ຫລືວ່າແມ່ນແຜນການຂອງພຣະເຈົ້າ?

2. ພຶດຕິກັມຂອງຢູດາ, ເປໂຕ, ສາວົກ, ແລະພວກອື່ນໆ ອະພັຍໃຫ້ໄດ້ບໍ່?

3. ເມື່ອພວກເຮົາຫາກພົບກັບວິກິດການທີ່ບໍ່ຄາດຝັນໄວ້ກ່ອນ, ເຮົາຈະຮັບເອົາຕົວຢ່າງຂອງພຣະເຢຊູຢ່າງໃດ?

4. ເມື່ອຄວາມເຊື່ອຖືກທ້າທາຍ, ມີໃຜແດ່ໃນພຣະຄັມພີ ທີ່ທ່ານຮູ້ ແລະຄວນຖືເປັນຕົວຢ່າງເໝືອນພຣະເຢຊູ?

# ບົດຮຽນທີ 13
# ພຣະເຢຊູຊົງສິ້ນພຣະຊົນແລະເປັນຄືນມາອີກ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ມາຣະໂກ 15:21--41; 16:1-8

**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ມາຣະໂກ 15:21--16:8

**ຈຸດສໍາຄັນຂອງບົດຮຽນນີ້:** ການສິ້ນພຣະຊົນແລະການເປັນຄືນມາ ສະແດງວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າແທ້.

**ຄໍາຖາມເພື່ອສໍາຣວດ:** ແມ່ນຫຍັງທີ່ເຮັດໃຫ້ທ່ານເຊື່ອພຣະເຢຊູ ການດໍາເນີນຊີວິດ,ການສິ້ນພຣະຊົນ ຫລືການຄືນພຣະຊົນ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ເຫັນຈຸດເດັ່ນ ໃນການປ່າວປະກາດ, ໃນການຖວາຍຕົວ, ໃນການຄືນພຣະຊົນ ວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າແທ້ ຜູ້ທີ່ເຮົາມອບຊີວິດໃຫ້.

## ຄໍານໍາ

ຄຣິສຕຽນສມັຍແຕ່ກ່ອນບໍ່ໄດ້ສເລີມສລອງຄຣິສມາດ ແຕ່ວ່າແຕ່ລະອາທິດພວກເຂົາເຈົ້າພາກັນນັ່ງລະນຶກເຖິງ ການເກີດ, ການຕາຍ ແລະ ການຄືນພຣະຊົນຂອງພຣະເຢຊູ. ການເຮັດດັ່ງນັ້ນ ກໍປຽບເຫມືອນຝັງໄຟແຫ່ງຄວາມຄິດເຖິງໄວ້ໃນດວງໃຈ. ໄຟນັ້ນກໍເຫມືອນພຣະກິດຕິຄຸນ ຂອງພຣະຄັມພີ ຊຶ່ງມີແສງແຫ່ງຄວາມອົບອຸ່ນໃນພຣະສັນຍາໃຫມ່.

**ການປະຫານຊີວິດພຣະເຢຊູ** (15:21-41)

**1. ຊີໂມນຄົນກີເຣເນ ເປັນຜູ້ແບກໄມ້ກາງແຂນ** (15:21) ເປັນທັມມະດາການສັງຫານຂອງຄົນໂຣມັນມີການປ່ຽນແປງ. ໄມ້ສອງທ່ອນ ຊຶ່ງໄດ້ມາຈາກຊ່າງໄມ້ ກໍສາມາດໃຊ້ຂ້າຄົນໄດ້. ຄົນທີ່ຈະຖືກຂ້າຕ້ອງໄດ້ແບກໄມ້ຂອງຕົນເອງ ມຸ້ງຫນ້າໄປຫາບ່ອນປະຫານ ລະຫວ່າງກາງທະຫານສີ່ຄົນ, ສ່ວນຄົນທີຫ້າຈະຖືແຜ່ນປ້າຍ ທີ່ຂຽນບອກຄວາມຜິດຂອງນັກໂທດ. ພວກເຂົາຈະໃຊ້ຫົນທາງທີ່ເວົ້າໄກ ເພື່ອໃຫ້ຫລາຍຄົນເຫັນ. ເມື່ອເຖິງສະຖານທີ່ແລ້ວ ພວກເຂົາກໍໃຫ້ນັກໂທດນອນລົງ ຢຽດໃສ່ໄມ້. ແລ້ວກໍຕອກຕະປູໃສ່ມືແລະຕີນ ແລ້ວກໍປຸກຫລັກຂຶ້ນ ປ່ອຍໃຫ້ນັກໂທດ ຕາຍເອງຍ້ອນຄວາມເຈັບ, ການຫາຍໃຈຝືດ, ການເຈັບປວດຕາມກ້ອນຊີ້ນ, ການອ່ອນເພັຽແລ້ວກໍຕາຍໄປ, ບາງຄົນກໍຕາຍໄວ ບາງຄົນກໍຕາຍຊ້າ.

ຄວາມອ່ອນເພັຽຈາກການທຸບຕີ, ຈາກການຂາດອາຫານ ແລະຈາກການທີ່ວນອນ ພຣະເຢຊູບໍ່ສາມາດທີ່ຈະແບກກາງແຂນຕົນເອງໄປໄດ້ ຊີໂມນຈຶ່ງໄດ້ມາແບກຕາງ.

**2. ພວກທະຫານນໍາພາໄປທີ່ປະຫານ** (15:22-27)

ໂກລະໂກທາ ແມ່ນພາສາ ອາລາແມັກ. ຄໍານີ້ ແປວ່າ "ກະໂຫລກຫົວ" ບໍ່ມີພຣະກິດຕິຄຸນເຫລັ້ມໃດກ່າວເຖິງວ່າເປັນບ່ອນໃດແທ້ ແຕ່ພໍຮູ້ໄດ້ ກໍຄືນອກເມືອງ ເພາະການເດີນທາງໄປນັ້ນມີໄລຍະໄກພໍປະມານ.

ທີ່ເອີ້ນວ່າ ກະໂຫລກຫົວນັ້ນ ອາດຈະແມ່ນ ສະຖານທີ່ນີ້ ຢູ່ໃກ້ທາງຫຼວງ ຂອງນັກທ່ອງທ່ຽວ ແລະເຫັນກະໂຫລກຫົວຢາຍຊະຊາຍຢູ່.

ສມັຍ ປີ326 , ນັກທໍຣະນີສາດ ກ່າວວ່າ ແຕ່ກ່ອນທີ່ນັ້ນເປັນດິນແດນຂອງໂບດ ເປັນບ່ອນທີ່ສັກສິດ. ອີກສະຖານທີ່ນຶ່ງຊື່ວ່າຢູ່ໃກ້ງກັບ ປະຕູເຂົ້າ ດາມາເຊ ພວກນັກທ່ອງທ່ຽວມັກໄປຢ້ຽມຢາມຫລາຍເຫມືອນກັນ. ແຕ່ວ່າສວນນີ້ ແມ່ນມີມາໃຫມ່ໆ ຫລັງຈາກສມັຍພຣະເຢຊູມານານແລ້ວ.

ເຫລົ້າແວງ ໃນ (15:23) ແມ່ນສິ່ງນຶ່ງຊື່ງແລ້ວເຮັດໃຫ້ມຶນເມົາ ລືມຄວາມເຈັບປວດ. ພຣະເຢຊູປະຕິເສດທີ່ຈະຮັບ ເພາະພຣະອົງ ຈະໄດ້ຮັບຮູ້ເຖິງຄວາມເຈັບປວດ ແລະ ຄວາມຕາຍຢ່າງແທ້ຈິງ. ສໍາລັບເຄື່ອງນຸ່ງ ພວກເຂົາກໍໄດ້ເອົາມາຈົກສລາກແບ່ງປັນກັນ.

ອີງໃສ່ການບັນທຶກຂອງມາຣະໂກແລ້ວ ພຣະເຢຊູຖືກຄຶງຕອນເວລາ 9 ໂມງເຊົ້າ. ຕອນ 12 ໂມງທ່ຽງຄວາມມືດໄດ້ປົກຄຸມແຜ່ນດິນ ພຣະເຢຊູໄດ້ຮ້ອງສຽງດັງແລະສິ້ນພຣະຊົນເວລາ 3 ໂມງແລງ. ຕາມທັມນຽມແລ້ວ ຂໍ້ຫາລົງໂທດນັ້ນຕ້ອງໄດ້ຂຽນຕິດໄວ້ເທິງຫົວຂອງນັກໂທດ, ແຕ່ສໍາຫລັບພຣະເຢຊູແລ້ວເຂົາຂຽນວ່າ "ກະສັດຂອງຊາດຍິວ" ຄໍາເວົ້ານັ້ນຫມາຍເຖິງການດູຖູກ ແຕ່ນັ້ນເປັນຄວາມຈິງ. (15:26)

ໂຈນສອງຄົນທີ່ຢູ່ ແຕ່ລະຂ້າງນັ້ນ, ພວກນີ້ແມ່ນພວກທີ່ມີຄວາມຜິດແລະສົມຄວນທີ່ຈະໄດ້ຮັບໂທດຕາມທີ່ພວກເຂົາກະທໍາຜ່ານມາ. ພຣະຄັມພີຂຽນໄວ້ວ່າພຣະອົງຕ້ອງຖືກນັບເຂົ້າຮ່ວມກັບຄົນລ່ວງລະເມີດ.

**3. <u>ຝູງຊົນເຍາະເຢີ້ຍພຣະອົງ</u>** (15:29-32)

ຄົນທັງຫລາຍທີ່ຍ່າງໄປຍ່າງມາ ກໍເຍາະເຢີ້ຍແລະ ຫມິ່ນປມາດພຣະອົງ ແລະສັ່ນຫົວດ້ວຍ. ພວກນັກທັມກໍພາກັນເຍາະເຢີ້ຍເຫມືອນກັນ. "ມັນຊ່ອຍຄົນອື່ນໃຫ້ພົ້ນໄດ້ ແຕ່ຊ່ອຍຕົນເອງບໍ່ໄດ້, ຊ່ວຍຕົວເອງໃຫ້ລົງມາຈາກໄມ້ກາງແຂນທະແມ້ ເພື່ອພວກເຮົາຈະໄດ້ເຊື່ອນໍາ." ທຸກວັນນີ້ການເຍາະເຢີ້ຍນີ້ກໍຍັງຫລົງເຫລືອຢູ່ ແລະກໍຍັງມີບາງພວກນໍາມາໃຊ້ກັນ. ດີແລ້ວທີ່ພຣະເຢຊູບໍ່ໄດ້ລົງມາຈາກກາງແຂນ ຖ້າພຣະອົງລົງມາ ພວກເຮົາກໍບໍ່ໄດ້ເຊື່ອມາເຖິງປານນີ້.

**4. <u>ພຣະເຢຊູແບກຄວາມບາບຂອງຊາວໂລກ</u>** (15:33-39)

ເພື່ອຈະຢັ້ງຢືນວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າແທ້ຈິງນັ້ນ, ມາຣະໂກ ເນັ້ນວ່າພຣະເຢຊູເປັນມະນຸດ ຮ້ອຍເປີເຊັນ ແລະເປັນພຣະເຈົ້າແທ້ ເພາະພຣະອົງຄວບຄຸມອາລົມ, ເຊື່ອຢ່າງແທ້ຈິງ, ເປັນຜູ້ທໍານວາຍ, ໃຫ້ອະພັຍແກ່ຄົນບາບ, ໃນຖານະມະນຸດ ພຣະອົງ ຮູ້ຈັກອິດເມື່ອຍ, ມີການເລືອດຕົກຢາງອອກ, ຫິວນໍ້າ ແລະພຣະອົງຍັງຖາມພຣະບິດາວ່າ " ເປັນຫຍັງພຣະອົງຈຶ່ງປິ່ນພຣະພັກໄປຈາກຂ້ານ້ອຍ? "

ການສິ້ນພຣະຊົນແບບແປກປລາດຢ່າງນີ້ ກໍສາມາດພິສູດໃຫ້ເຫັນການເປັນພຣະບຸດຂອງພຣະເຈົ້າໄດ້. ແຕ່ກໍຍັງມີບາງຄົນ ວ່າແມ່ນກົບກິນເດືອນ, ລົມພັດຂີ້ຝຸ່ນຫລາຍຈົນເຮັດໃຫ້ຟ້າມືດ, ຫລື ວ່າໃກ້ຝົນຈະຕົກຟ້າກໍມືດມົວ. ແຕ່ມາຣະໂກ ຢາກແນະນໍາວ່າ ມັນບໍ່ແມ່ນເຣື່ອງທັມມະດາ, ມັນແມ່ນເຣື່ອງທີ່ສລັບຊັບຊ້ອນ ເປັນເຣື່ອງມະຫັສຈັນຢ່າງໃຫຍ່.

ຄໍາສຸດທ້າຍທີ່ໄດ້ຍິນ ດັງມາຈາກໄມ້ກາງແຂນ (15:34) ຊີ້ແຈງວ່າ ການຕາຍນັ້ນແມ່ນການຕາຍເພື່ອ

ຄວາມບາບຂອງຊາວໂລກ. ການລົງໂທດທີ່ໜັກໜ່ວງທີ່ສຸດ ໄດ້ສະແດງໃນຄວາມທໍຣະມານຂອງພຣະອົງ ກ່ອນໜົດລົມຫາຍໃຈ. ພຣະເຢຊູມີປະສົບການໃນການຖືກຕັດຂາດຈາກພຣະບິດາ. ໂປໂລກ່າວໃນ 2 ໂກຣິນໂທ 5:21 ວ່າ "ເພາະວ່າພຣະເຈົ້າໄດ້ຊົງກະທຳໃຫ້ພຣະຄຣິດ ຜູ້ຊົງບໍ່ມີຄວາມຜິດບາບນັ້ນ ໄດ້ເຂົ້າສ່ວນກັບຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ສ່ວນໃນຄວາມຊອບທັມຂອງພຣະເຈົ້າໂດຍທາງພຣະອົງ."

ຕາມທັມມະດາ ຄົນທີ່ຖືກຄຶງຈະອ່ອນແຮງລົງແລ້ວກໍຕາຍໄປ, ແຕ່ພຣະເຢຊູ ມີແຮງຢູ່, ເມື່ອຮ້ອງສຽງດັງແລ້ວກໍສິ້ນພຣະຊົນ. (15:37) ອີກອັສຈັນນຶ່ງກໍຄືຜ້າກັ້ງໃນພຣະວິຫານຖືກຈີກຂາດ ຕັ້ງແຕ່ເທິງຈົນເຖິງລຸ່ມ (15:38) ນີ້ກໍສະແດງວ່າທຸກຄົນ ທີ່ເຊື່ອໃນພຣະເຢຊູ ສາມາດຕິດຕໍ່ກັບພຣະເຈົ້າໄດ້. ນາຍຮ້ອຍຜູ້ນຶ່ງຊຶ່ງສົງຊອມເຫດການຢູ່ນັ້ນ ກໍເວົ້າວ່າ "ຈິງແທ້ແລ້ວ ທ່ານຜູ້ນີ້ ແມ່ນພຣະບຸດຂອງພຣະເຈົ້າ" (15:39)

**<u>5. ພວກຜູ້ຍິງຍັງມີຄວາມເຊື່ອໃນພຣະອົງ</u>** (15:40-41)

ທັງສອງມາຣີອາ ແລະນາງຊາໂລເມ ຍັງພາກັນຕິດຕາມເບິ່ງເຫດການຂອງພຣະອົງ ແລະພວກຜູ້ຍິງອື່ນອີກດ້ວຍ.

## ການຄືນພຣະຊົນຂອງພຣະເຢຊູ (15:42-16:8)

**<u>1. ພຣະເຢຊູສິ້ນພຣະຊົນແລະຖືກນຳໄປຝັງ</u>** (15:42-47 )

ເປັນຫຍັງພຣະຄັມພີຈຶ່ງກ່າວເຖິງການສິ້ນພຣະຊົນຂອງພຣະເຢຊູ ຫລາຍບ່ອນແລະລະອຽດແທ້? ຄຳຕອບກໍມີຢູ່ວ່າ ການຖືກຝັງນັ້ນເປັນຄວາມຈິງ ພຣະເຢຊູສິ້ນພຣະຊົນແທ້ ພຣະອົງບໍ່ແມ່ນເປັນລົມໄປຊື່ໆ ຫລືນອນຫລັບໄປຊື່ໆ ແລ້ວເພື່ອຈະລໍ້ລວງຄົນໃຫ້ເຊື່ອ. ລາຍລະອຽດອີກອັນນຶ່ງກໍຄືອຸບໂມງຖືກເປົ່າແປນ ຊຶ່ງມີຫລາຍຄົນໄດ້ເປັນພະຍານ.

ໂຢເຊບໄທບ້ານອາຣີມາທາຍ ເປັນຄົນທີ່ບໍ່ມີຊື່ສຽງປານໃດ. ແຕ່ຮູ້ວ່າເປັນສະມາຊິກສະພາ ແຊນຮີດຣີນ. ລາວອາດຈະຢູ່ໃນທີ່ນັ້ນດ້ວຍ ເວລາພຣະເຢຊູຖືກຕັດສິນ. ລາວຈຶ່ງກ້າສາມາດ ເຂົ້າໄປຫາປີລາດ ເພື່ອຂໍເອົາພຣະສົບຂອງພຣະອົງ. ໃນການບັນຈຸສົບນັ້ນ ມາຣີອາໄທມັກດາລາ ແລະ ມາຣີອາແມ່ຂອງໂຢເຊບ ກໍເຫັນດ້ວຍ. (15:42)

ໃນການສັງຫານແບບນີ້ ຕາມທັມມະດາແລ້ວ ຕ້ອງໃຊ້ເວລາຫລາຍວັນ, ປີລາດກໍແປກປລາດໃຈ ທີ່ມີພຽງແຕ່ 6 ຊົ່ວໂມງ ພຣະເຢຊູກໍໜົດລົມຫາຍໃຈແລ້ວ. ປີລາດຈຶ່ງສົ່ງທະຫານໄປກວດກາເບິ່ງ. ໂຢເຊບເປັນຄົນຮັ່ງມີ ຈຶ່ງສາມາດມີອຸໂມງສ່ວນຕົວໄດ້. ໃນການຈັດຕຽມພຣະສົບນັ້ນກໍມີຫລາຍຄົນມາຊ່ວຍ ໃນນັ້ນ ມີທັງນີໂກເດມ ຜູ້ທີ່ມາຫາພຣະເຢຊູໃນຍາມກາງຄືນ (ໂຢຮັນ 19:38-39)

**<u>2. ພຣະເຢຊູຟື້ນຄືນຈາກຕາຍ ແລະ ຍັງມີຊີວິດຢູ່</u>** (16:1-8)

ມາຣະໂກຂຽນບົດສຸດທ້າຍຂອງລາວ, ຫລາຍຄົນກ່າວວ່າ ມາຈົບຢູ່ທີ່ ຂໍ້ 8. ສ່ວນຂໍ້ຕໍ່ໄປອາດແມ່ນຜູ້ອື່ນເພາະບໍ່ແມ່ນຄຳເວົ້າຂອງມາຣະໂກ. 8 ຂໍ້ກໍພຽງພໍກັບຄວາມຕ້ອງການຢູ່ແລ້ວ, ຊຶ່ງໃຫ້ຄວາມກະຈ່າງແຈ້ງສົມຄວນ ໃນຄວາມເຊື່ອຂອງຄຣິສຕຽນ. ພຣະເຢຊູຟື້ນຄືນມາຈາກຕາຍແລະຍັງມີຊີວິດຢູ່ທຸກວັນນີ້. ເຊົ້າມືດຂອງວັນອາທິດ, ສອງມາຣີອາ ກໍພາກັນມຸ້ງໜ້າໄປຫາອຸໂມງ ທີ່ໂຢເຊບຝັງສົບພຣະເຢຊູໄວ້. ກັງວົນແຕ່ນຳ

ກ້ອນຫີນໃຫຍ່ທີ່ປິດປາກອຸໂມງ "ໃຜຈະເປັນຜູ້ຊ່ວຍກິ້ງຫີນອອກ?" ແຕ່ພໍໄປເຖິງ ພວກເຂົາກໍພາກັນຕົກໃຈ ເພາະກ້ອນຫີນກິ້ງອອກກ່ອນແລ້ວ. ພວກເຂົາເຫັນດັ່ງນັ້ນກໍຟ້າວແລ່ນໄປທີ່ວາງພຣະສົບ. ສົບກໍຫາຍໄປແລ້ວ. ແຕ່ວ່າມີທູດສວັນໜຸ່ມຕົນນຶ່ງ ນັ່ງຢູ່ເບື້ອງຂວາ ໃສ່ເສື້ອຍາວສີຂາວ ພວກເຂົາກໍຍິ່ງຕົກໃຈ. ທູດສວັນກ່າວວ່າ : ຢ່າຕົກໃຈເທາະ ພຣະອົງຊົງເປັນຄືນມາແລ້ວ ຈົ່ງໄປບອກພວກສາວົກທັງຫລາຍເຖີ້ນ ! ເມື່ອໄດ້ຮັບຂ່າວຢ່າງນັ້ນແລ້ວພວກເຂົາກໍຟ້າວແລ່ນກັບຄືນ ນຳຂ່າວດີໄປບອກພວກສາວົກ. ຄັ້ງແລກ ພວກເຂົາຢ້ານຫລາຍ ຈົນບໍ່ກ້າຈະບອກຜູ້ໃດ.

ປື້ມມາຣະໂກກໍເຫັນວ່າສິ້ນສຸດລົງ, ມາຣະໂກ ແລະບົດຂຽນຂອງລາວແມ່ນເພື່ອ ຈະບອກຂ່າວໃຫ້ຄົນທັງຫລາຍຮູ້ວ່າ ພຣະເຈົ້າກຳລັງເຮັດຫຍັງ ແລະ ພຣະອົງຈະເຮັດຫຍັງ ແລະພຣະອົງໄດ້ເຮັດຫຍັງຜ່ານມາແດ່.

**<u>ຄຳຖາມ:</u>**

1. ໃນສັຕວັດທີນຶ່ງ ແມ່ນຫຍັງເປັນສິ່ງສະແດງອອກວ່າພຣະເຢຊູ ໄດ້ຟື້ນຄືນມາຈາກຕາຍ?

2. ມາຣະໂກອະທິບາຍວ່າ ຊີໂມນ ໄດ້ແບກໄມ້ກາງແຂນໃຫ້ພຣະເຢຊູ. ຄຳວ່າ ຈົ່ງແບກກາງແຂນຂອງຕົນ ແລະຕິດຕາມພຣະເຢຊູ ມີຄວາມຫມາຍຫຍັງ ສຳຫລັບເຮົາ?

3. ຫນ້າທີ່ ແລະ ຮ່າງກາຍຂອງພຣະເຢຊູ ສຳແດງໃຫ້ເຮົາເຫັນຢ່າງໃດ ໃນບົດຮຽນນີ້?

4. ຜ້າກັ້ງທີ່ພຣະວິຫານແມ່ນການສະແດງເຖິງຫຍັງ? (15:38) ການຈີກຂາດແຕ່ເທິງຮອດລຸ່ມ ມີຄວາມຫມາຍຢ່າງໃດ?

## ບົດຮຽນເພີ້ມເຕີມ
## ພຣະເຢຊູຊົງສອນເຣື່ອງອະນາຄົດ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ມາຣະໂກ 13:1-37
ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ: ມາຣະໂກ 13:1-37
ຈຸດສໍາຄັນຂອງບົດຮຽນນີ້: ພຣະເຢຊູຊົງສອນສາວົກຂອງພຣະອົງໃຫ້ຄອຍຣະວັງແລະໃຫ້ຕັ້ງໝັ້ນຢູ່ໃນພຣະອົງ ແລະໃຫ້ຣະວັງການຫລອກລວງໃຫ້ຫລົງທາງຂອງຜູ້ຄົນທີ່ອ້າງຕົວເອງວ່າພວກເຂົາຮູ້ທຸກຢ່າງທີ່ຈະເກີດຂຶ້ນ.
ຄໍາຖາມເພື່ອການສໍາຣວດ: ພວກເຮົາຄວນຈະດໍາເນີນຊີວິດແນວໃດໃນສະພາບການທີ່ບໍ່ແນ່ນອນ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສລຸບຄໍາສອນຂອງພຣະເຢຊູຄຣິດໃນ ມາຣະໂກ 13 ແລະຫາວິທີທີ່ຖືກຕ້ອງເພື່ອການຕຽມພ້ອມສໍາລັບການກັບມາຄັ້ງທີສອງຂອງພຣະອົງ.

ເຣື່ອງທີ່ຈະເນັ້ນໃນການສຶກສາຄັ້ງນີ້:

- ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັສ, ໃນສະຫະຣັຖ, ແລະໃນທົ່ວໂລກ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ

### ຄໍານໍາ

ຄຣິສຕຽນໃນສມັຍທີ່ມາຣະໂກໄດ້ຂຽນພຣະທັມມາຣະໂກນີ້ກໍາລັງຖືກກົດຂີ່ຂົ່ມເຫງ. ຫລາຍຄົນເກືອບຈະຍອມແພ້ໃນການເປັນພະຍານເຣື່ອງພຣະຄຣິດ. ມາຣະໂກຂຽນພຣະທັມຕອນນີ້ເພື່ອຊັກຊວນໃຫ້ຄຣິສຕຽນພາກັນຕັ້ງໝັ້ນຢູ່ໃນຄວາມເຊື່ອໃນອົງພຣະເຢຊູຄຣິດ. ພຣະທັມພາກນີ້ມີສ່ວນຄ້າຍຄືກັນກັບພຣະທັມມັດທາຍບົດທີ 24 ແລະ 25. ມາຣະໂກໄດ້ແບ່ງເຫດການໃນວັນສຸດທ້າຍນີ້ອອກເປັນສາມພາກດ້ວຍກັນ: ພາກຕົ້ນ (13:5-13), ພາກກາງ (13:14-18), ແລະພາກສຸດທ້າຍຂອງຄວາມທຸກລໍາບາກໄປເຖິງວັນທີ່ພຣະເຢຊູຈະສະເດັດກັບມາເທື່ອທີສອງ (13:19-27). ພຣະທັມມາຣະໂກໃນຕອນນີ້ຍັງຈະເປັນຄໍາສອນສໍາຄັນສໍາລັບຄຣິສຕຽນທີ່ຖືກຂົ່ມເຫງໃນທຸກໆສມັຍດ້ວຍ.

ຢ່າໃຫ້ຜູ້ໃດຫລອກລວງໃຫ້ຫລົງ (13:1-8)
ພຣະວິຫານອັນສວຍງາມກໍາລັງຈະຖືກທໍາລາຍ (ຂໍ້ 2). ພວກສາວົກສີ່ຄົນໄດ້ຖາມພຣະເຢຊູວ່າ ເຫດການເຫລົ່ານີ້ຈະເກີດຂຶ້ນເມື່ອໃດ ແລະສິ່ງໃດຈະເປັນໝາຍສໍາຄັນ. ພວກສາວົກເຂົ້າໃຈຜິດວ່າ ການທໍາລາຍພຣະວິຫານ, ວັນສຸດທ້າຍ, ແລະ ການສະເດັດມາຂອງຣາຊອານາຈັກພຣະເຈົ້າຈະເກີດຂຶ້ນໃນເວລາດຽວກັນ; ສະນັ້ນພຣະເຢຊູຈຶ່ງໃຊ້ເວລາເພື່ອອະທິບາຍເຣື່ອງວັນສຸດທ້າຍໃຫ້ພວກເຂົາເຂົ້າໃຈເພື່ອທຸກຄົນຈະບໍ່ໄດ້ຖືກຫລອກລວງໃຫ້ຫລົງ. ພຣະເຢຊູຊົງເຕືອນພວກສາວົກເຖິງໝາຍຕ່າງໆທີ່ບໍ່ແມ່ນຂອງຈິງ (ຂໍ້ 7-8). ຄໍາຕັກເຕືອນເຫລົ່ານັ້ນໄດ້ໃຫ້ໄວ້ກັບຊົນຊາດຢິວ ແຕ່ຄຣິສຕະຈັກຈະ ຕ້ອງຄອຍຣະວັງພວກຄຣູສອນປອມທີ່ຈະເກີດຂຶ້ນໃນຖ້າມກາງພວກເຮົາ (2 ເປໂຕ 2); ພວກເຮົາຄວນຈະຊອກຫາພຣະ ຜູ້ຊົງໂຜດໃຫ້ພົ້ນຂອງພວກເຮົາແທນທີ່ຈະສແວງຫາໝາຍສໍາຄັນຕ່າງໆ (ຟີລິປອຍ 3:20-21).
ຢ່າມີຄວາມຢ້ານກົວ (13:9-13)
ເວລາຖືກຂົ່ມເຫງຄືເວລາທີ່ພວກເຮົາຈະຕ້ອງປະກາດ. ພວກເຮົາບໍ່ຕ້ອງຢ້ານທີ່ຈະປະກາດຂ່າວປະເສີດ ແລະປະກາດວ່າພຣະເຢຊູຄຣິດຄືພຣະຜູ້ຊົງໂຜດໃຫ້ພົ້ນ ແລະພຣະເຈົ້າໃນຊີວິດຂອງພວກເຮົາ. ພຣະວິນຍານບໍຣິສຸດຈະຊົງຊ່ວຍຜູ້ທີ່

ປາຖນາຈະດຳເນີນຊີວິດໃນພຣະເຈົ້າແລະມີເຈຕນາທີ່ຈະຖວາຍກຽດແກ່ພຣະອົງໃນທຸກໆສິ່ງ. ພວກເຮົາໄດ້ເຫັນການທຳງານແລະສິ່ງອັສຈັນທີ່ພຣະວິນຍານບໍຣິສຸດໄດ້ເຮັດໃນພຣະທັມກິຈການຢ່າງຫລວງຫລາຍ.

ການສະເດັດກັບມາຂອງພຣະຄຣິດບໍ່ໄດ້ຢູ່ທີ່ຄວາມສຳເຣັດຂອງຂໍ້ 10. ແຕ່ສິ່ງເຫລົ່ານັ້ນຄືຄວາມປະສົງຂອງພຣະເຈົ້າ; ເຖິງວ່າມານຊາຕານຈະພຍາຍາມຂັດຂວາງຫລາຍປານໃດກໍຕາມ, ພຣະທັມຂອງພຣະເຈົ້າຈະຕ້ອງຖືກປະກາດ ແລະ ພຣະປະສົງສຳລັບໂລກມະນຸດຈະຕ້ອງສຳເຣັດ. ໃນຂນະດຽວກັນ, ພຣະເຈົ້າບໍ່ໄດ້ໃຫ້ພຣະທັມຂໍ້ 11 ເພື່ອໃຫ້ພວກເຮົາກາຍເປັນຄົນກຽດຄ້ານ. ສິດຍາພິບານ ແລະອາຈານທັງຫລາຍມີໜ້າທີ່ໃນການສຶກສາພຣະທັມ ແລະການອະທິຖານເພື່ອຕຽມຕົວສຳລັບການເທສນາແລະການສອນ. ພຣະເຢຊູຊົງໃຫ້ຄຳໝູນໃຈໃນຕອນນີ້ເພື່ອພວກເຮົາຈະບໍ່ໄດ້ທຸກກັງວົນຈົນເກີນໄປໃນເວລາພວກເຮົາພົບກັບຄວາມທຸກລຳບາກຫລືພົບກັບພັຍອັນຕະລາຍແລະບໍ່ຮູ້ວ່າຈະເວົ້າຫຍັງ.

ພຣະສັນຍາໃນຂໍ້ 13 ບໍ່ໄດ້ໝາຍຄວາມວ່າຖ້າຜູ້ໃດບໍ່ອົດທົນຜູ້ນັ້ນຈະບໍ່ໄດ້ລອດພົ້ນ; ພຣະທັມໃນຕອນນີ້ເວົ້າເຖິງພວກຜູ້ເຊື່ອໃນລະຍະທີ່ມີຄວາມທຸກລຳບາກອັນໃຫຍ່. ຄຳວ່າ "ວັນສຸດທ້າຍ" ໃນຂໍ້ 7 ແລະຂໍ້ 13 ໝາຍເຖິງວັນໝົດກັບ ແລະບໍ່ໄດ້ໝາຍເຖິງວັນສຸດທ້າຍຂອງຊີວິດພວກເຮົາແຕ່ລະຄົນ. ຄວາມເຊື່ອທີ່ແທ້ຈິງຈະຕິດຕາມດ້ວຍຄວາມຊື່ສັດ.

<u>ຢ່າເປັນຄົນທີ່ບໍ່ມີສະຕິປັນຍາ (13:14-27)</u>

ພຣະທັມຂໍ້ 14 ແລະ 23 ເນັ້ນເຖິງການຮຽນຮູ້ແລະເຂົ້າໃຈຄຳສອນໃນພຣະທັມພຣະເຈົ້າ. "ສິ່ງທີ່ໜ້າກຽດຊັງ" ເວົ້າເຖິງຮູບພາບຂອງຜູ້ຕໍ່ຕ້ານພຣະຄຣິດ ("ສັດຮ້າຍ" ໃນພຣະນິມິດ 13) ທີ່ຈະຖືກນຳໄປໄວ້ທີ່ວິຫານຂອງຊາວຢິວ (ດານີເອັນ 9:27; 2 ເທຊະໂລນີກ 2:3-10) ເພື່ອໃຫ້ໂລກທີ່ຂາດພຣະເຈົ້າໄປໂຄຣົບບູຊາ. ສິ່ງເຫລົ່ານີ້ຈະເກີດລະຍະກາງຂອງຄວາມທຸກລຳບາກອັນໃຫຍ່ຊຶ່ງຈະເປັນເວລາທັງໝົດເຈັດປີ; ນີ້ຄືໝາຍທີ່ຈະເຕືອນຊາວຢິວໃນຢູດາຍໃຫ້ໜີອອກຈາກເມືອງ. ແຕ່ສິ່ງເຫລົ່ານີ້ຍັງບໍ່ແມ່ນໝາຍສຳຄັນສຳລັບການກັບມາຄັ້ງທີສອງຂອງພຣະຄຣິດເທື່ອ (1 ເທຊະໂລນີກ 4:13-18); ເພາະວັນເວລາດັ່ງກ່າວບໍ່ມີໃຜສາມາດຮູ້ໄດ້. ສນັ້ນພວກເຮົາແຕ່ລະຄົນຄວນສຶກສາແລະເຂົ້າໃຈຄຳທຳນວາຍໃນພຣະທັມຄັມພີເພື່ອພວກເຮົາຈະບໍ່ໄດ້ຢູ່ໃນຄວາມມືດແລະຈະບໍ່ໄດ້ຖືກຫລອກລວງໃຫ້ຫລົງ (2 ເປໂຕ 1:12-21).

ພຣະທັມຂໍ້ 24 ເຖິງ 27 ບັລຍາຍຄາວສຸດທ້າຍຂອງການທຸກລຳບາກແລະການກັບມາສູ່ແຜ່ນດິນໂລກຂອງອົງພຣະຄຣິດເພື່ອຈະທຳລາຍສັດຕູຂອງພຣະອົງແລະຈະສະຖາປະນາອານາຈັກຂອງພຣະອົງ (ພຣະນິມິດ 19:11--20:5). ໝາຍສຳຄັນຕ່າງໆນີ້ແມ່ນເພື່ອພວກຄົນຢິວ ເພາະ "ຝ່າຍພວກຢິວກໍຂໍເຫັນການສຳຄັນ" (1 ໂກຣິນໂທ 1:22). ໃນຕອນນີ້ພວກຄົນຢິວທີ່ແຈກຢາຍໄປຢູ່ທົ່ວໂລກຈະໄດ້ຖືກເຕົ້າໂຮມກັນອີກ ແລະພວກເຂົາຈະໄດ້ມີປະເທດອັນຖາວອນ.

<u>ຢ່າເປັນຄົນປມາດ (13:28-37)</u>

ພຣະທັມໃນຕອນນີ້ ເນັ້ນເຖິງເຣື່ອງການຮຽນຮູ້ (ຂໍ້ 28-29) ແລະການຄອຍຣະວັງ (ຂໍ້ 33-35, 37). ຄຳອຸປມາເຣື່ອງຕົ້ນເດື່ອເທດເນັ້ນເຖິງເຣື່ອງທີ່ເຮົາຮູ້ (ການກັບມາຂອງພຣະຄຣິດໃກ້ຈະເຖິງແລ້ວ) ແລະຄຳອຸປມາເຣື່ອງຂ້ອຍໃຊ້ເນັ້ນເຖິງເຣື່ອງທີ່ພວກເຮົາບໍ່ຮູ້ (ເວລາທີ່ພຣະອົງຈະກັບມາ). ເວລາໃດພວກເຮົາໄດ້ເຫັນໝາຍຂອງຄວາມທຸກລຳບາກ, ພວກເຮົາກໍຮູ້ໄດ້ວ່າການກັບມາຂອງພຣະອົງໄດ້ໃກ້ເຂົ້າມາແລ້ວ (ລູກາ 21:28). ແຕ່ສິ່ງສຳຄັນສຳລັບຄຣິສຕຽນບໍ່ແມ່ນການເບິ່ງປະຕິທິນ ແຕ່ແມ່ນການຕຽມຕົວໃຫ້ພ້ອມເພື່ອຕ້ອນຮັບພຣະຄຣິດ. ພວກເຮົາຕ້ອງຄອຍລະວັງ ແລະຕ້ອງທຳງານທີ່ພຣະອົງໄດ້ຊົງມອບໝາຍໃຫ້ພວກເຮົາເຮັດຈົນກວ່າວ່າພຣະອົງຈະສະເດັດມາ (1 ເທຊະໂລນີກ 5:1-11).

"ຄົນໃນສມັຍນີ້" ໃນຂໍ້ 30 ອາດຈະໝາຍເຖິງຄົນທັງຫລາຍທີ່ມີຊີວິດຢູ່ເວລາໝາຍສຳຄັນຕ່າງໆໄດ້ປາກົດຂຶ້ນ. ພຣະເຢ

ຊູຊົງໃຊ້ຄຳວ່າ "ຄົນໃນສມັຍນີ້" ເວລາພຣະອົງເວົ້າເຖິງຄົນທັງຫລາຍທີ່ກຳລັງຢູ່ຕໍ່ໜ້າພຣະອົງ (ມາຣະໂກ 8:12, 38 ແລະ 9:19). ພວກເຮົາສາມາດໝັ້ນໃຈໄດ້ວ່າ ຄວາມໂຫດຮ້າຍຂອງມະນຸດ ແລະການຕໍ່ຕ້ານຕ່າງໆຂອງມານຊາຕາ ຈະບໍ່ສາມາດທຳລາຍປະເທດອິສຣາເອັນໄດ້ ເພາະຊາວຢິວເປັນຊົນຊາດທີ່ພຣະເຈົ້າໄດ້ຊົງເລືອກໄວ້.

ພຣະທັມມາຣະໂກບົດທີ 13 ເປັນພຣະທັມທີ່ຍາກໃນການອະທິບາຍ. ຈຸດສຳຄັນທີ່ຄວນເຂົ້າໃຈມີດັ່ງນີ້:

- ພຣະທັມໄດ້ເຕືອນພວກເຮົາໃຫ້ຣະວັງພວກຜູ້ປະກາດປອມທີ່ຈະຊັກຊວນພວກຜູ້ເຊື່ອໃຫ້ຫລົງທາງ
- ພຣະທັມໄດ້ສັນຍາວ່າ ພຣະວິນຍານບໍຣິສຸດຈະຊົງຮັກສາພວກເຮົາເວລາຖືກຂົ່ມເຫງ
- ພຣະທັມຊັກຊວນພວກເຮົາໃຫ້ເຮັດວຽກການປະກາດຕາມທີ່ພຣະເຈົ້າໄດ້ມອບໝາຍໄວ້
- ພຣະທັມເຕືອນພວກເຮົາວ່າບໍ່ມີໃຜຈະສາມາດຮູ້ວ່າ "ວັນສຸດທ້າຍ" ຈະມາເຖິງເມື່ອໃດ

ພວກສາວົກທີ່ກຳລັງຮັບຟັງຄຳສອນຂອງພຣະເຢຊູຄຣິດຫ່ວງໃຍເຣື່ອງອານາຄົດ. ພວກສິດຜູ້ທີ່ອ່ານພຣະທັມມາຣະໂກເປັນຄັ້ງແລກປະມານປີ ຄ.ສ. 65 ກໍມີຄວາມຫ່ວງໃຍເຣື່ອງອານາຄົດ. ແລະໃນປັດຈຸບັນ, 2000 ປີຜ່ານມາ, ພວກເຮົາກໍມີຄວາມຫ່ວງໃຍເຣື່ອງອະນາຄົດເຊັ່ນດຽວກັນ. ຂ່າວດີສຳລັບພວກເຮົາກໍຄື ອະນາຄົດຂອງພວກເຮົາແຕ່ລະຄົນໄດ້ຢູ່ໃນຄວາມປອດພັຍແລ້ວ ເພາະພວກເຮົາມີອົງພຣະເຢຊູຄຣິດຢູ່ໃນຊີວິດ.

<u>ຄຳຖາມ:</u>

1. ທ່ານສາມາດເອີ້ນຊື່ພວກ "ຜູ້ໂຜດປອມ" ຫລາຍໆຄົນໃນລະຍະບໍ່ຫລາຍປີທີ່ຜ່ານມາ ທີ່ມີລັກສນະເໝືອນທີ່ພຣະເຢຊູຄຣິດໄດ້ຊົງເຕືອນໄວ້ໃນພຣະທັມມາຣະໂກ 13:5-6, 21-23? (ຕົວຢ່າງ: ຈິມ ໂຈນ)

2. ທ່ານຄິດວ່າເປັນຫຍັງພຣະເຢຊູຄຣິດຈຶ່ງບໍ່ຍອມບອກວັນເວລາສຳລັບການກັບມາຄັ້ງທີສອງຂອງພຣະອົງ?

3. ມີຫລາຍໆຢ່າງໃນ ມາຣະໂກ 13 ທີ່ພວກເຮົາບໍ່ສາມາດເຂົ້າໃຈໄດ້ຢ່າງແຈ່ມແຈ້ງ, ແຕ່ທ່ານຄິດວ່າມີຫຍັງແດ່ທີພວກເຮົາສາມາດຮູ້ຢ່າງແນ່ນອນ?

4. ການຄິດວ່າພຣະເຢຊູອາດຈະກັບມາໃນເວລາໃດກໍໄດ້ ເປັນຄວາມຄິດທີ່ຖືກຕ້ອງບໍ່?